
ແປວໄຟ
ແຫ່ງໄວໜຸ່ມ
ໂຮມເລື່ອງສັ້ນ
ຂອງນັກຂຽນຍິງ

# ແປວໄຟ
# ແຫ່ງ ໄວໜຸ່ມ

ໂຮມຊຸດເລື່ອງສັ້ນຂອງນັກຂຽນຍິງ
(ພິມເທື່ອທີໜຶ່ງ)

ສຳນັກໜັງສືພິມແມ່ຍິງລາວ
1984

ຈັດໜ້າ ຮູບປະກອບ ໜ້າປົກ

■ ກອງມະນີ

---

ສຳນັກງານ ນ.ສ.ພ ແມ່ຍິງລາວ
ຕັ້ງຢູ່ສູນກາງສະມາຄົມແມ່ຍິງລາວຮັກຊາດ
ຖະໜົນມັນທາຕຸລາດ ບ້ານຊຽງຍືນ ໂທ4616 ຕູ້ປນ 59ວຽງຈັນ

# ຄຳນຳ

*ເພື່ອຂ່ຳນັບຮັບຕ້ອນກອງປະຊຸມໃຫຍ່ຄັ້ງທີ I ຄັ້ງປະຫວັດສາດຂອງແມ່ຍິງລາວທົ່ວປະເທດ. ພວກເຮົາ ຄະນະບັນນາທິການໜັງສືພິມ "ແມ່ຍິງລາວ" ໄດ້ຮິບໂຮມເລື້ອງສັ້ນຈຳນວນໜຶ່ງດ້ວຍການປະດິດຄິດແຕ່ງຂອງນັກຂຽນຍິງ ເພື່ອໃຫ້ບັນດາທ່ານ ຜູ້ອ່ານ ມີໂອກາດໄດ້ຊົມການຂີດຂຽນຂອງເອື້ອຍນ້ອງແມ່ຍິງລາວພວກເຮົາ.

ຜ່ານບົດເລື້ອງສັ້ນຕ່າງໆນີ້ ຈະສະທ້ອນໃຫ້ເຫັນເຖິງຄວາມມານະອົດທົນ,ຕໍ່ສູ້ດິ້ນຮົນ,ກ້າສູ້ກ້າຊົນ ເພື່ອການປະຕິບັດ ສິດສະເທີພາບລະຫວ່າງຍິງ-ຊາຍ ນັບທັງຢູ່ໃນຄອບຄົວແລະສັງຄົມ.. ຈົນວ່າຄວາມສູ້ຊົນອົດທົນນັ້ນ ຈະບັນລຸຜົນສຳເລັດ...

ພວກເຮົາຂໍຝາກຄວາມຫວັງໄວ້ນຳບັນດາທ່ານຜູ້ອ່ານ ຈົ່ງໄດ້ປະກອບຄຳຄິດຄຳເຫັນຊ່ວຍຕຳນິຕິຊົມຄອງປາກກາ ທີ່ບໍ່ທັນມີ ປະສົບພະການມາຢ່າງພຽງພໍ້ນ ຈາກໃຈຈິງຂອງບັນດາທ່ານ. ພ້ອມກັນນີ້ ພວກເຮົາຂໍຝາກຄວາມເຊື່ອໝັ້ນວ່າ: ບັນດາທ່ານຈະໃຫ້ຄວາມເອື້ອເຟື້ອແລະຊຸກຍູ້ສົ່ງເສີມນັກຂຽນຍິງພວກເຮົາຕະຫລອດຕະຫລອດໄປ...

ຂໍຂອບໃຈມານະທີ່ນີ້ດ້ວຍ.

ວຽງຈັນ,ວັນທີ່ ໒ ກຸມພາ ໑໙໘໔.

"ແມ່ຍິງລາວ"

# ສາລະບານ


1 ໄອຣຸນບໍ່ຄອນຮັກ . . . ໜ້າ 7

2 ຮັກແທ້ຍ່ອມຈະເຂົ້າໃຈກັນ . . . . 18

3 ໂອ ບໍ່ຄືນດອກອ້າຍ . . . .31

4 ເກີດໃໝ່ . . . . . 43

5 ແປວໄຟແຫ່ງໄອໜຸ່ມ . . . . 67

6 ເພື່ອເດັກທີ່ຈະເກີດມາ . . . .94

7 ບ້ານເກີດທີ່ຮັກ 112

8 ດອກໄມ້ບ້ານນາ . . . . . 131

# ໄວຣຽນ
# ບໍ່ຄອນຮັກ

• ມາລາສະຫວັນ

* ແມ່! ລູກໄປຫາດາລີບຸດໜຶ່ງເດີ ຊິຢືມປຶ້ມລາວມາຈົດ ບົດຮຽນ...

- ໄປແລ້ວຢ່າຢູ່ດົນເດີລູກເດີ! ສຽງແມ່ສັ່ງເສຍຂ້ອຍ.

- ໂດຍ! ຂ້ອຍຮັບຄຳແມ່ແລ້ວກໍລົງເຮືອນໄປພາຍຫລັງທີ່ມີຮຽນພາເຂົ້າຄາບແລງເປັນທີ່ຮຽບຮ້ອຍແລ້ວ. ຊົ່ວອຶດໃຈຂ້ອຍກໍມາຮອດບ້ານດາລີ ເຊິ່ງຢູ່ຖັດຈາກບ້ານຂ້ອຍ ໔-໓ ຫລັງເຮືອນ. ສຽງຫົວຄິກຄັກດັງແວ່ວໆມາຈາກຕົວບ້ານ, ຂ້ອຍຮູ້ສຶກແປກໃຈ ເພາະຮູ້ວ່າພໍ່ແມ່ ແລະ ນ້ອງຂອງດາລີບໍ່ຢູ່ແຕ່ສຽງຫົວທີ່ດັງອອກມານັ້ນສະແດງວ່າມີຄົນຫລາຍກວ່າໜຶ່ງ ແນ່ນອນ. ຂ້ອຍກ້າວຂຶ້ນລະບຽງ ໜ້າບ້ານ, ແສງໄຟຈາກຫ້ອງຮັບແຂກສ່ອງຜ່ານປ່ອງຢ້ຽມອອກມາ ພໍເຫັນຂ້າງນອກມົວໆ, ຂ້ອຍກ້າວໄປຢືນຊິ່ປ່ອງຢ້ຽມຕຽມຈະຮ້ອງແຕ່ແລ້ວຂ້ອຍກໍຕ້ອງອ້າປາກຄ້າງຢືນຢູ່ທີ່ນັ້ນຄືກັບຖືກສາບ.

...ເໝືອນກັບວ່າສາຍຟ້າຜາລົງໃນຫົວໃຈຂອງຂ້ອຍໃຫ້ແຕກອອກເປັນປ່ຽງໆ, ຄວາມແຄ້ນ, ຄວາມເສຍໃຈ, ຄວາມເສົ້າໄດ້ແລ່ນຕາມທຸກພາກສ່ວນຂອງປະສາດ, ນ້ຳຕາໄດ້ແລ່ນຂຶ້ນມາຕັນເບົ້າຕາ, ຂ້ອຍກັດແຂ້ວສູ້ຊິນດ້ວຍຄວາມເຂັ້ມແຂງແຫ່ງຫົວໃຈຂອງ ລູກແມ່ຍິງ ແຕ່ມັນກໍທົນບໍ່ໄດ້ ເພາະເບື້ອງໜ້າຂອງຂ້ອຍແມ່ນ ດາລີເພື່ອນຮັກຂອງຂ້ອຍ ແລະ ອະນັນ.

"ຮື!...ໝູ່ຫັກຫລັງ, ໝູ່ກິນສຸກກິນດິບນຳກັນ, ໝູ່ໃຈຊົ່ວ"

ກ້ອນສະອື້ນແລ່ນຂຶ້ນມາຕັນຄໍຫອຍ, ຂ້ອຍຫັນຫລັງກັບທັນທີ, ກ້າວອອກໄປຈາກທີ່ນັ້ນເໝືອນດັ່ງຕິດປີກບິນ, ຂ້ອຍກ້າວຈາກ ທີ່ນັ້ນເໝືອນດັ່ງຄົນໄຮ້ວິນຍານ, ກ້າວອອກຈາກຄວາມມືດມົວ, ອອກຈາກຄວາມເຈັບປວດຂອງຫົວໃຈ, ອອກມາເພື່ອລະບາຍ ຄວາມແຄ້ນທີ່ພວມຖ້ວມລົ້ນ, ອອກມາກ່ອນທີ່ຂ້ອຍຈະເຮັດສິ່ງໃດລົງ ໄປເໝືອການຫັກຫ້າມຈິດໃຈ. ເພາະຂະນະນີ້ເໝືອນກັບວ່າແປວໄຟໄດ້ລຸກໄໝ້ຫົວໃຈຂອງຂ້ອຍ, ຄວາມເຈັບປວດລະທົມຂົມຂື່ນພວມກໍ່ຮ່າງສ້າງຕົວຂຶ້ນມາຢ່າງງຽບໆ ໂດຍທີ່ຂ້ອຍເອງກໍ່ຫ້າມບໍ່ໄດ້. ດຽວນີ້ເຂົາລາຈາກຂ້ອຍໄປເສຍແລ້ວ, ເມື່ອກ່ອນເຂົາເຄີຍສັນຍາ ກັບຂ້ອຍວ່າ ຈະຮັກຂ້ອຍຄົນດຽວ. ຍາມນັ້ນຈິດໃຈ ແລະ ກຳລັງ ໃຈທຸກບ່ອນໄດ້ມາທ້ອນໂຮມຢູ່ນຳຂ້ອຍຄົນດຽວ, ຂ້ອຍມີກຳລັງໃຈ ຈະຮຽນ ແລະ ຈະເຮັດທຸກສິ່ງທຸກຢ່າງ ເພື່ອສາທາລະນະຊົນ ແລະເພື່ອພວກເຮົາເອງ...ແຕ່ດຽວນີ້ເຂົາກັບເປັນຜູ້ທຳລາຍ ຈິດໃຈຂອງຂ້ອຍ, ເຂົາເປັນຜູ້ໃຊ້ປາຍມີດອັນແຫລມຂີດລົງໃນຫົວໃຈຂອງຂ້ອຍໃຫ້ເປັນຮອຍແປ້ວທີ່ບໍ່ອາດຈະສູນຫາຍໄປໄດ້. ທຸກວັນ ເຮົາເຄີຍເຫັນໜ້າກັນ ແຕ່ມາດຽວນີ້ເຮົາບໍ່ໄດ້ເຫັນໜ້າກັນ ເຖິງເຮົາຈະຢູ່ໃກ້ກັນທຸກມື້ທຸກວັນ ແຕ່ເຮົາເບິ່ງຄືຈັ່ງວ່າຢູ່ໄກກັນຄົນລະ ຊີກໂລກ, ຫລຽວຫາກັນກໍ່ບໍ່ເຫັນແມ່ນແຕ່ທໍ່ແສງຫິ່ງຫ້ອຍ.

ດຽວນີ້ ຂ້ອຍເອງຄ້າຍກັບຄົນທີ່ພວມຕື່ນຈາກຝັນຮ້າຍ ທັງໆທີ່ຂ້ອຍເອງກໍ່ໄດ້ຕັ້ງໃຈແນ່ນອນແລ້ວວ່າ ຈະລືມອະດີດ, ລືມທຸກ ສິ່ງທຸກຢ່າງຜ່ານມາແຕ່ໃນສະໝອງຂອງຂ້ອຍຍິ່ງສັບສົນວົນວາຍຍິ່ງຂຶ້ນ

ບາງຄັ້ງຍາມນອນເຫມືອນກັບວ່າຂ້ອຍໄດ້ອີ່ມເອົາຄວາມລະຫຶມ ອີ່ມຊື່ນໄວ້, ນ້ຳຕາຂອງລູກແມ່ຍິງຢ່າງຂ້ອຍໄດ້ໄຫລຊຶມອອກຈາກເບົ້າຕາຜ່ານລົງແກ້ມກົກຖືກຫມອນຈົນປຽກຊຸ່ມ, ນັ້ນບໍ່ຄວາມເຂັ້ມແຂງທີ່ພໍ່ແມ່ ແລະ ຄູອາຈານເຄີຍສິດສອນໃຫ້ແກ່ຂ້ອຍ? ແຕ່ໃນຈິດ ສຳນຶກຂ້ອຍເຄີຍຖາມຕົວເອງວ່າ ຂ້ອຍ ພວມເປັນຫຍັງແທ້? ຈະເຈັບປວດເຮັດຫຍັງ? ມີສິ່ງໃດທີ່ເປັນຫນ້າເສຍດາຍ ແລະ ອາໄລ ອາວອນຫາ? ບໍ່...ບໍ່ມີເລີຍ, ເມື່ອສິ່ງທີ່ ພວມສູນເສຍໄປບໍ່ມີ ຄ່າຫຍັງຫມົດແລ້ວຈຳເປັນຫຍັງທີ່ຈະຕ້ອງຫລັ່ງນ້ຳຕາໃຫ້ກັບມັນ, ແຕ່ໃນບາງຂະນະໃນຍາມຮຽນ ຂ້ອຍພັດຫລຽວເຫັນກະດາດແຜ່ນເຈ້ຍຕ່າງໆກັບເກີດມີຮູບຂອງເຂົາຖືກອັດໄວ້ເປັນຮອຍຍິ້ມທີ່ຂ້ອຍເຄີຍຊື່ນຊົມ ແຕ່ດຽວນີ້ຮອຍຍິ້ມນັ້ນຄ້າຍຈະເຍາະເຍີ້ຍ ແລະ ຫຍໍ້ຫຍັນ... ເຍາະເຍີ້ຍ...ໃຜຄວນຈະເປັນຜູ້ເຍາະເຍີ້ຍໃຜກັນແທ້? ຂ້ອຍຄິດດັ່ງນີ້ຫລາຍໆຄັ້ງຈົນຂ້ອຍເອງກໍ່ບໍ່ຢາກເຫັນປຶ້ມເຫັນສໍອີກ. ໂອ! ອະນິຈາ...ຄຳວ່າ "ຄວາມຮັກ" ທີ່ຂ້ອຍເຄີຍຝັນຫວານ ແລະ ອາດເວົ້າໄດ້ວ່າມັນຄົງຈະສົດຊື່ນ ແລະ ໃຫ້ຄວາມສຸກແຕ່ທີ່ຈິງແລ້ວ ມັນເປັນສິ່ງຈະນຳຄວາມທຸກໃຫຍ່ຫລວງມາສູ່ຂ້ອຍ, ມັນເປັນສິ່ງ ທີ່ເລື່ອນລາງບໍ່ແນ່ນອນຫຍັງຫມົດສຳລັບໄວຫນຸ່ມນ້ອຍຂະຫນາດ ຂ້ອຍເຊື່ງບໍ່ມີສິ່ງໃດເປັນຫລັກປະກັນໄດ້ວ່າມັນຈະຜູກແຫນ້ນສາຍສຳພັນທີ່ຂ້ອຍ ແລະ ເຂົາສ້າງຂຶ້ນໃຫ້ຍືນຍົງຄົງຕົວຢູ່ໄດ້ເລີຍ.

- ເຮົາເຫັນໂຕມັກຊິ! ເພື່ອນຍິງເຊິ່ງເປັນຄະນະຫ້ອງຂອງຂ້ອຍເປັນຜູ້ເອີ້ຍຄຳເວົ້ານີ້.

- ແມ່ນແທ້! ຂ້ອຍມັກຊູ້, ເປັນຫຍັງ? ຄຳຖາມນີ້ໄດ້ປາກົດຂຶ້ນໃນຈິດສຳນຶກຂອງຂ້ອຍ ແຕ່ຂ້ອຍກໍບໍ່ໄດ້ກ່າວວາຈາໃດໆອອກມາທັງສິ້ນ. ເພື່ອນຍິງຂອງຂ້ອຍຈຶ່ງເອີ່ຍຕໍ່ໄປອີກວ່າ:

- ເລື່ອງລະຫວ່າງໂຕກັບອະນັນເຮົາພໍຮູ້ເລື່ອງຢູ່...

ຂ້ອຍລະສາຍຕາຈາກພາບເບື້ອງໜ້າເຫລືອບເບິ່ງໜ້າເພື່ອນໜ້ອຍໜຶ່ງ ແຕ່ກໍຍັງບໍ່ຖິ້ມກິລິຍານິ່ງເສີຍ, ເພື່ອນຂ້ອຍຈຶ່ງເວົ້າອີກວ່າ:

-...ເຮົາຄິດວ່າໂຕຄວນຕັດສິນໃຈໃຫ້ເດັດດ່ຽວ,ລືມທຸກ ສິ່ງທຸກຢ່າງ, ບໍ່ມີປະໂຫຍດຫຍັງອີກແລ້ວທີ່ຈະມານັ່ງຄ່ຳຄວນເຖິງ ມັນອີກ ທຸກສິ່ງທຸກຢ່າງມັນໄດ້ສິ້ນສຸດລົງແລ້ວໃນຕົວຂອງມັນເອງ,ບາງສິ່ງເຮົາສ້າງມັນຂຶ້ນມາດ້ວຍມືເຮົາຍັງທຳລາຍມັນລົງໄປດ້ວຍມືຂອງເຮົາເອງ ແລະ ຄວາມຮັກກໍເຊັ່ນດຽວກັນ ເມື່ອມັນໄຮ້ປະໂຫຍດກໍຄວນຈະແຍກອອກມາ ແລະ ຄວນຈະລືມເສຍ, ຈິ່ງຄິດເສຍວ່າຄວາມຮັກຄືອຸປະສັກອັນຍິ່ງໃຫຍ່ສຳລັບພວກເຮົາທຸກຄົນໃນໄວນີ້...

ນາງເວົ້າບໍ່ທັນສຸດກໍຫຍັບເຂົ້າມາໃກ້ຂ້ອຍເມື່ອສຽງສະອື້ນ ໄດ້ຜ່ານລຳຄໍທີ່ແສນຈະຕີບຕັນຂອງຂ້ອຍອອກມາ. ມືທັງສອງຂອງນາງດຶງຂ້ອຍເຂົ້າໄປແນບກັບເອິກຂອງນາງແລ້ວກໍລູບເສັ້ນຜົມ ຄ່ອຍໆຄ້າຍຈະປອບໃຈຂ້ອຍ, ແຕ່ມີໃຜໃນໂລກນີ້ຈະຮູ້ດີເທົ່າຕົວຂ້ອຍເອງວ່າ: "ນ້ຳຕານັ້ນມັນແມ່ນນ້ຳຕາແຫ່ງຄວາມປິຕິຕື້ນຕັນໃຈມັນຫາກບໍ່ໄດ້ແມ່ນນ້ຳຕາແຫ່ງຄວາມເຈັບປວດໃດໆໝົດ".

- ໂຕຈິ່ງຮ້ອງໄຫ້ໃຫ້ພໍແລ້ວເຊັດນ້ຳຕາ, ຢຸດມັນໄວ້ພຽງເທົ່າ

ນັ້ນ, ແລ້ວກໍຈົ່ງປ່ຽນຈິດໃຈຫັນເຂົ້າມາສູ່ວຽກງານການຮ່ຳຮຽນຂອງ ໂຕຢ່າງຈິງຈັງ ເພາະມັນແມ່ນສິ່ງດຽວທີ່ຈະນຳເອົາໂຕກ້າວໄປ ສູ່ ແສງສະຫວ່າງອັນຮຸ່ງໃສຂອງອະນາຄົດ ແລະ ນຳໂຕໄປສູ່ ຄວາມ ສຸກສົມຫວັງທັງປວງ...ໂອກາດທີ່ໂຕຈະກ້າວໜ້າໄປເລື້ອຍໆແລະ ສ້າງຕົນເອງຍັງມີ, ຢ່າຫລຽວຄືນຫລັງອີກ ຈົ່ງປ່ອຍພວກເຂົາ ທັງ ສອງຄົນນັ້ນໄວ້ເບື້ອງຫລັງ, ໄວ້ກັບຄວາມທຸກ ແລະ ບາບກຳ ທີ່ ພວກເຂົາທັງສອງຄົນໄດ້ຮ່ວມກັນສ້າງຂຶ້ນໂດຍບໍ່ໄດ້ສຶດຄຳນຶງ ເຖິງ ອະນາຄົດຂ້າງໜ້າ ແລະ ຜົນເສຍຫາຍທີ່ຈະຕາມມາ...

ເພື່ອນຂອງຂ້ອຍຈາກໄປນານແລ້ວ ແຕ່ພາຍໃນຄວາມມືດຂອງ ລາຕີການຂ້ອຍຍັງນອນເອົາມືກ່າຍໜ້າຜາກ, ສາຍຕາຈັບຢູ່ທີ່ ເພ ດານທີ່ເຫັນເປັນເງົາສະລົວຢູ່ບໍ່ວາຍ. ເວລາຜ່ານໄປນານເທົ່າໃດ ຂ້ອຍກໍບໍ່ໄດ້ສົນໃຈ, ຂ້ອຍພຸດລຸກຂຶ້ນໄຕ້ໂຄມໄຟຢູ່ຫົວຕຽງແລະຈາກ ນັ້ນກໍຄ່ອຍລົງຈາກຕຽງມານັ່ງຢູ່ໜ້າກະຈົກເງົາ ແນມເບິ່ງພາບ ທີ່ ປາກົດຢູ່ເບື້ອງໜ້າຂອງຂ້ອຍຢ່າງພິຈາລະນາ, ພາບຍິງສາວ ທີ່ ໜຶ່ມໜອງ, ໝົດອາໄລໃນຊີວິດ ແລະ ຄາຍກັບວ່າຈະແບກຄວາມ ທຸກໂສກທັງໂລກເອົາໄວ້ເມື່ອອາທິດກ່ອນໄດ້ສະລາຍໄປແລ້ວ ມັນ ຍັງຄົງເຫລືອແຕ່ພາບສາວນ້ອຍທີ່ກິລິຍາ ເຖິງຈະບໍ່ແຈ່ມໃສ ເທົ່າທີ່ ຄວນຈະເປັນແຕ່ໃນດວງຕາຄູ່ນັ້ນມັນໄດ້ສາຍແວວແຫ່ງຄວາມ ຫວັງ ຂຶ້ນມາຢ່າງຊັດເຈນ.

ແຕ່ງ...ແຕ່ງ! ສຽງໂມງໃຫຍ່ຕີບອກເວລາທ່ຽງຄືນແລ້ວ , ໂອ! ເວລາແຫ່ງການລໍຄອຍຂອງຂ້ອຍໄດ້ມາເຖິງແລ້ວ, ນາທີແຫ່ງ



ການຕັດສິນໃຈອັນເດັດດ່ຽວຂອງຂ້ອຍຄວນຈະສິ້ນສຸດລົງພ້ອມໆ ກັບສຽງໂມງນີ້. ຂ້ອຍໄດ້ຕັດສິນໃຈແລ້ວຢ່າງເດັດຂາດທີ່ຈະ ເລືອກເອົາເສັ້ນທາງເດີນອັນໃຫມ່ ຊຶ່ງຈະມີແຕ່ຄຳວ່າ: "ຣຽນ! ຣຽນ! ຣຽນເລື້ອຍໆໄປ", ຈົນກວ່າໄດ້ຮັບຜົນສຳເລັດ, ຈະຣຽນໄປເພື່ອອະນາຄົດຂ້າງຫນ້າ ບໍ່ແມ່ນເພື່ອປະຈຸບັນ. ສາຍລົມເຢັນຕອນເດິກໄດ້ໂຊຍພັດຜ່ານປ່ອງຢ້ຽມຕາມ່າງເຂົ້າມາເຢັນວອຍໆເປັນຮູດໆດັງວິງ ເຫມືອນດັ່ງຈະບອກໃຫ້ຂ້ອຍວ່າ:

"ຢ່າຫວ່ງຫລັງ, ເບື້ອງຫລັງມີແຕ່ຄວາມມືດມົນໂສກເສົ້າແລະນົວຫມອງ, ເປັນພຽງສາກຫນຶ່ງຂອງລະຄອນທີ່ກຳລັງຈະ ປິດສາກລົງແລ້ວ". ຢາດນ້ຳຕາ ຢາດສຸດທ້າຍໄດ້ໄຫລລົງອາບແກ້ມ ແລະມັນກໍຈະບໍ່ມີເຫລືອອີກແລ້ວ ພ້ອມກັບຄວາມທຸກທັງມວນທີ່ສາຍລົມໄດ້ຫອບຫິ້ວເອົາໄປ...ຜ່ານໄປ...ແລະກໍຈະຈາງຫາຍໄປຈົນ ຫມົດສິ້ນຍັງຄົງເຫລືອພຽງຄຳເຕືອນ ແລະ ສັ່ງສອນຂອງຄູອາຈານແລະພໍ່ແມ່ທີ່ກັງວານໄປທຸກເສັ້ນປະສາດ ແລະ ມັນສະຫມອງຂອງຂ້ອຍ.

... ແລະແລ້ວ ບັນຍາກາດທີ່ປຽກຊຸ່ມ ແລະ ເຢືອກ ເຢັນຂອງສາຍຝົນແຫ່ງເດືອນສິງຫາ ແລະ ເດືອນກັນຍາກໍໄດ້ ຜ່ານໄປໃນທີ່ສຸດແສງແດດສີທອງແຫ່ງເດືອນຕຸລາກໍໄດ້ກັບຄືນມາຢ້ຽມ ຢາມອີກ...

ຕົ້ນເດືອນ ໑໐ ທົ່ວໂຮງຣຽນຊຸດົມວຽງຈັນກຳລັງຟົດຟື້ນ ໄປດ້ວຍນັກຣຽນນ້ອຍໃຫຍ່ທັງຍິງ ແລະ ຊາຍຍ່າງສ່ວານສົນ ປົນເປກັນໄປມາເປັນລູດໆລ້າຍໆ, ທຸກຄົນຕ່າງກໍລ້ວນມີໃບຫນ້າ ຍິ້ມແຍ້ມ

ແຈ່ມໃສເບີກບານມ່ວນຊື່ນ, ສຽງເວົ້າຈາປາໄສຢອກລໍ້ກັນ ແລະ ສຽງຫົວສະອິກສະອ້ອຍຂອງເອື້ອຍນ້ອງເພດຍິງດັງຢູ່ບໍ່ຂາດ ໄລຍະນັ້ນຫມາຍເຖິງວ່າສົກຮຽນໃຫມ່ໄດ້ໄຂຂຶ້ນແລ້ວ.

ສາມເດືອນແຫ່ງການພັດພາກຈາກກັນ ປຽບສະເຫມືອນສາມປີແຫ່ງການລໍຄອຍຂອງບັນດາຫມູ່ເພື່ອນມິດສະຫາຍ ແລະ ຂ້ອຍເອງກໍແມ່ນຜູ້ຫນຶ່ງອີກເຊັ່ນກັນ. ການກັບຄືນມາພົບກັນເທື່ອໃຫມ່ຕ່າງຄົນຕ່າງກໍມີຄວາມປາບປື້ມ ແລະ ສຸດແສນຍິນດີ. ຂ້ອຍກ້າວເຂົ້າຫ້ອງຮຽນໃຫມ່ ຊຶ່ງຫນ້າຫ້ອງມີປ້າຍຕິດຢູ່ຂຽນວ່າ: ອ.ມ/... ບາດກ້າວຕໍ່ໄປຂອງຂ້ອຍແມ່ນຈະຕ້ອງເລີ້ມສ້າງຕົນເອງໃຫ້ເປັນຄົນໃຫມ່ຕາມທີ່ໄດ້ປະຕິຍານຕໍ່ຄູ ອາຈານ ແລະ ຫມູ່ຄູ່, ເພາະທີ່ ຜ່ານມາຂ້ອຍໄດ້ເສຍເວລາກັບຄວາມຮັກບ້າບໍ່ລືມໆແລວໆຕັ້ງຫລາຍເດືອນຊຶ່ງມັນກໍແມ່ນຫລາຍເດືອນທີ່ຂ້ອຍໄດ້ຫລິ້ນກິນຟູມເຟືອຍ, ບໍ່ສົນ ໃຈປ່ອຍປະລະໄລການຮ່ຳຮຽນ, ບໍ່ຫົວຊານຳການອອກແຮງງານ ຊຶ່ງຖືວ່າບໍ່ຈົບບໍ່ງາມ ແລະ ບໍ່ສົມກັບເປັນນັກຮຽນຂອງລະບອບໃຫມ່ , ທັງບໍ່ສອດຄ່ອງກັບທັດສະນະຄຸນສົມບັດຂອງແມ່ຍິງລາວໃຫມ່.

ດຽວນີ້ຂ້ອຍມີຄວາມຮັກອັນບໍລິສຸດຈາກຄູ ອາຈານ ແລະມິດສະຫາຍທີ່ຄອຍຊ່ວຍໃຫ້ກຳລັງໃຈຊຸກຍູ້ຂ້ອຍໃນທຸກດ້ານ ແລະ ພາຍໃຕ້ວົງແຂນອັນອົບອຸ່ນຂອງເຂົາເຈົ້າທັງຫມົດ ຂ້ອຍໄດ້ຕັ້ງຫນ້າຢ່າງສຸດຂີດຕໍ່ວຽກການສຶກສາຮ່ຳຮຽນ ແລະ ວຽກອອກແຮງງານເຄື່ອນໄຫວນອກຫລັກສູດອື່ນໆ ດ້ວຍຄວາມບຸກບືນ ຫ້າວຫັນ, ເອົາໃຈໃສ່ ຄົ້ນຄວ້າບຳລຸງສິດສອນຫມູ່ຄູ່ຜູ້ທີ່ອ່ອນ ຊ່ວຍເຫລືອຊຶ່ງກັນແລະກັນ ແລະ

ໄດ້ພະຍາຍາມທຸກຢ່າງ ເພື່ອເຟີນຟືນຫລໍ່ຫລອມຕົນເອງໃຫ້ ກາຍ ເປັນແບບຢ່າງທີ່ດີຕາມຄຳປະຕິຍານຂອງຂ້ອຍ ຈົນມາຮອດປະຈຸບັນ ນີ້ຂ້ອຍກໍໄດ້ຜ່ານບັ້ນສອບເສັງຈົບຊັ້ນອັນຫນັກຫນ່ວງດ້ວຍຜົນສຳເລັດ ອັນສະຫງ່າງາມ ແລະ ຍາດໄດ້ຄະແນນດີເດັ່ນ ແລະ ກຽມພ້ອມທີ່ ຈະຮັບໃຊ້ທຸກວຽກງານຕາມທີ່ປະເທດຊາດຮຽກຮ້ອງຕ້ອງການ.

ບາງຄັ້ງເມື່ອຫວນຄິດເຖິງເບື້ອງຫລັງຄາວໃດ ຂ້ອຍກໍຄິດຢາກ ຫົວຂວັນຕົວເອງບໍ່ເລີກບໍ່ແລ້ວ, ອະດີດຂອງການລັກມັກກັນໃນ ໄວ ຮ່ຳຮຽນຊຶ່ງມັນຈະຕ້ອງສິ່ງຜົນສະທ້ອນອັນໃຫຍ່ຫລວງ, ຖ້າຕັດ ສິນ ໃຈບໍ່ທັນ ຂ້ອຍກໍຈະຕ້ອງເສຍໃຈກວ່ານີ້ຫລາຍສິບເທົ່າ, ເສຍໃຈ ເຫມືອນກັນກັບຄາລີ ແລະ ອະນັນທີ່ບໍ່ມີເງື່ອນໄຂໄດ້ສອບເສັງ, ຄິດ ແລ້ວກໍອິດທີ່ຈະຂອບໃຈເຫດການຄືນນັ້ນບໍ່ໄດ້ ເພາະມັນໄດ້ ເປັນ ແຮງຊຸກດັນໃຫ້ຂ້ອຍກ້າວສູ່ແສງສະຫວ່າງອັນຮຸ່ງແຈ້ງ ແລະ ຖ້າບໍ່ມີ ເຫດການນັ້ນ ປານນີ້ບາງທີຂ້ອຍຈະບໍ່ໄດ້ມາຢືນເບື້ອງນັກຮຽນ ຮຸ່ນ ນ້ອງຢູ່ທີ່ນີ້ດ້ວຍຄວາມທະນົງໃຈຄືເວລານີ້. ຂ້ອຍຫາກໍເຂົ້າໃຈດຽວ ນີ້ເອງ, ລະບົບສາມັນເພິ່ນວາງກົດລະບຽບຂໍ້ຫ້າມອອກມາ ຫ້າມບໍ່ ໃຫ້ນັກຮຽນຍິງຊາຍພົວພັນກັນແບບຊູ້ສາວນັ້ນທັງຫມົດກໍເພື່ອຮັບ ປະ ກັນໃຫ້ການຮ່ຳຮຽນຂອງນ້ອງນັກຮຽນທັງຫລາຍ, ສະນັ້ນພວກເຮົາ ທັງຍິງ ແລະ ຊາຍຄວນພ້ອມກັນຕື່ນຕົວປະຕິບັດ.

ກຣິງ...ກຣິງ...! ສຽງລະຄັງດັງຂຶ້ນ, ບັນດາ ນັກຮຽນ ຂອງສີກຮຽນນີ້ທີ່ພວມຍ່າງໄປມາຕ່າງກໍມຸ້ງຫນ້າສູ່ຫ້ອງຕົນເພື່ອກຽມ ຈັດແຖວເຂົ້າຫ້ອງຮຽນ. ຈາກນັ້ນບໍ່ດົນ ສຽງເພງ ເພື່ອສ້າງ ບັນ

ຍາກາດຟົດຟື້ນມ່ວນຊື່ນກ່ອນຈະເລີ່ມການຮຽນກໍໄດ້ດັງກັງວານ ໄປທົ່ວໂຮງຮຽນ. ເບື້ອງນອກຍັງເຫລືອພຽງຂ້ອຍ ແລະ ເພື່ອນ ນັກຮຽນຊຸດົມສາມປີກາຍທີ່ທຽວມາຈອບເບິ່ງການສັບຊ້ອນ. ສຽງ ລະຄັງດັງຂຶ້ນອີກ ຄັ້ງນີ້ບອກເວລາທີ່ຄູຈະຂຶ້ນຫ້ອງ ພ້ອມດ້ວຍສຽງເພງທັງຫມົດກໍໄດ້ສິ້ນສຸດລົງພາຍນອກໄດ້ປົກຄຸມໄປດ້ວຍຄວາມ ງຽບສະຫງັດ ແຕ່ພາຍໃນຫ້ອງຮຽນແຕ່ລະຫ້ອງສຽງຂອງຄູທີ່ກຳລັງ ຖ່າຍທອດຄວາມຮູ້ຄວາມຫລັກທຸກຢ່າງໃຫ້ແກ່ນັກຮຽນໄດ້ດັງຢູ່ບໍ່ຂາດ ໄລຍະ ຄິດດັ່ງວ່າພວກເພິ່ນບໍ່ຮູ້ອິດຮູ້ເມື່ອຍ...

ສະນັ້ນແລ້ວ ເພື່ອນຍິງຊາຍນ້ອງນຸ່ງເອີຍ! ຈົ່ງຮີບຟ້າວ ຮ່ຳຮຽນເອົາເຖີດ! ຢ່າໄດ້ຫລົງໄຫລມົວເມົາມຳສິ່ງໃດອີກເລີຍ.ຊີວິດແຫ່ງການເປັນນັກຮຽນບໍ່ໄດ້ມີດົນ ຈົ່ງຢ່າປ່ອຍໃຫ້ມັນຜ່ານໄປ ໂດຍໄຮ້ປະໂຫຍດ, ເມື່ອພວກເພື່ອນໄດ້ມີໂອກາດເຂົ້າມານັ່ງຢູ່ໃນ ສະຖານທີ່ແຫ່ງນີ້ແລ້ວກໍຈົ່ງກັບອອກໄປພ້ອມດ້ວຍຜົນສຳເລັດອັນສະຫງ່າງາມສົມດັ່ງທີ່ຄູ ອາຈານໄດ້ທຸ້ມເທຫມົດເຫື່ອແຮງ ແລະ ຈິດໃຈສິດສອນ ແລະ ສົມກັບທີ່ວ່າ ພວກເພື່ອນຈະເປັນຜູ້ສືບທອດພາລະ ກິດຂອງປະເທດຊາດ. ຂ້ອຍກ້າວຂາອອກຈາກທີ່ແຫ່ງນີ້ດ້ວຍຄວາມອາໄລຮັກ, ພາບພົດທຸກຢ່າງມັນໄດ້ຝັງຢູ່ໃນຄວາມຊົງຈຳຂອງ ຂ້ອຍຢ່າງເລິກເຊິ່ງ...ສຽງລະຄັງເທື່ອສຸດທ້າຍນັ້ນປຽບສະເຫມືອນ - ສຽງສັນຍານທີ່ເຕືອນໃຫ້ຮູ້ວ່າ ຕໍ່ໄປນີ້ ຊີວິດຂອງນັກຮຽນລະບົບສາມັນຂອງຂ້ອຍໄດ້ສິ້ນສຸດລົງແລ້ວຢ່າງສົມບູນ ແລະ ຈາກນີ້ຈົນສິ້ນລົມຫາຍໃຈ. ໂອກາດທີ່ຈະຫວນຄືນມາຊີວິດດັ່ງກ່າວຄົງບໍ່ມີອີກແລ້ວ.

# ຮັກແທ້ ຍ່ອມຈະເຂົ້າໃຈກັນ

• ຍາພິມ

* ດວງຕາເວັນຄ່ອຍໆເລື່ອນຕົວຫຍັບລົງສູ່ເບື້ອງທິດຕາເວັນຕົກ, ແສງແດດໃນຍາມແລງສາດສ່ອງລົງອາບໄປທົ່ວພື້ນແຜ່ນດິນອັນແສນຮັກຂອງບ້ານເກີດ...ລົມອ່ອນໆໂຊຍພັດຊຸ້ມເອົາກິ່ນຫອມຂອງຕົ້ນເຂົ້າທີ່ພວມເລີ່ມເປັນມານໃນທົ່ງນາສະຫະກອນກະເສດປິວກະຈາຍໄປທົ່ວທຸກທິດ. ບັນດາຊາວໜຸ່ມຍິງສາວ, ແມ່ປ້າ ນ້າອາທີ່ເປັນສະມາຊິກຂອງສະຫະກອນຕ່າງກໍໄດ້ເລີກຈາກວຽກໄຮ່ການມາກັບຄືນສູ່ເຮືອນຊານບ້ານຊ່ອງຂອງໃຜລາວ ເພື່ອພັກຜ່ອນ ຢ່ອນກາຍາ...

ມື້ນີ້ກໍຄືກັນກັບທຸກໆມື້ທີ່ຜ່ານມາ, ດວງໃຈເປັນຜູ້ເລີກຊ້າ ກ່ວາໝູ່ ເຊິ່ງມັນໄດ້ກາຍເປັນກິດປະຈຳຕົວຂອງນາງໃນແຕ່ລະມື້;ກ່ອນ

ທີ່ນາງຈະກັບບ້ານ ນາງຕ້ອງໄດ້ທ່ຽວເລາະສຳຫລວດກວດກາເບິ່ງການມຽນມັດວັດຖຸອຸປະກອນການຜະລິດຂອງສ່ວນລວມນັ້ນເປັນ ລະບຽບຮຽບຮ້ອຍດີແລ້ວຈຶ່ງກັບບ້ານ. ຫລັງຈາກແລ້ວວຽກປະຈຳວັນ ນາງພາຍເອົາຖົງຢ່າມ ແລ້ວຄ່ອຍໆຍ່າງເລາະລົງມາຕາມ ແຄມນາ. ຂະນະທີ່ນາງພວມຢ່ວາງຂາກ້າວຂຶ້ນສູ່ຄັນນາ ທັນໃດນັ້ນສຽງ "ອະແຮມ" ກໍດັງຂຶ້ນ ເຮັດໃຫ້ບາດຕີນຂອງນາງຕ້ອງຢຸດສະງັກ . ດວງໃຈຫັນຫນ້າມາຕາມສຽງນັ້ນ, ພາບຂອງສຸພັນ ກໍປະທັບ ເຂົ້າໃນສາຍຕາຂອງນາງ. ເຂົາຍິ້ມເປັນສີອາຍໆ, ດວງໃຈ ຈຶ່ງເປັນຝ່າຍທ້ວງຂຶ້ນກ່ອນ:

- ອ້າວ! ອ້າຍສຸພັນ ບໍ່ທັນກັບເມືອເທື່ອບໍ?

ສຸພັນຕອບໃນຂະນະທີ່ຍັງຍິ້ມຢູ່:

- ກຽມຈະເມືອດຽວນີ້ແຫລະ!

- ເປັນຫຍັງອ້າຍຈຶ່ງເມືອຄ່ຳແທ້?

ເຂົາເວົ້າຄ່ອຍລົງ ເພາະໄດ້ຍ່າງເຂົ້າມາໃກ້ນາງແລ້ວ:

- ກໍຖ້ານ້ອງເອງຫັ້ນຕ໋ວາ, ອ້າຍຢູ່ຄ່ຳກໍ່ຍ້ອນວ່ານ້ອງ ນານເມືອ.

ເທື່ອນີ້ໃບຫນ້າຂອງດວງໃຈປ່ຽນເປັນສີບົວຂຶ້ນທັນທີ, ແມ່ນແລ້ວ! ນາງບໍ່ຄວນຈະຖາມເຂົາແນວນີ້, ທັງໆທີ່ນາງເອງກໍຮູ້ ດີແລ້ວວ່າ: "ເຂົານານເມືອກໍຍ້ອນນາງເລີກຄ່ຳ". ມີຫລາຍເທື່ອທີ່ເຂົາເຄີຍຮ້ອງຂໍບໍ່ໃຫ້ນາງຢູ່ຄ່ຳ ເພາະວ່າເປັນຫ່ວງນຳ, ແຕ່ນາງຊ້ຳພັດຕອບເຂົາວ່າ: "ອ້າຍບໍ່ຕ້ອງຢູ່ຖ້ານ້ອງກໍໄດ້, ນ້ອງ ເມືອ

ເຂວງກໍບໍ່ເປັນຫຍັງ". ພໍໄດ້ຍິນຄຳເວົ້ານີ້ ສີຫນ້າຂອງສຸພົນກໍຈືດລົງທັນທີ, ແຕ່ເຂົາກໍຍັງຄົງຕິດຕ່ອຍຫ້ອຍຕາມນາງສະເຫມີມາ. ຄຳເວົ້າຂອງດວງໃຈໃນມື້ນັ້ນກໍໄດ້ເຮັດໃຫ້ສີຫນ້າຂອງສຸພົນເສົ້າລົງ ອີກຕາມເຄີຍ, ນາງຈຶ່ງອອກປາກຊວນເຂົາ ເພື່ອເປັນການແກ້ຕົວ:

- ໄປ! ຊຸ້ນກໍພາກັນເມືອເທາະ, ຕາເວັນໃກ້ຈະຕົກຢູ່ແລ້ວ.

ເຫມືອນດັ່ງຄືນທີ່ເວົ້າງ່າຍ, ສຸພົນຍ່າງຕາມຫລັງດວງໃຈ ມາຢ່າງເຊື່ອງຊ້າ, ເຂົາບໍ່ອ້າປາກເວົ້າກັບນາງອີກແມ້ນແຕ່ຄຳດຽວ . ໃນທີ່ສຸດດວງໃຈກໍຕ້ອງເປັນຜູ້ຊວນລົມກ່ອນ.

- ເປັນແນວໃດ? ອ້າຍສຸພົນ, ວຽກງານສະຫະກອນ ບ້ານເຮົາປີນີ້ຄືຈິ່ງວ່າດີກວ່າເກົ່າໄດ໋! ນັບຕັ້ງແຕ່ລຸງຈານປັນອົ້ນ ມາເປັນຫົວຫນ້ານັ້ນມະ.

ດວງໃຈຢັ່ງເບິ່ງຄວາມຮູ້ສຶກຂອງເຂົາ, ຄວາມຈິງແລ້ວ ເຖິງວ່າລຸງຈານປັນຈະເປັນຫົວຫນ້າສະຫະກອນກໍຕາມ, ແຕ່ວຽກງານທັງຫມົດນັບແຕ່ການຄິດໄລ່ບັນຊີ, ການວາງແຜນການ ແລະນຳພາປະຕິບັດຕົວຈິງກໍລ້ວນແຕ່ແມ່ນດວງໃຈເປັນຜູ້ຕົ້ນຕໍ. ຍ້ອນນາງເປັນຄົນດຸຫມັ່ນ, ຫາວຫັນ, ກ້າຄິດ ກ້າເຮັດ ເຊິ່ງຈະຊອກຫາຍາກ ຢູ່ໃນບັນດາຊາຍຫນຸ່ມ-ຍິງສາວ. ດັ່ງນັ້ນຈຶ່ງເຮັດໃຫ້ຊາຍຫນຸ່ມຂີ້ຄ້ານຈຳນວນຫນຶ່ງມັກຈະເຍາະເຍີ້ຍສຽດສີ ແລະ ເຮັດໃສ່ນາງສາລະພັດຢ່າງ...ແລ້ວມັນກໍກ່ຽວມາເຖິງສຸພົນຫນຸ່ມຜູ້ຝ້າຮັກນາງ ຕ້ອງມີຄວາມເດືອດຮ້ອນ, ກັງວົນຫ່ວງໄຍນຳດວງໃຈທຸກບາດກ້າວຍ່າງ. ດວງໃຈບໍ່ພຽງແຕ່ເປັນຄະນະອຳນວຍການສະຫະກອນກະເສດເທົ່າ

ນັ້ນ ແຕ່ນາງຍັງໄດ້ນຳພາໜ່ວຍສະມາຄົມຍິງ ແລະ ຢູ່ໃນຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວຂອງສະຫະກອນ ອີກດ້ວຍ. ດັ່ງນັ້ນວຽກງານຂອງນາງຈຶ່ງໜັກໜ່ວງຈົນບໍ່ມີເວລາວ່າງໄວ້ສຳລັບສຸພົນເລີຍ, ນາງພຽງແຕ່ຄິດວ່າ: "ເມື່ອຮັກກັນແລ້ວ , ເຂົ້າໃຈກັນດີກໍບໍ່ຈຳເປັນຈະລົມໄປລົມມາຫລາຍເທື່ອ ເພາະ ຕ່າງຄົນຕ່າງກໍມີວຽກເຮັດ". ພ້ອມກັນນັ້ນ ນາງກໍໄດ້ອອກແຮງເຝິກຝົນຕົນເອງໃຫ້ເປັນແບບຢ່າງໃຫ້ແກ່ໝູ່ຄູ່, ນາງໄດ້ປຸກລະດົມ ຊຸກ ຍູ້ຊາຍໜຸ່ມ-ຍິງສາວໃຫ້ເຫັນຄວາມສຳຄັນຂອງການທຳມາຫາ ກິນແບບລວມໝູ່ ແລະ ໄດ້ອອກແຮງປັບປຸງກໍ່ສ້າງເຮັດໃຫ້ສະຫະກອນກະເສດບ້ານຂອງນາງກ້າວໄປແຕ່ລະກ້າວຢ່າງໜັກແໜ້ນ, ສຸພົນເອງກໍຮັບຮູ້ບັນຫານີ້ຢ່າງຈະແຈ້ງ, ເມື່ອນາງຖາມເຖິງ ວຽກງານເຂົາກໍເລີຍເວົ້າຂຶ້ນວ່າ:

- ຖ້າຈະທຽບໃສ່ຫລາຍປີທີ່ຜ່ານມາ, ປີນີ້ສະຫະກອນ ບ້ານເຮົາກໍມີລະບຽບດີກວ່າເກົ່າ ຜົນຜະລິດກໍໄດ້ຮັບຢ່າງປະຈັກຕາ , ການຄິດໄລ່ຄ່າແຮງງານກໍມີຄວາມຍຸດຕິທຳ ສອດຄ່ອງກັບແນວທາງນະໂຍບາຍຂອງພັກ...ແຕ່ວ່າ:

- ຍັງແຕ່ວ່າ ຫຍັງອີກລະອ້າຍ ສຸພົນ!

ນາງຖາມເຂົາດ້ວຍຄວາມສົນໃຈ.

- ແຕ່ອ້າຍຫາກຍັງຂ້ອງໃຈຢູ່ໜ້ອຍໜຶ່ງ. ເຂົາຢຸດ ໜ້ອຍໜຶ່ງດ້ວຍຄວາມລັ່ງເລໃຈ, ແຕ່ແລ້ວເຂົາກໍຕັດສິນໃຈເວົ້າ. ດວງໃຈ! ບໍ່ແມ່ນອ້າຍເຫັນແກ່ຕົວ ຫລືຢ້ານນ້ອງລືມເຫລືອເນີ! ຍ້ອນ

ວ່າອ້າຍຮັກນ້ອງ ແລະ ເປັນຫ່ວງນຳນ້ອງທຸກເວລາ...ດັ່ງ ນັ້ນອ້າຍເຫັນວ່ານ້ອງຄວນຈະລາອອກຈາກໜ້າທີ່ສາ, ສັດຕູອ້ອມຂ້າງຈຶ່ງຈະບໍ່ຫລາຍ.

- ເປັນຫຍັງອ້າຍຈຶ່ງຄິດແນວນັ້ນ?

ດວງໃຈແນມເບິ່ງເຂົາດ້ວຍຄວາມແປກໃຈ.

- ກໍຍ້ອນວ່າພວກຊາຍໜຸ່ມຈຳນວນໜຶ່ງຢູ່ບ້ານເຮົາ ເຂົາເຍາະເຍີ້ຍອ້າຍ ແລະ ເຂົາພິປອງຈະທຳລາຍນ້ອງ, ດ້ວຍເຫດນີ້ເອງອ້າຍຈຶ່ງເປັນເງົາຕາມຕົວນ້ອງທຸກເວລາ. ແຕ່ເມື່ອເຂົາເຫັນແນວນັ້ນ ເຂົາກໍແຮ່ງສຽດສີອ້າຍຈົນວ່າ...ອ້າຍທົນຕໍ່ໄປບໍ່ໄດ້ ອີກແລ້ວ.

ບາດຍ່າງຂອງດວງໃຈຄ່ອຍໆຜ່ອນຄວາມໄວລົງ, ນາງ ກ້າວໄປຄຽງຄູ່ກັບເຂົາ ບົນເສັ້ນທາງຈະເຂົ້າໄປສູ່ບ້ານ, ນາງ ແນມເບິ່ງໜ້າເຂົາດ້ວຍຄວາມເຫັນໃຈ.

- ອ້າຍສຸພົນ! ທີ່ຜ່ານມານ້ອງຂໍຂອບໃຈນຳອ້າຍໃນຄວາມບໍລິສຸດໃຈທີ່ອ້າຍມີຕໍ່ນ້ອງ, ແຕ່ນ້ອງຢາກຂໍຮ້ອງນຳອ້າຍ ຂໍໃຫ້ອ້າຍຈົ່ງມີມານະຈິດສູງຂຶ້ນຕື່ມອີກ, ແນ່ນອນຜູ້ທີ່ເຮັດດີກໍຍ່ອມຈະມີຄົນອິດສາແຕ່ຜູ້ທີ່ອິດສານັ້ນມັນແມ່ນຜູ້ທີ່ມີແນວຄິດຫລ້າຫລັງ. ເມື່ອເຮົາຮູ້ແນວນີ້ແລ້ວເຮົາຈະປ່ອຍໃຫ້ແນວຄິດຂອງຜູ້ທີ່ຫລ້າຫລັງນັ້ນມາເອົາຊະນະຄວາມດີຂອງເຮົາບໍ? ອ້າຍລອງຄິດເບິ່ງ ຖ້າວ່ານ້ອງລາອອກຈາກໜ້າທີ່ມັນກໍແມ່ນການປະລາໄຊຂອງແນວຄິດທີ່ສູ້ຊົນ, ສະນັ້ນ ນ້ອງແລະ ອ້າຍຈະຕ້ອງໄດ້ຕໍ່ສູ້...ຕໍ່ສູ້ກັບແນວຄິດທີ່ຫລ້າຫລັງ ຂອງຄົນ



ຈຳພວກຍ່ອມຫນ້ອຍ ແລະ ພ້ອມກັນຕ້ານກັບແນວຄິດອິດອ່ອນ ຍອມຈຳນົນຂອງຕົນເອງ.

- ແຕ່ອ້າຍບໍ່ຢາກໃຫ້ນ້ອງສ່ຽງເລີຍ ດວງໃຈ!

ດວງໃຈແນມເບິ່ງຫນ້າເຂົາແລ້ວຕອບວ່າ:

- ແຕ່ ມັນກໍຈຳເປັນທີ່ສຸດທີ່ເຮົາຈະຕ້ອງໄດ້ຕໍ່ສູ້, ອ້າຍສູພົນ! ຖ້າວ່າອ້າຍຫາກຮັກນ້ອງ ແລະ ຈິງໃຈຕໍ່ນ້ອງແທ້ ອ້າຍຈະຕ້ອງບືນຕົວ, ຕ້ອງຕໍ່ສູ້ກັບແນວຄິດທີ່ອ່ອນແອ ເພື່ອເອົາຊະນະກັບ ແນວຄິດທີ່ຫລ້າຫລັງຂອງຄົນຈຳພວກນັ້ນ, ເຖິງວ່າດຽວນີ້ເຂົາຈະ ເຍາະເຍີ້ຍສຽດສີພວກເຮົາ, ແຕ່ມື້ຫນຶ່ງພວກເຂົາກໍຈະຮູ້ວ່າ ພວກເຮົາທຳປະໂຫຍດໃຫ້ແກ່ສັງຄົມ ແລະ ໃນນັ້ນກໍມີທັງພວກເຂົາອີກ...

ພໍດີມາເຖິງບ້ານຂອງດວງໃຈ, ນາງກ່າວລາສູພົນແລ້ວກໍຟ້າວຂຶ້ນຂັ້ນໄດໄປ, ເຂົາແນມສົ່ງນາງຈົນລັບສາຍຕາແລ້ວຈຶ່ງ ຫັນຫນ້າເມືອສູ່ເຮືອນຂອງຕົນ.

ຄືນນັ້ນເປັນຄືນເດືອນແຮມ, ສູພົນນອນເອົາມືກ່າຍຫນ້າຜາກ, ຄິດຄືນເຖິງຄວາມເວົ້າທີ່ດວງໃຈໄດ້ຝາກໄວ້ໃນຫົວຄິດຂອງເຂົາ, "ເຮົາຈະຍອມຈຳນົນຕໍ່ແນວຄິດອັນຫລ້າຫລັງຂອງຄົນຍ່ອມຫນ້ອຍບໍ?" ເຖິງວ່ານາງຈະເປັນເພດຍິງ, ແຕ່ນາງພັດມີຄວາມເຂັ້ມແຂງ ມີການສູ້ຊົນ "ກ້າຄິດ, ກ້າເຮັດ, ກ້າເອົາຊະນະ", ແລ້ວ ສ່ວນເຮົາເອງທີ່ເປັນລູກຜູ້ຊາຍແທ້ໆ ເຮັດໃດຈຶ່ງມີແຕ່ຄວາມ ອ່ອນແອ, ມັກສະຫງົບສຸກ, ບໍ່ກ້າສູ້ຢັນກັບແນວຄິດທີ່ຫລ້າຫລັງຂອງຄົນພຽງແຕ່ຍ່ອມຫນ້ອຍ..."ສູພົນເອີຍ! ໂຕຕ້ອງເຂັ້ມແຂງ, ຕ້ອງ ຮ່ຳຮຽນ

ເອົາມານະຈິດຂອງດວງໃຈ". ເຂົາເຕືອນຕົນເອງ, ມາ ເຖິງຄາວນີ້ເຂົາໄດ້ຄິດກົນແຫນງທີ່ໄດ້ອອກປາກບອກໃຫ້ດວງໃຈລາອອກຈາກຫນ້າທີ່ວຽກງານ...ຄິດມາຣອດບ່ອນນີ້ເຂົາຢາກໃຫ້ຟ້າ ສະຫວ່າງໄວໆ ແລ້ວເຂົາຈະໄດ້ໄປຂໍອະໄພນຳດວງໃຈ, ເຂົາຈະໄປສະແດງຄວາມຕັດສິນໃຈຕໍ່ດວງໃຈວ່າ: "ຈະຄຽງບ່າຄຽງໄຫລ່ກັບນາງຕໍ່ສູ້ຕ້ານກັບແນວຄິດທີ່ຫລ້າຫລັງຂອງບຸກຄົນຍ່ອມຫນ້ອຍ..."

ທັນໃດນັ້ນກໍມີສຽງຫມາເຫົ່າເປັນແຖວໆຢູ່ທາງທົ່ງນາ, ສຸພັນວ່ຽງຫູຟັງປາກົດໄດ້ຍິນສຽງດັງແວ່ວໆຂອງຄົກ ຂອງໂປງ. ຍ້ອນໄດ້ຍິນຄຳທ້າທາຍຂອງພວກຊາຍຫນຸ່ມຈຳນວນນັ້ນຈຶ່ງເຮັດໃຫ້ ສຸພັນບໍ່ສະຫງົບໃຈ. ເຂົາລຸກຂຶ້ນຄວ້າເອົາພ້າອີໂຕ້ ແລະ ໄຟສາຍແລ້ວກໍຍ່າງລົງເຣືອນໄປ...ເຂົາແລ່ນໄປທິດທີ່ຫມາພວມເຫົ່າຢູ່ນັ້ນ...ແລະສິ່ງທີ່ປະທັບໃນສາຍຕາຂອງເຂົາແມ່ນຄວາຍຝູງຫນຶ່ງທີ່ພວມກັດກິນຕົ້ນເຂົ້າຢູ່ຢ່າງແຊບນົວ...ເຂົາຕົກໃຈ "ແມ່ນໃຜມາ ປ່ອຍຄວາຍເຂົ້ານາ? ຕອນຫົວຄ່ຳກ່ອນຈະກັບເມືອເຣືອນ ເຮົາກໍ ໄດ້ຍ່າງເລາະລຽບເບິ່ງຮົ້ວຈົນທົ່ວແລ້ວ, ຈັ່ງຊີ້ນັ້ນຕ້ອງແມ່ນການວາງແຜນ".

- ຮຸ້ຍ!...ຮຸ້ຍ!...

ເຂົາອອກປາກໄລ່ຄວາຍ, ສຽງດັງກ້ອງໄປທົ່ວທົ່ງນາ, ເຮັດໃຫ້ຄວາຍຝູງນັ້ນແຕກຕື່ນແລ້ວແລ່ນຕະເຫລີດເປີດເປີງອອກໄປ ສູ່ດົງ. ສຸພັນໄລ່ຄວາຍແລ່ນອອກມາຕາມຄັງແຄມບ້ານ, ເວລາ ນັ້ນສຽງວົນແຊວຂອງໄກ່ບ້ານກໍດັງຂຶ້ນປຸກເອີ້ນກັນອຶກກະທຶກ... ສຸພັນ

ແລ່ນໄລ່ຄວາຍເຂົ້າມາຮອດສຸມບົງແຫ່ງໜຶ່ງ, ທັນໃດເຂົາກໍ ເຕະສະດຸດລົ້ມລົງ, ຫລັງຈາກນັ້ນກໍມີວັດຖຸແຂງໆຟາດລົງໃສ່ຫົວ ຂອງເຂົາ.

"ໂອ້ຍ!" ແລະ ຕໍ່ມາເຂົາກໍສິ້ນສະຕິໄປ...

ສູພັນມາຮູ້ເນື້ອຄີງ ຕອນທີ່ເຂົານອນຢູ່ເທິງຊະແນນປູຜ້າ ຂາວຂອງໂຮງໝໍສະຫະກອນນັ້ນເອງ. ເຂົາມືນຕາຂຶ້ນຈຶ່ງພົບວ່າ ຕົນເອງບໍ່ໄດ້ຢູ່ບ່ອນເກົ່າ, ອ້ອມຂ້າງເຂົາມີແຕ່ພວກປ້າ, ພວກ ລຸງແລະ ບັນດາສະມາຊິກຂອງສະຫະກອນກະເສດ ໃນນັ້ນມີ ດວງໃຈຄົນໜຶ່ງທີ່ຢືນເຝົ້າອາການຂອງເຂົາດ້ວຍຄວາມເປັນຫ່ວງໄຍ. ເຂົາຈະໂຢ້ລຸກນັ່ງ ແຕ່ແລ້ວກໍຕ້ອງໄດ້ນອນລົງອີກ ເພາະຫົວຂອງ ເຂົາປາກົດວ່າໜັກອຶ້ງເໝືອນມີຫີນກ້ອນລານມາຕັ້ງໃສ່, ເຂົາ ເຮັດໜ້າໜຸ່ງເຂົ້າ ພ້ອມທັງຄາງເຈັບ:

- ໂອ່ຍ! ເຈັບຫົວແທ້ໆ, ຂ້ອຍເປັນຫຍັງໄປ?

ນາງແພດຟ້າວຫຍັບເຂົ້າມາຫາ ເຂົາ ແລ້ວບອກວ່າ:

- ອ້າຍຢ່າຟ້າວເໜັງຕີງເທື່ອ, ອ້າຍຖືກຫລອນຕີຫົວແຕກ... ດຽວນີ້ອ້າຍພວມນອນຢູ່ໂຮງໝໍຂອງສະຫະກອນ, ອ້າຍບໍ່ຕ້ອງ ຕົກໃຈ ພວກນ້ອງຈະເອົາໃຈໃສ່ເບິ່ງແຍງອ້າຍຈົນສຸດຄວາມສາມາດ.

ເຂົາຫລັບຕາລົງບຸດໜຶ່ງແລ້ວຄ່ອຍໆມືນຂຶ້ນເລື່ອນສາຍຕາ ໄປຢຸດຢູ່ໃບໜ້າຂອງດວງໃຈ...ດວງໃຈຍິ້ມໃຫ້ເຂົາ ແລ້ວຍ່າງເຂົ້າມາຖາມເຂົາວ່າ:

- ອ້າຍຈື່ບໍ? ມື້ຄືນນີ້ອ້າຍເປັນຫຍັງ?

ເຂົາຊົງຄິດຄືນເຖິງເຫດການ, ແຕ່ແລ້ວເຂົາກໍສັ່ນຫົວ.

- ອ້າຍຖືກຕີຫົວແຕກ, ແຕ່ອ້າຍບໍ່ຮູ້ວ່າໃຜເປັນຄົນຕີ. ບັນຫານີ້ລະທີ່ທຸກຄົນພວມຮ້ອນໃຈລໍຟັງຢູ່...ໃຜເປັນຄົນຕີ? ໃຜເປັນ ຜູ້ປ່ອຍຄວາຍມາກິນເຂົ້າໃນນາ? ຖ້າເຮົາຈະເດົາໆເອົາກໍຮູ້ໄດ້ທັນທີວ່າ ແມ່ນພວກທີ່ມີແນວຄິດຫລ້າຫລັງຫວັງທຳລາຍຫມາກຜົນ ຂອງການປະຕິບັດ. ແຕ່ເຮົາກໍຈັບຕົວເຂົາບໍ່ໄດ້ ເພາະບໍ່ມີຫລັກຖານພຽງພໍທີ່ຈະມາຢືນຢັນ, ຄືນນັ້ນຖ້າວ່າສູພັນທາກບໍ່ລຸກຂຶ້ນມາໄລ່ຄວາຍ, ຜົນຜະລິດກໍຈະຖືກທຳລາຍໄປຢ່າງຫລວງຫລາຍ...ໄຄແຕ່ເຂົາໄດ້ກູ້ເອົາໄວ້ທັນ ແລະ ເຂົາເອງກໍຖືກເຄາະຮ້າຍ.

ສອງອາທິດຜ່ານພົ້ນໄປ, ການສືບສາວຫາຕົວການຂອງ ຄະດີຍັງບໍ່ທັນໄດ້ຮັບຜົນ...ໃນທີ່ສຸດການຈັດຕັ້ງໄດ້ປຶກສາຫາລືກັນເພື່ອວາງແຜນການຈະມັດພວກນີ້ໃຫ້ຢູ່ມື. ເມື່ອຄະນະໄດ້ຕົກລົງ ເປັນເອກະພາບແລ້ວ ກໍໄດ້ຮັກສາຄວາມລັບໄວ້ດີທີ່ສຸດ.

ມື້ຫນຶ່ງຫົວສະຫະກອນຖືກເອີ້ນມາເຕົ້າໂຮມ, ລຸງຈານປັນ ຜູ້ເປັນຫົວຫນ້າກໍໄດ້ປະກາດຕໍ່ທີ່ປະຊຸມວ່າ:

- ລຸງພ້ອມດ້ວຍຫລານດວງໃຈຖືກເອີ້ນຂຶ້ນເມືອປະຊຸມຢູ່ແຂວງອາດຈະນອນຄ້າງຄືນ, ດັ່ງນັ້ນຈຶ່ງໄດ້ມອບວຽກເບິ່ງແຍງ ສະຫະກອນນີ້ໃຫ້ແກ່ລຸງຈານຕານຊົ່ວຄາວ, ຈຸດຫນັກແມ່ນການຮັກສາເຄື່ອງຂອງຢູ່ໃນສາງສະຫະກອນເຮົາ.

ສຽງຕົບມືດັງຂຶ້ນຈາກຄົນຍ່ອມຫນ້ອຍຫນຶ່ງ, ແຕ່ສ່ວນຫຼາຍແມ່ນສົນທະນາກັນຊຸບຊິບ ເນື່ອງຈາກວ່າບໍ່ເຫັນດີໃຫ້ລຸງຈານຕານຮັບຜິດ

ຊອບແຫນ ເຖິງວ່າຈະເປັນການຊົ່ວຄັ້ງຊົ່ວຄາວກໍຕາມ ເພາະ ລຸງຈານຕານນີ້ກໍເປັນຜູ້ຫນຶ່ງທີ່ຫລ້າຫລັງຢູ່ໃນຂະບວນຂອງຄົນພວກນັ້ນ. ແຕ່ກໍບໍ່ມີໃຜກ້າສະເຫນີຂໍ້ຂ້ອງໃຈຂອງຕົນອອກມາ ເພາະ ລຸງຈານປັນ ໄດ້ຕົກລົງໄປແລ້ວ, ແລະ ຕໍ່ມາເພິ່ນກໍພາກັນຂຶ້ນລົດ ເຂົ້າໄປໃນເມືອງ...

ໃນຄືນນັ້ນເອງ, ແຜນການທຳລາຍທົ່ງນາສະຫະກອນກະເສດກໍໄດ້ນຳອອກມາປະຕິບັດໂດຍແມ່ນລຸງຈານຕານເປັນຜູ້ຊີ້ນຳໂດຍກົງ. ຈຸຫນຶ່ງເປັນຜູ້ໄຂຮົ້ວ, ຈຸຫນຶ່ງເປັນຜູ້ປ້ອງຄວາຍເຂົ້ານາ, ອີກ ຈຸຫນຶ່ງເຂົ້າໄປສາງ ເພື່ອລັກເອົາອຸປະກອນການຜະລິດຂອງ ສ່ວນລວມອອກໄປຂາຍ...ເມື່ອຮອດໂມງນັດຫມາຍແລ້ວ ແຕ່ລະຈຸກໍໄດ້ລົງມືປະຕິບັດໄປຕາມແຜນການ...ລຸງຈານຕານເປັນຫົວຫນ້າຈຸ ຜູ້ມາລັກເອົາອຸປະກອນຢູ່ສາງ, ລຸງຍ່າງນຳຫນ້າບັນດາສະມາຊິກ - ຂອງຕົນເບັດເຂົ້າໄປໃນປະຕູສາງ ເພາະກະແຈຢູ່ນຳລຸງເອງເມື່ອເອົາເຄື່ອງຈຳນວນທີ່ຕົນຕ້ອງການພຽງພໍແລ້ວ ລຸງກໍອັດຕູສາງ ໄວ້ແລ້ວໃຫ້ສອງຄົນໄປງັດຝາບ່ອນອື່ນແງ້ນໄວ້ ເພື່ອເປັນພິລຸດ, ຫລັງຈາກນັ້ນເຂົາເຈົ້າກໍພາກັນຂົນເຄື່ອງຂຶ້ນກວຽນແກ່ອອກໄປ...ພໍໄປຮອດທາງແວ່ເຂົ້າບ້ານ, ລຸງຈານຕານກໍສັ່ງລູກນ້ອງຢຸດແລ້ວ ແນະນຳລາຍລະອຽດໃຫ້ລູກນ້ອງ ເພື່ອຈະນຳເຄື່ອງໄປມອບໃຫ້ແກ່ສາຍຕິດຕໍ່ຂອງຕົນ. ເມື່ອແນະນຳລະອຽດແລ້ວ ລຸງກໍກຽມຈະແຍກເຂົ້າບ້ານ ທັນໃດສຽງ "ຢຸດ!" ກໍດັງຂຶ້ນ, ແສງໄຟສາຍນັບເປັນ ໔-໔ ອັນກໍເຍືອງເຂົ້າມາໃສ່ຂະບວນ ແລະ ແລວແຜນການ ຂອງລຸງ

ຈານຕານກໍໄດ້ຈັບສົນແຕ່ພຽງເທົ່ານີ້...ຫລັງຈາກນັ້ນຢູ່ງຸດອື່ນ ທີ່ນອນຢູ່ໃນແຜນການຂອງລຸງຈານຕານກໍຖືກກອງຫລອນໄປ ຫຼຸບເອົາຫມົດກຽງ. ຕື່ນເຊົ້າມາ ທັງຫມົດຂະບວນກໍຖືກນຳຕົວຂຶ້ນເມືອ ທາສານຂອງເມືອງ ເພື່ອທຳການສືບສວນຄະດີ.

ດວງໃຈເປັນຜູ້ທີ່ນຳເອົາຂ່າວນີ້ມາເລົ່າສູ່ສູພັນຟັງ, ເຂົາຮູ້ສຶກເສຍໃຈຫລາຍທີ່ຕົນເອງບໍ່ໄດ້ປະກອບສ່ວນເຂົ້າໃນການຈັບກຸມ ຄັ້ງນີ້.

- ອ້າຍເສຍໃຈແທ້ງ ທີ່ບໍ່ໄດ້ຮ່ວມມືນ້ອງ ເພື່ອປະຕິບັດຫນ້າທີ່ສຳຄັນໃນຄັ້ງນີ້. ດວງໃຈຍິ້ມແລ້ວກ່າວວ່າ:

- ບໍ່ເປັນຫຍັງດອກອ້າຍ, ວ່າແຕ່ອ້າຍເຊື່ອຫມັ້ນການນຳຂອງພັກແລ້ວບໍ? ເຊື່ອຫມັ້ນໃນໄຊຊະນະຂອງພວກເຮົາແລ້ວບໍ? ອ້າຍຍັງເຈັບອ້າຍກໍຕ້ອງພັກຜ່ອນຫລາຍໆ, ເມື່ອໃດອ້າຍແຂງແຮງ ດີແລ້ວ ພາລະຂອງພວກເຮົາຍັງມີຫລາຍໃນການປັບປຸງວຽກ ສະຫະກອນຂອງບ້ານເຮົາ...

ສູພັນແນມເບິ່ງຫນ້າດວງໃຈດ້ວຍຄວາມປິຕິຊົມຊື່ນ.

-ດວງໃຈ! ອ້າຍໄດ້ຮຳຮຽນເອົາມານະຈິດອັນແຂງແກ່ນຂອງນ້ອງແລ້ວ, ດຽວນີ້ອ້າຍເຊື່ອຫມັ້ນຢ່າງຕາຍໃຈໃນການນຳ ຂອງພັກ, ອ້າຍຈະຕ້ອງເຂັ້ມແຂງຢືນຢູ່ຄຽງຂ້າງນ້ອງ, ຈະຂໍ ເປັນທັງເພື່ອນຜູ້ຮ່ວມວຽກງານ ແລະ ເປັນທັງສະຫາຍຜູ້ຮ່ວມຊຸດົມ ການຂອງນ້ອງຕະຫລອດຊົ່ວຊີວິດຂອງອ້າຍ...

ທັງນາງ ແລະ ເຂົາຕ່າງກໍຍິ້ມໃຫ້ກັນດ້ວຍຄວາມພາກພູມໃຈ,

ແລະ ມີຄວາມເຊື່ອໝັ້ນເຊິ່ງກັນ ແລະ ກັນຢ່າງປ່ຽມລົ້ນ...

24/VII
ຫ້າມຈຳໜ່າຍ

# ໂອ ບໍ່ຄືນ ດອກອ້າຍ

● ປຽງຊ່ຳ

* ແຕ່ລະມື້ເອື້ອຍໄມຈັນຕ້ອງລຸກຕື່ນນອນແຕ່ໄກ່ຂັນສອງ, ດັງໄຟ, ຕັ້ງຫມໍ້ຫນື້ງ ແລະ ຫວດເຂົ້າໃສ່ໄຫປະໄວ້ໃຫ້ແມ່ຍ່າ ແລ້ວເອື້ອຍຈຶ່ງຈັບເອົາກະບຸງເຂົ້າລົງໄປສູ່ຄົກມອງ. ຝັດເຂົ້າແລ້ວເອື້ອຍພັດຈັບເອົາຄານຫາບ ແລະ ກະບັ້ງນ້ຳລົງໄປທາງທ່າ. ປົງຫາບນ້ຳແລ້ວຈັບໃສ່ກະຫລ້າ (ກະພາເປັຟືນ) ເຂົ້າປ່າຫາຟືນ. ນີ້ແມ່ນວຽກງານທີ່ຕ້ອງປະຕິບັດໃນຕອນເຊົ້າວັນໜຶ່ງຂອງເອື້ອຍໄມຈັນ ກໍຄືຂອງເອື້ອຍນ້ອງແມ່ຍິງຊາວຫົວພັນທົ່ວໆໄປ.

ມື້ນີ້ປົງເປັນແລ້ວເອື້ອຍໄມຈັນ ບໍ່ແຕ່ງກະຫລ່ຽງ (ກະພາ ເປ້ເຄື່ອງໄປໄຮ່) ຄືທຸກງນີ້ ຈັ່ງຊັ້ນຈຶ່ງເຮັດໃຫ້ແມ່ຍ່າຄາໃຈ.

- ເພີ້! (ໃພ້) ບໍ່ເຫັນແຕ່ງກະຫລ່ຽງກະເຫລີບອັນເດີ, ມື້ນີ້ເຂືອ (ໂຕ) ບໍ່ໄປໄຮ່ນຳເສົ່າ (ເຂົາ) ເບາະ? ແມ່ຍ່າ ເອີ້ນຖາມ:

- ຈ້າວ! ມື້ນີ້ລູກຄາວຽກ.

ຫລັງຈາກຫວີຜົມ, ເອົານົມໃຫ້ລູກສາວນ້ອຍກິນແລ້ວ, ເອື້ອຍໄມຈັນໄປນັ່ງພັບແພບຫ່າງຈາກເຕົາໄຟດີ່ຫອງປະມານ ໔-໕ ແມັດເພື່ອຄອບປູ່ຍ່າ (ລູກໃພ້ບໍ່ໄດ້ຍ່າງຜ່ານໄປທາງຫ່ອງ ເພາະຂະລຳ)

- ມື້ນີ້ລູກໄດ້ຮັບຄຳສັ່ງໃຫ້ໄປປະຊຸມຢູ່ສຳນັກສະມາຄົມ ແມ່ຍິງເມືອງ, ກຳນົດສິບປາຍວັນ, ທາງຂັ້ນເທິງຮຽກຮ້ອງໃຫ້ ກຸ້ມຕົນເອງທາງເຂົ້າ. ສ່ວນບາສອນນີ້ຈະໄດ້ປະໄວ້ນຳອຸ່ເຖົ້າຍ່າອີກ...

ລຸງທິດສາ (ປູ່) ນັ່ງດູດຢາຢູ່ເທິງສະແນນຄີຫ້ອງປີກ ບໍ່ປາກບໍ່ຕິງ, ຊິງຢາກຮ້າຍໃຫ້ລູກໃພ້ພໍແຮງແລ້ວ ແຕ່ຫາກບໍ່ປາກ.

- ເອີ! ຖ້າມີວຽກມີງານກໍໄປຫັ້ນແລ້ວ, ແມ່ຍ່າ ໃຫ້ ກຳລັງໃຈ. ເອື້ອຍໄມຈັນຟ້າວແຕ່ງເອົາຖົງເອກະສານ, ກະຕ່າຜ້າອ້ອມລູກນ້ອຍ ພ້ອມເຄື່ອງໃຊ້ປະຈຳວັນເຮັດຫາບສະລາກັບໄຖເຂົ້າ.ບ່າຫນຶ່ງເຈ່ຍອີແອນ້ອຍ, ບ່າຫນຶ່ງຫາບເຄື່ອງແລ້ວລົງຈາກເຮືອນ,ມຸ້ງຫນ້າໄປສູ່ທາງລົດ. ພໍລູກໃພ້ລົງຫວິດຂັ້ນໄດ, ພໍ່ປູ່ແມ່ຍ່າ ກໍເລີ່ມ"ເທດສະຫນາ".

- ເຖົ້າ! ລາວຄຶດແນວເດີອັນລູກເພີ້ ລູກນາງເຮົານີ້ນ່າ!ວ່າ

ແຕ່ມື້ວຽກ, ບໍ່ຈັກກາງຄໍ່າ ບໍ່ຈັກກາງຄືນກໍໄປເອົາພໍ່ປານນັ້ນ, ບາງເທື່ອກໍ່ຈົ່ງຊຸ້ແທ້ລະ! ໄປພໍ່ສິບວັນຊາວວັນ, ເຄີກວຽກເຄີກງານ - ຄອບຄົວຍັງບໍ່ແລ້ວ, ຍັງທາບເຂົ້າແຕ່ເຮືອນໄປກິນອີກ...

- ແມ່ນເພີ່ຊຸ່ຣູ! ແຕ່ລູກອອກກັບອີກກັບຫວງກັນກາເຊື່ອ ບໍ່ໄດ້ດອກ, ກະເສີນວ່າລູກເພີ່! "ເອົາລູກເພີ້ນມາລ້ຽງ, ເອົາຫມັ້ນຽງເພີ້ນມາອີນ".

- ກັນກາໄດ້ຂຽນຫນັງສືເລົ່າໃຫ້ບ້າ (ບັກ) ສິງຮູ້ແລ້ວນ່າ, ບອກວ່າໃຫ້ອໍອະນຸຍາດມາຢາມຄອບຄົວຈັກສອງສາມວັນແດ່, ມີວຽກຢາກລົມຫນ້ອຍຫນຶ່ງ. ໄດ້ສອງປີປາຍແລ້ວໄດ້ມັນບໍ່ມາ ຢາມ, ຫລືມັນຍ້າຍຈາກກອງຮ້ອຍເກົ່າແລ້ວເບາະ?...

ເທື່ອໃດພໍ່ເທື່ອນັ້ນ, ພໍ່ແຕ່ລູກໃພ້ລົງຫວິດຂຶ້ນໄດເຮືອນໄປເຄືອນໄຫວວຽກງານສ່ວນລວມ, ພໍ່ປູ່ແມ່ຍ່າຢູ່ເຮືອນກໍຕັ້ງຕໍ່ແຕ່ຈີ່ມແລະສີງໄສຢູ່ບໍ່ແລ້ວບໍ່ເປັນຈັກເທື່ອ. ຫົວຫນ້າຫນ່ວຍສະມາຄົມຊາວນາແລະສະມາຄົມແມ່ຍິງໃນບ້ານກໍໄດ້ກໍ່ສ້າງຫລາຍເທື່ອ, ແຕ່ສອງຜົວເມຍເຖົ້ານີ້ກໍຍັງບໍ່ທັນລູທັນລີ່ງ. ແມ່ນແລ້ວແຂວງຫົວພັນເປັນແຂວງ ທີ່ຫມັ້ນຂອງການປະຕິວັດ, ໄດ້ຮັບການປຸກລູກຫລາຍເທື່ອແລ້ວ, ແຕ່ແນວຄິດອັນເກົ່າແກ່ຮັກສາຄອງເດີມໃນສະຫມອງຂອງຜູ້ເຖົ້າ ຜູ້ແກ່ບໍ່ແມ່ນຈະລົບລ້າງມັນໄດ້ຢ່າງສິ້ນເຊີງ. ເອື້ອຍໄມຈັນຮູ້ສຶກລຳຄານໃຈຫລາຍ, ມີບາງຄັ້ງເອື້ອຍຄິດຈະພາລູກກັບຄືນໄປຢູ່ນຳພໍ່ແມ່ຂອງຕົນ, ແຕ່ຢ້ານເປັນຜົນສະທ້ອນເຖິງຈິດໃຈຂອງຜົວ, ແລ້ວກໍອົດທົນສູ້ອົບກັບຊີວິດເປັນໃພ້ຕໍ່ໄປ...

ພາຍຫຼັງແຕ່ງດອງເອົາໃພ້ມາເຮືອນແລ້ວ, ອ້າຍສິງແກ້ວກໍໄດ້ອະນຸຍາດຢູ່ນຳຄອບຄົວ ໑໕ ວັນ ວັນເຕັມໄປດ້ວຍຄວາມອົບອຸ່ນ - ແລະ ສຸກສັນຂອງຄູ່ຜົວເມຍໜຸ່ມແໜ້ນ ທີ່ໄດ້ຜ່ານການທົດສອບໃນແປວໄຟແຫ່ງສົງຄາມ. ແລ້ວສິງແກ້ວກໍໄດ້ອຳລາໄນຈັນ ເມຍແພງທີ່ແສນຮັກ ກັບຄືນສູ່ສະໜາມສືບຕໍ່ໜ້າທີ່.

ຕໍ່ມາເປັນເວລາ ໘ ເດືອນ, ພິຍານແຫ່ງຄວາມຮັກຂອງຄູ່ຜົວເມຍທີ່ນັ້ນກໍໄດ້ອອກມາເບິ່ງໂລກ. ໄດ້ຮັບຈົດໝາຍເມຍສົ່ງຂາວວ່າໄດ້ລູກຊາຍ, ສິງແກ້ວດີໃຈຢ່າງບໍ່ມີບ່ອນໄວ້ ຈຶ່ງຟ້າວຂຽນ ຈົດໝາຍ ແລະ ຝາກຊື່ລູກມາພ້ອມ "ສົ່ງເຖິງແມ່ສອນໄຊ..."

ປະຕິບັດຕາມຄຳໝັ້ນສັນຍາຕໍ່ກັນ, ໄນຈັນຕັ້ງໜ້າຮ່ຳຮຽນປະຊາສຶກສາຢູ່ນຳບ້ານ ຈົບຊັ້ນປະຖົມ ແລະ ພວມບຳລຸງຫ້ອງ ມ.໑, ທັງປະກອບສ່ວນເຂົ້າໃນທຸກວຽກງານນຳບ້ານ ເພື່ອໃຫ້ສົມ ເປັນຄອບຄົວພະນັກງານກອງທັບປົດປ່ອຍປະຊາຊົນລາວ, ປະຕິບັດ ຄຳຂວັນທີ່ວ່າ "ແນວໜ້າຮອງ ແນວຫລັງຂານຕອບ".

ເວລາຫາກໍໄດ້ແຕ່ທ້າວສອນໄຊກໍຍັງໄຄແດ່, ບາດວຽກ ຕ້ອງການໄປກໍມີແຕ່ຈ່ອຍລູກຂົນບ່າ, ມີໜຶ່ງຫົວກະຕ່າຜ້າອ້ອມ, ມີໜຶ່ງຫົວຖົງເອກະສານແລ້ວກໍໄປຢ່າງບໍ່ຫ່ວງຫາງຫລັງ, ທ້າວສອນໄຊຮູ້ຢ່າງທັນ, ອ້າຍສິງແກ້ວຈຶ່ງເຫັນໜ້າລູກຊາຍທີ່ໜ້າຮັກໂດຍ ຍາດເວລາແວ່ຍາມເທື່ອມາປະຊຸມຖອດຖອນບົດຮຽນດ້ານຮົບຢູ່ຫ້ອງ ເສນາກອງບັນຊາການສູງສຸດເມື່ອປີກ່ອນນັ້ນເອງ. ແລ້ວອ້າຍສິງແກ້ວກໍຝາກລູກສາວນ້ອຍໄມຕີ ທີ່ໜ້າແພງໄວ້ກັບເອື້ອຍໄນຈັນອີກ,ຄວາມ

ຫຍຸ້ງຍາກໄດ້ເພີ່ມຂຶ້ນທົບເທົ່າ, ດັ່ງໂບຮານກ່າວໄວ້ "ມີລູກ ຫນຶ່ງ ປານເຊືອກຜູກຄໍ, ມີລູກສອງປານປີ່ຜູກສອກ". ໄປຫນ້າຍັງ ຫ່ວງ ຫລັງ. ປູ່ຍ່າລຸງປ້າອາວອາເພີ່ນກໍຮັກຫລານເພີ່ນຢູ່ດອກ, ແຕ່ຈະມີ ຄວາມຮັກໃດເທົ່າກັບຄວາມຮັກຂອງຜູ້ເປັນແມ່ມີຕໍ່ລູກ. ຢ່າງໃດ ກໍ ຕາມ, ເອື້ອຍໄມຈັນກໍໄດ້ຕັດສິນໃຈຜ່ານຜ່າ, ທຸກວຽກງານ ລ້ວນ ແຕ່ເຂົ້າສູ່ແຜນການ. ມື້ໃດບໍ່ຄາວຽກສ່ວນລວມ, ເອື້ອຍກໍມີຫນ້າຢູ່ ຕາມທົ່ງໄຮ່ທົ່ງນານຳຫມູ່ສະມາຊິກສະຫະກອນກະເສດຫລື ຕຳເຂົ້າ ເອົາຟືນ, ຕ່ຳຫູກທໍໄຫມ ເພື່ອທົດແທນວັນເວລາທີ່ຕົນບໍ່ໄດ້ຢູ່ບ້ານ. ຈັ່ງຊັ້ນແຫລະເອື້ອຍໄມຈັນຈຶ່ງສາມາດກຸ້ມການພໍ່ແມ່ລູກເຕົ້າ, ຊຸມ ແມ່ຍ່າແມ່ນາຍໄທບ້ານເຄີຍກ່າວເຖິງເອື້ອຍໄມຈັນດວຍຄວາມ ອິດ ສາຜົວເມຍລຸງທິດສາໄດ້ລູກໃພ້ຄົນຮູ້ຜູ້ດີ.

ຫນ່ວຍພັກຕາແສງໄດມອບໃຫ້ສະຫາຍນາງຄຳແດງ, ຫົວຫນ້າ ສະມາຄົມແມ່ຍິງຕາແສງຮັບຜິດຊອບຕິດຕາມກໍ່ສ້າງເອື້ອຍໄມຈັນ . ປ້າຄຳແດງໄດ້ເອົາໃຈໃສ່ແນະນຳ ແລະ ມອບວຽກໃຫ້ເອື້ອຍ ໄມ ຈັນ ເພື່ອເປັນການທົດສອບເທື່ອລະກ້າວ. ເປັນຕົ້ນແມ່ນວຽກງານ ລະດົມທະຫານໃຫມ່, ຂົນຂວາຍພາສີກະສິກຳ, ສ້າງບ້ານທົດລອງ ວຽກງານສະມາຄົມຍິງ ແລະ ອື່ນໆ. ຍ້ອນວ່າໃນຕົວຂອງ ເອື້ອຍ ເອງໄດ້ເປັນແບບຢ່າງອັນດີໃຫ້ຫມູ່ຄູ່ຢູ່ແລ້ວ, ສະນັ້ນເອື້ອຍ ເວົ້າ ອອກຄວາມໃດກໍເປັນຕາຟັງທັງຫມົດ, ດັ່ງນັ້ນທຸກວຽກງານທີ່ປ້າຄຳ ແດງໄດ້ມອບຫມາຍໃຫ້, ເອື້ອຍໄມຈັນກໍໄດ້ສຳເລັດເປັນຢ່າງດີ.

ໃນກອງປະຊຸມເລືອກຕັ້ງຄະນະສະມາຄົມຂັ້ນຕາແສງ ຊຸດໃຫມ່

ເອື້ອຍໄມຈັນໄດ້ຮັບຄະແນນສຽງເປັນລະດັບ ໔ ຖືດຈາກປ່າຄຳແດງ ແລະ ເອື້ອຍໄມຈັນກໍ່ຖືກຄັດເລືອກເປັນຕົວແທນສະມາຄົມແມ່ຍິງຕາແສງ ສ. ໄປຮ່ວມກອງປະຊຸມໃຫຍ່ສະມາຄົມແມ່ຍິງທົ່ວເມືອງຈາກນັ້ນເອື້ອຍພັດຖືກເລືອກເຂົ້າເປັນຄະນະສະມາຄົມຍິງເມືອງວຽງໄຊຊຸດໃໝ່ ແລະ ໄດ້ຮັບມອບໝາຍໃຫ້ລົງມາຮັບຜິດຊອບ ນີ ຕາແສງຢູ່ພື້ນຖານ.

ຕໍ່ນັ້ນມາບໍ່ດົນປານໃດ, ວັນເວລາແຫ່ງຄວາມສະຫງ່າລາສີໃນຊີວິດຂອງເອື້ອຍໄມຈັນກໍໄດ້ມາເຖິງ. ພິທີໄດ້ຈັດຂຶ້ນທີ່ໂຮງການຄະນະຕາແສງ. ເອື້ອຍໄມຈັນຮູ້ສຶກພາກພູມໃຈຢ່າງບໍ່ມີຫຍັງປຽບປຽບ, ສຽງຫົວໃຈຕາໍເຂົ້າເວລານີ້ຊາງຜິດປົກກະຕິ, ພ້ອມທັງມີສຽງ ສະອື້ນຄ່ອຍໆໃນລຳຄໍຂອງເອື້ອຍ, ໃນມືຈັບເຈ້ຍນ້ອຍໆຂາວສະອາດ, ເຂົາອ່ານຄຳປະຕິຍານຕົນຕໍ່ໜ້າບັນດາສະຫາຍພາຍໃຕ້ຮົ່ມທຸງທີ່ສະຫງ່າອົງອາດຂອງພັກ ນາກ-ເລນິນ. ນັບແຕ່ມື້ນັ້ນເປັນຕົ້ນມາ,ສັບທີ່ວ່າ: "ສະຫາຍ" ນັ້ນມັນຍິ່ງມີຄວາມໝາຍຢ່າງເລິກເຊິ່ງສຳລັບເອື້ອຍໄມຈັນ.

ນັບແຕ່ໄດ້ຮັບຈົດໝາຍຂອງພໍ່, ຜູກອງສິງແກ້ວປາກົດວ່າບໍ່ມັກປາກມັກລົມຢອກໄຍກັບອ້າຍນ້ອງຄືເກົ່າ, ເພາະເນື່ອໃນຈົດໝາຍໄດ້ອົບຮົມໃນສະຫມອງຂອງເຂົາສະເໝີ, ເປັນຕົ້ນແມ່ນຕອນ ທີ່ຂຽນວ່າ: "ສ່ວນເຜີນນັ້ນຄືຈັ່ງວ່າບໍ່ຢາກຈະຢາກແຈ້ງປານໃດ ແລ້ວເດີ...ສະນັ້ນອໍ່ (ພໍ່) ຈຶ່ງຢາກໃຫ້ລູກໄປຢາມອໍ່ເອັມ (ພໍ່ແມ່)ຈັກສອງສາມມື້ສາກ່ອນ".



ຜູ້ກອງສິງແກ້ວຄິດແລ້ວຄິດອີກ: "ເລື່ອງນີ້ຈະເປັນໄປບໍ່ໄດ້ດີ! ຫລືຊີວິດມາຮອດນີ້ຈະຂາດຕອນ? ຈາກນັ້ນລູກຊາຍກໍໄປທາງຊາຍ, ລູກຍິງກໍໄປທາງຍິງ, ໂທ! ພໍ່ແມ່ຍັງຫມົດລູກສັງຈະມາເປັນກຳພ້າ ແລ້ວເຂົາຫລັບຕາເຂົ້າບໍ່ຢາກເຫັນພາບນັ້ນປະກົດຂຶ້ນ. ເຂົາ ຄິດຢາກກັບເພດເປັນນົກນ້ອຍມາງອຍຢ່າງສີດາຕໍ່ຫນ້າເຮືອນ ເພື່ອ ສັງເກດການ. ເຂົາຄິດຢາກຈະສະເຫນີຂໍໄປຢາມບ້ານ ແຕ່ເຂົາ ພັດຍັງຢູ່ໃນສະໄຫມທົດລອງ ແລະ ໃກ້ຈະຮອດເລື່ອນສົມບູນ ແລ້ວ . ເຂົາບໍ່ຢາກເອົາວຽກສ່ວນຕົວມາຖ່ວງດຶງວຽກສ່ວນລວມ ກໍຄື ຖ່ວງດຶງບາດກ້າວເດີນຂອງຕົນ.

ນັບວ່າເປັນໂຊກດີຫລາຍ, ອາທິດຕໍ່ມາ ທາງກອງພັນໄດ້ແຕ່ງສະຫາຍສິງແກ້ວມາລາຍງານສະພາບຢູ່ຫ້ອງການເມືອງກອງບັນຊາການສູງສຸດ ແລະ ອານຸຍາດໃຫ້ແວ່ຢາມຄອບຄົວ ໓ ວັນ. ໂອກາດດີຫາຍາກນີ້ເຂົາຈຶ່ງຂໍໃບສະເຫນີຮ່ວມຊີວິດພາຍໃນທັງໃບສະ ເຫນີເຮັດວຽກລົງໄປຫາຄະນະພັກພື້ນຖານຕາແສງ, ດ້ວຍຈຸດປະສົງຈະສືບຮູ້ສະພາບຂອງເມຍຕາມເນື້ອໃນຈົດຫມາຍຂອງພໍ່ແມ່ຫວ່າງແລ້ວນີ້.

ພໍຫລຽວເຫັນແມ່ເຈ່ຍນ້ອງທັງຫາບເຄື່ອງມາແຕ່ໄກໆ, ທ້າວສອນໄຊກໍແລ່ນໄປຮັບເອົາກະຕ່າຊ່ວຍແມ່ ແລະ ລາຍງານແມ່ຢ່າງຟ້າວຟັ່ງ:

- ແມ່! ຈັກແມ່ນອາວທະຫານມາແຕ່ທາງໃດ, ລ່າມາ ນອນຕຽງນອນຂອງພວກເຮົານັ້ນ!

- ແມ່ນແທ້ບໍ່ລະສອນ?

- ເອີ! ແມ່ນແທ້ນ່າ! ບໍ່ເຊື່ອເມື່ອອອກແມ່ກໍເຫັນໂລດ,ດຽວນີ້ຍັງພັກຢູ່ເຮືອນເຮົານັ້ນ!

ເອື້ອຍໄມຈັນຫົວຍ່າງຫົວເອົາມືລູບໆຫົວລູກບໍ່ປາກບໍ່ຕິງ, ເຂົາຄິດສົງສານລູກຕົນ ກໍຄືເດັກຜູ້ອື່ນໆທີ່ບໍ່ຮູ້ໜ້າພໍ່. "ໂອ! ນີ້ນໍ ສົງຄາມ ລູກເກີດມາບໍ່ຈັກໜ້າພໍ່! ຜູ້ທີ່ພໍ່ເຂົາຍັງມີຊີວິດຢູ່ເຂົາກໍຍັງຈະມີມື້ໄດ້ເຫັນໜ້າພໍ່ຂອງເຂົາ! ແຕ່ແລ້ວສຳລັບຜູ້ທີ່ພໍ່ເຂົາບໍ່ມີ· ຊີວິດອີກ! ເຂົາຈະບໍ່ມີມື້ໄດ້ເຫັນໜ້າພໍ່ເຂົາຈັກເທື່ອເລີຍ! ບໍ່ໄດ້! ຈະຕ້ອງສະກັດກັ້ນຝາມືອັນເປື້ອນເລືອດຂອງພວກຈັກກະພັດ! ເຮັດໃຫ້ທ້ອງຟ້ານີ້ມີຄວາມປອດໃສ! ເຮັດໃຫ້ລູກຫລານຂອງປະຊາຊົນ ບັນດາຊົນຊາດໄດ້ຢູ່ໃນວົງແຂນອັນອົບອຸ່ນຂອງພໍ່ແມ່!"

ເອື້ອຍໄມຈັນຫົວຍ່າງຫົວຝັນໄປຕາມຄວາມຄິດ, ຈັກຮອດ ຕື່ນຂຶ້ນໄດເຮືອນຍາມໃດບໍ່ຮູ້ເມື່ອ.

ອ້າຍສົງແກ້ວຟ້າວລົງຂຶ້ນໄດມາຮັບເອົາຫາບເຄື່ອງຈາກ ບ່າເມຍໄປປົງໄວ້ ແລ້ວຕ່າວມາຈະຮັບຊົມລູກສາວນ້ອຍໄມຕີ ທີ່ບໍ່ ທັນເຫັນໜ້າຈັກເທື່ອ. ພໍແຕ່ພໍ່ຢື້ມືໃສ່, ລູກສາວນ້ອຍກໍໄຫ້ແກກຂຶ້ນທັງສັ່ນກັບໆ ແລະ ຈຸ້ມເຂົ້າໃນອອມອົກຂອງແມ່.

ພາບທັງໝົດນີ້ຕ້ອງເຮັດໃຫ້ອ້າຍສົງແກ້ວຄິດຫລາຍເຕີບ. ນື້ໜຶ່ງຜ່ານໄປ ເຂົາບໍ່ທັນຍາກແຕະຕ້ອງເຖິງຈຸດປະສົງອັນຕົ້ນຕໍ ທີ່ເຂົາມາຢາມບ້ານເທື່ອນີ້. ດ້ານໜຶ່ງເຂົາກໍຍັງບໍ່ທັນໄດ້ປຶກສາ ນຳຄະນະພັກຕາແສງເທື່ອ ບໍ່ທັນຮູ້ສະພາບຕົວຈິງອັນໃດເປັນອັນໃດກັນ

ແທ້? ຖ້າເວົ້າຂຶ້ນມາ ເລື່ອງລາວຫາກບໍ່ມີມູນຄວາມຈິງ ແນ່ນອນ ເຂົາເອງກໍຈະກາຍເປັນຜູ້ທໍລະຍົດຕໍ່ຄຸນງາມຄວາມດີຂອງຜູ້ ເປັນເມຍທີ່ຕັ້ງຕໍ່ບໍລິສຸດກັບລູກຜົວ, ທັງແບກຫາບພາລະອັນໜັກ ໜ່ວງໃນການບົວລະບັດພໍ່ແມ່ ລູກເຕົ້າຂອງເຂົາຕະຫລອດມາ... ແລ້ວເຂົາກໍຈະກິນແໜງຕະຫລອດໄປ...

ຕອນຄ່ຳມື້ນັ້ນມ້ຽນພາແລງ, ຈັດແຈງວຽກເຮືອນເປັນທີ່ຮຽບຮ້ອຍແລ້ວ ເອື້ອຍໄມຈັນກໍຄອບປູ່ຍ່າວ່າມີວຽກໄປເຮືອນປ້າຄຳແດງເພື່ອລາຍງານວຽກທີ່ໄປປະຊຸມມາແຕ່ເມືອງ. ພໍເອື້ອຍໄມຈັນລົງເຮືອນໄປ, ພໍ່ແມ່ກໍເລີ່ມເຂົ້າສູ່ບັນຫາທັນທີ:

- ນີ້ແຫລະບາສິງ! ຖ້າລາວໄດ້ຢູ່ຫລາຍມື້ຕໍ່ໄປຫາກຈະ ຄ່ອຍເຫັນເອງ! ຄ່ຳນີ້ວ່າວຽກນີ້ ຄ່ຳໜ້າວ່າວຽກໜ້າ! ລູກເຜີ້ຫລານນາງເຈີ້ມກັນລ່າບໍ່ເຂົ້າໃຈ, ພໍ່ເຂົາເປີດຫົວເລື່ອງ.

- ທັງດ້ານວຽກຢ້າວຂ້າວເຮືອນເຊີ, ບໍ່ມີອັນເດີຊີຕີຊີເຈ ມັນແລ້ວລູກໃພ້ນີ້ນ່າສິງເອີຍ ແຕ່ສຳລັບບັນຫາທີ່ລາວເວົ້າມານັ້ນ ກັນກໍບໍ່ຊ່າງວ່າ...ແມ່ເຂົາຍັງໃຫ້ກຳລັງໃຈເລັກນ້ອຍ.

ອ້າຍສິງແກ້ວກໍຍັງບໍ່ທັນປາກທັນຕີງ, ມີແຕ່ຈັບເອົາກ້ອງທິດມາທິດຢາແຮວໜຶ່ງເປັນສຽງດັງ "ແກັດ!ແກັດ!..." ບັກຢາວໆ - ແລ້ວເຂົາກໍລົງເຮືອນມຸ້ງໜ້າໄປສູ່ໂຮງການຄະນະຕາແສງຕາມເວລາທີ່ນັດໝາຍ.

ພໍແຕ່ປ່ອນໂຕເຂົ້າປະຕູໂຮງການ, ສິງແກ້ວກໍຕົກຂະນ່າໃຈ ! ເມື່ອເຈີກັບສາຍຕາ ແລະ ຮອຍຍິ້ມທີ່ຄຸ້ນແກ່ວນ ແລະ ແສນຫວານ

ສົ່ງມາຈາກແຈໂຕະເບື້ອງນັ້ນ ສະແດງຄວາມຮັບຕອນເຂົາ, ໝົດທຸກຄົນລຸກຂຶ້ນສຳພັດມືສະຫາຍສິງແກ້ວດ້ວຍຄວາມຊື່ນຊົມຂອງ ຄົນຮ່ວມບ້ານຈາກກັນໄປດົນນານຈຶ່ງໄດ້ພົບກັນ.

- ອ້າວ! ສະຫາຍນາງໄມຈັນບໍ່ເຫັນຖາມສະບາຍແຂກແດ່ລະ! ລຸງຈານໝັ້ນ ເລຂາຄະນະພັກຕາແສງຊຸ່ມບັນຍາກາດຫ້ອງປະຊຸມ.

- ເຂົາຖາມສະບາຍກັນພໍແຮງແລວລະ! ປາກຄຳແດງຜູ້ ມັກມ່ວນເວົ້າຊ້ອນຂຶ້ນ.

ໝົດທຸກຄົນຫົວໂຄບຂຶ້ນ ເຮັດໃຫ້ເອື້ອຍໄມຈັນໜ້າແດງ ຂຶ້ນປານມື້ເຂົ້າພາຂວັນແຕ່ງງານໃນເມື່ອກ່ອນ. ອ້າຍສິງແກ້ວພວມຕົກຂະມ່າໃຈຍັງບໍ່ທັນຕັ້ງສະຕິໄດ້ຊ້ຳພັດຖືກຈູກຂ້າງກໍຍິ່ງຕື່ມກະວົນ ກະວາຍໃຈ. ພາຍຫຼັງທັກທ້ວງກັນແລວ, ລຸງຈານໝັ້ນກໍເຂົ້າສູ່ ບັນຫາ:

- ຮຽນບັນດາສະຫາຍ! ມື້ນີ້ເຮົາຮວມປະຊຸມວິສາມັນ ເພື່ອຄົ້ນຄວ້າບາງວຽກງານຮີບດ່ວນ. ກ່ອນອື່ນຂໍສະເໜີສະຫາຍ ສິງແກ້ວ, ມາແຕ່ແນວໜ້າ, ໄປເຮັດວຽກແວ່ມາຢາມຄອບຄົວ,ມີໃບສະເໜີເຂົ້າຮ່ວມຊີວິດໜ່ວຍເຮົາ...ຈຸດປະສົງຮວມມື້ນີ້ມີ ສາມວຽກ: ໜຶ່ງຈະຄົ້ນຄວ້າຄຳສັ່ງຂອງຄະນະພັກເມືອງ, ສອງ ສະຫາຍໄມຈັນຈະສະເໜີແຜນການປັບປຸງການຈັດຕັ້ງສະມາຄົມ ແມ່ຍິງ, ຈາກນັ້ນສະຫາຍສິງແກ້ວຢາກປຶກສານຳພວກເຮົາບາງວຽກ.

ເອື້ອຍໄມຈັນສະເໜີແຜນການເປັນວັກເປັນຕອນຢ່າງຈະແຈ້ງທຸກຄຳເວົ້າຂອງເອື້ອຍໄມຈັນໄດ້ກາຍເປັນສຽງມະໂຫລີ ອັນໜຶ່ງ

ສຳລັບອ້າຍສິງແກ້ວ, ເຂົາບໍ່ຄາດຝັນມາກ່ອນວ່າ ເມຍເຂົາ ຈະມີບາດກ້າວໃໝ່ປານນັ້ນ ການມີໜ້າຂອງເອື້ອຍໄມຈັນໃນກອງປະຊຸມໜ່ວຍພັກຕາແສງມື້ນັ້ນໄດ້ເຮັດໃຫ້ທຸກບັນດາທີ່ອ້າຍສິງແກ້ວ ກຽມມາປຶກສານຳໜ່ວຍພັກນັ້ນຖືກຕີແຕກຢ່າງສິ້ນເຊີງ, ຍັງເຫລືອໄວ້ ແຕ່ຮອຍຍິ້ມ ເຊິ່ງບົ່ງບອກເຖິງຄວາມສຸກໃຈໃນໃບໜ້າຂອງເຂົາ.

ບິນເສັ້ນທາງກັບບ້ານ, ທັງສອງເຂົາຍ່າງຮຽງກັນໄປ ຢ່າງສຸກສັນ, ຮອດຍ່ານໜຶ່ງ ອ້າຍສິງແກ້ວເອີ່ຍຂຶ້ນຄ່ອຍໆ ພຽງສຳລັບ ໒ ຄົນໄດ້ຍິນ:

- ໄມຈັນ! ອ້າຍຢາກຈະຖາມນ້ອງຄຳໜຶ່ງພໍຈະໄດ້ບໍ?

- ຈ້າວ! ມີຫຍັງຂໍອ້າຍຈົ່ງເປີດອົກເປີດໃຈມາເທາະ ນ້ອງພ້ອມຕັ້ງໃຈຟັງຢູ່.

- ນ້ອງສຳເລັດແຕ່ວັນທີ...ເດືອນ...ປີໃດ? ເປັນຫຍັງ ບໍ່ຂ່າວໃຫ້ອ້າຍຊື່ນຊົມນຳແດ່?

- ໂອ! ບໍ່ທັນລືມດອກອ້າຍ! ອາດຈະລື້ມອ້າຍປີປາຍອາຍຸພັກປານນັ້ນລະ!

ອ້າຍສິງແກ້ວແກ້ເສື້ອນວມນາຍທະຫານທີ່ພວມໂອບດ້ວຍອາຍອຸ່ນໃນຄີງມາສຸບໃຫ້ເອື້ອຍໄມຈັນ ແລ້ວສອງສະຫາຍແກ້ວກໍ່ພ້ອມກັນສືບຕໍ່ກ້າວໄປທາງເບື້ອງໜ້າ ໃຕ້ແສງສະຫວ່າງຂອງດວງພະຈັນ.

# ເກີດໃໝ່

• ບຸງ ພົມ

* ນາງກຳເນີດຈາກຄອບຄົວຊາວນາທຸກຈົນ, ການດຳລົງ ຊີວິດຂອງຄອບຄົວນາງແຕ່ກ່ອນກໍຄືປະຈຸບັນແມ່ນເອົາການເຮັດ ນາເປັນຕົ້ນຕໍ. ໃນລະບອບເກົ່າ ຊີວິດການເປັນຢູ່ຂອງຄອບຄົວ ນາງຂາດໆເຂີນໆ ຍ້ອນວ່າໃນຄອບຄົວມີເອື້ອຍນ້ອງຮ່ວມກັນທັງຫມົດ ໘ ຄົນ ພໍ່ແມ່ຊ້ຳພັດເຖົ້າແກ່ຫລາຍແລ້ວ ເຫື່ອແຮງກໍບໍ່ມີ, ດິນນາພັດມີຫນ້ອຍ ຕ້ອງໄດ້ໄປເຊົ່ານາຂອງ "ອາດຍາ" ຕາແສງມ້າວ ເຮັດເພີ່ມອີກ, ແຕ່ແທນທີ່ມັນຈະນຳລາຍໄດ້ອັນງົດງາມມາສູ່ຄອບ ຄົວນາງ, ກົງກັນຂ້າມດິນທີ່ເຊົ່າເຮັດນານັ້ນພັດເປັນດິນບໍ່ງາມ ແລະ

ຕ້ອງໄດ້ເສຍຄ່າເຊົ່າໃນແຕ່ລະປີ ໓/໔ ຂອງຜົນເກັບກ່ຽວ. ການເກັບຄ່າເຊົ່ານາແບບໜ້າເລືອດຂອງ "ອາດຍາ" ຕາແສງ ນ້າວນັ້ນໄດ້ເຮັດໃຫ້ພໍ່ຕູ້ແສງກັບແມ່ຕູ້ມີທີ່ເປັນພໍ່ແມ່ ແລະ ນາງຄຳໄມ ຜູ້ທີ່ເປັນລູກສາວກົກຂອງຄອບຄົວຕ້ອງມີຄວາມໜັກອົກໜັກໃຈ ເປັນຢ່າງຍິ່ງ. ໂດຍສະເພາະແລ້ວແມ່ນໃນປີໜຶ່ງທີ່ປະສົບໄພແຫ້ງແລ້ງທີ່ວ້າທ້ອງທົ່ງນາຂອງພໍ່ແມ່ປະຊາຊົນໃນຕາແສງນັ້ນແຫ້ງກະແດ້ງ ໄປດ້ວຍແສງແດດແຜດເຜົາ, ດິນນາແຕກເປັນເວີບເໝືອນດັ່ງມັນອ້າປາກຮ້ອງຂໍນ້ຳຈາກທ້ອງຟ້າດ້ວຍຄວາມຫິວກະຫາຍ...ຕົ້ນເຂົ້າ ທີ່ພວມເປັນມານຕ້ອງຫ່ຽວແຫ້ງຂົດໂຂລົງດ້ວຍລິດຂອງແດດກ້າ. ນີ້ແຕ່ນາຂອງທ່ານຕາແສງນ້າວເທົ່ານັ້ນທີ່ໄດ້ຮັບຄວາມຊຸ່ມເຢັນຍ້ອນມີຈັກດູດນ້ຳຕາມຕະຄອງຕ່ຳຂຶ້ນມາສູ່ທ້ອງນາ.

ແລງມື້ໜຶ່ງພໍ່ຕູ້ແສງກັບມາເຮືອນດ້ວຍໃບໜ້າໝອງຄ້ຳ ເຕັມໄປດ້ວຍຢາດເຫື່ອ ແລະ ຍ້ອນແດດເຜົາຜານ. ພໍແຕ່ຂຶ້ນຮອດເຮືອນພໍ່ຕູ້ກໍນັ່ງກະແທກລົງກັບພື້ນຟາກ ພ້ອມກັບທົ່ງລົມຫາຍໃຈອອກ ມາດ້ວຍຄວາມອ່ອນອົກອ່ອນໃຈ. ນາງຄຳໄມ ທີ່ພວມນັ່ງແຕ່ງກິນຢ່າງວຽບໆຢູ່ໃນເຮືອນຄົວແນມເບິ່ງພໍ່ດ້ວຍສາຍຕາທີ່ເຕັມໄປດ້ວຍຄວາມເຫັນອົກເຫັນໃຈ, ນາງພໍຈະເຂົ້າໃຈໃນທ່າທີຂອງພໍ່ ເພາະວ່າປີນີ້ອາຍຸຂອງນາງກໍກ້າວເຂົ້າສູ່ໄວ ໑໙ ປີແລ້ວ, ນາງວາງມີດ ຈາກວຽກຄົວກິນ ແລ້ວຄ່ອຍໆຍ່າງມາຕັກນ້ຳຢູ່ຊຸ່ມຍື່ນໃຫ້ພໍ່ ພ້ອມທັງຖາມຂຶ້ນວ່າ:

– ອາດຍາຕາແສງເພິ່ນເອີ້ນພໍ່ໄປເຮັດຫຍັງ?

ພໍ່ບໍ່ແນມເບິ່ງໜ້າລູກສາວ, ແຕ່ຫາກແນມອອກໄປສູ່ທົ່ງນາອັນກວ້າງໄກທີ່ມີແຕ່ຊາກຕົ້ນເຂົ້າຕາຍຫ່ຽວແຫ້ງເກື່ອນກາດໄປທົ່ວທົ່ງ, ແລ້ວກໍແນມໄປເບິ່ງທົ່ງນາທີ່ຂຽວຊຸ່ມທຸ່ມຂອງອາດຍາຕາແສງ ນ້າວດ້ວຍຄວາມເຈັບປວດ...

- ມັນຊິເອີ້ນໄປຫຍັງອີກ, ນອກຈາກຈະເອີ້ນໄປຂູດເນື້ອເຖືອໜັງພວກຄົນທຸກຄົນຈົນຄືພວກເຮົາ.

ເວົ້າແລ້ວພໍ່ກໍກັດແຂ້ວດັງກອດໆ...ຄຳໄນແນມເບິ່ງໜ້າ ພໍ່ດ້ວຍຄວາມສົງສານຢ່າງເຈັບໃຈ, ນາງເອງກໍພະຍາຍາມ ຊອກຢູ່ຫາກິນເກັບຜັກຫັກໜໍ່, ຊຸດກອຍຊຸດມັນເພື່ອມາລ້ຽງນ້ອງຊ່ວຍພໍ່ແລະ ແມ່...ແຕ່ເຖິງຢ່າງໃດກໍດີ, ສະພາບຄອບຄົວຂອງນາງກໍບໍ່ມີຫຍັງຈະດີຂຶ້ນກວ່ານີ້ອີກ. ນາງຄ່ອຍໆເວົ້າຂຶ້ນດ້ວຍນ້ຳສຽງອັນຂົມຂື່ນ...

- ເປັນຫຍັງນໍເທວະດາຟ້າແຖນຈຶ່ງລົງໂທດແຕ່ຄົນທຸກຄົນຈົນຄືພວກເຮົາແທ້ໆ?

ຜູ້ເປັນພໍ່ ຫົວຂຶ້ນດ້ວຍນ້ຳສຽງອັນເຍາະເຍີ້ຍ.

- ມັນບໍ່ແມ່ນເລື່ອງຟ້າເລື່ອງແຖນດອກລູກເອີຍ! ມັນ ແມ່ນຍ້ອນແນວຄິດຂູດຮີດຢ່າງບໍ່ມີເມືອງພໍຂອງພວກອາດຍາທ້ອງຖິ່ນ ຫັ້ນລະ. ຄິດເບິ່ງດູ, ດິນຟ້າອາກາດແຫ້ງແລ້ງ, ເຂົ້າຕາຍເຕັມ ທົ່ງໄຮ່ທົ່ງນາປານນີ້ມັນຍັງເກັບຄ່າເຊົ່າຕາຍຕົວຄືແຕ່ເກົ່າຕາມເຄີຍ, ບໍ່ໄດ້ມີການຜ່ອນຜັນກັນຈັກດີ້.

ຄຳໄນແນມອອກໄປເບິ່ງທົ່ງນາດ້ວຍສີໜ້າໝິ່ນໝອງ... ຊິ

ວິດຂອງຄອບຄົວນາງຕ້ອງຕົກລະກຳລຳບາກເຫມືອນດັ່ງ ຄອບຄົວຊາວນາທີ່ທຸກຈົນຫລາຍຄອບຄົວທີ່ຕົກຢູ່ໃນໂຊກຊະຕາກຳອັນດຽວ.. ໄພແຫ້ງແລ້ງບໍ່ພຽງແຕ່ກໍ່ຄວາມອຶດຢາກໃຫ້, ແຕ່ມັນຍັງໄດ້ເຮັດໃຫ້ເຂົາເຈົ້າຕ້ອງໄດ້ຕິດຫນີ້ຄ່າເຊົ່ານາ ແລະ ຈຳເປັນຕ້ອງໄດ້ໄປ ກູ້ຢືມເຂົ້ານຳອາດຍາຕາແສງມ້າວມາກິນຕື່ມອີກ.

ຫລາຍປີຜ່ານໄປ, ຫນີ້ເກົ່າໃຊ້ບໍ່ທັນຫມົດ ຫນີ້ໃຫມ່ຊ້ຳພັດເຕີງລົ່ງໃສ່ອີກ. ເມື່ອການທົດແທນຫນີ້ບໍ່ຫມົດເປັນຈັກເທື່ອ ອາດຍາຕາແສງກໍໄດ້ເອີ້ນເອົາພໍ່ຕູ້ແສງໄປຫາອີກຄັ້ງຫນຶ່ງ.

ພໍ່ຕູ້ແສງ ນັ່ງກົ້ມຫນ້າບໍ່ກ້າສົບກັບສາຍຕາອັນດຸຮ້າຍເຫມືອນສັດປ່າຂອງອາດຍາຕາແສງມ້າວ ເພາະວ່າພໍ່ຮູ້ດີວ່າ ມັນຄົງຈະເປັນມື້ທີ່ຕັດສິນໂຊກຊະຕາກຳຂອງຄອບຄົວພໍ່. ອາດຍາຕາແສງມ້າວ ນັ່ງຄາບກອກ ແລະ ອົມຍິ້ມແນມເບິ່ງພໍ່ຢ່າງມີຄວາມຫມາຍ, ມັນເວົ້າຂຶ້ນຊ້າໆດ້ວຍທ່າທ່າງທີ່ບົ່ງບອກເຖິງຜູ້ທີ່ໄດ້ກຳໄຊຊະນະໄວ້ ຢ່າງເດັດຂາດ.

- ຈັ່ງໃດ ຕູ້ແສງ, ການຜັດຫນີ້ຜ່ອນສົ່ງຂອງເຈົ້າຫັ້ນ ຈະແກ່ຍາວໄປຮອດໃສ່ອີກ? ຂ້ອຍຜັດໃຫ້ເຈົ້າເດືອນຫນຶ່ງແລ້ວໄດ໋! ເຈົ້າຄວນຈະຮູ້ຈັກຮ້ອນໃຈແນ່ຕີ້! ພໍ່ຄ່ອຍໆເງີຍຫນ້າຂຶ້ນສົບກັບດວງ ຕາອັນແດງກ່ຳນັ້ນດ້ວຍຄວາມຈຳໃຈ.

- ຂ້ານ້ອຍກໍໄດ້ວິ່ງເຕັ້ນຊອກຫາສຸດຂີດແລ້ວເດ້ອາດຍາ, ແຕ່ການຊອກຫາເງິນຄຳນີ້ມັນບໍ່ແມ່ນເລື່ອງງ່າຍດາຍສຳລັບຄົນ ທຸກຈົນຄືພວກຂ້ານ້ອຍ.

ຍາຕາແສງຂຶ້ນສຽງດັງກວ່າເກົ່າ:

- ເລື່ອງຫາງ່າຍ ຫລື ຍາກມັນແມ່ນເລື່ອງຂອງເຈົ້າ, ຂ້ອຍບໍ່ກ່ຽວ, ເຈົ້າໃຊ້ຫນີ້ຂ້ອຍຫມົດແລ້ວກໍແປວ່າຈົບເລື່ອງ.

ມັນເສືອດຕາເບິ່ງພໍ່ຫນ້ອຍຫນຶ່ງຢ່າງທ້າທາຍ ເພາະມັນເອງກໍຮູ້ດີແລ້ວວ່າພໍ່ບໍ່ມີຄວາມສາມາດພຽງພໍເພື່ອໃຊ້ຫນີ້ໃຫ້ແກ່ມັນ.

- ອາດຍາ! ຂ້ານ້ອຍຂໍຜັດຕື່ມອີກ.

- ບໍ່ຜັດບໍ່ຜ່ອນອີກແລ້ວ, ເຈົ້າຮູ້ບໍ່ວ່າຈະໃຫ້ຂ້ອຍຜັດເຈົ້າໄປຮອດໃສ? ແຕ່ຖ້າເຈົ້າຫາກເປັນຄົນສະຫລາດ ເຈົ້າກໍພໍມີທາງທີ່ຈະທົດແທນຫນີ້ສິນໃຫ້ຂ້ອຍຫມົດໄດ້.

- ອາດຍາຈະໃຫ້ຂ້ານ້ອຍເຮັດແນວໃດ?

ມັນຫົວຂຶ້ນກ່າກໆ.

- ຕູ້ແສງເອີຍ! ມັນບໍ່ມີຫຍັງຍາກຊາຫມົດ, ມີແຕ່ເຈົ້າ ຍອມມອບລູກສາວຂອງເຈົ້າໃຫ້ມາຮັບໃຊ້ຂ້ອຍກຳນົດ ໘ ປີມັນກໍຈະຫມົດຫນີ້ກັນ.

ພໍ່ຕູ້ແສງສະດຸ້ງຫມົດຄິງ...ໂອ! ນີ້ມັນປຽບເຫມືອນດັ່ງຟ້າຜ່າລົງກາງຫົວໃຈຂອງພໍ່ ລູກສາວຫົວແກ້ວຫົວແຫວນ ທີ່ພໍ່ແພງເຫມືອນດັ່ງແກ້ວຕາຈະຕ້ອງມາຮັບເຄາະກຳອັນບໍ່ເພິ່ງປາຖະຫນາເຊັ່ນນີ້.

- ຂ້ານ້ອຍບໍ່ຍອມໃຫ້ລູກມາຮັບທຸກແທນເປັນອັນຂາດ, ຂ້ານ້ອຍຈະຂໍຍອມເປັນຂ້ອຍຮັບໃຊ້ອາດຍາໃຫ້ຈຸບກຳນົດ ໘ ປີ...

ມັນຫົວຂຶ້ນແຮງກວ່າເກົ່າ.

- ໂອຍ! ຕູ້ແສງເອີຍ ຖ້າແມ່ນເຈົ້າມາເປັນຂ້ອຍແທນ ລູກ

ສາວ, ກຳນົດເວລາມັນກໍຕ້ອງແກ່ຍາວອອກໄປອີກ...ອັນນີ້ ຂ້ອຍຄິດເຫັນລູກສາວເຈົ້າ, ຂ້ອຍອີດູຕົນຈຶ່ງບໍ່ຢາກແກ່ຍາວ. ຖ້າມັນຮັບໃຊ້ຂ້ອຍດີ, ບາງທີ...ບາງທີຂ້ອຍຈະລ້ຽງດູເອົາມັນເລີຍ...

ເວົ້າແລ້ວມັນກໍຫົວຂຶ້ນດ້ວຍຄວາມພໍໃຈ.

ພໍ່ຕູ້ແສງກັດແຂ້ວກືນຄວາມແຄ້ນໄວ້, "ອັນນີ້ນໍຄົນມີເງິນ, ມັນຢາກເຮັດຫຍັງມັນກໍເຮັດຕາມໃຈ, ບໍ່ເຄີຍຄິດເຫັນອົກເຫັນໃຈ ຄົນທຸກຄົນຈົນເສຍເລີຍ...", ແຕ່ເຖິງຢ່າງໃດພໍ່ກໍຄິດວ່າຈະບໍ່ ຍອມໃຫ້ຄຳໄນຕ້ອງມາຮັບທຸກຢ່າງເດັດຂາດ ເພາະວ່າພໍ່ເອງກໍຮູ້ຢູ່ເຕັມອົກເຕັມໃຈວ່າ ຄຳໄນ ຮັກແພງກັບສົມວັນ ໜຸ່ມບ້ານດຽວກັນ,ແຕ່ທ້າວເປັນກຳພ້າພໍ່ແຕ່ນ້ອຍ ຍັງເຫລືອແຕ່ແມ່ທີ່ເຖົ້າແກ່ ສຸຂະ ພາບອ່ອນເພຍ...

- ວ່າຈັ່ງໃດຕູ້? ຈະຕົກລົງໃຈຫລືບໍ່?

ພໍ່ຕູ້ແສງ ເວົ້າຂຶ້ນຊ້າໆວ່າ:

- ຂໍໃຫ້ຂ້ານ້ອຍໄປປຶກສາຫາລືກັບລູກເຕົ້າສາກ່ອນ ແລະ ຈະໃຫ້ຄຳຕອບຕາມຫລັງ.

- ເອີ! ຂ້ອຍຜັດໃຫ້ ມື ນີ້, ຖ້າເຈົ້າຍັງບໍ່ຕອບ ຂ້ອຍຈະໃຫ້ລູກນ້ອງໄປຈັດການເອົາລູກສາວເຈົ້າມາໂລດ ບໍ່ດັ່ງນັ້ນກໍແມ່ນ ຈັບເຈົ້າເຂົ້າຄຸກ...

ສົມວັນ ກັດແຂ້ວໄວ້ດ້ວຍຄວາມແຄ້ນໃຈ ເມື່ອໄດ້ຍິນຄຳໄນເລົ່າເລື່ອງລາວທັງໝົດທີ່ເກີດຂຶ້ນກັບຄອບຄົວຂອງນາງສູ່ເຂົາຟັງ.

- ມັນເຮັດແບບສັດເດຍລະສານແທໆ, ໃຊ້ອຳນາດເງິນທອງ

ແລະ ປາຍປືນ ເພື່ອກົດຂີ່ຂົ່ມເຫັງຄົນທຸກຈົນ.

ເຂົາເວົ້າອອກມາຢ່າງຄຽດແຄ້ນ, ຄຳໄມໄດ້ແຕ່ສະອຶກສະອື້ນໄຫ້ໂດຍບໍ່ຮູ້ວ່າ ຕົນເອງຄວນຈະຕັດສິນໃຈແນວໃດ?

- ຄຳໄມ! ນ້ອງບໍ່ຕ້ອງໄປຮັບໃຊ້ມັນ, ຖ້າຫາກວ່າມັນ ປ່ວງບ້າຂຶ້ນມາແທ້ໆ ອ້າຍເອງກໍ່ກຽມພ້ອມທີ່ຈະຕໍ່ສູ້ກັບມັນ.

ຄຳໄມຕົກໃຈ ແນມເບິ່ງທ່າທາງເອົາຈິງເອົາຈັງຂອງເຂົາ.

- ແຕ່...ອ້າຍບໍ່ມີພັກມີພວກ ແລະ ບໍ່ມີອຳນາດຄືເຂົາ, ເຮັດແນວໃດອ້າຍຈຶ່ງຈະສູ້ເຂົາໄດ້? ນ້ອງບໍ່ຢາກເຫັນການນອງເລືອດ, ບໍ່ຢາກໃຫ້ພໍ່ຕ້ອງຕິດຄຸກ...ຄຳໄມຍອມໄປເປັນຂ້ອຍຂ້າຂອງຍາຕາແສງ...ຢ່າເຫາະ ຖືວ່າມັນເປັນເວນກຳຂອງຄຳໄມກໍ່ແລ້ວກັນ.

- ຄຳໄມ!...ນ້ອງບໍ່ຄວນຈະຕັດສິນໃຈສັ້ນແນວນັ້ນ, ຂໍໃຫ້ມັນເປັນພາລະໜ້າທີ່ຂອງອ້າຍ ແລະ ພໍ່ສາເຫາະ.

ພໍ່ຕູ້ແສງຍ່າງອອກມາຈາກຫ້ອງ ທັງເວົ້າຂຶ້ນອີກວ່າ:

- ຄຳໄມ!...ເຖິງວ່າພໍ່ຈະຕິດຄຸກ ພໍ່ກໍ່ຈະຍອມ, ແຕ່ຕາບໃດພໍ່ຫາກຍັງມີຊີວິດຢູ່ ພໍ່ຈະບໍ່ຍອມໃຫ້ລູກໄປເປັນຂ້ອຍຂ້າໃຫ້ເຮືອນບັກຕາແສງເປັນອັນຂາດ.

- ແຕ່...ລູກກໍ່ທົນບໍ່ໄດ້ທີ່ຈະເຫັນພໍ່ຕ້ອງໄປຕິດຄຸກ.

ຄ່ຳຄືນຂອງມື້ທີສາມ...ຫລັງຈາກມ້ຽນພານເຂົ້າແລງແລ້ວ,ພໍ່ຕູ້ແສງພວມນັ່ງດູດຢາ ແລະ ກຽມຈິດໃຈຈະໄປໃຫ້ຄຳຕອບແກ່ ຕາແສງມ້າວໃນມື້ອື່ນເຊົ້າ...ທັນໃດສຽງໝາເຫົ່າກໍ່ດັງຂຶ້ນຢູ່ນອກ ຕູຮົ້ວ ພ້ອມທັງສຽງປ້ອຍດ່າກໍ່ດັງແຫກຄວາມມືດເຂົ້າມາຕ້ອງຫູຂອງພໍ່.



- ເຊະ! ບັກຫມາຂີ້ເຮືອນ, ມຶງບໍ່ຮູ້ຈັກພໍ່ມຶງບໍ?

ມັນແມ່ນສຽງຕາແສງມ້າວ, ພໍ່ຕູ້ແສງຟ້າວຍ່າງລົງເຮືອນ ໄປໄລ່ຫມາ ແລ້ວເຊີນຕາແສງມ້າວຂຶ້ນເຮືອນດ້ວຍທ່າທາງນອບນອມ.

- ເຊີນເທິງເຮືອນພຸ້ນຂ້ານ້ອຍ, ຂ້ານ້ອຍພວມນັ່ງຄິດຢູ່ວ່າ ມື້ອື່ນເຈົ້າຈະໄປໃຫ້ຄຳຕອບແກ່ອາດຍາ.

ມັນແມ່ນເທື່ອທຳອິດທີ່ຕາແສງກ້າວຂາມາເຖິງເຮືອນພໍ່ຕູ້ແສງ, ມັນຍິ້ມໃຫ້ພໍ່ດ້ວຍທ່າທາງສະແດງຕົນວ່າເປັນຄົນອາລົມດີ ເພາະມັນຫວັງໃຈວ່າ ໃນເວລາອັນບໍ່ຊ້ານີ້ພໍ່ຕູ້ແສງກໍຈະກາຍເປັນວ່າທີ່ພໍ່ຕາຂອງມັນແລ້ວ.

- ເອີ! ບໍ່ເປັນຫຍັງດອກ, ເຈົ້າໄປບໍ່ທັນຂ້ອຍກໍມາຫາເຈົ້າ, ມັນກໍແມ່ນເລື່ອງທຳມະດາ, ຂ້ອຍເອງກໍຮ້ອນໃຈເຕັມທີທີ່ຢາກຈະຮູ້ຄຳຕອບຂອງເຈົ້າດ້ວຍຕົນເອງ...ວ່າຈັ່ງໃດລະຕົກລົງຕີ້?

- ໂດຍ! ຂ້ານ້ອຍຕົກລົງແລ້ວ...

ມັນຫົວກາກຂຶ້ນດ້ວຍຄວາມພໍໃຈ, ພໍ່ຕູ້ເວົ້າຕໍ່...

- ຕົກລົງຈະໄປຕິດຄຸກ...

ສຽງຫົວນັ້ນຈົບລົງເຫມືອນດັ່ງປິດຖິ້ມ.

- ຕູ້ແສງ...ເຈົ້າຄິດຄັກແລ້ວບໍ?

- ຄິດຄັກແລ້ວຂ້ານ້ອຍ...ຂ້ານ້ອຍທົນບໍ່ໄດ້ທີ່ຈະເຫັນລູກສາວຕ້ອງໄປເປັນຂ້ອຍຂ້າໃຫ້ເຮືອນອາດຍາຕາແສງ.

ສຽງຫ້າວໆ ແລະ ສຽບຂາດຂອງຕາແສງມ້າວດັງຂຶ້ນທັນທີ:

- ພວກສູ! ຈັບມັນໄປດຽວນີ້.

- ໂດຍຂ້ານ້ອຍ!

ສຽງໃສ່ກັບມືດັງກຶບກັບ...ແມ່ມີ ແລະ ຄຳໄມແລ່ນອອກ ມາກອດແຄ່ງກອດຂາ ວິງວອນນຳຕາແສງ.

- ປ່ອຍພໍ່ຂ້ານ້ອຍເທາະ...ຂ້ານ້ອຍຈະຂໍໄປຮັບໃຊ້...

- ປ່ອຍຜົວຂ້ານ້ອຍເທາະ...ຂ້ານ້ອຍຈະໄປຮັບໃຊ້ແທນ ລູກສາວ...

ມັນເສືອດສາຍຕາໄປເບິ່ງພໍ່ຕູ້ແສງ:

- ວ່າຈັ່ງໃດລະຕູ້ແສງ, ຈະຕົກລົງປ່ຽນໃຈຫລືບໍ່?

- ບໍ່ມີຫຍັງປ່ຽນແປງ! ພວກເຈົ້າບໍ່ຕ້ອງຮ້ອງໄຫ້... ຈຶ່ງພາກັນອົດທົນລ້ຽງລູກ ແລະ ນ້ອງຖ້າຂ້ອຍ...

ບັກຕາແສງຫົວຂັ້ນອີກແລ້ວມັນກໍສັ່ງຕໍ່:

- ໄປ! ພວກເຮົາບໍ່ມີຫຍັງເວົ້າອີກແລ້ວ. ຕູ້ແສງບໍ່ເຊື່ອເຮົາແລ້ວກໍຕາມໃຈ, ພາຍຫລັງມາຢ່າຊຸກິນແຫນງ...

ຕາແສງມ້າວນຳຫນ້າຂະບວນລົງເຮືອນໄປຢ່າງບໍ່ງວາກຫນ້າມາເບິ່ງອີກ ຄົງປະໃຫ້ແຕ່ແມ່ຕູ້ມີ ແລະ ຄຳໄມຮ້ອງໄຫ້ຟາຍນ້ຳຕາຍ້ອນເປັນຫ່ວງນຳພໍ່ຕູ້ແສງ...

ຫລາຍມື້ຕໍ່ມາ...ຍ້ອນຄວາມພິປອງພະຍາຍາມຂອງ ຕາແສງມ້າວ...ເຖິງວ່າບໍ່ໄດ້ດ້ວຍກົນມັນກໍຕ້ອງເອົາດ້ວຍມືນ. ມື້ຫນຶ່ງມັນໄດ້ແຕ່ງໃຫ້ຄົນມາເຈລະຈາກັບຄຳໄມວ່າ: ຖ້ານາງຕົກລົງ ໄປຮັບໃຊ້ຢູ່ເຮືອນຂອງຕາແສງ, ມັນຈະຍອມປ່ອຍພໍ່ຂອງນາງໃຫ້ເປັນອິດສະລະທັນທີ ແລະ ຫນີ້ສິນທັງຫມົດກໍຈະລົບລ້າງຖິ້ມ. ເມື່ອໄດ້ ຍິນ

ແນວນີ້, ຍ້ອນຄິດດູຕົນພໍ່ຫລາຍ, ຄຳໄມຈຶ່ງຕັດສິນໃຈຍອມໄປເປັນຂ້ອຍຮັບໃຊ້ມັນ...ຢູ່ມາຈົນຮອດຫນຶ່ງອາທິດ ແຕ່ກໍ່ຍັງບໍ່ເຫັນ ຕາແສງມ້າວປ່ອຍພໍ່ຂອງນາງ. ສຸດທ້າຍ ນາງຈຶ່ງຕັດສິນໃຈໄປ ຖາມໃຫ້ຮູ້ເລື່ອງ, ແຕ່ນາງກໍໄດ້ຮັບຄຳຕອບອັນເຈັບປວດທີ່ບໍ່ຄາດເຖິງ: "ເວລາໃດເຈົ້າຕົກລົງເປັນເມຍຂ້ອຍ ເວລານັ້ນພໍ່ເຈົ້າຈຶ່ງຈະມີອິດສະລະໄດ້", ນາງເກືອບຈະເປັນລົມລົງກັບທີ່ ນາງຟາຍນ້ຳຕາກັບຄືນເມືອຫ້ອງພັກຂອງຄົນໃຊ້ໃນບ້ານຕາແສງມ້າວ. ເອື້ອຍນ້ອງຄົນຮັບໃຊ້ນຳກັນໄດ້ມາອື່ນອອຍ ແລະ ອົບອຸ່ນຈິດໃຈຂອງນາງ ແລະ ຖາມເຖິງສາເຫດ, ເມື່ອໄດ້ຮູ້ສາເຫດແລ້ວແຕ່ລະຄົນຕ່າງກໍ ຖອນຫາຍໃຈບາດໃຫຍ່ໆ ດ້ວຍຄວາມເຫັນໃຈຄຳໄມ..."ຈັ່ງແມ່ນເວນກຳແທ້ໆ ຄຳໄມເອີຍ!", "ບັກຕາແສງຄົນນີ້ຖາມັນໄດ້ຕັ້ງໃຈ ໄວ້ແລ້ວແນ່ນອນມັນຕ້ອງຊູຊີໃຫ້ໄດ້ຕາມໃຈມັນໄດ໋". "ມີແຕ່ຍອມເປັນເມຍຂອງມັນທົ່ນັ້ນແຫລະ ເລື່ອງທັງຫມົດກໍຈະຈົບລົງ". ຫລາຍຄົນຫລາຍຄວາມເວົ້າ...ຄຳໄມບໍ່ປາກ ນາງໄດ້ແຕ່ສະອຶກສະອື້ນ ໄຫທັງຄິດຢູ່ໃນໃຈວ່າ "ແລ້ວອ້າຍສິນວັນນັ້ນເດ້ຈະເປັນແນວໃດ ເມື່ອໄດ້ຂ່າວນີ້?"

ສ່ວນສິນວັນ ເມື່ອໄດ້ຍິນຂ່າວນີ້ປິວໄປ, ເຂົາຄິດເປັນເດືອດເປັນແຄ້ນຕໍ່ຕາແສງມ້າວທີ່ສຸດ. ດ້ວຍເຫດນີ້ເອງໃນຄືນຫນຶ່ງສິນວັນຈຶ່ງໄດ້ຕັດສິນໃຈໄປລັກເຜົາເລົ້າເຂົ້າຂອງຕາແສງມ້າວ. ເດິກຫງຽງຄືນແປວໄຟລຸກພຸ່ງຂຶ້ນສະຫວ່າງຈ້າ ແລະ ປົກຄຸມໄປທົ່ວບໍລິເວນຄຸ້ມບ້ານຂອງຕາແສງມ້າວ. ສຽງຄົນຍາມຮ້ອງປຸກກັນຕື່ນດັງຟົດ ສະ

ໝັ້ນໄປທົ່ວບ້ານ. "ອາດຍາ" ຕາແສງລູກອົ້ນມາສັ່ງການ:

"ຄົນໃນບໍ່ໃຫ້ອອກ ຄົນນອກບໍ່ໃຫ້ເຂົ້າ" ເພື່ອຈະກວດກາຊອກຫາຜູ້ທີ່ມາວາງເພີງ...ຫລັງຈາກມອດໄຟໄດ້ເປັນທີ່ຮຽບຮ້ອຍແລ້ວ ຕາແສງມ້າວກໍເອີ້ນເອົາພວກຄົນໃຊ້ມາສືບສວນຫາຕົວຄົນຮ້າຍ , ຫລາຍທາງສຽງໄດ້ບອກວ່າສົງໄສສີນວັນ ເພາະວ່າໄລຍະນີ້ ເຂົາມັກຈະມາກຽວງວຽນໆ ແລະ ລັກພົບກັບຄຳໄມຢູ່ແຖວງເລົ້າ ເຂົ້ານັ້ນຢູ່ບໍ່ຂາດ...ຕາແສງມ້າວໄດ້ອອກຄຳສັ່ງໃຫ້ລູກນ້ອງໄປຈັບເອົາໂຕຂອງສີນວັນມາທັນທີ...

ຄົນຂອງຕາແສງມ້າວໄດ້ພາຕຳຫລວດ ៥ ຄົນໄປອ້ອມເຮືອນຂອງສີນວັນ...ແຕ່ສີນວັນໄດ້ລັກໜີອອກໄປຢູ່ປ່ານຳພະນັກງານ - ຂອງຝ່າຍແນວລາວຮັກຊາດກ່ອນແລ້ວ, ເມື່ອພວກມັນບໍ່ພົບ ສີນວັນກໍໄດ້ຈັບເອົາແມ່ຂອງສີນວັນໄປທຸບຕີທໍລະມານຢ່າງສົມໃຈ ແລ້ວ ກໍເອົາໄປຖິ້ມໄວ້ກັບເຮືອນຄົນໃຊ້ຂອງຕາແສງມ້າວ ເພື່ອຈະບັງ ຄັບໃຫ້ແມ່ຕ້ອງເປັນຂ້ອຍຂ້າທົດແທນຄ່າເສຍຫາຍຂອງມັນ...ໃນ ເວລາທີ່ແມ່ຍັງຈັບຢູ່ນັ້ນ, ຄຳໄມກໍໄດ້ເອົາໃຈໃສ່,ລັກຊອກຫາຢູກຢາມາປິ່ນປົວແມ່ ແລະ ຊອກອາຫານການກິນມາໃຫ້ແມ່, ແຕ່ແມ່ ກໍບໍ່ຍອມກິນມີແຕ່ບອກວ່າ:

- ປະໃຫ້ແມ່ຕາຍສາເທາະຄຳໄມ, ແມ່ຢາກຕາຍຫລາຍກວ່າຈະຢູ່ເປັນຂ້ອຍຮັບໃຊ້ພວກມັນ.

ນ້ຳຕາຂອງຄຳໄມໄຫລລົງອາບແກ້ມ.

- ແມ່ຢ່າເວົ້າແນວນັ້ນ ບໍ່ມີໃຜຢາກຢູ່ເປັນຂ້ອຍມັນດອກ, ແຕ່

ພວກເຮົາກໍຈໍາເປັນຕ້ອງມີຊີວິດ ເພື່ອຕໍ່ສູ້ກັບພວກມັນ, ຄົງຈະບໍ່ດົນດອກ ພວກອ້າຍສີມວັນຈະນໍາເອົາທະຫານແນວລາວຮັກຊາດມາປົດປ່ອຍເອົາພວກເຮົາ. ແມ່ຄ່ອຍໆຫັນຫນ້າມາເບິ່ງຄໍາໄນ ແລ້ວແມ່ກໍແກ່ວງຫົວ.

- ຄໍາໄນ! ແມ່...ອາດ....ຈະບໍ່ມີໂອກາດໄດ້ເຫັນສີມວັນດອກ...ຖ້າ...ຖ້າສີມວັນຫາກຍັງ...ມີຊີວິດ...ລູກຈົ່ງເວົ້າ ສູ່ມັນຟັງແດ່...ວ່າ: ແມ່...ແມ່...ເສຍ-ດາຍ...ທີ່...ທີ່ບໍ່ທັນໄດ້ພົບມັນ...

- ແມ່! ແມ່ຍັງບໍ່ທັນເປັນຫຍັງ, ແມ່ຢ່າເວົ້າແນວນັ້ນ, ແມ່ຕ້ອງບໍ່ເປັນຫຍັງແມ່!

ນາງໄຫ້ສະອຶກສະອື້ນອື້ນ.

ຕໍ່ມາໄດ້ອາທິດຫນຶ່ງ, ແມ່ຂອງສີມວັນກໍໄດ້ລາຈາກໂລກ ໄປຍ້ອນຄວາມເຈັບຊໍ້າທີ່ໄດ້ຮັບຈາກການທໍລະມານ. ການສິ່ງສະການບໍ່ໄດ້ມີພິທີຫຍັງຫມົດ, ພວກມັນໃຊ້ແຕ່ສາດຫໍ່ຮຸມຫໍ່ຮ່າງຄີງ ຂອງແມ່ແລ້ວກໍນໍາໄປຝັງຢູ່ໃນປ່າຊ້າຂອງຄົນທຸກຈົນ.

ໄລຍະຕໍ່ມາ, ຕາແສງນາວໄດ້ແຕ່ງຄົນໃຫ້ໄປນໍາເອົາໂຕຂອງຄໍາໄນເຂົ້າມາພົບ ແລະ ເກັຍກ່ອມໃຫ້ນາງຕ້ອງຍອມເປັນ ເມຍຂອງມັນໂດຍດີ...ແຕ່ຄໍາໄນບໍ່ຍອມເດັດຂາດ, ນາງຍອມຕາຍ ດີກວ່າຈະຕົກເປັນເຫຍື່ອຂອງຕາແສງຫນ້າເລືອດຄົນນັ້ນ. ເມື່ອ ໃຊ້ການຈອບອອຍບໍ່ໄດ້ ມັນກໍໃຫ້ລູກນ້ອງຂອງມັນທຸບຕີທໍລະມານຄໍາໄນຈົນວ່ານາງສະຫລົບໄປ, ຫລັງຈາກນັ້ນມັນກໍໄດ້ຂົ່ມຂືນຮ່າງກາຍ ທີ່

ໄຮ້ສະຕິຂອງນາງຢ່າງບໍ່ຮູ້ສຶກລະອາຍແກ່ໃຈຈັກດີ້ເລີຍ... ຄຳໄມ ຮູ້ເມື່ອຄືງມາ ແລະ ໄດ້ພົບຕົນເອງນອນຢູ່ເທິງຕຽງຂອງຕາ ແສງນາວອັນມີຕາແສງນ້າວນອນຢູ່ຄຽງຂ້າງ ນາງຟ້າວຟູດລຸກແລ່ນອອກໄປນອກຫ້ອງ...ຄິດວ່າຈະໜີໄປຜູກຄໍຕາຍເສຍໃຫ້ມັນພົ້ນ ຈາກການເປັນເມຍຕາແສງນ້າວ, ແຕ່ອອກໄປຮອດນອກ ກໍມີຄົນ ເຝົ້າຍາມລັດຈັບເອົານາງໄວ້ແລ້ວນຳມາມອບໃຫ້ແກ່ຕາແສງນ້າວ.

- ນ້ອງຈະໜີໄປໃສຄຳໄມ, ດຽວນີ້ນ້ອງເປັນເມຍຂອງອ້າຍແລ້ວ, ນ້ອງຄວນຈະມີຄວາມດີໃຈບໍ່ຄວນຈະເສຍໃຈ, ຜູ້ສາວຫຼາຍຄົນທີ່ປາຖະໜາຢາກເປັນເມຍຂອງອ້າຍມີຖົມໄປ...ແຕ່ອ້າຍ ກໍບໍ່ໄດ້ສົນ ຍ້ອນວ່າອ້າຍຮັກນ້ອງ, ນ້ອງຮູ້ບໍ່ຄຳໄມ?

ນາງບໍ່ປາກໄດ້ແຕ່ໄຫ້ສະອຶກສະອື້ນ ແລະ ລອບຫລັບຕາຊັງບັກຕາແສງນ້າວ. ຄວາມບໍລິສຸດທີ່ນາງຖະນຸຖະໜອມໄວ້ໃຫ້ສົມອັນ ກໍມາພັງທະລາຍລົງໝົດສິ້ນແລ້ວ, ນາງບໍ່ປາຖະໜາຢາກຈະຢູ່ເປັນຄົນໃຫ້ມີລາຄີອີກຕໍ່ໄປ...ຄິດມາຮອດບ່ອນນີ້ ນາງກໍຍິ່ງສະອຶກ ສະອື້ນຂື້ນແຮງກວ່າເກົ່າ...ນັບແຕ່ນັ້ນມາ ນາງກໍໄດ້ຕົກເປັນ ເມຍຂອງມັນຢ່າງບໍ່ໄດ້ແຕ່ງແປງ, ມີແຕ່ເວລາໃດມັນຕ້ອງການນາງມັນກໍຈະໃຫ້ຄົນມາບັງຄັບເອົາໂຕຂອງນາງໄປ. ເມື່ອມັນເຊົາ ຕ້ອງການແລ້ວ ນາງກໍຈະກັບມາເປັນຄົນຮັບໃຊ້ຄືເກົ່າອີກ.

ສອງປີຜ່ານພົ້ນໄປ...ມື້ໜຶ່ງມີຄົນນຳເອົາ ຈ.ໝ ມາສົ່ງໃຫ້ນາງ, ນາງຈີກ ອ່ານດ້ວຍຄວາມຮ້ອນໃຈ.

"ຄຳໄມນ້ອງທີ່ເປັນຫ່ວງ!

ໃຫ້ນ້ອງລັກອອກມາພົບອ້າຍຢູ່ທີ່ຕົ້ນໄຮ່ຂອງແມ່ນ້ອງ ຫຼັງຈາກ ກິນເຂົ້າແລງແລ້ວ.

ວັນທີ....ເດືອນ.....ປີ.....

ຈາກ ສົມວັນ".

ເນື້ອໃນ ຈ.ໝ ສັ້ນໆ ແຕ່ນາງກໍອ່ານລື້ມໄປມາສອງສາມ - ເທື່ອ ເພື່ອຄວາມແນ່ໃຈ. ນາງຮູ້ສຶກດີໃຈທີ່ຈະໄດ້ພົບກັບເຂົາ,ແຕ່ ນາງກໍເສົ້າໃຈ ແລະ ບໍ່ຢາກພົບເຂົາຍ້ອນວ່ານາງມີລາຄີ ຕິດໂຕ, ນາງຄິດຮຳໄຮຢູ່ຄົນດຽວວ່າ:

"ອ້າຍສົມວັນ, ອ້າຍຈະຮູ້ສຶກແນວໃດເມື່ອໄດ້ຂ່າວວ່ານ້ອງຕົກ ເປັນເມຍຂອງຕາແສງນາວແລ້ວ?" ຄິດມາຮອດບ່ອນນີ້,ນາງຢາກ ຈະພິກແຜ່ນດິນໜີໄປໄກໃຫ້ພົ້ນຫູພົ້ນຕາເຂົາ...ແຕ່ ຄວາມປາຖະ ໜາຢາກເຫັນເຂົາໄດ້ບັງຄັບໃຫ້ນາງຕ້ອງໄປພົບເຂົາເສຍກ່ອນ..

ຊາຍຄົນໜຶ່ງນຸ່ງເສື້ອຊາວນາ, ຜ້າຂາວມ້າມັດແອວນັ່ງລີ້ຢູ່ພຸ່ມ ໄມ້ພວມຈ້ອງສາຍຕາຕິດຕາມຮ່າງຂອງຍິງຄົນໜຶ່ງທີ່ພວມຍ່າງເບັດ ໜ້າມາຫາທິດທີ່ເຂົານັ່ງຢູ່ນັ້ນ. ພໍຍິງຄົນນັ້ນຍ່າງໃກ້ເຂົ້າມາ,ເຂົາ ກໍຍິ້ມດ້ວຍຄວາມດີໃຈ ພ້ອມທັງສົ່ງສຽງອອກໄປດ້ວຍຄວາມຕື່ນເຕັ້ນ.

- ຄຳໄມ! ອ້າຍຢູ່ນີ້!

ຄຳໄມງວາກໄປຕາມສຽງເອີ້ນ.

- ອ້າຍສົມວັນ!

ນາງແລ່ນເຂົ້າມາຫາເຂົາ, ເຂົາລຸກຂຶ້ນຕ້ອນເອົານາງ, ແຕ່ ແລ້ວນາງກໍຕ້ອງຢຸດສະງັກ ແລະ ຍ່າງຖອຍຫລັງອອກຫ່າງ ຈາກ

ເຂົາ ສົມວັນກົ້ມລົງສຳຫລວດເບິ່ງຮ່າງຄີງຂອງຕົນເອງ ພ້ອມຫົວຍິ້ມໃຫ້ນາງ.

- ອ້າຍມີຫຍັງເປັນຕາຢ້ານບໍ ຄຳໄມ?

ສີໜ້າຂອງນາງເສົ້າລົງ, ນາງສັ່ນຫົວ.

- ບໍ່ດອກ! ແຕ່ອ້າຍເປັນຄົນທີ່ຫນ້ານັບຖື, ເປັນຫນ້າສັນ ລະເສີນ, ກົງກັນຂ້າມ ນ້ອງຄົນມີລາຄີຄາວ...ນ້ອງດີໃຈທີ່ໄດ້ ພົບອ້າຍອີກຄັ້ງຫນຶ່ງ...ແຕ່ນ້ອງກໍເສຍໃຈທີ່ບໍ່ສາມາດຮັກສາຄວາມຮັກຂອງອ້າຍໄວ້.

ເຂົາຍ່າງເຂົ້າມາໃກ້ນາງແລ້ວເວົ້າຂຶ້ນວ່າ:

- ຄຳໄມ! ອ້າຍບໍ່ໂທດນ້ອງດອກ, ມັນແມ່ນຄວາມຜິດ ຂອງອ້າຍເອງທີ່ບໍ່ຕັດສິນໃຈລັກພານ້ອງອອກໄປນຳອ້າຍ ເພາະວ່າອ້າຍເອງກໍໄປແບບສ່ຽງໄພຍັງກຳສະພາບບໍ່ໄດ້, ຂໍໃຫ້ນ້ອງຍົກໂທດໃຫ້ອ້າຍ.

ຄຳໄມແນມເບິ່ງຫນ້າເຂົາແລ້ວຖາມວ່າ:

- ອ້າຍຄົງຈະຮູ້ເລື່ອງຂອງນ້ອງຫມົດແລ້ວ?

ເຂົາງຶກຫົວ.

- ແມ່ຂອງນ້ອງເລົ່າສູ່ອ້າຍຟັງຫມົດແລ້ວ ອ້າຍຍັງ ຮັກນ້ອງ ແລະ ບໍ່ລັງກຽດໃນໂຕຂອງນ້ອງ...ຖ້າວ່ານ້ອງຫາກບໍ່ເຊື່ອ ອ້າຍແລ້ວມື້ຫນຶ່ງໃນຕໍ່ຫນ້ານ້ອງຈະເຂົ້າໃຈອ້າຍດີ. ເອົາລະອ້າຍມາພົບນ້ອງມື້ນີ້ແມ່ນຢາກຂໍຄວາມຮ່ວມມືຈາກນ້ອງ...

- ມີຫຍັງທີ່ຈະໃຫ້ນ້ອງຊ່ວຍ ນ້ອງເຕັມໃຈທີ່ສຸດ.

ຫລັງຈາກນັ້ນເຂົາກໍໄດ້ເລົ່າແຜນການເຄື່ອນໄຫວຢ່າງລະອຽດໃຫ້ຄຳໄມຟັງ ແລະ ເມື່ອຕົກລົງນັດຫມາຍກັນເປັນທີ່ຮຽບຮ້ອຍແລ້ວ ກ່ອນຈະຈາກກັນເຂົາໄດ້ເວົ້າຕໍ່ ຄຳໄມວ່າ:

- ຄຳໄມ! ຈົ່ງອົດທົນໄປຕື່ມ...ແລ້ວຫນີ້ເລືອດມັນຈະໄດ້ທົດແທນກັນດ້ວຍເລືອດ. ອ້າຍເສຍໃຈທີ່ບໍ່ທັນໄດ້ເຫັນຫນ້າແມ່ ແລະ ຕ້ອງຂອບໃຈນຳນ້ອງຫລາຍໆທີ່ໄດ້ເບິ່ງແຍງແມ່ແທນອ້າຍ.

ວັນເວລາແຫ່ງການນັດຫມາຍໄດ້ມາເຖິງ,ຂະບວນຢຶດອຳນາດໄດ້ລຸກຮື້ຂຶ້ນໃນທົ່ວປະເທດ. "ອາດຍາ" ຕາແສງມ້າວກໍຖືກ ຂະບວນປະຊາຊົນຢູ່ໃນຕາແສງນັ້ນນຳໂຕຂຶ້ນສູ່ເວທີ ເພື່ອໃຫ້ປະຊາຊົນປະກາດໂທດກຳ. ມັນກົ້ມຫນ້າລ໋ອກນ໋ອກຢູ່ ບໍ່ກ້າແນມໄປເບິ່ງ ສີນວັນ ເຊິ່ງເປັນຜູ້ນຳພາຂະບວນ ແລະ ພວມອ່ານໃບກ່າວຟ້ອງໂທດກຳຂອງມັນ. ສ່ວນພໍ່ແມ່ປະຊາຊົນທີ່ນັ່ງຟັງຢູ່ກາງເດີ່ນ ຕ່າງກໍ ມີຄວາມຄຽດແຄ້ນເປັນຢ່າງຍິ່ງ. ຫລັງຈາກອ່ານໃບກ່າວຟ້ອງແລ້ວ, ປະຊາຊົນຫລາຍສຽງກໍຮ້ອງໃຫ້ປະຫານຊີວິດຕາແສງມ້າວ.

- ຂ້າມັນຖິ້ມ! ຂ້າມັນຖິ້ມ!
- ຫນີ້ເລືອດຕ້ອງທົດແທນດ້ວຍເລືອດ!
- ມັນສົມຄວນແລ້ວທີ່ຈະຕ້ອງຕາຍ!

ຫລັງຈາກນັ້ນທາງຄະນະຈັດຕັ້ງກໍໄດ້ອ່ານນະໂຍບາຍຂອງພັກຕໍ່ຜູ້ທີ່ມີຄວາມຜິດແຕ່ລະປະເພດ...ໂດຍອີງຕາມນະໂຍບາຍ ອັນຖືກຕ້ອງເປັນທຳດັ່ງກ່າວ, ຕໍ່ມາຕາແສງມ້າວກໍຖືກນຳເອົາຕົວໄປ ດັດສ້າງ ເພື່ອລົບລ້າງຮອຍມົນທິນເກົ່າໃຫ້ກັບກາຍມາເປັນພົນລະເມືອງ



ທີ່ດີ ແລະ ທຳມາຫາກິນດ້ວຍຄວາມເປັນທຳ.

ໃນເວລາຕໍ່ມາ ປະຊາຊົນຕາແສງນັ້ນກໍໄດ້ຈັດຕັ້ງການປ່ອນບັດ ຄັດເລືອກເອົາຄະນະປົກຄອງໃຫມ່ ເຊິ່ງເປັນຕົວແທນຂອງພໍ່ແມ່ປະຊາຊົນຢ່າງແທ້ຈິງ. ໃນຄະນະປົກຄອງໃຫມ່ມີສົມວັນເອງກໍໄດ້ ຖືກເລືອກຕັ້ງເປັນກຳມະການໃນຄະນະປົກຄອງຢ່າງສົມກຽດ.

ສ່ວນຄຳໄມ ນາງໄດ້ກັບຄືນມາສູ່ຊີວິດອັນອົບອຸ່ນໃນ ຄອບ ຄົວຂອງນາງຄືນອີກຄັ້ງໃຫມ່. ພໍ່ຕູ້ແສງ ພ້ອມດ້ວຍ "ນັກໂທດ" ຂອງ "ອາດຍາ" ຕາແສງມ້າວຈຳນວນຫລວງຫລາຍຕ່າງກໍໄດ້ຮັບ ການປົດປ່ອຍກັບຄືນສູ່ຄອບຄົວຂອງໃຜລາວ. ແມ່ຕູ້ມີກັບຄຳໄມແລະນ້ອງຂອງນາງພາກັນນັ່ງອ້ອມຂ້າງພໍ່ຕູ້ແສງທີ່ຈ່ອຍໂຊຜອມແຫ້ງ ຍ້ອນຄວາມທຸກທໍລະມານທີ່ໄດ້ຮັບຢູ່ໃນຄຸກ. ນ້ຳຕາແຫ່ງຄວາມດີໃຈ ປົນກັບຄວາມອີດູສົງສານຂອງຜູ້ເປັນເມຍ ແລະ ລູກໄດ້ລົ່ງຍ້ອຍ ລົງອາບພວງແກ້ມຂອງແຕ່ລະຄົນຢ່າງອົດກັ້ນໄວ້ບໍ່ໄດ້. ແມ່ຕູ້ມີ ຖອນຫາຍໃຈບາດຍາວໆ ພ້ອມທັງເວົ້າວ່າ:

- ສາທຸທ້ອນ!...ຂໍໃຫ້ມັນຈົບສິ້ນໄປເທາະຊີວິດອັນທຸກ ທໍລະມານ...ຕໍ່ໄປຂໍໃຫ້ມີແຕ່ຄວາມຢູ່ເຢັນເປັນສຸກທ້ອນ...

ຄຳໄມຍິ້ມໃຫ້ແມ່ ພ້ອມທັງເວົ້າວ່າ:

- ຊີວິດເກົ່າ ພ້ອມກັບສັງຄົມເກົ່າເຫນົ່າເຫມັນ ມັນບໍ່ສາມາດຈະກັບຄືນມາມີຊີວິດໄດ້ອີກແລ້ວແມ່ເອີຍ! ດຽວນີ້ຫມົດທົ່ວ ປະເທດເພິ່ນກໍໄດ້ໂຄ່ນລົ້ມອຳນາດການປົກຄອງເກົ່າ ແລະ ໄດ້ສ້າງຕັ້ງອຳນາດການປົກຄອງໃຫມ່ຂຶ້ນໃນທົ່ວປະເທດແລ້ວເດ້...

ສຽງເວົ້າຈ່ຳແຈຂອງນ້ອງຄຳໄມຟົດຂຶ້ນຍ້ອນຄວາມດີໃຈ ທີ່ໄດ້ເຫັນຊີວິດຄອບຄົວຂອງເຂົາເຈົ້າຢູ່ພ້ອມກັນຄົບໜ້າແລ້ວ ພາບ ອັນອົບອຸ່ນດັ່ງກ່າວໄດ້ກະທົບເຂົ້າກັບສາຍຕາຂອງຊາຍໜຸ່ມຄົນໜຶ່ງ ທີ່ພວມຍ່າງຂຶ້ນຂັ້ນໄດມາ, ໃນໃຈຂອງເຂົາພວມຄິດຢູ່ວ່າ: "ດຽວນີ້ຄຳໄມ ມີພ້ອມໜ້າພ້ອມຕາທຸກຄົນໃນຄອບຄົວແລ້ວ. ສ່ວນເຂົາເດກໍ່ພ້າພໍ່ຢູ່ແລ້ວ ດຽວນີ້ຊ້ຳພັດມາເປັນກຳພອຍຕື່ມອີກ..." ເຂົາຍິ້ມໃຫ້ທຸກຄົນດ້ວຍຄວາມຊື່ນຊົມທັງທີ່ຫົວໃຈຂອງເຂົາກໍປາຖະ ໜາຢາກມີຄືແນວນີ້.

ໄລຍະຕໍ່ມາ, ຄຳໄມພະຍາຍາມຫລີກໜ້າຫລີກຕາບໍ່ພົບກັບສົມວັນ. ເມື່ອເຂົາມາຖາມຫານາງ, ນາງກໍໄດ້ບອກໃຫ້ແມ່ແລະນ້ອງຕົວະວ່ານາງບໍ່ຢູ່ ເຮັດໃຫ້ສົມວັນຕ້ອງກັບຄືນດ້ວຍຄວາມຜິດຫວັງ.. ສ່ວນຄຳໄມ ເຖິງວ່ານາງຈະປະຕິເສດພົບເຂົາແຕ່ນາງກໍອົດ ບໍ່ໄດ້ທີ່ຈະບໍ່ສອດສ່ອງລັກແນມຕາມຫລັງເຂົາ ແລ້ວກໍຮ້ອງໄຫ້, ແມ່ຕູ້ ມີເຫັນສະພາບຂອງລູກເປັນແນວນັ້ນກໍອົດຫ່ວງລູກບໍ່ໄດ້, ມື້ໜຶ່ງ ແມ່ເວົ້າຕໍ່ນາງວ່າ:

- ຄຳໄມ! ລູກບໍ່ຄວນຈະປິດບັງແມ່, ລູກຄວນຈະເວົ້າຄວາມຈິງສູ່ແມ່ຟັງວ່າ ເປັນຫຍັງລູກຈຶ່ງບໍ່ຍອມໃຫ້ສົມວັນພົບ?

ນາງທັງກອດແມ່ ທັງໄຫ້ສະອຶກສະອື້ນ:

- ແມ່...ລູກຄິດວ່າການກະທຳຂອງລູກນີ້ຖືກຕ້ອງແລ້ວ, ລູກບໍ່ຄູ່ຄວນກັບລາວດອກ, ລູກຢາກໃຫ້ລາວລືມລູກຊາ...

ແມ່ເຊັດນ້ຳຕາໃຫ້ນາງ ແລ້ວເວົ້າວ່າ:

- ລູກຄິດວ່າການກະທຳເຊັ່ນນີ້ມັນເປັນທີນທາງທີ່ດີທີ່ສຸດ ແລ້ວບໍ? ໃນເມື່ອລູກເອງກໍຍັງຮັກສົມວັນ ແລະ ສົມວັນກໍຍັງຮັກລູກຢູ່.

- ແມ່ນແລ້ວແມ່, ລູກຍັງຮັກ ແລະ ບູຊາອ້າຍສົມວັນ...ແຕ່ລູກບໍ່ດີພໍທີ່ຈະເປັນຄູ່ຄອງຂອງລາວ ເພາະລາວດີເກີນໄປສຳລັບລູກ.

- ຄຳໄມ! ແມ່ເຫັນໃຈໃນຄວາມຕັດສິນໃຈຂອງລູກ, ແຕ່ແມ່ຄິດວ່າພວກລູກບໍ່ຄວນຈະທໍລະມານຈິດໃຈຕົນເອງ. ເລື່ອງຂອງລູກທີ່ຜ່ານມາໃຜໆກໍຮັບຮູ້ແລ້ວວ່າ ລູກຖືກບັງຄັບຂົ່ມຂືນ, ຖ້າສົມວັນ - ຫາກມີນ້ຳໃຈຮັກລູກຢ່າງບໍລິສຸດແທ້ ເຂົາກໍຄົງຈະບໍ່ລັງກຽດລູກ.

- ແຕ່...ລູກກໍບໍ່ສາມາດຈະເບິ່ງຫນ້າອ້າຍສົມວັນໄດ້...ລູກລະອາຍແກ່ໃຈຕົນເອງທີ່ບໍ່ສາມາດຮັກສາຄວາມບໍລິສຸດໄວ້ຖ້າ ລາວໄດ້.

- ຄຳໄມ! ແມ່ຄິດວ່າການກະທຳຂອງລູກເຊັ່ນນີ້ມັນຍິ່ງ ເຮັດໃຫ້ທັງລູກເອງ ແລະ ສົມວັນຕ່າງກໍໄດ້ຮັບຄວາມທໍລະມານ ໃຈ ຄືກັນ. ທາງທີ່ດີແມ່ຄິດວ່າລູກຄວນຈະພົບກັບສົມວັນເວົ້າກັນໃຫ້ ເຂົ້າໃຈ ຖ້າສົມວັນຫາກສົງສານລູກ ແລະ ບໍ່ລັງກຽດໃນອະດີດຜ່ານມາ ລູກກໍບໍ່ຄວນຈະປະຕິເສດໃນຄວາມຮັກອັນບໍລິສຸດຂອງເຂົາ...

ສຽງອະແຣມດັງຂຶ້ນທຳລາຍການສົນທະນາຂອງສອງແມ່ລູກ , ທັງສອງຕ່າງກໍງວາກຫນ້າມາຫາເຈົ້າຂອງສຽງ.

- ຂໍໂທດນຳແມ່ຫລາຍໆທີ່ລູກມາຢ່າງງຽບໆ, ຖ້າບໍ່ເຮັດເຊັ່ນນີ້ລູກກໍຄົງຈະບໍ່ມີໂອກາດໄດ້ພົບກັບຄຳໄມອີກ.

ຄຳໄມຟ້າວເຊັດນ້ຳຕາ, ແມ່ຕູມີກໍຟ້າວລຸກຂຶ້ນ ແລ້ວຂໍຕົວ ລົງ

ໄປເກັບຫອມຢູ່ສວນຫລັງບ້ານ ທັງບອກກັບສິນວັນວ່າ:

- ມື້ນີ້ລູກຢູ່ກິນເຂົ້າແລງພີ້ເດີ, ແມ່ຈະເຮັດກ້ອຍປາສູ່ກິນ.

- ຂອບໃຈແມ່, ລູກຂໍຮັບຄຳເຊີນດ້ວຍຄວາມເຕັມໃຈ.

ເວົ້າແລ້ວເຂົາກໍແນມເບິ່ງຄຳໄມ ເຊິ່ງນັ່ງບໍ່ປາກບໍ່ຕິງຢູ່ ຄົນດຽວ. ຫລັງຈາກແມ່ຕູ້ມີລົງເຮືອນໄປແລ້ວ ເຂົາຈຶ່ງຍ່າງເຂົ້າ ມານັ່ງລົງຕໍ່ໜ້າຄຳໄມ. ນາງນັ່ງກົ້ມໜ້າບໍ່ກ້າສົບກັບສາຍຕາ ຂອງເຂົາ...ຕ່າງຄົນຕ່າງງຽບ, ສຸດທ້າຍສິນວັນກໍເປັນຜູ້ ທຳລາຍຄວາມງຽບຂຶ້ນກ່ອນ.

- ຄຳໄມ! ອ້າຍໄດ້ຍິນການສົນທະນາລະຫວ່າງແມ່ກັບ ນ້ອງໝົດແລ້ວ, ຂໍໂທດເນີ ບໍ່ແມ່ນອ້າຍຈົດຕະນາມາລັກຟັງ... ແຕ່ມັນກໍກົງກັບຈິດໃຈທີ່ອ້າຍຢາກມາໂອ້ລົມບັນຫານີ້ນຳນ້ອງ.

ຄຳໄມຍັງກົ້ມໜ້າບໍ່ປາກ, ເຂົາຈຶ່ງເວົ້າຕໍ່:

- ຄຳໄມ! ອ້າຍຍັງຮັກນ້ອງຢ່າງສະເໝີຕົ້ນສະເໝີປາຍ.. ສະພາບຂອງນ້ອງຜ່ານມາອ້າຍບໍ່ໄດ້ລັງກຽດ ແຕ່ກົງກັນຂ້າມ ອ້າຍຍິ່ງຮັກ ແລະ ສົງສານນ້ອງກວ່າເກົ່າ...ແຕ່ເປັນຫຍັງນ້ອງ ຈຶ່ງຫລົບໜ້າອ້າຍ...ຫລືວ່າ...

ເທື່ອນີ້ຄຳໄມຈຳເປັນຕ້ອງເງີຍໜ້າຂຶ້ນສົບຕາເຂົາ.

- ອ້າຍສິນວັນ! ນ້ອງຢາກຂໍຮ້ອງໃຫ້ອ້າຍລືມນ້ອງສາ..... ນ້ອງບໍ່ດີພໍສຳລັບອ້າຍ.

- ຄຳໄມ! ເປັນຫຍັງນ້ອງຈຶ່ງເວົ້າແນວນັ້ນ? ນ້ອງຄິດ ວ່າອ້າຍເປັນຜູ້ຊາຍປະເພດໃດ ຮັກມື້ນີ້ປະມື້ອື່ນຊັ້ນບໍ? ຄຳໄມ! ນ້ອງ

ບໍ່ເຂົ້າໃຈອ້າຍຈັກຫນ່ອຍເລີຍບໍ່ຫລືວ່ານ້ອງແກ້ງເຮັດ?

ນ້ຳຕາຄຳໄນໄຫລລົງອາບແກ້ມຢ່າງອົດກັ້ນໄວ້ບໍ່ໄດ້, ນາງຈະເວົ້າແນວໃດເພື່ອໃຫ້ເຂົາເຂົ້າໃຈໃນຕົວຂອງນາງໄດ້. ສຸດທ້າຍຄຳໄນຈຶ່ງຕັດສິນໃຈເວົ້າຕໍ່ເຂົາວ່າ:

- ອ້າຍສົມວັນ! ນ້ອງເຂົ້າໃຈໃນເຈດຕະນາຂອງອ້າຍດີ... ຕະຫລອດໄລຍະຜ່ານມາ ນ້ອງຮັກ ແລະ ບູຊາອ້າຍຢ່າງບໍ່ມີ ວັນປ່ຽນແປງ, ແຕ່ວ່າ...ນ້ອງບໍ່ສາມາດຈະຕອບສະຫນອງຄວາມຮັກຂອງອ້າຍໄດ້ ຍ້ອນວ່ານ້ອງໄດ້ມີມົນທິນຕິດຕົວແລ້ວ...

- ແຕ່...ອ້າຍບໍ່ຖືໃນບັນຫານີ້ເລີຍ...ຄຳໄນ! ຂໍໃຫ້ພວກເຮົາຈົ່ງເຂົ້າໃຈກັນເສຍ. ຢ່າໄດ້ມີຫຍັງສົງໄສຕໍ່ກັນເລີຍອ້າຍກຽມພ້ອມຈະຮັບຕ້ອນນ້ອງໄວ້ເປັນຂວັນຊີວິດຂອງອ້າຍ.

ຄຳໄນສົ່ງສາຍຕາຈ້ອງຈັບທີ່ດວງຕາຂອງເຂົາ ເພື່ອ ຢັ່ງເບິ່ງຄວາມຈິງໃຈຂອງເຂົາແທ້, ສຸດທ້າຍນາງໄດ້ຕອບເຂົາວ່າ:

- ຖ້າຈິດໃຈຂອງອ້າຍຍັງບໍລິສຸດຕໍ່ນ້ອງແທ້ ແລະ ບໍ່ມີ ຫຍັງປ່ຽນແປງ, ນ້ອງຂໍເວລາປັບປຸງໂຕເອງໄລຍະຫນຶ່ງກ່ອນແລ້ວພວກເຮົາຈຶ່ງຄ່ອຍເວົ້າກັນໃຫມ່...ຫວັງວ່າອ້າຍຄົງຈະເຂົ້າໃຈນ້ອງ?

ເຂົາຈັບມືນາງບີບແຫນ້ນ ແລະ ຍິ້ມດ້ວຍຄວາມຫວັງອັນບໍລິສຸດ.

- ຄຳໄນ! ອ້າຍຈະຊ່ອຍນ້ອງຈົນສຸດຄວາມສາມາດ ເພື່ອໃຫ້ນ້ອງມີໂອກາດໄດ້ເປັນຕົວຂອງຕົວເອງ ແລະ ອ້າຍຈະຖ້າວັນນັ້ນ. ວັນທີ່ນ້ອງຈະໃຫ້ຄວາມຫວັງແກ່ອ້າຍ...

ນາງຍິ້ມໃຫ້ເຂົາດ້ວຍຄວາມເຫັນໃຈ ແລະ ບູຊານ້ຳໃຈ ຂອງ

ເຂົາ...ຊາຍຜູ້ທີ່ມີຕັ້ງແຕ່ຄວາມບໍລິສຸດໃຈ!

- ແມ່ນແລ້ວ! ອ້າຍຈະຕ້ອງຊ່ວຍເຫລືອນ້ອງ...ເພື່ອ ໃຫ້ນ້ອງໄດ້ມີໂອກາດສ້າງພົນງານ...ແລະກໍເພື່ອອະນາຄົດຂອງພວກເຮົາທັງສອງ...

ສາຍຕາປະສານສາຍຕາ...ຮອຍຍິ້ມປະສານຮອຍຍິ້ມ..ຕ່າງຄົນຕ່າງສ້າງຄວາມຫວັງເຊິ່ງໄປສູ່ຈຸດມຸ້ງໝາຍອັນດຽວ.

# ແປວໄຟ ແຫ່ງໄວໜຸ່ມ

• ວຽງຊຳ

* ຕອນເຊົ້າຂອງວັນທິດມື້ໜຶ່ງ. ອາກາດປອດໂປ່ງດີ, ພໍແສງແດດໂຜຂຶ້ນຈາກຈອມພູສົ່ງແສງເຫລືອງອ່ອນໄປທົ່ວທົ່ງນາໄກ່,ເອື້ອຍນ້ອງຄະນະສະມາຄົມຍິງ, ຜູ້ເຈ່ຍລູກເຈ່ຍເຕົ້າໄດ້ມີໜ້າຢູ່ບ່ອນນັດປະຊຸມຢ່າງຄົບໜ້າຄົບຕາ.

ປະມານ ໘ ໂມງເຊົ້າ, ກອງປະຊຸມຄະນະອຳນວຍສະມາຄົມຍິງລາວຮັກຊາດດ້ອນຂ້າງສູນກາງໄດ້ເລີ່ມຕົ້ນ. ນາງນວນຈັນເປັນຍິງໂສດຜູ້ວ່ອງໄວຖືກເລືອກເປັນສະໜຽນຂອງກອງປະຊຸມ, ນາງທັງບັນທິກມະຕິຕົກລົງຕ່າງໆຂອງກອງປະຊຸມ ທັງຈົດກ່າຍຊ່ວຍ ແມ່ປ້ານ້າສາວຜູ້ຄາລູກເລັກເດັກແດງຂຽນບໍ່ທັນ. ກອງປະຊຸມມື້ນີ້ ໄດ້

ຕົກລົງຫລາຍບັນຫາເປັນເອກະພາບ, ຄຳຂວັນສະມາຄົມຍິງ ວາງອອກ "ຕ້ອງຮຽນເຮັດທຸກວຽກງານຢູ່ແນວຫລັງ ເພື່ອປ່ຽນແທນໃຫ້ຜູ້ຊາຍອອກໄປແນວຫນ້າ" ໄດ້ນຳມາຄົ້ນຄວ້າຢູ່ກອງປະຊຸມຢ່າງ - ເລິກເຊິ່ງ.

ກອງປະຊຸມພວມດຳເນີນໄປຢ່າງຟົດເດືອດ. ບັງເອີນ ໄດ້ຍິນສຽງດັງວື້ງໆມາແຕ່ໄກ. ປ້າຫົວຫນ້າຄະນະອອກຄຳສັ່ງ:

"ເອື້ອຍນ້ອງເຮົາກຽມເຂົ້າຖ້ຳສາກ່ອນ!"

ພໍດີຊຸມເອື້ອຍນ້ອງແມ່ລູກອ່ອນເຂົ້າຫວິດ ຝູງແຮ້ງຫລັກ ບ້າເລືອດຂອງຈັກກະພັດອາເມລິກາກໍສັກລົງ, ສຽງດັງແຮດໆຈົນແສບຫູ, ມັນຟ້າວເທລູກແຕກ ລູກບົມລົງຕິ້ງຕາງ ຕິ້ງຕາງ! ຂີ້ດິນ,ຫີນຊູລົງໃສ່ບ່ອນປະຊຸມໂຄບໆ, ເອກະສານຖືກຂາດປີ້ວໄປທົ່ວຫ້ອງປະຊຸມ. ຖືກກອງ ປ.ຕ.ອ ຂອງເຮົາສູ້ຄືນ, ຝູງແຮ້ງຫລັກຟ້າວປົບຫນີ. ສຽງເຮືອບິນໄປໄກແລ້ວ ກອງປະຊຸມກໍສືບຕໍ່ເຖິງ ໑໘ ໂມງໝົດ. ກອງປະຊຸມໄດ້ສຳເລັດລົງ. ບັນດາແມ່ປ້ານ້າສາວຕາມ ສຳນັກງານຕ່າງໆກໍພາກັນເລີກກັບເມືອຢ່າງສະຫງ່າຜ່າເຜີຍ. ເຖິງວ່າສະພາບອາກາດຈະຫຍຸ້ງຍາກສັບສົນປານໃດກໍຕາມ, ແຕ່ບໍ່ ມີຫຍັງຈະເຮັດໃຫ້ນ້ຳໃຈຂອງເອື້ອຍນ້ອງສະມາຄົມຍິງຖືກສັ່ນສະເທືອນ

ຕອນບ່າຍມື້ຫນຶ່ງເອື້ອຍນ້ອງ, ແມ່ປ້ານ້າສາວຕ່າງກໍພາກັນເລີກເມືອຫມົດແລ້ວ, ຍັງແຕ່ນາງສະຫມຽນຜູ້ດຽວນັ່ງບັນທຶກ ແລະ ສັບຊ້ອນເອກະສານທີ່ຖືກລົມຫນາກແຕກຕີເຂົ້າຫວ່າງຕອນເຊົ້ານີ້. ໃນຂະນະທີ່ນາງພວມວຸ້ນວຽກຢູ່ນັ້ນ ມີອ້າຍທະຫານ ໔ ຄົນ ຍ່າງ

ເຂົ້າມາ, ນາງລຸກຂຶ້ນຈັບມືອ້າຍທະຫານຊຸມນີ້ແຕ່ລະຄົນ ແລ້ວນາງເຊີນນັ່ງລົງ, ຖາມຂ່າວຄາວຢ່າງສະໜິດສະໜົມ. ເຖິງວ່ານາງບໍ່ຮູ້ໜ້າອ້າຍທະຫານຊຸມນີ້ຈັກຄົນກໍຕາມ ແຕ່ນາງກໍຮັບຕ້ອນເໝືອນກັບວ່ານາງໄດ້ຮູ້ຊຸມອ້າຍທະຫານນີ້ມາແຕ່ດົນແລ້ວ. ມີອ້າຍໜຶ່ງໃນຈຳນວນ ໔ ຄົນນັ້ນນັ່ງຊິງຢູ່ຄາວໜຶ່ງບໍ່ປາກບໍ່ຈາຄືຈັ່ງລາວ ພວມຫວນຄືນບັນຫາໃດໜຶ່ງໃນອະດີດ. ຄືຈະແມ່ນລາວສົນໃຈຫຼາຍລາວຈຶງຖາມ:

- ໂອ! ນ້ອງບໍ່ແມ່ນ ນວນຈັນ ເພືອນຂອງສະຫາຍ ບຸນເລີດນັ້ນບໍ? ນ້ອງຢູ່ນີ້ຫວະ?

ໄດ້ຍິນຄຳຖາມນັ້ນ, ນວນຈັນ ໜ້າແດງຂຶ້ນ, ນາງກົ້ມ ໜ້າລົງ ເພືອຮັກສາທ່າທີປົກກະຕິ ແລ້ວນາງຈຶງເງີຍຫົວຂຶ້ນ ແລະຕອບດ້ວຍຄວາມຈິງ:

- ເຈົ້າ, ແມ່ນແລ້ວ, ນ້ອງບໍ່ແມ່ນຢູ່ນີ້, ນ້ອງມາປະຊຸມ.

- ຕາຍຈັ່ງແມ່ນໂຊກບໍ່ດີ, ສະຫາຍເລີດກໍມາປະຊຸມຊຸດ ພວກອ້າຍນີ້, ລາວກໍກະວ່າປິດປະຊຸມແລ້ວຈະໄປຢາມນ້ອງ, ນັ້ນ ພວກອ້າຍຊວນລາວມາຫລິ້ນ, ແຕ່ລາວຍັງຄາວຽກຫຍັງບຸ?

ໄດ້ຂ່າວເລີດກໍມາປະຊຸມ ນາງນວນຈັນດີໃຈຫລາຍ ຢາກຖາມໃຫ້ແຈ້ງຕືມ ແຕ່ບໍ່ກ້າ. ນາງພຽງແຕ່ຖາມຜ່ານສະພາບຂອງ ອ້າຍທະຫານຊຸມນີ້:

- ຂໍໂທດຫລາຍໆ, ພວກອ້າຍຊືຈັ່ງໃດ ສັງກັດກອງໃດ?

- ສະຫາຍນີ້ຊື...ສະຫາຍນັ້ນຊື...ອ້າຍຊືທອງໄຊ. ພວກ

ອ້າຍຢູ່ກອງຮ້ອຍດຽວກັບສະຫາຍເລີດ ຖ້ານ້ອງບໍ່ຄາວຽກຫຼາຍເຊີນ ນ້ອງໄປຢາມພວກອ້າຍແດ່, ພວກອ້າຍພັກຢູ່ຫ້ອງການເມືອງນັ້ນ..

ຮູ້ຂ່າວເລີດຢ່າງລະອຽດ, ໃຈໜຶ່ງນວນຈັນຄິດຢາກໄປ ຢາມ ເລີດ ເພາະເຫິງແລ້ວ, ນັບແຕ່ຈາກກັນຢູ່ໂຮງຮຽນວັດທະນະ ທຳ ເຖິງປະຈຸບັນນີ້ບໍ່ໄດ້ພົບກັນ, ມີແຕ່ແລກປ່ຽນກັນໃນຈົດໝາຍ ເທົ່ານັ້ນ. ໃນຈົດໝາຍນັ້ນກໍມີຫລາຍບັນຫາເຮັດໃຫ້ນາງສົນໃຈ, ບໍ່ຈັກຄວາມຮັກແພງລະຫວ່າງນາງ ແລະ ເລີດຢູ່ໃນຖານະໝູ່ເພື່ອນນັກຮຽນດ້ວຍກັນຫລືຢ່າງໃດ ນາງກໍເຂົ້າໃຈຍາກ. ໃຈໜຶ່ງນາງຢາກຢູ່ເຮັດວຽກນີ້ໃຫ້ແລ້ວສາ ເພື່ອຈະກັບຄືນສຳນັກ, ນາງຖາມ ຕົນເອງວ່າ: "ສະຫາຍຈະເອົາວຽກສ່ວນຕົວຫລືຈະເອົາວຽກ ສ່ວນລວມ!" ທີ່ສຸດນາງຕັດສິນໃຈຢູ່ເຮັດວຽກ, ນາງຕອບຊຸມອ້າຍ ທະຫານດ້ວຍຄວາມສຸພາບ:

- ຂໍຂອບໃຈນຳພວກອ້າຍຫລາຍໆ, ມື້ນີ້ນ້ອງຍັງຄາວຽກ ຈັກໜ່ອຍ, ຖ້າເຮັດວຽກແລ້ວຫາກບໍ່ຄ່ຳຫລາຍ ນ້ອງຈະໄປຢາມພວກອ້າຍ. ຖ້ານ້ອງຫາກບໍ່ທັນໄປ, ນ້ອງຂໍຝາກຄວາມຢ້ຽມຢາມ ອ້າຍບຸນເລີດ ແລະ ອວຍພອນພວກອ້າຍທັງໝົດເດີນທາງກັບຄືນສູ່ໜ້າທີ່ດ້ວຍຄວາມປອດໄພສູ່ປະການ.

ຊຸມອ້າຍທະຫານນີ້ຈຶ່ງແມ່ນສະຫລາດແທ້ໆ, ເຖິງວ່ານາງນວນຈັນຈະໂອລົມເຂົາເຈົ້າດ້ວຍທ່າທີ່ມ່ວນຊື່ນເບີກບານດັ່ງນັ້ນ ກໍຕາມ, ແຕ່ເຂົາກໍສ່ອງເຫັນໃຈຂອງນາງ ຄາວນີ້ພວມວຶນນຳວຽກ,ທັງເປັນຫ່ວງຫາສະຫາຍບຸນເລີດຜູ້ເປັນເພື່ອນຂອງນາງຫລາຍປີແລ້ວ ບໍ່ໄດ້

ພົບຫນ້າ. ນັ່ງໂອ້ລົມກັນປະມານຊົ່ວໂມງຫນຶ່ງ, ອ້າຍທະຫານຊຸມນີ້ກໍລາໄປ. ນາງຍ່າງໄປສົ່ງແຂກຮອດປາກປະຕູຄ້າຍ ດ້ວຍ ຄວາມສຸພາບ, ແລ້ວຟ້າວກັບຄືນສູ່ຫນ້າທີ່. ນາງໃຊ້ຫມົດທຸກກຳລັງ ໃຈເຮັດວຽກຢ່າງຮີບຮ້ອນ, ປະມານສອງຊົ່ວໂມງ, ມະຕິ ແລະ ຄຳສັ່ງຕ່າງໆໄດ້ສຳເລັດຢ່າງຮຽບຮ້ອຍ. ນາງເອົາເອກະສານ ໄປມອບໃຫ້ປ້າຫົວຫນ້າຄະນະ.

- ລາຍງານປ້າ! ມະຕິ ແລະ ຄຳສັ່ງລົງແຕ່ລະສະຫະຫລານໄດ້ຂຽນແລ້ວຫມົດແລ້ວ.

ປ້າຫົວຫນ້າຄະນະປົດແວ່ນຕາຂາວອອກ ແລະ ເງີຍຫນ້າ ຂຶ້ນຖາມຄືນ:

- ແລ້ວໆຫວະຫລານ? ໂອດີຫລາຍ, ກຳລັງໄວຫນຸ່ມ ເຮັດຫຍັງກໍ່ວ່ອງໄວ. ມັນຄ່ຳແລ້ວ, ຫລານນອນຢາມປ້າສາກ່ອນ.

- ຂອບໃຈປ້າຫລາຍໆ, ຫລານຂໍໄປຢາມຫມູ່ຢູ່ຫ້ອງ ການເມືອງຄາວຫນຶ່ງ ແລ້ວຫລານຈະກັບມານອນຢາມປ້າ.

× ×

×

ຫມູ່ເພື່ອນໄປຫລິ້ນກັບມາ. ສະຫາຍບຸນເລີດຍັງຂຽນ ຫນັງສືຢູ່ບ່ອນເກົ່າ, ສະຫາຍທອງໄຊຍ່າງໄປຕົບບ່າ:

- ໂອ່! ເຖົ້າ! ໂຕຈັ່ງແມ່ນຊວຍ. ພວກເຮົາໄປຫລິ້ນ ຫ້ອງການແນວມັນ ພົບກັບນາງນວນຈັນມາປະຊຸມຢູ່ນັ້ນ, ສີນນ້ຳຫນ້າແດ່

ນັ່ງແຕ່ບ່ອນເກົ່າ!

ເລີດເງີຍໜ້າຂຶ້ນເຊື່ອແດ່ບໍ່ເຊື່ອແດ່, ສະຫາຍຖາມ:

- ອີຫລີຫວະ? ຢ່າມາຕະຫລົກກັນນ່າ ເວີຍ!

- ອ່ວາຍ! ຖາມໝູ່ຫລາຍຄົນເບິ່ງແມ້ ໃຜຊິຕົວະກັນ.

ເລີດບໍ່ປາກ, ໝົດທຸກຄົນກໍພາກັນຫົວຂຶ້ນ ຍິ່ງເຮັດໃຫ້ເລີດກະ ວົນກະວາຍໃຈ, ສະຫາຍທອງໄຊເວົ້າຕໍ່:

- ລາວຍັງສັ່ງວ່າ ຖ້າເຮົາດວຽກແລ້ວບໍ່ທັນຄ່ຳລາວຈະມາຢາມ ໂຕ, ແຕ່ບາງທີດອກໄດ້, ບາດບໍ່ມາພັດວ່າເຮົາຕົວະອີກ.

ສຽງຫົວຍິ່ງຟົດຂຶ້ນ, ເຮັດໃຫ້ເລີດນັ່ງບ່ອນເກົ່າບໍ່ໄດ້, ເລີດ ລຸກຍ່າງໜີໄປນັ່ງງວຍກ້ອນຫີນປາກຖ້ຳ, ຫລຽວໜ້າໄປທາງ ທິດ ຕາເວັນອອກ ທັງຄິດ: "ນາງຈະມາຢາມເຮົາແທ້ບໍ່ຫລືຢ່າງໃດ ? ນາງຈະຄິດເສຍໃຈໃຫ້ເລີດບໍ ເພາະມາຮອດນີ້ໄດ້ອາທິດແລ້ວເລີດ ຍັງບໍ່ທັນສົ່ງຂ່າວຫານາງ, ເລີດຄິດປິດປະຊຸມແລ້ວຈະຫາໂອກາດ ໄປຢາມນາງຢູ່ນ່າ, ນາງຈະເຂົ້າໃຈນຳເລີດບໍ?"

ເວລາເລີດພວມນັ່ງເຫງົາຢູ່ນັ້ນ, ມີນົກນ້ອຍຄູ່ໜຶ່ງງວຍຢູ່ເທິງ ງ່າໄມ້ ສົ່ງສຽງຮ້ອງຈິກຈອກ! ຈໍແຈ! ພາເລີດຫວນຄິດໃນ ອະດີດ ກ່ອນໜ້ານີ້ ๒-๓ ປີ ເລີດ ແລະ ນວນຈັນກໍເໝືອນກັບຄູ່ນົກນ້ອຍ ນີ້. ເຂົາທັງສອງພ້ອມຮຽນຢູ່ໂຮງຮຽນກິນນອນແຫ່ງໜຶ່ງຂອງ ສູນ ກາງ, ເຂົາທັງສອງລ້ວນແຕ່ແມ່ນລູກກຳພ້າ, ເຂົາຖືກຢູ່ ໜ່ວຍ ອ່ຳຮຽນດຽວ, ເຂົາເຈົ້າເຂົ້າໃຈນຳສະພາບຂອງກັນດີ,ເຂົາ ທັງ ສອງຮັກແພງກັນ, ມີສິ່ງການໜຶ່ງກໍປັນກັນໃຊ້ ເພາະນອກ ຈາກ

ເຄື່ອງຂອງວັດຖຸທີ່ໂຮງຮຽນຊຸດຫນູນແລ້ວ ເຂົາທັງສອງບໍ່ມີພໍ່ ແມ່ຝາກເຄື່ອງຂອງມາໃຫ້ຄືລູກຫລານພະນັກງານຜູ້ອື່ນໆ, ເຂົາດຳລົງຊີວິດຢ່າງກະທັດຮັດເບົາບາງ, ເລີດຮຽນເກັ່ງວິຊາເລກ, ນາງນວນຈັນຮຽນເກັ່ງວິຊາຫັດແຕ່ງ, ນອກຈາກຟັງຄູອະທິບາຍແລ້ວຍັງບ່ອນໃດບໍ່ແຈ້ງເຂົາແລກປ່ຽນນຳກັນ. ຊີວິດຂອງເຂົາທັງສອງຍາມນັ້ນກໍ່ເຫມືອນກັບຄູ່ນົກນ້ອຍທີ່ພວມເຕັ້ນຢູ່ຕໍ່ຫນ້າຂອງເລີດປະຈຸບັນ.

ໃນຫມູ່ນັກຮຽນທັງຫລາຍເຄີຍໄຝ່ຝັນ ແລະ ສົນທະນາ ນຳກັນວ່າ: ຮຽນຈົບແລ້ວຈະໄປຮຽນຕໍ່ມະຫາວິທະຍາໄລ, ຈະໄປ ເປັນນັກວິຊາວະກອນ, ຈະໄປເປັນນາຍແພດຊັ້ນກາງ, ຊັ້ນສູງ ແລະອື່ນໆ...ສຳຫລັບທັງສອງເຄີຍເວົ້ານຳຫມູ່ວ່າ: "ຮຽນແລ້ວ ເອົາແຕ່ການປະຕິວັດຕ້ອງການ". ຄວາມຈິງກໍ່ແມ່ນແນວນັ້ນແທ້, ເສັງຈົບມັດທະຍົມແລ້ວ ເຂົາທັງສອງກໍ່ຖືກແບ່ງໄປຮັດວຽກ, ເລີດໄປຮຽນໂຮງຮຽນທະຫານ, ນາງນວນຈັນ ເຂົ້າໂຮງຮຽນວິຊາ ສະເພາະ. ຕອນມ່ວນຊື່ນປິດພາກຮຽນກໍ່ເປັນມື້ທີ່ນັກຮຽນທັງຫຼາຍຈາກກັນໄປຄົນລະແຫ່ງ. ເຂົາທັງສອງຈັບມືໃຫ້ຄຳຫມັ້ນສັນຍາກັນວ່າ : "ພວກເຮົາແຂ່ງຂັນກັນເຮັດຫລ້ອນຫນ້າທີ່ຂອງຊາດໄດ້ມອບ ຫມາຍໃຫ້ ເພື່ອຕອບສະຫນອງການລ້ຽງດູຂອງການປະຕິວັດ."

ແຕ່ນັ້ນ ຄູ່ນົກນ້ອຍ ໄດ້ບິນຈາກກັນໄປຄົນລະແຫ່ງຫົນ, ແຕ່ລະປີເຂົາເຈົ້າທັງສອງເຄີຍສົ່ງຂ່າວຫາກັນທາງຈົດຫມາຍ ເພື່ອ ແລກປ່ຽນບົດຮຽນ, ລະດົມຊຸກຍູ້ກັນໃນວຽກງານ. ເຂົາທັງສອງ ໄດ້ເຕີບໃຫຍ່ຂື້ນໃນແປວໄຟແຫ່ງສົງຄາມ, ເລີດກາຍເປັນພະນັກງານ

ທະຫານ, ນາງນວນຈັນກາຍເປັນພະນັກງານແພດຍິງ.

ໃນຂະນະທີ່ເລີດພວມນັ່ງທວນຄິດຄືນໃນອະດີດນັ້ນ, ສຽງຫວີດດັງຂຶ້ນ ຕິດ!ຕິດ!ຕິດ! ເຮັດໃຫ້ຄວາມຄິດຂອງເລີດຖືກ ແຕກທະລາຍ ເລີດຍ່າງເຂົ້າໄປຮວມໃນຖ້ຳ, ພະນັກງານທ້ອງການເມືອງຂຶ້ນປະກາດ:

- ຮຽນບັນດາສະຫາຍ! ຕາມແຜນການເກົ່າ, ຫລັງຈາກປິດກອງປະຊຸມແລ້ວ ຈະໃຫ້ບັນດາສະຫາຍພັກຜ່ອນມື້ໜຶ່ງ, ແຕ່ຍ້ອນສະພາບຕ້ອງການດ່ວນ ຕາມຄຳສັ່ງຂອງກອງບັນຊາການ ສູງສຸດ, ມື້ອື່ນບັນດາສະຫາຍຈະໄດ້ອອກເດີນທາງໄປເຮັດວຽກເລີຍ, ພວກສະຫາຍຈະໄປໄດ້ບໍ່?

ໝົດທຸກຄົນຍົກມືເພືອບ ແລະ ຮ້ອງເປັນສຽງດຽວ:

- ໄດ້!

ສຽງຮ້ອງຕັດສິນໃຈຕີເອົາຊະນະກັບຈັກກະພັດອາເມລິກາ ຮຸກຮານຂອງບັນດາສະຫາຍພະນັກງານທະຫານຜູ້ໜຸ່ມນ້ອຍໄດ້ດັງກ້ອງຖ້ຳ.

ສະພາບໃໝ່ນີ້ຍິ່ງເຮັດໃຫ້ເລີດກະວົນກະວາຍໃຈ ຍ້ອນ ລາວບໍ່ທັນໄດ້ພົບນາງນວນຈັນ ຜູ້ເປັນເພື່ອນເກົ່າ, ແຜນການທີ່ກະ ໄວ້ໄດ້ຖືກແຕກທະລາຍ, ຄວາມຄິດຮອດ ຄິດເຖິງໃນສະຖານ ໝູ່ເພື່ອນ ຫລື ຄວາມຄິດຮອດຍ້ອນຄວາມຮັກບໍລິສຸດໄດ້ເກີດຂຶ້ນແຕ່ - ຍາມໃດເລີດກໍຈຳແນກບໍ່ໄດ້ອີກ.

ເລີດເຂົ້າໄປຮ໋ວມຄາວໜຶ່ງ ນາງນວນຈັນກໍມາຮອດ, ນາງ

ລາຍງານກັບສະຫາຍຜູ້ຍານ, ຂໍເອົ້າຍາມສະຫາຍບຸນເລີດ, ແຕ່ສະຫາຍຍາມຕອບວ່າຍັງບໍ່ທັນເຂົ້າໄດ້ ເພາະສະຫາຍເລີດ ຍັງຄາປະຊຸມ, ນາງຈຶ່ງເອົາປຶ້ມເລື່ອງໃນກະຕ່າຍາງມານັ່ງອ່ານຖ້າ ຢູ່ບ່ອນຮັບແຂກ, ນາທີນີ້ກາຍເປັນນາທີໃຫ່ມຄືຈັ່ງໄວເອົາແທ້ງ, ນາງຫລຽວເບິ່ງໂມງພໍດີເຂັມໂມງຊີ້ ໔ ໂມງແລງແລ້ວ, ແຕ່ກອງ ປະຊຸມພະນັກງານທະຫານກໍຍັງບໍ່ທັນເລີກ, ນາງນັ່ງຢູ່ນີ້ໄດ້ ໓໐ ນາທີແລ້ວ, ນາງຮ້ອນໃຈທີ່ສຸດຍ້ານພວກປ່າເພີ່ນຈະຖ້າພາເຂົ້າ, ດາວໜຶ່ງສະຫາຍຜູ້ຍານເອົາໜັງສືມາຍື່ນໃຫ້, ນາງເປີດມາອ່ານແມ່ນຄຳສັ່ງຂອງຫ້ອງ ເອັ້ນນາງກັບຄືນສຳນັກໃນຕອນຄ່ຳນີ້ດ່ວນ, ນາງນັ່ງຊຶງຢູ່ບໍ່ຕິງ, ບຶດໜຶ່ງ ນາງຈຶ່ງເອົາເຈ້ຍ ແລະ ປາກກາ ອອກມາຂຽນຈົດໝາຍຢ່າງຟ້າວຟັ່ງ, ສຽງແກລົດໄດ້ດັງຂຶ້ນຢູ່ທາງນອກ ປິ້ບ!ປີບ!ປີ້ບ! ສາມຮູດ ຍິ່ງເຮັດໃຫ້ນາງຮ້ອນໃຈ ເພາະ ອ້າຍນ້ອງພວມຖ້ານາງຢູ່ທາງຫລວງພຸ້ນ, ນາງເອົາຈົດໝາຍນ້ອຍ ນັ້ນຝາກໄວ້ໃຫ້ເລີດ ແລ້ວນາງລາສະຫາຍຍາມອອກໄປ, ຕີນລົດເຄື່ອນຍ້າຍໝູນໄປເບື້ອງໜ້າຈັກໄຈ, ແຕ່ໝາກຫົວໃຈຂອງນວນຈັນຊໍ້າຢາກໝູນປິ້ນຄືນທາງເບື້ອງຫລັງ.

ນາງນວນຈັນອອກໄປດາວດຽວ ກອງປະຊຸມທະຫານກໍເລີກ , ສະຫາຍຍາມແລ່ນເອົາຈົດໝາຍນ້ອຍນັ້ນໄປຍື່ນໃຫ້ສະຫາຍບຸນເລີດ ສະຫາຍເປີດມາອ່ານ ເຫັນຕົວໜັງສືທີ່ແກ່ວນເຄີຍແລ່ນຕາມ ໜ້າເຈ້ຍນ້ອຍສີຕາແຖວຢ່າງຟ້າວຟັ່ງ:

- "ເລີດເພື່ອນທີ່ຮັກ! ເຮົາມາເຮັດວຽກ ແລະ ໄດ້ຂ່າວວ່າ

ເພື່ອນມາປະຊຸມຢູ່ນີ້, ເຮົາຍາດເວລາມາຢາມເພື່ອນ, ແຕ່ເພື່ອນຍັງຄາປະຊຸມ, ເຮົາກໍຈວນເວລາ, ຈຳເປັນເຮົາຕ້ອງກັບຄືນ. ໄດ້ແລ້ວນໍ? ພວກເຮົາຈຶ່ງປະໃຫ້ແປວໄຟແຫ່ງໄວໜຸ່ມນີ້ລຸກໄໝ້ຂຶ້ນໃນພາລະກິດປະຕິວັດອັນສະຫວ່າງງາມ, ພວກເຮົານັດພົບກັນບົນພື້ນສຳເລັດໜ້າທີ່ຂອງຊາດ.

ຮັກແພງ.

ເພື່ອນນັກຮຽນເກົ່າຂອງເລີດ

ນວນຈັນ.

ສະຫາຍເລີດຍັດຈົດໝາຍໄວ້ຖົງເສື້ອ ແລ້ວຖາມສະຫາຍຍານ:

- ເອົາໄປເຫິງແລ້ວບໍ່ສະຫາຍ ?
- ບໍ່, ຫາກໍໄປຫ່ວາງຢ່ານີ້ມາ!

ເລີດຫລຽວໄປຕາມເສັ້ນທາງທີ່ປ່າຄັງລ້ອງກູ້, ທັນເຫັນ ແຕ່ລົດນ້ອຍຄັນໜຶ່ງແລ່ນຫລີບເຂົ້າປ່າແຂມ, ສິ່ງສຽງກອງຄືນອຶດໆ ! ປ່ຽນແທນໃຫ້ສຽງເອີ້ນສັ່ງອຳລາຂອງນວນຈັນ.

ເລີດຍ່າງມານັ່ງງອຍກ້ອນຫີນທີ່ລາວນັ່ງຖ້ານາງນວນຈັນ ຕອນແລງນີ້ແລ້ວ ຈົກເອົາຢາມາສູບ, ປ່ອຍໃຫ້ຄວັນປິວຂຶ້ນຢ່າງ ສະຫວາດສະຫວິຍ, ສາຍລົມເຢັນພັດໂຊຍມາເປັນຮູດໆ ເຮັດ ໃຫ້ເລີດຮູ້ສຶກເຢືອກເຢັນທີ່ສຸດ.

ຮຸ່ງເຊົ້າມື້ຕໍ່ມາ, ເລີດກັບຄືນກອງ ແລະ ເລີດເຄື່ອນທັບ ຂຶ້ນສະໜາມຮົບ. ຄຳຂວັນ "ສາມເກົ່າສອງດີ" ໄດ້ເປັນຂະບວນຟົດຟື້ນໄປທົ່ວກົມກອງເຫລົ່າທະຫານ, ຜ່ານການສູ້ຮົບແຕ່ລະຄັ້ງ,ໝວດ

ຂອງສະຫາຍບຸນເລີດເຄີຍເປັນຫມວດທີ່ເດັ່ນໃນກອງຮ້ອຍ ໔.ເຂດປົດປ່ອຍນັບມື້ຂະຫຍາຍກວ້າງຂວາງ, ເລີດມົວເມົານຳວຽກງານສູ້ຮົບ, ດ້ານຫນຶ່ງການຕິດຕໍ່ໄປມາກໍບໍ່ຄ່ອຍໄດ້ມີ, ດັ່ງນັ້ນການຕິດ ຕໍ່ສົ່ງຂ່າວຫານາງນວນຈັນຢູ່ແນວຫລັງກໍບໍ່ຄ່ອຍສະດວກ. ຂຶ້ນມາ ປະຈຳຢູ່ສະຫນາມເກືອບປີປາຍແລ້ວ, ເລີດຝາກຈົດຫມາຍຫານວນຈັນສອງສະບັບ ແຕ່ບໍ່ຮູ້ວ່າ ນວນຈັນ ຈະໄດ້ຮັບຫລືຢ່າງໃດກໍບໍ່ ເຫັນນາງຕອບເລີຍ. ເລີດຄິດ "ຫລືວ່ານາງມີບັນຫາໃດບັນຫາຫນຶ່ງ". ແຕ່ເລີດຟ້າວປ່ອຍປະຄວາມຄິດສົງໄສນັ້ນ ເພື່ອບໍ່ໃຫ້ຊຸກອົ່ງ, ເຫໍງໆ ເລີດເປີດຈົດຫມາຍນ້ອຍສະບັບກ່ອນມາອ່ານ, ຕອນທີ່ຂຽນ "ພວກເຮົາຈົ່ງປະໃຫ້ແປວໄຟແຫ່ງໄວຫນຸ່ມນີ້ລຸກໄຫມ້ຂຶ້ນບົນພາລະກິດປະຕິວັດອັນສະຫງ່າງາມ, ພວກເຮົານັດພົບກັນບົນພື້ນສຳເລັດ ຫນ້າທີ່ຂອງຊາດ" ຄວາມເວົ້າອັນສັ້ນໆທີ່ເຕັມໄປດ້ວຍຄວາມຫມາຍນີ້ ໄດ້ກາຍເປັນສິ່ງຫນຶ່ງລະດົມເລີດ ຕ້ອງກ້າຫານ ຜ່ານຜ່າຄວາມ ທຸລະກັນດານທີ່ຈະມາຂວາງຫນ້າ.

× ×

×

ຕາມທຳມະດາ, ວັນອາທິດແມ່ນມື້ພັກຜ່ອນ, ຊາວຫນຸ່ມຜູ້ອື່ນໆພາກັນໄປຢັ້ຽມຢາມຖາມຂ່າວກັນຢ່າງມ່ວນຊື່ນເບີກບານ ໃຕ້ຮົ່ມຟ້າເສລີພາບຂອງເຂດປົດປ່ອຍ, ມີແຕ່ຢູ່ໃຕ້ລະບອບປະຕິວັດ, ຊາວຫນຸ່ມບັນດາຊົນຊາດຈຶ່ງໄດ້ຮ່ຳຮຽນ ແລະ ມີຊີວິດໃຫມ່ອັນສົດໃສ ຄືດຽວນີ້, ຊາວຫນຸ່ມທຸກຊົນຊາດ ເຂົາເຈົ້າໄດ້ສາມັກຄີ ຊ່ວຍເຫລືອ



ເຊື່ງກັນ ແລະ ກັນ ພ້ອມກັນຮ່ຳຮຽນ, ພ້ອມກັນກ້າວໜ້າ, ເຂົາ
ເຈົ້າພວມເອົາໝົດກຳລັງຂອງໄວໜຸ່ມເຂົ້າໃນການຕໍ່ສູ້ພະລິດພົນ,
ສ້າງສາເຂດປົດປ່ອຍ.

ສຳຫລັບນາງນອນຈັນ, ປະກົດວ່າບໍ່ຄ່ອຍໄດ້ມີວັນທິດ ຈັກເທື່ອ
ເພາະແຜນການປະຊຸມຄະນະຊາວໜຸ່ມ ແລະ ຄະນະສະມາຄົມຍິງ,
ແຜນການເພີ່ມພູນສ້າງຄັງຂອງສະມາຄົມຕ່າງໆລ້ວນແຕ່ສຸມໃສ່ມື້ວັນ
ທິດ. ຄຳຂວັນຂອງສະມາຄົມຍິງ "ຮຽນເຮັດທຸກວຽກງານ ເພື່ອ
ປ່ຽນແທນໃຫ້ຜູ້ຊາຍອອກໄປແນວໜ້າ" ໄດ້ເປັນກະແສຟອງ ຟົດ
ເດືອດຢູ່ທຸກໆສະຫະ ນາງນອນຈັນທັງຮັບຜິດຊອບສະຫະສະມາຄົມ
ຍິງ ທັງຢູ່ໃນຄະນະຊາວໜຸ່ມ ແລະ ແບກຫາບໜ້າທີ່ຫົວໜ້າ ຂະ
ແໜງວິຊາສະເພາະ ແຕ່ລະມື້ນາງປິ່ນໆນຳວຽກງານ, ມື້ໃດເຮືອ
ບິນເຄື່ອນໄຫວແຮງ, ສາຍໂທລະສັບຖືກຂາດ, ວຽກຊ້ຳພັດດ່ວນ,
ນາງຕ້ອງແລ່ນຜ່ານຂຸມໝາກແຕກ ໝາກບົມໄປ ບໍ່ວ່າວັນ ແລະ
ຄືນ.

ວັນເດືອນໄດ້ຜ່ານໄປ, ເດືອນນີ້ກາຍໄປເດືອນໃໝ່, ນອນ
ຈັນຄອຍຖ້າຮັບຂ່າວຈາກເລີດ, ແຕ່ຄວາມລໍຄອຍນັ້ນໄດ້ນຳມາ ສູ່
ນາງດ້ວຍຄວາມສິ້ນຫວັງ ເພາະຈົດໝາຍຂອງເລີດຝາກມາສອງ
ສະບັບນັ້ນຖືກຫາຍໄປທາງໃດກໍບໍ່ຮູ້, ມີຊາວໜຸ່ມຈຳນວນໜຶ່ງໄດ້ສະ
ແດງຄວາມຈິງໃຈຢາກຊອກຮູ້ກັບນາງ, ແຕ່ນາງກໍຕອບດ້ວຍຄວາມ
ສຸພາບ: "ຂໍໂທດນຳອ້າຍຫລາຍໆ, ນ້ອງຍັງຢາກສ້າງຕົນໄປ ສາ
ກ່ອນ", ສົນສັກເປັນຊາວໜຸ່ມຜູ້ດຽມຄົນກໍໄດ້ຕັ້ງຄຳຖາມກັບໝູ່ວ່າ:

- ຣວາຍໜູ່! ນາງນອນຈັນ ບໍ່ໄດ້ງິນຂ່າວວ່າຕິດໃຜ ແຕ່ເປັນຫຍັງໃຜ "ບຸກ" ກໍບໍ່ "ແຕກ" ນໍ?

ພໍໄດ້ງິນສົມສັກຕັ້ງບັນຫານີ້ຂຶ້ນກໍເປັນໂອກາດດີໃຫ້ "ນັກວິຈານໃຫຍ່" ໄດ້ເປີດກອງລຳໂພງທັນທີ:

- ໂອຍ! ຈະໄປງຶດໄປງໍ້ຕາຍອີສັງ! ນັ້ນແມ່ນວິທີເວົ້າ ຂອງເຂົາຊື່ງດອກ ຢ່າສູ່ໄປວົນນຳພວກນາງສາວພະນັກງານທັ້ນ! ປະໃຫ້ເຂົາຕາຍເຖົ້າຍອນເລືອກທັ້ນແຫລະ!

ອາດຈະບໍ່ມີໃຜເຂົ້າໃຈເຖິງຄວາມຮັກບໍລິສຸດຂອງນາງໄດ້ຝາກໄວ້ນຳອ້າຍກອງທັບປົດປ່ອຍຜູ້ໜຶ່ງ ທີ່ພວມກາງເກືອກລີເລືອຢູ່ ໜ້າສະໜາມ ເພື່ອທັບມ້າງເລັກົນບຽດຢຶດເຂດປົດປ່ອຍຂອງຈັກກະພັດອາເມລິກາ ແລະ ລູກມື. ຄວາມຈິງແລວ ນາງກໍຢາກຕອບ ຊາວໜຸ່ມຊຸມນັ້ນດ້ວຍຄວາມຈິງໃຈວ່າ: "ນອງມີແລ້ວ", ແຕ່ນາງບໍ່ ທັນກ້າເວົ້າໄດ້ເທື່ອຍ້ອນວ່າຄວາມຮັກແພງລະຫວ່າງເລີດ ແລະ ນາງຍັງຢູ່ໃນຂອບເຂດຊາຍແດນເພື່ອນມັກຮຽນດ້ວຍກັນ, ຍັງບໍ່ທັນມີໃຜກ້າຫານຜ່ານຊາຍແດນນັ້ນໄດ້, ທັງສອງເຂົາຍັງບໍ່ທັນໄດ້ໃຫ້ ຄຳໝັ້ນສັນຍາກັນແນວໃດເທື່ອ, ອີກດ້ານໜຶ່ງໄດ້ປີກ່ວາແລ້ວເລີດ ບໍ່ສົ່ງຂ່າວຫານາງ ບໍ່ຈັກສະພາບຂອງເລີດຈະເປັນໄປແນວໃດ?ເຖິງຢ່າງນັ້ນກໍດີ, ໃຈນາງກໍຍັງໝັ້ນທ່ຽງຢູ່ເໝືອນກັບຜາຫີນຕັ້ງ ຕາມທົ່ງນາໄກ່, ເຖິງຈະມີລູກແຕກ ລູກບົ່ມຕົກລົງໃສ່ເປັນພັນເປັນໝື່ນລູກກໍບໍ່ມີຫຍັງຈະສັ່ນສະເທືອນ.

× ×

×

ບັ້ນຮົບໄດ້ສຳເລັດລົງແຕ່ຕອນເຊົ້າມຸ້ນ, ສັດຕູປະຊາກສິບ ໄວ້ລົ້ມຕາຍໄຂ່ວຂຶນກັນ. ໄຟຍັງໄໝ້ລາມຕາມຂອນໂດກເປັນຍ່ອມ - ເປັນແຍ່ມ.

ໝວດຂອງສະຫາຍບຸນເລີດໄດ້ຮັບໜ້າທີ່ຂຶ້ນຮັກສາປ້ອມ,ກ່ອນຈະອອກເດີນທາງ, ສະຫາຍການເມືອງກອງຮ້ອຍໄດ້ເຕືອນວ່າ:

- ການສູ້ຮົບຍັງຈະດຸເດືອດ! ສັດຕູອາດຈະໂສຕາຍໃຊ້ທຸກກຳລັງເພື່ອຢຶດເອົາປ້ອມນັ້ນຄືນ, ພວກມັນອາດຈະໃຊ້ຍົນ ເພື່ອຊ່ວຍກອບກູ້ເອົາທ່າປະລາໄຊຂອງພວກມັນນັ້ນ. ເພື່ອສິດຜົນປະໂຫຍດຂອງປະຊາຊົນ, ພວກເຮົາຕ້ອງຕັດສິນໃຈເຮັດໃຫ້ຫຼ້ອນໜ້າທີ່.

ສະຫາຍບຸນເລີດລຸກຂຶ້ນຢືນກົງ, ສະບັດມືຂຶ້ນຄຳນັບ:

- ຮັບຜູ້ກອງ! ອ້າຍຈົ່ງເຊື່ອນ້ອງ! ພວກນ້ອງຈະປະຕິບັດຄຳສັ່ງຢ່າງເດັດຂາດ!

ປະມານ ໖ ໂມງແລງ ໝວດຂອງສະຫາຍບຸນເລີດໄດ້ຂຶ້ນ - ເຖິງຈອມພູ, ເຂົາເຈົ້າພາກັນສ້ອມແປງຂຸມຄອງຄືນ ກະກຽມຕ້ານທານກັບການບຸກໂຈມຕີຂອງສັດຕູໃນມື້ໃໝ່ ໂດຍບໍ່ຫົວຊານຳຄວາມອິດເມື່ອຍ, ແປງຂຸມແລ້ວ ຫົວໜ້າໝວດບຸນເລີດສັ່ງໃຫ້ອ້າຍນ້ອງນອນພັກຜ່ອນເອົາແຮງ, ສ່ວນສະຫາຍເວງຍາມປ່ຽນອ້າຍນ້ອງ.

ຄວາມສັງເກດສະພາບການຂອງສະຫາຍການເມືອງກອງຮ້ອຍ

ບໍ່ພິດຈັກຫນ່ອຍ, ຮອດຂ້ອນແຈ້ງ, ພວກສັດຕູແຕກທັບໄດ້ທ້ອນໂຮມກຳລັງມາບຸກ ຫວັງຢຶດເອົາປ້ອມນັ້ນຄືນ, ແສງເດືອນຂ້ອນແຈ້ງຕອງໃສ່ຫມວກເຫລັກຂອງສັດຕູເປັນຫມູ່ໆພວມບຸກຂຶ້ນມາທາງສອງ ປີກ. ສະຫາຍເລີດສັ່ງ:

- ທຸກໆຫມູ່ກຽມຕົວສູ້ຮົບ! ທຸ່ມທ່ຽງ, ປະໃຫ້ມັນມາໃກ້ ຈຶ່ງຍິງ.

ສັດຕູບຸກຂຶ້ນມາຫ່າງຈາກຂຸມຄອງ ໓໐ ແມັດ, ໒໐ ແມັດ, ຫົວຫນ້າຫມູ່ທີ່ຫນຶ່ງຮ້ອນໃຈ, ຄານມາຂໍຄຳສັ່ງ:

- ເອົາເທາະອ້າຍ!

- ຟ້າວກ່ອນ.

ສັດຕູບໍ່ໄດ້ຍິນສຽງດັງຫຍັງ ມັນແຮ່ງບຸກຂຶ້ນ, ໑໔ ແມັດ, ໔ ແມັດ.

- ຍິງ!

ສຽງຫມາກແຕກ, ປືນເຫລັກຍາວ, ປືນຈັກດັງຂຶ້ນພ້ອມກັນຝົດສະຫນັ່ນ, ສັດຕູກໍໂສຕາຍບຸກຂຶ້ນ, ເວລານັ້ນບັງເອີນມີສຽງ "ໂອຍ" ບາດຫນຶ່ງ, ຫລຽວເບິ່ງນັກຮົບປືນຈັກໂຈມແຂນເບື້ອງຫນຶ່ງຢູ່. ເລີດໂດດເຂົ້າແທນ, ສັດຕູປະຊາກສົບໄວ້ ໔-໖ ບັກແລ້ວຟ້າວແລ່ນຂາຈ່າງໄປ.

ກອງຮ້ອຍພວມຈັດຫມວດຫນຶ່ງຂຶ້ນ ເພື່ອຊ່ວຍ, ແຕ່ເວລານັ້ນກໍໄດ້ຍິນສຽງກອງດັງຂຶ້ນປຶດປຶງ! ປຶດປຶງ! ຕາມຈັ່ງຫວະລຳວົງ,ສັນຍານວ່າ ອ້າຍນ້ອງຢູ່ເທິງພູພູ້ນຍັງຢູ່ທ່າເປັນເຈົ້າການ.

ນ້ຳໝອກຄ່ອຍໆເພີກໄປ, ແສງລັດສະໝີຍາມເຊົ້າຂອງດວງ ພະອາທິດໄດ້ສິ່ງລົງມາຕ້ອງໃສ່ນ້ຳໝອກຄ້າງຕາມຕົ້ນຫຍ້າ ເປັນ ແສງເຫລື້ອມຍິບໆຍັບໆເໝືອນແກ້ວໃນຕຸ້ມຫູນາງສາວ.

ບ່າຍສອງໂມງແລງ, ຢືນຢູ່ເທິງພູແນມໄປຂອບຟ້າໄກໆພຸ້ນ ຄື ຈັ່ງກ້ວາງອອກຕື່ມ, ໂງ່ນເຜື້ອນອຍໄຫລຍຸ້ຍໆຕາມທ້ອງຟ້າ ສີຄາມ ສະລັບສັບຊ້ອນກັນເປັນລາຍໆຄືເກັດເຕົ່າ, ເບິ່ງເປັນໜ້າອອນ - ຊ້ອນແທ້ງ. ນັກຮົບຜູ້ໜຸ່ມນ້ອຍກ່ວາໝູ່ສອງຄົນພາກັນຊຸຍຫລິ້ນ ຢູ່ ປາກຂຸມຄອງ, ທ້າວວິຫານ ນັກຮົບປືນຈັກຖືກບາດເຈັບໃນ ຕອນ ຂ້ອນແຈ້ງນີ້ ພາຍແຂນນັ່ງຫລຽວເບິ່ງກ້ອນເມກນ້ອຍໆພວມລອຍ - ຕາມທ້ອງຟ້າແລ້ວເວົ້າກັບໝູ່:

- ໂອ! ແມ່ເຖົ້າເຮົາເຄີຍເວົ້າວ່າ:
- ຟ້າລາຍເມັດເຕົ່າ ຍັງ ໝ ນີ້ຈະຝົນຊຸ້ນໄດ໋.
- ໂອ! ແມ່ເຖົ້າໂຕເປັນຊຸຕູນິຍົມອັນໜຶ່ງເດນໍ!
- ແໜ້ນ່າ! ບໍ່ເຊື່ອໂຕລອງຕິດຕາມເບິ່ງເນີ!

ໝົດທຸກຄົນພາກັນຫົວຂວັນນັກຮົບນ້ອຍທັງສອງນີ້ຈົນໄສ້ອິດ ໄສ້ ໂອ, ສະຫາຍບຸນເລີດກໍ່ຫົວນຳຮ່າໆ. ບັງເອີນໃນເວລານັ້ນໄດ້ຍິນ ສຽງອື້ງກ້ອງມາແຕ່ໄກໆ, ບຸນເລີດສັ່ງ:

- ຟັງ! ຟັງ! ຄືສຽງຍົນ!
- ອີ່ນາຍຍ່າເຖົ້າມັນມາຂົນເອົາລູກຫລານມັນຖືກຈັບເຊົ້າກິນ ລະບໍ່!

ຄາວໜຶ່ງ, ຈຸສັງເກດການລາຍງານສະພາບ:

- ອາໂລ, ອາໂລ! ຢູ່ທິດຕາເວັນຕົກສ່ຽງໃຕ້ມີແອຟ ໑໐໔ ຫ້າລຳ.

- ແຕ່ລະຫມູ່ກຽມຕົວສູ້ຮົບທາງອາກາດ!

ພໍຄຳສັ່ງສະຫາຍເລີດຢຸດລົງ, ຍິນກໍ່ສັກຫົວລົງ ສຽງດັງແຮງໆ ປະກົດວ່າເຈ້ຍຫູຄືຈະຈີກອອກ, ລູກບົມຕົກລົງຈົນຫູດັບມຶງ, ສະຫາຍບຸນເລີດ ແລະ ສະຫາຍທອງສະໄຫມ ປະທັບທ້າຍປືນໃສ່ບ່າ ຢ່າງແຫນ້ນໆຄອຍຖ້າຍິນສັກມາຊຸດທີສອງ, ຍິນສາມລຳຕາມຫລັງສັກລົງມາ, ສາຍຕາອັນແຫລມຄົມສະຫາຍທັງສອງໄດ້ເລັ່ງສູນປືນ ທ່ຽງເກາະໄກ, ທ່າລູກປືນພຸ່ງເປັນເລົາຂຶ້ນສູ່ເວຫາ, ພໍດີເຮືອບິນ ຄັນທີສອງປະເຊີນກັບທ່າລູກປືນທຳອິດຂອງສອງສະຫາຍ, ມັນພົ່ນຄວັນດຳອອກຕວດໆ ແລ້ວຫົວສັກລົງຟາກພູເບື້ອງຕາເວັນອອກ, ສະຫາຍບຸນເລີດແລ່ນອອກປາກຂຸມຄອງ ເພື່ອສັງເກດສະພາບການພວມຜັນແປໄປຢ່າງດຸເດືອດນີ້:

- ລະວັງ! ເຂົ້າຂຸມ!

ທັນໃດນັ້ນ, ບົ່ມນາປານແຕກຂຶ້ນ ທົ້ນໆທາງຂ້າງ, ເລີດ ລົ້ມຟຸບລົງ, ໄຟໄຫມ້ກຸບທີບ, ບໍ່ເຫັນຫົວຫນ້າຫມວດ, ສະຫາຍ ທອງສະໄຫມແລ່ນອອກປາກຂຸມ, ເຫັນສະຫາຍເລີດນອນຫມູບຢູ່ໃນ ວົງຄວັນໄຟ, ສະຫາຍໂດດເຂົ້າແບກເອົາຫົວຫນ້າຫມວດອອກຈາກອັນຕະລາຍ, ຈົກດິນພົກໃສ່ສົ້ງເສື້ອເລີດທີ່ຖືກໄຫມ້, ແລ້ວສະຫາຍ - ກອດເອົາບຸນເລີດເຂົ້າເອິກຊຸກສັ່ນ:

- ອ້າຍເລີດ! ອ້າຍເລີດ!

ແຕ່ສະຫາຍບຸນເລີດກໍບໍ່ຕື່ງ, ຫົວໃຈທອງສະໄໝຕົກວາບໄປ! ຄໍາເບື້ງກໍາມະຈອນຂອງເລີດຍັງເຕັ້ນຢູ່, ທອງສະໄໝຈັບ ສອງແຂນສະຫາຍເລີດອອກ, ເອົາການຫາຍໃຈຕາມຈັ່ງຫວະ ເຊີດຊູກະທັນຫັນຊ່ວຍຊູໃຫ້, ຄາວໜຶ່ງສະຫາຍເລີດຈຶ່ງຄ່ອຍໆຕືງຂຶ້ນ , ທອງສະໄໝທັນໃຈໃຫ່ຍບາດໜຶ່ງ ແລ້ວຊຸກສັ່ນສະຫາຍເລີດຕື່ມ:

- ອ້າຍເລີດ! ອ້າຍເລີດ!

ສຽງເວົ້າຄ່ອຍໆໄດ້ອອກມາຈາກລໍາຄໍ.

- ເອີຍ, ແມ່ນໃຜ?
- ນ້ອງນ່າ, ໄໝນ່າ, ອ້າຍເຈັບແຮງບໍ?
- ຕາ...ເຮົາບໍ່ທັນເຫັນຮຸ່ງນ່າ! ສັນຍານໃຫ້ໝູ່ທັ່ງລຸ່ມຮູ້ແດ່.

ສຽງກອງກໍດັງຂຶ້ນປືດປືງ! ປືດປືງ! ສັນຍານໃຫ້ໝູ່ຢູ່ລຸ່ມຮູ້ວ່າ ໝວດປະຈໍາເທິງປ້ອນຍັງຢູ່ໃນທ່າມີໄຊ.

ສະຫາຍບຸນເລີດຖືກສົ່ງເຂົ້າໂຮງໝໍດ້ານຮົບໃນຄືນນັ້ນຢ່າງທັນທີ.

ຂ່າວສະຫາຍເລີດຖືກບາດເຈັບນີ້ໄດ້ປ່າວປິວມາເຖິງ ສໍານັກງານອ້ອມຂ້າງສູນກາງຢ່າງໄວວາ, ເລື່ອງນ້ອຍໄດ້ຕື່ມແຖມ ຂຶ້ນກາຍເປັນເລື່ອງໃຫ່ຍ, ມີບາງຄົນເວົ້າວ່າ: ສະຫາຍບຸນເລີດ ຖືກບົມນາປານລວກໝົດໂຕ, ຕາທັງສອງເບື້ອງຖືກເສຍໝົດ. ບໍ່ດົນເລື່ອງນີ້ກໍມາຮອດຫູນາງນວນຈັນ. ຮູ້ຂ່າວນີ້ນາງຕົກສະເງີ້ ນາງຕັ້ງສະຕິ, ກັດຮິມສົບກົ້ມໜ້າເຮັດວຽກ, ເຈ້ຍມີແຖວຢ່າງຈະແຈ້ງ ແຕ່ຕົວໜັງສືກໍບໍ່ຍອມໄປຕາມແຖວ ເບື້ງແຖວໜຶ່ງກໍເກີດເປັນສອງ

ສາມແຖວຂຶ້ນ, ຢາດນ້ຳຕາແຫ່ງຄວາມຮັກບໍລິສຸດໄດ້ໂຮຍຣຳ ລົງປຽກໜົດໜ້າເອກະສານ, ນາງຮູ້ສຶກວ່າຕົນຕັ້ງສະຕິບໍ່ໄດ້ອີກແລ້ວ ນາງຍ່າງອອກໄປນອກ ເພື່ອໄຂຄວາມອຸກອັ່ງ, ຄາວໜຶ່ງ ຍ່າງເຂົ້າມາບ່ອນເຮັດວຽກ, ເຫັນທ່າທີຜິດປົກກະຕິ, ສະຫາຍຫົວໜ້າຫ້ອງການຖາມ:

- ນ້າສາວເປັນສັງມື້ນີ້ຄືຈັ່ງບໍ່ມ່ວນປານໃດ?
- ມື້ນີ້ນ້ອງຮູ້ສຶກຄືຈະບໍ່ສະບາຍໃນໂຕ, ມຶນໆຫົວແຕ່ເຊົ້າ ນີ້ ນ່າອ້າຍ.

ເຖິງວ່ານາງນວນຈັນບໍ່ສາມາດເວົ້າອອກດ້ວຍຄວາມຈິງ ແຕ່ສະຫາຍຫົວໜ້າຫ້ອງການນີ້ກໍ່ສັງເກດອອກວ່າ ອາດຈະມີ ບັນຫາໃດໜຶ່ງເກີດຂຶ້ນຈຶ່ງເຮັດໃຫ້ນາງໂສກເຫງົາ, ສະຫາຍເຕືອນນາງ:

ບໍ່ສະບາຍກໍ່ພັກຜ່ອນກ່ອນລະບໍ່ມາເອີຍ, ການປະຕິວັດຍັງຍາວນານ, ບໍ່ແມ່ນເຮັດມື້ນີ້ ມື້ອື່ນແລ້ວເປັນ. ໄປ! ໄປພັກຜ່ອນ ສາກ່ອນ.

ຕອນຄ່ຳມາປ້າແມ່ຄົວເຂົ້າໄປຖາມ:

- ເປັນຈັ່ງໃດຫລານ, ເຂົ້າປຽກມື້ນີ້ກິນໄດ້ຫວະ?
- ຂອບໃຈປ້າ, ຫລານກິນແລ້ວ.
- ກິນແລ້ວສັງບໍ່ເຫັນຮອຍຕັກນີ້?

ທ່າທີອັນນິ້ມນວນຮັກແພງຂອງປ້າ ໄດ້ເຮັດໃຫ້ນາງຮູ້ສຶກກະຕຸ້ນໃຈ ແລະ ນາງບໍ່ສາມາດປິດອຳຄວາມຈິງທີ່ນາງອຸກອັ່ງນີ້ໄດ້ ນາງໄດ້ເລົ່າສະພາບຂອງນາງສູ່ປ້າຟັງດ້ວຍຄວາມຈິງໃຈ ແລະ ເຊື່ອ

ຫມັ້ນ. ປ້າແພງສີ ນັ່ງຟັງນາງນວນຈັນເລົ່າ, ປ້າງຶກໆຫົວ ແລ້ວ ເວົ້າວ່າ:

- ເລື່ອງລາຍມັນແມ່ນແນວນີ້ເດບໍ່! ຊັ້ນດຽວນີ້ຫລານ ຈະຄິດແນວໃດຕໍ່ສະພາບເປັນໄປແນວນີ້?

- ປ້າເອີຍ ເຖິງຈະຕົກຢູ່ໃນສະພາບໃດກໍຕາມ, ຈິດໃຈຫຼານບໍ່ມີຫຍັງປ່ຽນແປງ ດຽວນີ້ສະພາບອ້າຍເລີດເປັນໄປແນວນີ້ຫລານກໍຍິ່ງສົງສານ ແລະ ຮັກແພງອ້າຍເລີດ, ຕາທັງສອງເບື້ອງ ຂອງອ້າຍເລີດໄດ້ອຸທິດແກ່ການປະຕິວັດ! ຫລານຈະເອົາຫມົດກຳລັງ ລັງກາຍ ແລະ ໃຈ ເພື່ອຊ່ວຍເຫລືອອ້າຍເລີດຈົນຕະຫລອດຊີວິດ.

ປ້າແພງສີລູບໆຫົວນາງນວນຈັນດ້ວຍຄວາມຮັກໄຄ່ ແລະ ເຫັນອົກເຫັນໃຈ. ປ້າຄິດເຫັນຄາວປ້າຍັງຫນຸ່ມ, ຊູ້ຮັກທຳອິດຂອງ ປ້າຖືກບາດເຈັບຢູ່ບັ້ນຮົບທ່າແຂກ, ຍ້ອນສະພາບຫຍຸ້ງຍາກ, ຢາ ປິ່ນປົວບໍ່ພຽງພໍ, ຊູ້ຮັກຂອງປ້າໄດ້ອຳລາຈາກປ້າໄປ ໂດຍບໍ່ມີວັນ ຈະກັບຄືນ. ປ້າເວົ້າກັບນາງນວນຈັນວ່າ:

-ຫລານດີຫລາຍ! ຫລານສົມແລ້ວວ່າເປັນແມ່ຍິງລາວແບບໃຫມ່ ປ້າອວຍພອນໃຫ້ພວກຫລານທັງສອງຈົ່ງມີຄວາມສຸກຕະຫລອດໄປ.

ສອງສາມມື້ຕໍ່ມາ ໄດ້ຮັບຂ່າວວ່າ ສະຫາຍບຸນເລີດຖືກສົ່ງ ມາເຖິງໂຮງພະຍາບານທະຫານນາຫວີດ. ຕອນແລງວັນເສົາ ນາງຂໍອະນຸມັດໄປຢາມສະຫາຍເລີດ, ນາງອອກໄປບ້ານຊອກຊື້ໄຂ່ ແລະ ຫມາກໄມ້ໄດ້ເຕັມກະຕ່າຢາງ. ຮຸ່ງເຊົ້າວັນອາທິດມື້ຕໍ່ມາ ນາງພ້ອມຫມູ່ສອງຄົນເປີດແຕ່ເຊົ້າໆ ຮອດໂຮງຫມໍນາຫວີດ.

ມາຮອດໂຮງໝໍໂອກບໍ່ດີ, ຖືກມື້ໂຮງໝໍຕິດຂັດແຮງ, ແພດຍາມປະຕູໃຫ້ຮູ້ວ່າ:

- ມື້ນີ້ໂຮງໝໍພວກເຮົາຖືກຕິດຂັດ, ຫ້າມຄົນທາງນອກ ເຂົ້າຢາມຄົນເຈັບ.

ຟັງນາງແພດນີ້ເວົ້າສຸດ, ຫົວໃຈຂອງນາງນວນຈັນຄືຈິ່ງວ່າຕີບເຂົ້າ, ນາງນັ່ງເຫວົ້າຢູ່ປາກປະຕູໂຮງໝໍຄາວໜຶ່ງ ນາງຄິດໄດ້ວິທີ, ນາງຂຽນຈົດໝາຍສະບັບໜຶ່ງສະເໜີຂໍນຄະນະຮັບຜິດ ຊອບແລະ ອະທິບາຍເຫດຜົນຢ່າງຈະແຈ້ງ. ຈິດໃຈບໍລິສຸດ ແລະ ຂາວສະອາດຂອງນາງເຮັດໃຫ້ໝົດທຸກຄົນຈຳຕ້ອງສົງສານນາງ, ໃນທີ່ສຸດ ນາງກໍໄດ້ເຂົ້າຢາມສະຫາຍບຸນເລີດ.

ນາງແພດຜູ້ໜຶ່ງໄດ້ພານາງ ນວນຈັນ ໄປເຖິງຕຽງນອນ ສະຫາຍບຸນເລີດ, ເວລານັ້ນບຸນເລີດນອນຫລັບນອນຝັນຢູ່, ນາງແພດຈະປຸກສະຫາຍບຸນເລີດ, ນາງນວນຈັນຍົກມືຂໍນຫ້າມ:

- ປະໃຫ້ເພິ່ນນອນສາກ່ອນ!

ນາງຄ່ອຍໆຍ່ອງໄປຈັບເອົາປຶ້ມນ້ອຍແດງຢອງໄວ້ເທິງ ໂຕະນ້ອຍຫົວບ່ອນນອນ ບຸນເລີດ ແລ້ວຖອຍມານັ່ງຕັ່ງແປະຕີນຕຽງ , ນາງຄ່ອຍປີດໄປແຕ່ລະໃບ, ປະກົດເຫັນເຈ້ຍນ້ອຍໆໃບໜຶ່ງໃນຖົງຫລັງພັບ, ນາງຄ່ອຍໆຖອດອອກມາເບິ່ງ, ສິ່ງທີ່ປະທັບຕານາງທຳອິດແມ່ນແຖວທີ່ຂຽນດ້ວຍນ້ຳເມິກແດງໄວ້: "ພວກເຮົາຈົ່ງປະໃຫ້ແປວໄຟແຫ່ງໄວໜຸ່ມນີ້ລຸກໄໝ້ຂຶ້ນໃນພາລະກິດປະຕິວັດອັນສະຫງ່າງາມ".

ນາງຮູ້ສຶກຕື່ນຕັນໃຈທີ່ເຫັນຈົດໝາຍຂອງຕົນໄດ້ຖືກຮັກສາໄວ້ ເປັນ

ເວລາປີກ່ວາມານີ້, ນາງອັດປື້ມໄວ້ ແລະ ຈື່ມໃສ່ຫູນາງແພດວ່າ:

- ຕາຍ! ລ່ວງສິດປະຊາທິປະໄຕຂອງເພິ່ນແລວ!

ນາງສາວທັງສອງພາກັນຫົວຂື້ນຄຸກຄິກ ສຽງນ້ອຍ ແຕ່ກໍ ຊອດໃສ່ຫູສະຫາຍບຸນເລີດ, ສະຫາຍໂງຫົວຂື້ນທັງສີຫູສີຕາ:

- ພວກນ້ອງມາສັງ?

ນາງແພດຕອບຢ່າງໄວວາ:

- ນ້ອງພາໜຸ່ມາຢາມອ້າຍ.

- ໃສ່ໜູ? ຕາຍ! ນາງນອນຈັນທວະ ມາກັບໃຜ?

- ໜຸ່ມານນຳກັນສອງຄົນ.

ເຂົາເຈົ້າຖາມຂ່າວຄາວກັນແລ້ວ ສະຫາຍບຸນເລີດສະເໜີນຳນາງພະຍາບານ:

- ໂອ້ນ້ອງ! ພວກເຮົາຂໍອອກໄປຫລິ້ນນອກເດີ່ນນີ້ໃຫ້ ສະຫວາດໃຈເທາະ?

- ໄປໄດ້ຢູ່ດອກອ້າຍ!

ທັງສາມຄົນຍ່າງຕາມກັນອອກໄປເດີ່ນຕໍ່ໜ້າໂຮງໝໍ, ນີ້ນອາກາດປອດໃສດີ, ແສງແດດຍາມເຊົ້າສິ່ງລົງມາໃສ່ເດີ່ນ, ເຮັດໃຫ້ອາກາດນີ້ອົບອຸ່ນດີ, ເຂົາເຈົ້າທັງສາມນັ່ງໂອ້ລົມກັນຄາວໜຶ່ງດ້ວຍຄວາມສະໜິດສະໜົມ. ພໍດີຢູ່ໃນໂຮງໝໍມີສຽງຄົນເອີ້ນ, ນາງແພດລາໄປ. ນາງແພດໄປແລວ ຍັງແຕ່ເຂົາເຈົ້າທັງສອງນັ່ງຖາມຂ່າວຄາວກັນ:

- ຈັ່ງໃດ, ອາການແຜຂອງເລີດຫວາງແດ່ແລວບໍ?

- ໄດ້ຫລາຍແລ້ວ, ຍັງແຕ່ຕາເບື້ອງຊ້າຍນີ້ບໍ່ແຈ້ງປານໃດ.
- ໄດ້ຍິນຂ່າວໄປພຸ້ນດີຈິ່ງວ່າເຮັ່ງແຮງເອົາແທ້.

ເຂົາທັງສອງນັ່ງນິດໄປເຫິງເຕິບ ຍ້ອນຄວາມຕື້ນຕັນໃຈເພາະຫລາຍປີແລ້ວເຂົາທັງສອງບໍ່ໄດ້ພົບໜ້າ. ມື້ນີ້ພົບກັນ ເຂົາບໍ່ ຊ່າງຈະເລົ່າອີ່ສັງກ່ອນ ແລະ ເລົ່າອີ່ສັງລຸນ ຄວາມນິດງຽບນີ້ຍິ່ງ ເຮັດໃຫ້ເຂົາທັງສອງເຂົ້າໃຈກັນດີຕື່ມ, ຄາວໜຶ່ງສະຫາຍບຸນເລີດເວົ້າຕໍ່:

- ບໍ່ນຶກ ບໍ່ຝັນວ່າ ມື້ນີ້ຈະໄດ້ພົບນວນຈັນ, ເລີດນຶກວ່າ ຈັນຈະລືມເລີດແລ້ວເດ, ເພາະປີປາຍແລ້ວບໍ່ໄດ້ຮັບຂ່າວ.
- ຈັກໃຜລືມໃຜແລ້ວ! ຢາກສົ່ງຂ່າວເຕັມທີ ແຕ່ບໍ່ຮູ້ບ່ອນ.

ນາງຢາກເວົ້າໃຫ້ເລີດຮູ້ວ່າ ເວລາໄດ້ຂ່າວເລີດຖືກບາດເຈັບນັ້ນ, ຈິດໃຈຂອງນາງຕໍ່ເລີດຄືແນວໃດ? ແຕ່ນາງບໍ່ກ້າ.

ສະຫາຍບຸນເລີດຖາມຄືນ:

- ຈົດໝາຍເລີດຝາກມາສອງສະບັບກ່ອນນີ້ ຈັນບໍ່ໄດ້ຮັບຫວະ?
- ບໍ່! ບໍ່ໄດ້ຈັກສະບັບນ່າ!

ທັງສອງເຂົາເຈົ້າພ້ອມກັນນັ່ງລົມ ທວນຄືນໃນອະດີດຄາວເປັນນັກຮຽນນຳກັນ ແລ້ວຕໍ່ໃສ່ວຽກງານສູ້ຮົບ, ວຽກງານຜະລິດ ພົນ ແລະ ອື່ນໆ ໄລຍະທີ່ຜ່ານມາ, ເລື່ອງນີ້ຕໍ່ໃສ່ເລື່ອງໃຫມ່ຄືບໍ່ ສຸດເປັນຈັກເທື່ອ. ຄວາມໂອລົມຂອງເຂົານັ້ນຍັງຢືນຢູ່ຊາຍແດນ"...ເພື່ອນນັກຮຽນເກົ່າ" ຢູ່ສະເໝີ.

ຢຸດຢູ່ຄາວໜຶ່ງ, ສະຫາຍເລີດຄິດ:



"ຖ້າບໍ່ກ້າຫານເວົ້າເທື່ອນີ້ຄືຈະບໍ່ມີໂອກາດໃດອີກ", ທີ່ສຸດສະຫາຍບຸນເລີດໃຊ້ໝົດຄວາມກ້າຫານຂອງຊາວໜຸ່ມ ຈຶ່ງເວົ້າໄດ້ , ສະຫາຍຖາມ:

- ນວນຈັນ! ເລີດມີບັນຫາໜຶ່ງຢາກເວົ້ານຳນວນຈັນແຕ່ ດົນນານແລ້ວ, ແຕ່ເລີດບໍ່ທັນກ້າເວົ້າເທື່ອ.

- ມີບັນຫາໃດຂໍເຊີນເວົ້າແມ້.

- ເລີດຢາກຂໍຖາມສະພາບຂອງຈັນ, ດຽວນີ້ເປັນແນວໃດ ? ຈັນອາດຈະໃຫ້ເລີດຮູ້ແຈ້ງໄດ້ບໍ?

- ໃນນາມເພື່ອນສະຫາຍດ້ວຍກັນ ຈັນຂໍເລົ່າສູ່ເລີດຟັງຄວາມຈິງ, ສະພາບຂອງຈັນປະຈຸບັນຍັງບໍ່ທັນມີຫຍັງທັງໝົດ.

ໄດ້ຍິນນວນຈັນເວົ້າເຖິງ "ໃນນາມເພື່ອນສະຫາຍ" ນີ້ຍິ່ງເຮັດໃຫ້ເລີດຖອຍຄືນ. ຕໍ່ໜ້າສັດຕູຜູ້ຮຸກຮານ ເລີດເປັນນັກຮົບ ຜູ້ອາດຫານທີ່ສຸດ, ຖ້າໄດ້ເຂົ້າໜ້າສະໜາມແລ້ວແມ່ນບຸກຂຶ້ນຢ່າງບໍ່ຖອຍ, ແຕ່ສຳຫລັບຕໍ່ພວກນາງສາວ ເລີດຊ້ຳພັດເປັນຄົນອ່ອນເພຍທີ່ສຸດ. ມື້ນີ້ນັ່ງຕໍ່ໜ້າ ນວນຈັນ, ນາງສາວຜູ້ດ່ຽມຄົມຄົນນີ້ຍິ່ງເຮັດໃຫ້ເລີດສົນລະວົນໃຈ, ບໍ່ຊ່າງຈະເວົ້າແນວໃດ? ພະຍາຍາມທີ່ສຸດແລ້ວເລີດຈຶ່ງບຸກເຂົ້າຜ່ານຊາຍແດນ "ເພື່ອນນັກຮຽນ"ເລີດເວົ້າ:

- ຖ້າຈັນບໍ່ທັນມີບັນຫາໃດ, ເລີດຄິດວ່າຢາກເຮັດໃຫ້ ຄວາມຮັກແພງລະຫວ່າງເຮົາທັງສອງນີ້ຂ້າມຊາຍແດນ "ເພື່ອນນັກ ຮຽນດ້ວຍກັນ", ກ້າວໄປຕື່ມກ້າວໜຶ່ງຈະໄດ້ບໍ?

ນາງນວນຈັນ ເງີຍໜ້າເບິ່ງເລີດ ຫົວຍິ້ມແລ້ວຫລຽວໄປທາງ

ຫິດຕາເວັນອອກ ສະແດງວ່າ ນາງໄດ້ພໍໃຈມາແຕ່ດົນແລ້ວ.

ສະຫາຍບຸນເລີດຖາມຕໍ່:

- ປີກາຍນີ້ອ້າຍມາປະຊຸມແຕ່ບໍ່ທັນໄປຢາມນ້ອງ, ຍ້ອນສະພາບວຽກງານຕ້ອງການດ່ວນ, ນ້ອງບໍ່ເສຍໃຈໃຫ້ອ້າຍບໍ?

ນາງແກວ່ງຫົວ ແລະ ຕອບ:

- ບໍ່ມີຫຍັງຈະເສຍໃຈດອກ ເພາະອ້າຍກໍຄາວຽກ, ນ້ອງກໍຄາວຽກ, ກົງກັນຂ້າມນ້ອງຍິ່ງພູມໃຈທີ່ໄດ້ມີເພື່ອນຊາຍຜູ້ທີ່ດີຄືອ້າຍ.

# ເພື່ອເດັກ ທີ່ຈະເກີດມາ

• ດວງຈຳປາ

▪ ເລື່ອງຈິງຂອງແພດປະຕິວັດຜູ້ອຸທິດຕົນ
ເພື່ອວຽກງານວິຊາສະເພາະ.
- ທີ່ນີ້ເຮົາຈະໄດ້ຮູ້ຈັກບາງ
ຜ່ານການເລົ່າຂອງຄົນເຈັບຜູ້ໜຶ່ງ

* ຂ້ອຍສຸດທີ່ພາກພູມໃຈ ແລະ ມີຄວາມສຸກ ທີ່ຕົ້ນປີນີ້ຂ້ອຍ ໄດ້ລູກສາວເກີດມາມີສຸຂະພາບສົມບູນດີ. ພວກເຮົາຈັດບຸນ ສູ່ຂວັນ ອອກກໍາອ່າວພິເສດແດ ເພາະການເກີດລູກຂອງຂ້ອຍເທື່ອນີ້ ນັບ ວ່າເປັນຂ່າວໃຫ່ຍ ເປັນໄຊຊະນະຂອງຂ້ອຍ ແລະ ຂອງບັນ ດາ ແພດໝໍຜູ້ທີ່ຊ່ອຍເຫລືອມາແຕ່ຕົ້ນ. ບໍ່ແມ່ນຂອງທໍາມະດາ ກ່ວາຈະ ໄດ້ອື່ນາງນ້ອຍຜູ້ໜ້າຮັກອອກມາຊົມໂລກ.

ຂ້ອຍຈື່ວ່າ ລະຫວ່າງນອນພັກຜ່ອນຢູ່ໂຮງໝໍຫລາຍໆວັນ ນັ້ນ ຂ້ອຍມີເລື່ອງຕື່ນເຕັ້ນ ເລົ່າສູ່ເພື່ອນຍິງທີ່ນອນຫ້ອງດຽວກັນຟັງ ບໍ່ ອິດບໍ່ຢາກ ກ່ຽວກັບປະສົບພະການໃນການມີລູກ ແລະ ອອກ ລູກ ຂອງຂ້ອຍ ຊຶ່ງເປັນເລື່ອງທີ່ໂດ່ງດັງຊ່າລືທົ່ວໂຮງໝໍມາແລ້ວ. ຂ້ອຍ ຍັງພໍໃຈເລົ່າຄືນ ບໍ່ວ່າຍາມໃດຢ່າງບໍ່ມີວັນເປີດໜ່າຍເປັນ.

× ×

×

- ນ້ອງອາຍຸທໍ່ໃດ ແລ້ວນໍ້?
- ຊາວແປດປີ.
- ແຕ່ງດອງມາດົນປານໃດແລ້ວ?
- ສິບປີ.
- ສິບປີ! ແຕ່ຫາກໍ່ມີລູກຜູ້ທໍາອິດ?

ຕາມໃບນໍາສົ່ງຂອງຝ່າຍພະຍາດແມ່ຍິງເພີ່ນວ່າ ນ້ອງໄດ້ ຮັບ ການປິ່ນປົວຊ່ອຍໃຫ້ມີລູກໄດ້ສໍາເລັດຜົນສົມຄາດໝາຍແລ້ວນໍ-ນໍ້..

ຂໍສະແດງຄວາມດີໃຈນຳເນີ້.

- ເຈົ້າ! ຂ້ອຍຕອບສຽງເຄືອສັ່ນ ດ້ວຍຄວາມພາກພູມໃຈຈົນສະທ້ານ.

ທ່ານຫມໍຍິງແນມເບິ່ງຫນ້າຂ້ອຍ ພໍແຕ່ແນບດຽວ ແລ້ວເພິ່ນ ກໍກົ້ມລົງອ່ານເອກະສານໃບນັ້ນອີກ ຄືວ່າສົນໃຈນຳປະຫວັດ ຄວາມເປັນມາຂອງພະຍາດຂ້ອຍເອົາແທ້ເອົາວ່າ.

ຂ້ອຍເວົ້າວ່າ: "ພະຍາດ" ແຕ່ຄວາມຈິງ ຂ້ອຍບໍ່ຊົງຄື ເປັນຄົນເຈັບຈັກຫນ່ອຍດອກ. ຂ້ອຍສຸດທີ່ຫນ້າຕາສົດໃສກ້ຽງຫມອນ ຄືຄົນດີໆ ມີແຕ່ຮ່າງຄິງເທົ່ານັ້ນ ທີ່ຢາກອ່າວຫນາແດ່ ບໍ່ລືມຄົນຫາກໍ່ມີລູກຜູ້ທຳອິດ.

ໄດ້ສາມເດືອນມາແລ້ວ ທີ່ຂ້ອຍມາພົວພັນສະເຫມີທຳການ ປິ່ນປົວຢູ່ພະແນກກວດພະຍາດແມ່ຍິງແຫ່ງນີ້. ການຕິດຕາມຂອງ ແພດຊ່ຽວຊານດ້ານພະຍາດແມ່ຍິງ ເພື່ອຊອກຮູ້ບັນຫາຕົ້ນຕໍພະຍາດຂ້ອຍຫລືເວົ້າໃຫ້ຖືກແທ້ ກໍແມ່ນພຽງຄວາມບົກພ່ອງຂອງມົດລູກ ກໍຄື ອະໄວຍະວະ ກ່ຽວກັບການຜະລິດລູກຂອງຂ້ອຍນັ້ນ ບໍ່ແມ່ນເລື່ອງຫຍຸ້ງຍາກຍາວນານແຕ່ຢ່າງໃດ. ເພິ່ນໄດ້ອະທິບາຍສູ່ຂ້ອຍຟັງວ່າ: ມັນເປັນບັນຫາທີ່ມັກພົບເຫັນເລື້ອຍໆ ໃນບັນດາແມ່ຍິງທີ່ບໍ່ມີລູກ ຫລືແມ່ຫມັນທົ່ວໆໄປ. ຢູ່ບ້ານເຮົາ ແມ່ຍິງດັ່ງກ່າວບໍ່ຄ່ອຍສົນໃຈມາໃຫ້ - ແພດກວດ ແລະ ຫາທາງຊ່ອຍ ໂດຍອ້າງເຫດຜົນອັນງົມງາຍ ແຕ່ວ່າ: ຕົນເກີດມາ ບໍ່ມີບຸນວາດສະຫນາ ເອົາແຕ່ບຸນນຳກຳ ແຕ່ງເທາະ! ຫລືບາງຄົນກໍວ່າ ອາຍນັ້ນໆ ນີ້ໆ, ເປັນແນວນັ້ນໄປ ,

ແລ້ວກໍພາກັນທຸກລະທົມອົມອື່ນ ໃນການທີ່ບໍ່ອາດສາມາດມີລູກ ໄດ້ຄື ບ້ານຄືເມືອງເພິ່ນ. ຂ້ອຍເອງກໍຢູ່ໃນຈຳພວກທີ່ວ່ານີ້ມາເປັນເວລາ ຮອດສິບປີ. ຂ້ອຍເປັນຊ່າງຫຍິບຈັກນຳການບ້ານ ຄວາມຮູ້ພໍ ແຕ່ ອ່ານອອກຂຽນໄດ້, ບໍ່ເຄີຍສົນໃຈເລື່ອງວິທະຍາສາດກ້າວໜ້າ , ບັດນີ້ ຈາກການແນະນຳຂອງເພື່ອນເຮືອນໃກ້ຄົນໜຶ່ງ ຊຶ່ງ ເປັນ ນາງແພດຢູ່ໂຮງໝໍແຫ່ງນີ້ ຂ້ອຍຈຶ່ງຕັດສິນໃຈເດັດດ່ຽວ ຢາກ ໃຫ້ ມັນຮູ້ແຈ້ງຂາວວ່າ ຈຸດອ່ອນຂອງຕົນມີຄືແນວໃດແທ້ ແລະ ບັດ ນີ້ ຂ້ອຍກໍບັນລຸເຖິງຈຸດປະສົງຄວາມມຸ່ງມາດ ປາຖະໜາ ອັນເຄີຍ - ເປັນພຽງລາງຝັນນັ້ນແລ້ວ.

- ຄວາມແນະນຳຂອງເອື້ອຍ ກໍບໍ່ມີຫຍັງຫລວງຫລາຍດອກ , ທ່ານໝໍອະທິບາຍແກ່ຂ້ອຍ ພາຍຫລັງທຳການວັດແທກກວດກາ ຄົບ ຖ້ວນ ຕາມວິທີການກວດແມ່ມານ. "ພຽງແຕ່ ນ້ອງຕ້ອງເອົາ ໃຈ ໃສ່ພິເສດຕໍ່ຕົວເອງ, ໝັ່ນມາກວດຕາມກຳນົດ ທີ່ເຮົາບົ່ງໄວ້ນີ້ , ແລະ ຖ້າມີອາການອັນໃດຜິດປົກກະຕິຕ້ອງຟ້າວມາຫາພວກເຮົາເນີ! ກໍ່ນັ້ນລະ, ບໍ່ໃຫ້ມີຫຍັງຊູກອັ່ງໃຈໄດ້ເນີ,ມີແຕ່ໃຫ້ຮູ້ວ່າ ນີ້ເປັນຂ່າວ ດີ, ເປັນເລື່ອງທີ່ໜ້າຊົມເຊີຍທີ່ສຸດໃນວົງການແພດລາວເຮົາທີ່ໄດ້ ມີໂອກາດຊ່ວຍໃຫ້ນ້ອງໄດ້ເປັນແມ່. ຕໍ່ຈາກນີ້ທັງນ້ອງທັງຝ່າຍແພດ ເຮົາ ມີໜ້າທີ່ຮ່ວມມືກັນເຮັດແນວໃດໃຫ້ລູກຂອງນ້ອງໄດ້ອອກ ມາ ແລະ ໃຫ້ຍກາໜ້າບານຄືໝູ່.

ວາຈາຂອງເອື້ອຍໝໍຄົນນັ້ນ - ດຣ.ສີສະຫວາດ ຜູ້ທີ່ຂ້ອຍພາ ຕົວເອງ ພາທ້ອງລູກຜູ້ທຳອິດ ໄປຝາກຊີວິດອິນທີນຳ - ເປັນ ດັງ

ນ້ຳທິບອາບລູບໂລມຫົວໃຈຂ້ອຍ ທີ່ເຄີຍຫວາດລະແວງຫວັ່ນໄຫວນັ້ນ ໃຫ້ກັບກາຍເປັນຊຸ່ມຊື່ນ ແລະ ເຊື່ອໝັ້ນ. ສິບປີໃນຊີວິດ ສົມລົດທີ່ ບໍ່ເຄີຍມີລູກ ແຕ່ບັດນີ້ ຂ້ອຍກໍມີ ຄືບ້ານເມືອງເພິ່ນແລ້ວ, ຂ້ອຍ ຈື່ ຈຳຮອຍຍິ້ມເທິງໃບໜ້າ ທີ່ ນິ້ມນວນ ນິ້ມຕິດຕາ, ທ່ານໝໍສີສະ ຫວາດ ຕັ້ງເປັນຄົນມີສີຣັກ ຕອບຮັບກັບຄຳເວົ້າອັນລະດົມໃຈ ຢ່າງ ເລິກເຊິ່ງຂອງເພິ່ນອີກຕື່ມ ຂ້ອຍແຮ່ງຕິດໃຈເພິ່ນແຕ່ນັ້ນມາ.

ທຸກຄັ້ງ ທີ່ຂ້ອຍມາໃຫ້ ດຣ.ສີສະຫວາດ ກວດສຸຂະພາບລູກໃນ ທ້ອງ ແລະ ກວດສຸຂະພາບຂ້ອຍເອງນຳ ຂ້ອຍກໍແຮ່ງພົບວ່າຄວາມ ເອົາໃຈໃສ່ຂອງເພິ່ນຕໍ່ຄົນເຈັບ - ແມ່ມານອື່ນໆ ກໍຄືຂ້ອຍ (ແລະ ຂ້ອຍເປັນພິເສດໃນຄວາມຮູ້ສຶກຂອງຂ້ອຍ) - ຄວາມເອົາໃຈ ໃສ່ ຂອງເພິ່ນເປັນສິ່ງຢືນຢັນຈະແຈ້ງວ່າ ເພິ່ນເປັນໝໍທີ່ຮັກວຽກ ຮັກ ງານ ເອົາຈິງເອົາຈັງແທ້ໆ.

ໃນມື້ນັດກວດທ້ອງ ພວກເຮົາແມ່ມານທັງຫລາຍມັກມາແຕ່ເຊົ້າ ເຊົ້າກ່ອນໂມງເຂົ້າການ. ຫລາຍຄົນຮອດຫອບລູກຈູງເຕົ້າມາຍ້ອນ ຄວາມຈຳເປັນ, ພາກັນມາຄອງຖ້າຢ່າງອັ່ງອໍ - ຖ້າໃຫ້ເພິ່ນກວດ ນັບວ່າເປັນຈຳນວນທີ່ໜ້າຢ້ານຢູ່ - ຄືຢ້ານວ່າ ພວກເພິ່ນຈະກວດ ບໍ່ແລ້ວໝົດ ເພາະແຕ່ລະມື້ຈຳນວນແມ່ມານຄືຈັ່ງວ່າ ເພີ່ມທະວີຂຶ້ນ ເລີຍໆ. ດຣ ສີສະຫວາດ ມັກຈະມາຮອດກ່ອນໝູ່ແພດໝໍອື່ນໆສະ ເໝີ. ແລ້ວພໍມາຮອດປັບ ເພິ່ນກໍບໍ່ຖ້າໃຫ້ຮອດເຖິງໂມງຍາມຕາມ ປະກາດເປັນທາງການໄວ້, ເພິ່ນມັກຈັດການລຳດັບຄົນເຂົ້າ ກວດ ໂລດ - ເຣັດໄວ ແຕ່ລະອຽດຖີ່ຖ້ວນ. ຂ້ອຍສັງເກດເຫັນວ່າ ຕໍ່

ແມ່ມານທີ່ມີປະຫວັດການຖືພາ ຫລື ຜູ້ທີ່ມີອາການຜິດທຳມະດາເຊັ່ນ ຂ້ອຍ, ຜູ້ທີ່ເພິ່ນສົງໄສຈະມີລູກຝາແຝດ ຫລືຍິງແກ່ແດ່ແລ້ວນັ້ນເພິ່ນ ມັກໃຊ້ເວລາສົ້ຖາມ ແລະ ຄິດເຄືອງຢູ່ດົນກ່ອນຈະປ່ອຍໃຫ້ອອກໄປ. ກັບຂ້ອຍ ເພິ່ນຈະຈູ້ຈີ້ເປັນພິເສດໃນດ້ານອາຫານການກິນ, ການ ເຣັດວຽກຫຍິບຈັກ ກໍ່ໃຫ້ຫລຸດຜ່ອນລົງແດ່, ການລະມັດລະວັງ ທຸກ ບາດກ້າວ ເພື່ອກັນບໍ່ໃຫ້ເກີດເຫດກະທົບກະເທືອນ ເພາະຢ້ານມົດ ລູກບໍ່ຢູ່ໃນສະພາບດີຮອດຮ້ອຍເປີເຊັນ ພໍທີ່ຈະຮັກສາລູກເອົາໄວ້ໄດ້ ຈົນຮອດກຳນົດອອກ. ດັ່ງນັ້ນ ຮອດຕອນເລີກການມື້ໃດ ເອື້ອຍຫມໍສີ ສະຫວາດ ກໍຈຶ່ງມັກໄດ້ພາເອົາຮ່າງກາຍທີ່ອິດອ່ອນຫລ່ອຍລ້າ ມາ ຈາກຫ້ອງກອດ. ເວລານອກຈາກນັ້ນ ເພິ່ນຍັງວົນຢູ່ນຳຫ້ອງ ອອກ ລູກອີກ ບໍ່ນັບເວັນນັບຄືນ. ຫລາຍຄົນເວົ້າໃຫ້ຂ້ອຍຟັງວ່າ ເພິ່ນເອງ ກໍມີພະຍາດປະຈຳຕົວທີ່ເປັນອຸປະສັກໃຫ້ແກ່ການເຄື່ອນໄຫວໄປມາ- ລຳບາກສົມຄວນ, ເພິ່ນມີເຫດຜົນພຽງພໍ ທີ່ຈະຖອນຕົວອອກ ຈາກ ການຢູ່ຍາມກາງຄືນ ທີ່ພະແນກປະສູດລູກນີ້ ກໍໄດ້ຢູ່, ແຕ່ເພິ່ນຜັດບໍ່ ຖອນ, ອົດສາປະຕິບັດເວນຍາມເຄັ່ງຄັດຄືຫມູ່ທຸກຄົນ. ເຫດນີ້ພວກ ແມ່ອອກລູກໃຫມ່ ໂດຍສະເພາະຜູ້ທີ່ມີ "ໂອກາດ-ວາດສະຫນາ " ໄດ້ອອກນຳເພິ່ນຈຶ່ງສະຫນິດສະຫນົມກັບເພິ່ນດີທຸກທົ່ວຫນ້າ. ເຂົາ ເວົ້າກັນວ່າ ລະຫວ່າງ ແມ່ຍິງທີ່ອອກລູກ ກັບນາງຫມໍຜູ້ເອົາ ອອກ (ນາງຜະດຸງຄັນ) ນັ້ນມີຄວາມສຳພັນພິເສດອັນຫນຶ່ງຜູກຮັດໃຫ້ມີນ້ຳ ໃຈຕໍ່ກັນ-ວ່າຊັ້ນ, ອັນນີ້ຂ້ອຍກໍເຫັນດີ ເພາະໄດ້ປະສົບມາກັບ ຕົນ ເອງ.

× ×

×

ວັນໜຶ່ງ ຂະນະທີ່ຂ້ອຍກັບມາແຕ່ຕະຫລາດນ້ອຍນຳບ້ານ , ຫິ້ວກະຕ່າຄວາມກິນທີ່ອ່າວໜັກ ຈົນແຂນລາ, ລົດສອງແຮງ ມ້ານ້ອຍກໍຈອດກຶກລົງຂ້າງຊ້າຍ ຈົນຂ້ອຍຕື່ນຍຸບ ຂ້ອຍປະຫລາດໃຈ ທີ່ຍິນສຽງເອີ້ນວ່າ "ສົມພອນ" ດັງມາຈາກຜູ້ຂັບ. ເມື່ອສ່ອງ ເບິ່ງຄັກໆກໍ່ຈຶ່ງເຫັນວ່າແມ່ນ ດຣ. ສີສະຫວາດ ນັ້ນເອງ.

- ສຳບາຍເອື້ອຍ! ຂ້ອຍຝ້າວຍໍມືນົບເພິ່ນ, ນັບແຕ່ຫຽວ ໄປກວດນຳເພິ່ນເປັນປະຈຳຕະຫລອດ ໘-໙ ເດືອນນີ້ ຂ້ອຍຮູ້ສຶກ ລັງແກວນກັບເພິ່ນ ປານຄົນເຮືອນໃກ້ກັນ ທັງບໍ່ແມ່ນວ່າ ຂ້ອຍນີ້ ຕັ້ງປາກສະແດງຕົວຕິດພັນເພິ່ນດອກ. ເບິ່ງແຕ່ເທື່ອນີ້ ເພິ່ນຫາກຈອດລົດ ລົມຂ້ອຍຖາມຂ່າວຂ້ອຍຢ່າງເປັນກັນເອງກ່ອນ. ເພິ່ນເກີນວ່າທຳຕົວເປັນເອື້ອຍເປັນນ້ອງກັບຂ້ອຍ ຈົນວ່າຂ້ອຍ ລືດທີ່ຈະສະໜິດສະໜົມກັບເພິ່ນບໍ່ໄດ້.

- ນ້ອງຫົວໜັກໂພດຕີ້ ສົມພອນ! ປະໂຫຍກເວົ້າ ຂອງເພິ່ນຕຳໜິຂ້ອຍ ແຕ່ໜ້າຕາເພິ່ນພັດຍິ້ມລະໄມ, ແນວນີ້ແລ້ວ ອັນຂ້ອຍຍອມເພິ່ນ, ຝ້າວປົງກະຕ່າລົງດິນ ເກາະຂອບປະຕູລົດເພິ່ນລົມ ຕໍ່ຈົນໝູ່ໄທບ້ານຜູ້ໜຶ່ງກາຍມາເຫັນ ກໍຫລຽວເບິ່ງຕາເຫລືອກມ້ານ, ຄົງຄຶດວ່າ ນ້ຳໜ້າສາວສົມພອນ ຊ່າງຫຍິບຈັກກາງບ້ານ ກໍດີ ມີເອື້ອຍຄົນງາມຜູ້ຂັບລົດເຕົ່ານ້ອຍ ຊຶ່ງເປັນຜູ້ດີມີຄວາມຮູ້ມາຢຸດລົມ

ນຳປານນີ້!

ຂໍ້ຕຳໜິຕໍ່ໄປຂອງເພິ່ນແມ່ນວ່າ: ຄືວ່ານ້ອງຂາດບໍ່ໄປ ກວດຕາມກຳນົດໄວ້ ແມ່ນບໍ ເດືອນແລ້ວນີ້?

ຂ້ອຍຈຳເປັນຕ້ອງຮັບສາລະພາບນຳເພິ່ນອີກຫັ້ນລະວ່າ ລືມ, ຍ້ອນຄາວຽກ...(ແກ້ຕົວໄປຕາມເລື່ອງ).

ຂໍ້ສາມຂອງເພິ່ນ: ແລ້ວເບິ່ງໜ້າຕານ້ອງຄືມາເປັນໄຄ່ງເບິ່ງມື້ດູ ເດ໋ ບວມໄດນີ້! ແລ້ວເພິ່ນກໍລົງລຶດມາສັງເກດເບິ່ງທົ່ວ ຮ່າງຂ້ອຍ ຢູ່ກະໂຕທົນທາງຫັ້ນເອງ!

× ×

×

ແລ້ວນັ້ນ ເພິ່ນນຳມາສົ່ງຂ້ອຍມາຮອດເຮືອນ, ທຳຄວາມຮູ້ຈັກກັບຜົວຂ້ອຍ ແລະ ພໍ່ແມ່ທີ່ຢູ່ນຳກັນຄອບຄົວໃຫຍ່. ທຸກຄົນດີໃຈທີ່ໄດ້ເຫັນ ດຣ.ສີສະຫວາດ ຜູ້ທີ່ຂ້ອຍເວົ້າຮອດມາຫລາຍເດືອນ..ກ່ອນຈາກໄປ ເພິ່ນສະຫລຸບວ່າ: "ນ້ອງຕ້ອງໄປກວດຢ່ຽວ ກວດສຸຂະພາບຄືນໃຫມ່ຫມົດ, ໄປນອນເຊົານີ້ໂລດເນີ້".

ຂ້ອຍຖຽງເພິ່ນວ່າ ນອນບໍ່ແມ່ນມີກວດແມ່ນມານ, ແຕ່ເພິ່ນບອກວ່າ: "ບໍ່ແມ່ນກະຕາມ ໄປຫາເອື້ອຍຢູ່ພະແນກອອກລູກຫັ້ນໂລດ. ຈະຕ້ອງເບິ່ງເປັນພິເສດ ແລະ ດ່ວນ. ນອນໃຈບໍ່ໄດ້! ອາການນ້ອງຜິດປົກກະຕິຫນ້ອຍຫນຶ່ງແລ້ວ ບໍ່ຄວນປະໄວ້, ກັນດີກວ່າແກ້". ເພິ່ນວ່າແລ້ວກໍຈາກໄປ.

ຈັ່ງຊັ້ນແລ້ວ! ຄວາມເຜີລີມຂອງຂ້ອຍ ຄິດວ່າຫນ້ອຍດຽວ- ບໍ່



ໄປກວດຕາມກຳນົດນັດໝາຍກໍເລີຍກາຍເປັນວ່າ ຂ້ອຍເປັນ ພະຍາດບວມ - ໝາກໄຂ່ຫລັງບໍ່ເຮັດວຽກປົກກະຕິ - ຕ້ອງເຂົ້າຮັບການປິ່ນປົວເປັນຄົນເຈັບ "ທີ່ໜ້າເປັນຫ່ວງ" ຕາມຄວາມທ່ານໝໍສີສະຫວາດວ່າ - ໃນເດືອນທີ່ລູກໃນທ້ອງຂ້ອຍໄດ້ ໖ ເດືອນເຄິ່ງທໍນັ້ນ. ການປິ່ນປົວຕິດຕາມຂອງແພດແມ່ນເອົາໃຈໃສ່ເຄັ່ງຄັດທີ່ສຸດ ແຕ່ຂ້ອຍພັດເປັນຄົນຄະລຳຄວາມກິນຍາກອີກ. (ຈູດອ່ອນອັນ ຮ້າຍແຮງຂອງຂ້ອຍຕື່ມ...) ອາການບວມຫລຸດລົງຊ້າເຕັມທີ. ດຣ. ສີສະຫວາດ ຜູ້ທີ່ໄດ້ຕິດຕາມອາການເຈັບຂອງຂ້ອຍຕະຫລອດມາ ບໍ່ພໍໃຈເລີຍ, ເພິ່ນຫຽວເຂົ້າຫຽວອອກ ຫຽວມາຈອບຊອມວ່າ ຂ້ອຍຈະປະຕິບັດຕາມຄຳສັ່ງ "ກິນບໍ່ໃສ່ເກືອ" ຂອງເພິ່ນນັ້ນ ໄດ້ ຢ່າງເຄັ່ງຄັດບໍ່.

ແລ້ວທັງທີ່ແຂນຂາຕີນມືຍັງບໍ່ຍຸບຄົກ ອາການເຈັບທ້ອງກໍ ເກີດຂຶ້ນ ໃນແລງວັນຖ້ວນສາມທີ່ມານອນໂຮງໝໍ - ແນວທີ່ໃຜໆກໍບົ່ງວ່າ ມັນແມ່ນເຈັບທ້ອງຈະອອກລູກ - ໝາຍວ່າ ລູກຂ້ອຍຈະອອກກ່ອນກຳນົດ! ຂ້ອຍເອງ ເວລານັ້ນ ທັງບໍ່ຮູ້ທີບ, ທັງຕົກໃຈກະວົ່ງກະເວ ຢ້ານກົວຈົນເກືອບຫົວໃຈວາຍ. ທ່ານໝໍສີສະຫວາດເອງກໍຫ່ວງໃຍ້ຂ້ອຍຈົນບໍ່ເປັນອັນຢູ່, ບໍ່ຍອມເລີກຮອດການ, ຮອດ ຜຽນອອກຍາມ ເພິ່ນກໍບໍ່ອອກ, ອໍຢູ່ຕໍ່ ເພື່ອກຳກັບນຳຂ້ອຍ ຮ່ວມກັບ - ແພດໝໍອື່ນໆທີ່ກຽມປະຕິບັດການຢູ່ພ້ອມແລ້ວ. ໃນຄວາມຮູ້ສຶກຂອງຂ້ອຍຄືຈັ່ງວ່າ ຂ້ອຍເປັນຄົນເຈັບພິເສດ - ເປັນຜູ້ທີ່ຄວນແກ່ ການເອົາໃຈໃສ່ສະເພາະກວ່າໝູ່ ໃນຈຳນວນໝູ່ທີ່ນອນຫ້ອງດຽວກັນ.

ນັບແຕ່ມື້ຂ້ອຍເຂົ້ານອນໂຮງໝໍຈົນຮອດມື້ອອກ ຂ້ອຍເຫັນ ດຣ. ສີສະຫວາດເກືອບທຸກເວລາ. ຕອນເຊົ້າ ນອກຈາກມາຢ້ຽມ ຕາມໜ້າທີ່ແລ້ວ ພາຍຫລັງທີ່ເພິ່ນປະຕິບັດໜ້າທີ່ຢ້ຽມຄົນເຈັບປະຈຳວັນຂອງເພິ່ນ ຫລື ຫວ່າງຈາກການກວດທ້ອງແມ່ມານແລ້ວ ເພິ່ນມັກແວ່ມາຫ້ອງຂ້ອຍ, ຕອນເລີກເມື່ອ ໑໘ ໂມງ ເພິ່ນກໍແວ່ມາ,ແລ້ວບາດຕອນມາການສອງໂມງ ເພິ່ນກໍຍັງແວ່ມາຈອບອີກກ່ອນ. ນັບເບິ່ງເວລາຂອງເພິ່ນໄປມາ ແລະ ກິນເຂົ້າແລ້ວ ເພິ່ນຄົງເກືອບບໍ່ໄດ້ເອນຫລັງພັກຜ່ອນ ເອົາສາເລີຍ!

ບັນດາຄະນະແພດທີ່ຮັບຜິດຊອບຫ້ອງຂ້ອຍນອນ ກໍໄດ້ເອົາ ໃຈໃສ່ຂ້ອຍເປັນກໍລະນີພິເສດຄືກັນ. ດຣ.ສີສະຫວາດ ໄດ້ເຊີນ ເອົາຄະນະອຳນວຍການ ແລະ ຜູ້ຊ່ຽວຊານມາປຶກສາ ແລະ ຊີ້ນຳຕົນ. ມະຕິຂອງຄະນະບົ່ງວ່າ: ຕ້ອງພະຍາຍາມ ລ້ອມລູກ ຊ່ອຍເອົາລູກໄວ້ ບໍ່ໃຫ້ອອກກ່ອນກຳນົດ ເພາະອີງຕາມການກວດໄລຍະມີປະກົດການມານີ້ ເດັກຍັງບໍ່ທັນແຂງແຮງພໍ. ດຣ ສີສະຫວາດນັ້ນຍາມໃດກໍອວນໜ້າແພດໝໍ ໃນການປະຕິບັດການຕໍ່ສະພາບອັນຜິດ ປົກກະຕິຂອງຂ້ອຍ ຈົນຫລາຍເທື່ອ ເຮັດໃຫ້ຂ້ອຍ ນ້ຳຕາຊຶມເບົ້າ -ປິ ຕິຍິນດີ ທີ່ເພິ່ນຫ່ວງໃຍນຳຂ້ອຍ ນຳລູກໃນທ້ອງຂອງຂ້ອຍ ໂດຍສະເພາະ!

ເຫັນແຈ້ງໃນຄວາມເອົາໃຈໃສ່ຫ່ວງໃຍຂອງບັນດາແພດ ໝໍແນວນີ້, ປະກອບກັບຄວາມເວົ້າຂອງພວກເພິ່ນທຸກຄົນ ກໍລ້ວນ ລະດົມໃຈໄດ້ດີ, ຂ້ອຍຈຶ່ງເລີ່ມມີສະພາບຈິດໃຈເຂັ້ມແຂງ ແລະ ເຊື່ອ

ຫມັ້ນຫລາຍຍ້ອນ ຈົນໃນທີ່ສຸດ ກ້າຫານເຖິງກັບປະກາດຕົວ ກຽມພ້ອມບໍ່ວ່າ ຕໍ່ຫນ້າສະພາບການໃດໆທັງຫມົດ: ລູກຈະອອກກ່ອນກຳນົດ ຫລືວ່າຈຳເປັນຈະຕ້ອງທຳການປາດອອກກໍຕາມ!

× ×

×

ຄວາມເຈັບປວດຂອງຂ້ອຍຄືວ່າຈິຮ້ອນແຮງກວ່າຫມູ່ຫມົດ ຢູ່ໃນທົ່ວພະແນກອອກລູກຂອງໂຮງຫມໍແຫ່ງນີ້ ຊຶ່ງມີເດັກເກີດໃນ ສະຖິຕິບໍ່ຕ່ຳກວ່າວັນລະສິບຄົນ. ຂ້ອຍຈື່ວ່າ ຕົວເອງເປັ່ງສຽງຈົນໂຮງຫມໍຊິແຕກ, ບໍ່ຈັກວ່າ ພໍ່-ແມ່, ຜົວ, ແລະ ແພດອີກຕັ້ງທີ່ໃດຄົນ ກໍບໍ່ອາດເວົ້າອອຍ ຫລືຊ່ອຍລະງັບຄວາມເຈັບປວດອັນເຖິງຂີດສຸດໃນຊີວິດຂອງຂ້ອຍໄດ້. ຂ້ອຍເຈັບຢູ່ ມື້ຫນຶ່ງກັບຄືນຫນຶ່ງ ແລ້ວລູກອອກ, ໂດຍທີ່ ພວກແພດກໍຄາດຄະເນບໍ່ຖືກເລີຍ. ເປັນຜູ້ຊາຍຫນາ ຄືນເຄົ້າດຽວກັບຜູ້ເປັນພໍ່ ຕິແຕ່ວ່ານ້ຳຫນັກລູກມີແຕ່ ໑,໖໔໐ ກິໂລ - ກຼາມ. ເນື້ອຫນັງຍັງບໍ່ທັນເຕັມຕື່ງຈັກດີ.

ເມື່ອຊຳລະບາດແຜໃນການຄອດແລ້ວ ແລະ ຂ້ອຍໄດ້ ກັບຄືນມານອນຢູ່ຕຽງໃນຫ້ອງພັກ ເອື້ອຍຫມໍສີສະຫວາດ ກໍຟ້າວນຳມາອື້ນຂ້ອຍໃຫ້ກຳລັງໃຈ. ສີຫນ້າຂອງເພິ່ນຍັງຫລ່າເຫລືອງດ້ວຍຄວາມວິຕົກກັງວົນ ແຕ່ແລ້ວເພິ່ນແຂງໃຈຍິ້ມນຳຂ້ອຍ ທຳທ່າເປັນຜູ້ "ຊຸກຍູ້" ຕາມເຄີຍ.

- ບໍ່ເປັນຫຍັງດອກນ້ອງ-ສົມພອນ, ລູກນ້ອງສຸຂະພາບດີ ສົມຄວນ. ພວກເຮົາລຽງໃນເຕົາອົບໄວ້ຈັກໄລຍະຫນຶ່ງກໍປອດໄພລະ.

ນ້ອງຈິ່ງນອນພັກຜ່ອນ ເຮັດໃຈໃຫ້ສະບາຍ. ຕໍ່ໄປນັ້ນເປັນ ພາລະໜ້າທີ່ຂອງພວກແພດເຮົາເອງ".

ເບິ່ງເອົາເທາະ ລູກຂ້ອຍຜູ້ນ້ຕົວໂຊກດີມະຫາສານ, ຈະເກີດຂຶ້ນມາໃນຫ້ອງໄດ້ຄືໝູ່ ກໍ່ຍ້ອນຄວາມຊ່ອຍເຫລືອຂອງໝໍ, ຄັນອອກມາແລ້ວ ກໍ່ຍັງແມ່ນໄດ້ເປັນ "ກໍລະນີພິເສດ - ເຂົ້າເຕົາອົບ" ອີກຢູ່.

ມື້ໃໝ່ມາ ເມື່ອຂ້ອຍສະບາຍໃຈຂຶ້ນແດ່ ພ້ອມທີ່ຈະຮັບຟັງຂ່າວຄາວ ກ່ຽວກັບສຸຂະພາບ "ທີ່ບໍ່ດີ" ປານໃດ ຂອງລູກ ແລະ ພາຍຫລັງ ເພິ່ນໄດ້ລຸລ່ວງຄອບຄົວຂ້ອຍຫລາຍບັນຫາ, ດຣ.ສີລະຫວາດ ໂດຍປະສານງານກັບທ່ານໝໍຊ່ຽວຊານທາງເດັກອີກທ່ານໜຶ່ງກໍໄດ້ໃຫ້ຄຳແນະນຳແກ່ຂ້ອຍຫລາຍວິທີການ ເນື່ອງຈາກລູກຊາຍຂ້ອຍນ້ຳໜັກຫລຸດມາດຕາຖານຕ່ຳສຸດຂອງທາລົກທີ່ຄວນມີຊີວິດໄດ້. ຄືຕາມປົກກະຕິ ເພິ່ນໄດ້ອະທິບາຍສູ່ຟັງວ່າ: ເດັກເກີດໃໝ່ (ຄົນອາຊີ) ຕ່ຳສຸດຄວນມີນ້ຳໜັກ ໒ ກິໂລກຣາມ ຈຶ່ງຈະລ້ຽງໄດ້ ໃຫ້ດີແທ້ ບໍ່ຄວນຫລຸດ ໒,໕ ກິໂລ, ສະເພາະລູກຊາຍຂ້ອຍນີ້ ເຖິງວ່າ ນ້ຳໜັກນ້ອຍປານນັ້ນ ແຕ່ຮ່າງຄີງແຂນຂາຍາວລື່ນໝູ່ ຜູ້ທີ່ນ້ຳໜັກໄດ້ມາດຕາຖານອີກຊ້ຳ ອັນສະແດງວ່າ ມັນກໍຈະເປັນຄົນໃຫຍ່ສູງຄື ພໍ່ເພິ່ນນັ້ນລະ!

ຂ້ອຍຮູ້ພາຍລູ້ນວ່າ ຄະນະແພດລົງຄວາມເຫັນວ່າ ເດັກບໍ່ ສົມບູນພໍທີ່ຈະລ້ຽງໄດ້. ແຕ່ຢ່າງໃດກໍ່ດີ ເດັກມັນກໍເກີດມາແລ້ວ ແລະ ມັນກໍຢາກມີຊີວິດສຸດຄວາມສາມາດຂອງມັນ. ມັນໄຫ້ສຽງດັງພໍ ສົມ

ຄວນ, ບາດທັນໃຈກໍປົກກະຕິ. ອີງໃສ່ຂ້ອຍຜູ້ເປັນແມ່ກໍ່ວ່າ ມີລູກຍາກແນ່ນອນ ຄະນະແພດຕັດສິນໃຈປະຕິບັດທຸກມາດຕາການ ເພື່ອຈະຮັກສາຊີວິດເດັກໄວ້ໃຫ້ໄດ້ ໂດຍຖືເປັນກໍລະນີພິເສດດ່ວນ.

ແລ້ວກໍຮອດບັ້ນຈະລ້ຽງທາຣົກດ້ວຍນ້ຳນົມ, ຕາມທຳມະດາສິບສອງຊົ່ວໂມງ ຫລັງຈາກເດັກເກີດ ຕ້ອງໃຫ້ກິນນົມ ແລະ ກໍແມ່ນນົມແມ່ຈຶ່ງຈະດີທີ່ສຸດ, ແຕ່ຍ້ອນແອນ້ອຍຍັງບໍ່ລືມບຸນ ຄວາມສາມາດໃນການດູດນົມຂອງມັນຈຶ່ງຮອດບໍ່ມີພໍ ໔໐% ແລະ ຢ່າວ່າແຕ່ນົມແມ່ເລີຍ - ຮອດນົມກຂອງມັນກໍຍັງດູດບໍ່ທັນໄດ້! ບັນຫາເປັນ-ຕາຍອີກຂອດໃຫມ່!

ແພດຫມໍໄດ້ຈຸ້ມຫົວໃສ່ກັນຢ່າງເອົາການເອົາງານ ເພື່ອ ຈະປ້ອນນົມແກ່ທາຣົກຜູ້ອ່ອນແອ ໂດຍໃຫ້ນາງແພດມາບີບເອົາ ນ້ຳນົມຂ້ອຍອອກໃສ່ກ້ອງສະອາດ ເພື່ອເອົາໄປໃສ່ໃນເຂັມສີດຢາ ຄ່ອຍໆສີດຢອດລົງໃຫ້ເດັກໃນເຕົາອົບນັ້ນກິນ.

ໄຮ້ຜົນອີກ! ເດັກບໍ່ສາມາດກືນຮອດນ້ຳນົມ!

ແນ່ນອນແລ້ວ ຂ່າວນີ້ແມ່ນບໍ່ໄດ້ໃຫ້ຮອດຫູຂ້ອຍພໍດີ ໃນຕອນນັ້ນ ດຣ.ສີສະຫວາດ ໄດ້ໃຊ້ຈິດຕະສາດສູງ.

ຈາກນັ້ນມະຕິແພດບົ່ງອອກມາໃຫມ່ວ່າ ແຍ່ສາຍຢາງໃສ່ ດັງເພື່ອສົ່ງນົມລົງໂດຍກົງ ເພາະເດັກບໍ່ມີແຮງດູດເທື່ອ.

ຊ້ຳພັດຮ້ອນຮອດສາຍຢາງທີ່ມີໃນໂຮງຫມໍ ມີແຕ່ຂະຫນາດ ທຳມະດາ-ມັນໃຫຍ່ກ່ວາຂະຫນາດທີ່ຕ້ອງການ ສຳລັບກໍລະນີນີ້.

ໂອ້ຍ! ລູກຂ້ອຍເກີນວ່າຜູ້ນ້ອຍ! ນ້ອຍຈົນວ່າວິທີການ ອັນໃດ

ອຸປະກອນ ທັນສະໄຫມອັນໃດ ກໍຍັງຈະບໍ່ຮັບໃຊ້ໃນການລ້ຽງ ດູລູກໄດ້!

ແຕ່ຄວາມພະຍາຍາມຂອງທ່ານຫມໍຜູ້ຮັບຜິດຊອບຫ້ອງເດັກເກີດໃຫມ່ ແລະ ດຣ.ສີສະຫວາດ ບໍ່ແມ່ນຈະຢຸດຢັ້ງຢູ່ທີ່ນັ້ນ! ພວກເພິ່ນໄດ້ໄປຄົ້ນຄວ້າຫາຢູ່ທຸກພະແນກການ ໂດຍສະເພາະຫ້ອງ ສາງຢາ ແລະ ອຸປະກອນ, ໄດ້ກວດຄົ້ນຫາບັນດາສາຍຢາງສົ່ງອາຫານ ຂະຫນາດນ້ອຍທີ່ອາດຕົກຫລົ່ນຢູ່ນຳຈອກແຈໃດຫນຶ່ງ ດົນນານມາແລ້ວ.

ຈຶ່ງ ກໍຫາກເກີດເປັນຜົນສຳເລັດແທ້! ບັງເອີນສາຍຢາງເສັ້ນນ້ອຍໆນັ້ນກໍລີ້ຊ່ອນຢູ່ແຈຫນຶ່ງ ເພາະບໍ່ເຄີຍມີໃຜຕ້ອງການມັນ ແລ້ວມັນກໍໄດ້ມາຮັບໃຊ້ສົ່ງນົມລົງໃນກະເພາະເດັກຊາຍນ້ອຍໆຜູ້ໂຊກ ດີຄືນນັ້ນ!

ແອນ້ອຍອ້ອຍຈຶ່ງໄດ້ກິນນົມ ໂດຍທີ່ລູກຮອດບໍ່ທັນຮູ້ດູດກິນ!

ແລະ ກໍຍັງອີກ...

ຍັງບັນຫານ້ຳນົມທີ່ຈະເອົາລ້ຽງ ເພິ່ນຜູ້ກ່ຽວກໍຕ້ອງແມ່ນນ້ຳນົມຂອງອ້ອຍເອງເປັນຕົ້ນຕໍ ຮອດໂມງສົ່ງນົມດີ ໖ ໂມງ ໙ ໂມງ ໑໔ ໂມງ ໘ ໂມງ ແລະ ໖ ໂມງແລງ, ດຣ.ສີສະຫວາດ ຫລືແພດຍາມຫ້ອງເດັກເກີດໃຫມ່ກໍມາຮອງເອົາອ້ອຍ ແລະ ນຳພາໄປທີ່ຫ້ອງເດັກຢູ່ຕຶກອີບ. ນາງແພດໄດ້ບີບເອົານ້ຳນົມອ້ອຍໃສ່ ເຕົ້ານົມອີບຂ້າເຊື້ອໄວ້ຮຽບຮ້ອຍແລ້ວ. ຕາມຈິດໃຈຂອງແພດເພິ່ນ ກໍຢາກໄດ້ນົມແມ່ລ້ຽງຢ່າງດຽວ ແຕ່ນ້ຳນົມອ້ອຍຊ້ຳບໍ່ມາຫລາຍ ຈຳເປັນຕ້ອງໄດ້ເອົານົມຜຸ່ນຊະນິດພິເສດ ທີ່ໂຮງຫມໍມີຢູ່ນັ້ນປະສົມ ກັນ

ເພື່ອໃຫ້ໄດ້ປະລິມານພຽງພໍ ຕາມທີ່ແອນ້ອຍຕ້ອງການ. ບັນດາ - ນາງແພດໃນຫ້ອງຮັກສາເດັກໃນເຕົາອົບ ຕ້ອງກຳກັບນຳການ ສົ່ງນົມ, ອັດຕານົມທີ່ໃຫ້ຢ່າງເຂັ້ມງວດ ແລະ ທ່ຽງກົງ ລະມັດລະວັງເປັນພິເສດສະເໜີ.

ແລ້ວທຸກຄວາມເປັນໄປທີ່ "ກ້າວໜ້າດື້ນ" ຂອງເດັກ ກໍຖືກຖ່າຍທອດມາສູ່ຂ້ອຍ ແລະ ຄອບຄົວໂດຍຕົວຂອງ ດຣ.ລີສະຫວາດ ເອງ ວັນລະຫລາຍໆເທື່ອ. ເພິ່ນລະວັງເປັນພິເສດອີກບໍ່ໃຫ້ ຂ້ອຍຮັບຟັງຄວາມເວົ້າເລື່ອລື ແລະ ຍຸແຍ່ຈາກເພື່ອນຄົນເຈັບນຳກັນບໍ່ຫຼືບຸກຄົນອື່ນໆທີ່ອາດສ້າງຄວາມບໍ່ສະຫງົບໃຈແກ່ຂ້ອຍໃນໄລຍະອັນ ວິກິດນີ້.

ຢ່າງເຂົ້າອາທິດທີສອງ, ຕາມທຳມະດາ ພາຍຫລັງທີ່ເກີດມາແລ້ວ ນ້ຳໜັກເດັກຫລຸດລົງ ແລະ ຈະກັບຂຶ້ນຄືນລື່ນເກົ່າ ນັບແຕ່ວັນທີແປດ ເປັນຕົ້ນໄປ. ແຕ່ກໍລະນີແອນ້ອຍຂ້ອຍຜັດຍັງເຫລືອ ແຕ່ ໑,໓໔໐ ກິໂລກຼາມ ອັນເປັນສະພາບທີ່ໜ້າວິຕົກກັງວົນອີກຍົກໃຫ່ມ ຜາກົດຈະແຈ້ງໃນຕອນນີ້ເອງວ່າ ການໃຫ້ນົມທາງສາຍຢາງນ້ອຍທີ່ບໍ່ຖືກຂະໜາດຄັກ ກັບທໍ່ອາຫານຂອງເດັກຕົວນ້ອຍໆນັ້ນ ເປັນພາກປະຕິບັດທີ່ບັນລຸຜົນຕາມຄາດໝາຍໄດ້ຍາກເຕັມທີ. ສາຍຢາງ ມີເທື່ອກໍຫລຸດຈາກທີ່, ຕ້ອງ "ແຍ່" ໃຫ່ມ - ຊຶ່ງການແຍ່ນີ້ ກໍຕ້ອງແມ່ນທ່ານໝໍຜູ້ຮັບຜິດຊອບແຍ່ເອງ. ແລ້ວມັນກໍເປັນໄປບໍ່ໄດ້ອີກ ທີ່ວ່າໝໍດັ່ງກ່າວຈະນັ່ງເຝົ້າເດັກ ກໍລະນີພິເສດຜູ້ນີ້ຢູ່ຕະຫລອດ ຊາວສີ່ຊົ່ວໂມງ ແລະ ທຸກໆວັນ, ເວລາເກີດອຸປະຕິເຫດຢາງ "ຫລຸດ"

ມີເຫື່ອ ເພິ່ນກໍບໍ່ຢູ່ຫັ້ນ, ນອກຈາກນີ້ ຮອດໂມງໃຫ້ນົມ ບາງ ຄັ້ງ ເດັກກໍເກີດມີອາຫານຜິດປົກກະຕິ ສະເອິ - ຮັບນົມບໍ່ໄດ້ເລີຍ... ສະຫລຸບແລ້ວ ເຖິງຈະພຽນຖະໜຸຖະໜອມເປັນພິເສດ ດັ່ງເວົ້າມາແລ້ວນັ້ນ ເດັກກໍຍັງແມ່ນວ່າ ບໍ່ກິນນົມໄດ້ ຫລືບໍ່ໄດ້ກິນນົມ ເຕັມອັດຕາທີ່ທ່ານໝໍສັ່ງແຕ່ລະມື້.

ມື້ທີ່ແອນ້ອຍມີອາຍຸໄດ້ຄົບສິບວັນ, ມັນເກີດມີອາການ ຜິດແປກໄປ. ລະບົບຫັນໃຈ ແລະ ອະໄວຍະວະທຸກພາກສ່ວນບໍ່ເດີນ ຕາມປົກກະຕິ ເຊັ່ນມີອາການແຫລ້, ຢຸດຫັນໃຈເປັນບາງເທື່ອ, ບາງຄັ້ງມັນເອຍະອອກ ແລ້ວພາຍໃນສີ່ຊົ່ວໂມງກໍເຂົ້າຂັ້ນໂຄມາ.

ເວລານັ້ນ ຂ້ອຍພວມນັ່ງໃຫ້ແພດຊ່ອຍບີບນ້ຳນົມຈະປ້ອນຢູ່ພໍດີ, ແລະ ບັນດາແພດໝໍທື່ອໄປກໍພວມຈະເລີກການຕອນທ່ຽງ. ພວກນາງແພດເອີ້ນໃສ່ກັນ ແລະ ແລ່ນເປັນສິບໆຂັ້ນ ເພື່ອຊອກຫາທ່ານໝໍຮັບຜິດຊອບຫ້ອງເດັກເກີດໃໝ່ ມາຊຸ້ນຈຳການແກ້ໄຂ. ຂ້ອຍສະຫງົບໃຈໄດ້ຢ່າງຍາກລຳບາກ ເພື່ອອົດທົນເບິ່ງພາບອັນບາດຕານັ້ນຕໍ່ໄປ - ພາບແຫ່ງຄວາມເຄັ່ງຕຶງສຸດຂີດ! ຂ້ອຍເຫັນພວກເພິ່ນຈັດຕັ້ງເຄື່ອງຊະນິດໜຶ່ງມາງວມໃສ່ດັງລູກນ້ອຍໆ ແຫລ່ງ ທີ່ເພິ່ນໂຈມອອກມາຮັບການປິ່ນປົວສຸກເສີນຢູ່ນອກເຕົາອົບ. ພວກເພິ່ນຫຸ້ມຫ້ອມໂຕະນັ້ນຢູ່ເທິງເຕີບ ແລ້ວພໍ ດຣ.ສີສະຫວາດ ອ່ວາຍໜ້າ ອອກຈາກໝູ່ແຍງມາທາງຂ້ອຍ ຂ້ອຍກໍອ່ອນໄປໝົດຄີງ - ເຂົ້າໃຈ ສີໜ້າ ແລະ ແສງຕາຂອງເພິ່ນດີ. ຂອງວ່າແອ້ນ້ອຍສຸຂະພາບບໍ່ສົມບູນ ບໍ່ແຂງແຮງພໍຈະເປັນຄົນມາແຕ່ເກີດພຸ້ນ, ພະຍາດພຽງແຕ່ ກໍ່

ຕົວ ມັນກໍຕ້ານທານບໍ່ໄດ້ເສຍແລ້ວ!

ຂ້ອຍໄຫ້ແຕ່ພໍຊຶມໆ ຕັ້ງສະຕິໄດ້ວ່າ ລູກຕາຍນີ້ ແມ່ນໂຫດສຸດວິໄສ. ເພື່ອນນອນຫ້ອງດຽວກັນ ເອົາຍັງອອກປາກວ່າ:

- ບຸນທະແມ້ ມັນຍັງທັນໃຈໄດ້ມາຮອດ ໑໐ ມື້! ເກີດມາ ບໍ່ເຄີຍເຫັນຄົນຫລອດຊີວິດຢູ່ໄດ້ກະດັດກະດໍ້! ຈັ່ງແມ່ນພວກເພິ່ນເກັ່ງນໍ້ ທ່ານຫມໍສະໄຫມນີ້! ຄົນເປັນຕາຕາຍແຕ່ເກີດ ເພິ່ນກໍຍັງ ແກ້ເອົາໄວ້ໄດ້ປານນີ້!

ແມ່ນແທ້ - ແມ່ນຄວາມເພື່ອນຜູ້ນັ້ນແຫນ້ນລະ! ຂ້ອຍເອງ - ເປັນຜູ້ໄດ້ເຫັນມາແລ້ວກັບຕາ, ໄດ້ຕິດຕາມວຽກງານຂອງແພດຫມໍໃນພະແນກນີ້ຮອດສິບວັນ-ສິບວັນທີ່ແພດຫມໍຜູ້ຮັບຜິດຊອບບໍ່ເຄີຍ ມີຍາມໄດ້ພັກຜ່ອນສະບາຍໃຈ, ສິບວັນທີ່ທຸກຄົນໄດ້ສຸມທຸກຄວາມ ສາມາດ, ໃຊ້ຢາ ແລະ ເຄື່ອງມືທີ່ທັນສະໄຫມທີ່ສຸດທີ່ພໍມີ, ແລະ ສິບວັນທີ່ແອນ້ອຍເອງກໍໄດ້ຕໍ່ສູ້ດີ້ນຣົນຢາກມີຊີວິດນຳຫມູ່ ສຸດກຳລັງແຮງຂອງມັນ!

ນ້ອຍຫມໍຜູ້ປະເສີດ ຈັບມືຂ້ອຍບີບແຮງ. ນ້ຳຕາຂອງເພິ່ນໄຫຼອອກນຳຮ່ອງແກ້ມ ທັງສອງ. ເພິ່ນເສຍດາຍຊ່ອຍຂ້ອຍເຖິງພຽງນີ້ພຸ້ນນະ? ເຫັນແນວນີ້ ຂ້ອຍເຮັດໃດ ຈະອົດສະອື້ນໄວ້ໄດ້? ແຕ່ເຊື່ອເທາະ! ຂ້ອຍໄຫ້ສະອື້ນ ບໍ່ແມ່ນຍ້ອນເສຍໃຈ ເສຍດາຍລູກ. ຂ້ອຍສະອື້ນ ພາະພູມໃຈທີ່ມີໂອກາດໄດ້ເປັນແມ່ແລ້ວ, ແລະສະອື້ນຕື້ນຕັນໃຈ ສຳນຶກຮູ້ບຸນຄຸນ ໃນຄຸນງາມຄວາມດີຂອງແພດຫມໍ ໂດຍສະເພາະຂອງທ່ານຫມໍຍິງໃຈດີຄົນນີ້ - ດຣ.ສີສະຫວາດ!

# ບ້ານເກີດ ທີ່ຮັກ

• ຈຽງພິມ

* ສາຍລົມໂຊຍພັດມາເປັນຮູດ, ເປັນຮູດ, ນຳເອົາ ຄວາມໜາວເຢັນພັດເຂົ້າມາຕ້ອງກັບຮ່າງຂອງຊາຍຄົນໜຶ່ງ ທີ່ຢູ່ໃນ ຊຸດກຳມະກອນອັນເກົ່າໆ ແລະ ຂາດໜ່ຽນ ຊຶ່ງພວມກອດເອິກຢືນເທິງໃສ່ກັບຕົ້ນໝາກພ້າວ ທີ່ເກີດຢູ່ແຄມຝັ່ງເບື້ອງຂວາຂອງແມ່ນ້ຳຂອງ ສາຍຕາຂອງເຂົາເມື່ອມອງຂ້າມໄປຝັ່ງກົງກັນຂ້າມ ຊຶ່ງສາມາດແນມເຫັນຄົນທ່ຽວທາງຈູດໆລາຍໆ, ບາງຄົນກໍຟ້າວໄປການ, ບາງຄົນກໍຟ້າວໄປນາ, ໄປຕະຫລາດ, ນ້ອງນ້ອຍກໍຟ້າວໄປຮຽນ... ລົດຕັກຊີ, ລົດເມແລ່ນສ່ວນສົນທຽວເຂົ້າໄປໃນວຽງ. ແນມ ເຫັນເຮືອຈັກແລ່ນມຸ້ງໜ້າຈາກຝັ່ງຂວາໄປຫາຝັ່ງຊ້າຍ ເພື່ອສົ່ງຄົນໂດຍສານໄປມາ. ຊາຍຄົນນັ້ນຢືນຖອນຫາຍໃຈບາດແຮງໆ ແລ້ວຈົ່ມພຶມພຳຢູ່ຜູ້ດຽວ: "ໄດ້ຕັ້ງເດືອນປາຍແລ້ວທີ່ອ້າຍຈາກນ້ອງມາ ພອນມະນີ, ນັບແຕ່ມື້ກ້າວອອກມາສູ່ບ້ານເພີ່ນ ອ້າຍບໍ່ເຄີຍນອນຫລັບມີແຕ່ຄິດຮອດຄິດເຖິງ ແລະ ເປັນຫ່ວງນຳນ້ອງ ແລະ ລູກ, ອ້າຍ ໄດ້ໄປຮັບຈ້າງຖີບສາມລໍ້ ເພື່ອເອົາເງິນມາຈ້າງຄົນຂ້າມໄປຕ້ອນນ້ອງແຕ່ອ້າຍກໍໄດ້ແຕ່ຄອຍ, ຄອຍໃຫ້ນ້ອງພາລູກຂ້າມມາຫາອ້າຍ, ປານ

ນັ້ນຍັງບໍ່ມີວີ່ແວວຂອງນ້ອງເລີຍ ຫລືວ່ານ້ອງ...ນ້ອງຖືກ...ຖືກຈັບແລ້ວ?" ເຂົາເອົາສອງຝາມືປິດຫນ້າແລ້ວຮ້ອງໄຫ້ສະອຶກ ສະອື້ນ "ບໍ່! ບໍ່ເປັນໄປໄດ້, ພອນມະນີ ນ້ອງຈະບໍ່ເປັນຫຍັງ...ພອນມະນີ!" ເຂົາຮ້ອງຂຶ້ນເຫມືອນຄົນທີ່ຢູ່ໃນຄວາມຝັນຮ້າຍ, ບ່າທັງສອງຂອງເຂົາສັ່ນສະເທືອນ ເນື່ອງຈາກອາການສະອື້ນຂອງເຂົາ ... ໂອ! ນັ້ນຄົນທັງຫລາຍເຄີຍເວົ້າກັນວ່າ: "ຜູ້ຊາຍຫລັ່ງນ້ຳ ຕາເຫມືອນດັ່ງຟ້າຫລັ່ງຝົນ".

ທັນໃດນັ້ນ ມີຊາຍສອງຄົນແລ່ນມຸ້ງຫນ້າເຂົ້າມາຫາເຂົາ, ຜູ້ຫນຶ່ງຮ້ອງໃສ່ເຂົາດ້ວຍຄວາມວິຕົກ: "ສັກ! ສັກ! ໂຕມາຢູ່ ຫຍັງນີ້, ອາກາດຫນາວປານນີ້ ຈັກຫນ່ອຍໄຂ້ມັນຊິອາລະວາດອີກແລ້ວ, ໄປເມືອນອນພັກຜ່ອນ ແລ້ວກໍກິນຢາຕື່ມ" ທະນົງສັກຕອບ "ບໍ່ , ເຮົາບໍ່ເມືອດອກສູນຜີບ້າອັນນັ້ນ, ເຮົາຊິກັບໄປຫາລູກຫາເມຍເຮົາ" ສົມກຽດເວົ້າຂຶ້ນ: "ຫມໍ່ນີ້ໂຕຢ່າເວົ້າໂລເລແມ້ ຈັກຫນ່ອຍຕຳຫຼວດໄທມັນຊິໄດ້ຍິນເຂົ້າ...ອັນຕະລາຍໄດ໋". "ແມ່ນໃຜມັນຊິເຮັດ - ຫຍັງເຮົາເຊີນມັນທະແມ໋!" ເຂົາເວົ້າດັງຂຶ້ນຈົນເຮັດໃຫ້ ວົງສະຫວັນເຕືອນໄວ້ "ເຊົາໆຢ່າຖຽງກັນເທາະ" ພໍຍ່າງເຂົ້າມາ ຮອດຫມູ່ສອງຄົນຈັບແຂນຂອງເຂົາໄວ້ ແຕ່ແລ້ວກໍຕ້ອງຕົກໃຈ ເພາະອາຍຄີງຂອງເຂົາຮ້ອນຄືໄຟ ແລະ ໃບຫນ້າຂອງທະນົງສັກພັດ ຈືດຊີດລົງ. ວົງສະຫວັນຈຶ່ງເວົ້າຕໍ່ສົມກຽດວ່າ: "ກຽດໂຕເຝົ້າຫມໍ່ລັກຢູ່ນີ້ກ່ອນເດີ ເຮົາຊິໄປຊອກລໍ້ມາຊຸກເອົາມັນກັບເມືອສູນ, ປະມັນໄວ້ຈັ່ງຊິບໍ່ໄດ້ດອກ" ເວົ້າແລ້ວເຂົາກໍຍ່າງໄປ...ສ່ວນທະນົງສັກ ຍັງ

ຄົງຂັດບໍ່ຢາກເມືອສູນ, ຈົນໃຈທີ່ສຸດສົມກຽດຕ້ອງໄດ້ໃຊ້ກົນອຸ ບາຍ ຫລອກໃຫ້ເມືອ "ສັກ! ມີຄົນຂ້າມມາອີກໄດ໋, ມາຮອດຕອນ ຂ້ອນແຈ້ງມື້ນີ້ ເມືອຖາມເຂົາເບິ່ງ ບາງເທື່ອພອນມະນີ ກໍອາດ ຈະມາ ຫລືບໍ່ກໍມີຈົດຫມາຍ..."

ສິບນາທີຕໍ່ມາ ວົງສະຫວັນ ກໍກັບມາພ້ອມຊາຍຄົນຫນຶ່ງ ກັບລໍ້ຂອງເຂົາ, ສອງສ່ຽວຫາມເອົາທະນົງສັກຂຶ້ນໃສ່ລໍ້ ແລ້ວນຳ ເມືອສູນ. ເມື່ອຮອດສູນ, ຍ້ອນໄຂ້ຂຶ້ນສູງເຮັດໃຫ້ເຂົາອ່ອນເພຍ ແລະລືມສະຕິໄປ. ເມື່ອເອົາທະນົງສັກເຂົ້າມານອນໄວ້ໃນຕູບແລະເອົາຜ້າຫົ່ມຂາດປົກໃຫ້ແລ້ວ, ວົງສະຫວັນກໍກັບອອກມາເອົາເງິນໃຫ້ຄ່າລໍ້ "ທໍ່ໃດລໍ້?" ຄົນຊຸກລໍ້ຕອບ "ຍີ່ສິບບາດ!" "ເອະ! ເປັນຫຍັງເອົາແພງແທ້?", "ກໍຄົນສິ້ນສະຕິມັນຫນັກກວ່າຄົນດີນີ້ຫວ່າ ກໍຕ້ອງແພງໄປຫນ່ອຍ", "ເອົ້າຍີ່ສິບກໍຍີ່ສິບ". ຫລັງຈາກນັ້ນວົງສະຫວັນໄດ້ສັ່ງໃຫ້ສົມກຽດເຝົ້າເບິ່ງອາການຂອງທະນົງສັກ, ສ່ວນເຂົາຈະອອກໄປຊອກຊື້ຢາມາໃຫ້ສ່ຽວ...

ຍ້ອນອາການໄຂ້ຂຶ້ນສູງ, ສົມກຽດໄດ້ເອົາຜ້າຈຸບນ້ຳເຢັນ ປົກຫນ້າຜາກໃຫ້ທະນົງສັກ, ແຕ່ອາການຂອງເຂົາກໍຍັງຄົງ ຮ້າຍແຮງຢູ່, ເຂົາທັງດິ້ນທຸລົນທຸລາຍ, ທັງຮ້ອງເພີ້ຈົ່ມໄປຕະພຶດຕະພື...

"ພອນມະນີ! ພອນມະນີ! ນ້ອງມາຫາອ້າຍແລ້ວຫວະ? ໂອ! ກີລູກພໍ່ ມາຫາພໍ່ມາ...ໂອຍ! ພວກຕຳຫລວດໄທມັນມາເອົາ ລູກຂ້ອຍໄປແລ້ວ...ສູ່ຢ່າເອົາລູກໄປ...ຢ່າ...!

"ສັກ! ໂຕເປັນຫຍັງໄປ? ທຸ່ນທ່ຽວແດ່ແມ່ສ່ຽວ, ຢ່າຄິດຫຼາຍ

ສະຫງົບຈິດໄວ້ກ່ອນ, ເອົາກິນຢານີ້ກ່ອນ, ທະນົງສັກແກ່ວງຫົວຟິດໄປມາ, ເຂົາລຸກຂຶ້ນຈະແລ່ນອອກໄປນອກຕູບ, ທັງຮ້ອງຂຶ້ນວ່າ :

"ກູບໍ່ກິນ, ກູຈະໄປເອົາລູກກູຄືນມາ...".

ສີນກຽດດຶງແຂນເຂົາໄວ້, ສອງສ່ຽວພວມແກ່ດຶງກັນຢູ່ນັ້ນ ວົງສະຫວັນກໍກັບມາພ້ອມດ້ວຍຫໍ່ຢາ ແລະ ຖົງຫມີ່ນ້ຳ.

"ເປັນແນວໃດ ກຽດ ມັນເປັນຫຍັງໄປແລ້ວ", ວົງສະຫວັນຖາມຂຶ້ນ ຣີບເອົາຢາໃຫ້ມັນກິນໄວໆ!" ທັງສອງພາກັນຊຸມເອົາຢາໃຫ້ທະນົງສັກກິນ, ເມື່ອສູ້ກັບສອງຄົນບໍ່ແພ້ ແລະ ຍ້ອນເຂົາອິດເມື່ອຍ ທະນົງສັກຈຶ່ງຍິນຍອມກິນຢາ.

ຫລັງຈາກລິດຢາໄດ້ຮັດດວຽກໄບ່ຊົ່ວໄລຍະຫນຶ່ງ, ສຽງເພີ້-ຂອງຄົນໄຂ້ກໍຄ່ອຍໆງຽບໄປ, ດວງຕາທັງຄູ່ປິດສະຫນິດ, ພາຍໃນຕູບນ້ອຍຫລັງນັ້ນຍັງຄົງໄດ້ຍິນແຕ່ສຽງລົມຫາຍໃຈ ທັ່ງເຂົ້າ ແລະ ອອກຂອງຄົນໄຂ້, ສ່ວນຊາຍທັງສອງ ຕ່າງຄົນຕ່າງກອດເຂົາ ນັ່ງເຝົ້າສ່ຽວສະຫາຍຂອງເຂົາດ້ວຍຄວາມເປັນຫ່ວງໃຍ. ຫ່າງຈາກຕູບຂອງພວກເຂົາໄປເລັກນ້ອຍ, ສຽງໂອ້-ເອ້ຂອງຄົນເມົາເຫລົ້າດັງຂຶ້ນ, ສຽງຈອກເຫລົ້າກະທົບກັນ, ສຽງໂຕະລົ້ມໂຄມຄານແລະສຽງຫວີດຮ້ອງຂອງພວກນາງນິກລາຕີ ທີ່ອາໄສກິນຕາມບາດັງຈ້ຽວຈ້າວ ຂໍຄວາມຊ່ວຍເຫລືອ "ຊ່ອຍແດ່, ຊ່ອຍແດ່, ເຂົາຊຸດຂ້ອຍ, ຊ່ອຍແດ່!" ສີນກຽດລຸກຂຶ້ນກົ້ມລົງສ່ອງອອກໄປທາງນອກ, ເຂົາແນມເຫັນຍິງສາວຄົນຫນຶ່ງພວມຖືກຊາຍຫນຸ່ມຜົມຍາວນຸ່ງຊຸດກາບອຍລາກອອກຈາກບາ ແລ້ວດຶງເຂົ້າໄປຕູບຫລັງຫນຶ່ງທີ່ຕັ້ງຢູ່ກົງກັນຂ້າມ

ສົມກຽດຈົ່ມພຶມພຳ "ມັນຊຸດກັນ, ກາງເວັນແສກໆບໍ່ຢ້ານຟ້າຜ່າຫົວບໍ່ນໍ?".ວົງສະຫວັນຕອບ "ໂຕຢ່າໄປສົນກັບເຂົາເຫາະສ່ຽວ ພວກນີ້ມັນພໍໆກັນຫັ້ນລະ! ນີ້ໂຕນັ່ງເຝົ້າຫນໍສັກເດີ ເຂົາຊິອອກໄປ ຢຽດແຂ່ງຢຽດຂາຈັກຫນ່ອຍ" ເວົ້າສຸດຄວາມໂດຍບໍ່ລໍຖ້າຄຳຕອບ ເຂົາໄດ້ຍ່າງອອກໄປຈາກຕູບແລ້ວ...

× ×

×

ຕາເວັນລົງແລງ ສີແສງຂອງພະອາທິດຄ່ອຍອ່ອນລົງຕາມລຳດັບ, ທ້ອງຟ້າເບື້ອງທິດຕາເວັນຕົກຄ່ອຍໆມືດລົງເທື່ອເລັກ ເທື່ອນ້ອຍ, ຢູ່ລຽບຕາມຝັ່ງຂວາ ແລະ ຝັ່ງຊ້າຍຂອງແມ່ນ້ຳຂອງແສງສີຕ່າງໆຈາກຫລອດເນອອນ ແລະ ດອກໄຟເລື່ມສົ່ງແສງ ຮຸ່ງແຈງ ສາດສ່ອງລົງໃສ່ຫນ້ານ້ຳຂອງ ແນມເຫັນເປັນແສງຍິບຍັບ ຍິບຍັບ.

ຂະນະນັ້ນທະນົງສັກຄ່ອຍໆມືນຕາຂຶ້ນ, ຮິມສົບຂອງເຂົາແຫ້ງ ແລະ ເຫນັງ ມຸບມິບ ມຸບມິບ. "ນ້ຳ, ຂໍນ້ຳກິນແດ່!" ສົມກຽດຟ້າວເທຍັ້ນນ້ຳໃສ່ຈອກ ແລ້ວຍໍຈອກນ້ຳຂຶ້ນແຕະໃສ່ຮິມສົບຂອງ ທະນົງສັກ ມືຊ້າຍຊ້ອນເອົາຄໍຂອງເຂົາໃຫ້ໂງຂຶ້ນ, ຄົນໄຂ ສັ່ນເຊັນ ເອົາມືທັງສອງໂຈມເອົາຈອກນ້ຳ ແລ້ວຍົກຂຶ້ນດື່ມ ເອື້ອກໆ!" ເປັນແນວໃດສັກ ໂຕໄຄແດ່ແລ້ວບໍ?"ສົມກຽດຖາມ, ເຂົາງຶກຫົວຕອບ "ເອີ! ໄຄແດ່ແລ້ວ". ເຂົາແນມເບິ່ງຫນ້າຂອງສົມກຽດ ແລ້ວສົ່ງສາຍຕາສຳຫລວດໄປພາຍໃນຕູບນ້ອຍ ຄືຈື່ງວ່າມີສິ່ງໃດສິ່ງຫນຶ່ງ ທີ່ເຂົາພວມຊອກຫາ, ແລ້ວສາຍຕາຄູ່ນັ້ນກໍເລື່ອນກັບຄືນມາສູ່ ຈຸດ

ເດີມ "ຫມໍວົງໄປໃສແລ້ວ?" ເຂົາຖາມຫາ ວົງສະຫວັນ. "ວົງ ອອກໄປຊອກຢາ ແລະ ອາຫານມາໃຫ້ໂຕກິນ ບໍ່ຕ້ອງເປັນ ຫ່ວງ ມັນດອກ ຈັກຫນ່ອຍຄືງຈະກັບມາ ນອນພັກຜ່ອນໃຫ້ຫລາຍ" ສິນ ກຽດເວົ້າບໍ່ທັນສຸດຄວາມ ວົງສະຫວັນ ກໍລອດເຂົ້າມາໃນຕູບພ້ອມ ທັງເວົ້າຂຶ້ນວ່າ:

"ເອົາ! ຢາກຳລັງໃຈຂອງຫມໍສັກມາຮອດແລ້ວ"

ເຂົາທັງເວົ້າທັງຈັບຊອງຈົດຫມາຍສະບັບຫນຶ່ງສົ່ງໃຫ້ ທະນົງ ສັກ, ສິນກຽດຖາມ:

"ຈ.ຫມ ມາແຕ່ໃສວົງ?"

"ອາວກໍ ຈ.ຫມ ຈາກສຸດທີ່ຮັກຂອງມັນທັ້ນລະບໍ້!"

ສິນກຽດແປກໃຈຖາມຕໍ່:

"ແມ່ນໃຜມາອິກຫືວົງ?"

"ພໍ່ແມ່ຂອງພວກຢູ່ສຸ້ມນີ້ລະ ເອົາມາຢາມລູກເຕົ້າ ເຮົາເອງ ກໍບໍ່ຮູ້ຈື້, ຊິແມ່ນໃຜກະຢາເທາະຢ່າສູ່ຖາມ ໃຫ້ຫມໍສັກອ່ານ ຈ.ຫມ ດີກວ່າ".

ວຽງຈັນ, ວັນທີ...ເດືອນ...ປີ....

ອ້າຍສັກສຸດທີ່ຮັກ ແລະ ເປັນຫວ່ງຂອງນ້ອງ!

ກ່ອນອື່ນ ນ້ອງຫວັງວ່າອ້າຍສະບາຍດີ ແລະ ຄືງຈະບໍ່ແປກ ໃຈທີ່ໄດ້ຮັບພຽງແຕ່ ຈ.ຫມ ແລະ ບໍ່ເຫັນນ້ອງກັບລູກ.ເຖິງ ຢ່າງ ໃດກໍດີ ນ້ອງ ແລະ ລູກຍັງຄືງສະບາຍດີ, ຫມູ່ຮູ້ ແລະ ການ ຈັດ ຕັ້ງໄດ້ເອົາໃຈໃສ່ເບິ່ງແຍງຊ່ອຍເຫລືອນ້ອງຕະຫລອດມາ ຂໍອ້າຍ

ຢ່າໄດ້ເປັນຫ່ວງ.

ນັບແຕ່ນີ້ອ້າຍຈາກນ້ອງມາ, ນ້ອງເອງມີຄວາມວິຕົກ ນຳອ້າຍເປັນຢ່າງຍິ່ງ ເຫດໃດອ້າຍຈຶ່ງມາຕັດສິນໃຈສົ້ນເອົາແທ້ ແລະຮອດບໍ່ເປີກສາຫາລືນຳນ້ອງຈັກຄວາມເລີຍ. ອ້າຍສັກເອີຍ! ອ້າຍລືມແລ້ວບໍ? ຄຳໝັ້ນສັນຍາທີ່ໄດ້ເວົ້ານຳນ້ອງ ອ້າຍເຄີຍເວົ້າວ່າ: "ອ້າຍຈະບໍ່ໜີຈາກບ້ານເກີດເມືອງນອນ, ຈະຄຽງບ່າຄຽງ ໄຫລ່ກັບນ້ອງບູລະນະ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ທີ່ໜຸ່ມນ້ອຍຂອງພວກເຮົາໃຫ້ຈະເລີນເຕີບໃຫຍ່ ເຂັ້ມແຂງ, ຈະຮ່ວມສຸກຮ່ວມທຸກກັບພັກ ແລະ ປະຊາຊົນລາວ, ບ່ອນໃດ ມີນ້ອງບ່ອນນັ້ນຕ້ອງມີອ້າຍ". ຄຳເວົ້າຂອງອ້າຍເມື່ອສອງປີກ່ອນນີ້ມັນຍັງຄົງກ້ອງຢູ່ໃນມັນສະໝອງຂອງນ້ອງຕະຫລອດມາ. ຍ້ອນຄຳເວົ້າດັ່ງກ່າວນັ້ນ ນ້ອງຈຶ່ງໄດ້ແບ່ງປັນເອົາຄວາມຮັກທີ່ມີຕໍ່ຊາດ ມາມອບໃຫ້ແກ່ອ້າຍຊາຍຮັກຜູ້ຮ່ວມອຸດົມຄະຕິ... ແຕ່ມາຮອດນີ້ອ້າຍ ພັດລືມຄຳເວົ້າອັນນັ້ນແລ້ວ, ບ່ອນທີ່ນ້ອງຢູ່ອ້າຍພັດເອົາຕົວ ຫລົບໜີຈາກແລ້ວ ມາຫາບ່ອນທີ່ບໍ່ມີນ້ອງ. ຈະໃຫ້ນ້ອງເຂົ້າໃຈ ອ້າຍແນວໃດເດນໍ? ອ້າຍສັກເອີຍ! ອ້າຍໄດ້ພາຕົວໜີຈາກເພື່ອນ ຮ່ວມອຸດົມຄະຕິຂອງອ້າຍ ໜີຈາກປະເທດຊາດອັນແສນຮັກຂອງຕົນ. ມາດຽວນີ້ອ້າຍພັດຢາກໃຫ້ນ້ອງນີ້ກາຍເປັນຄົນທໍລະຍົດຕໍ່ຊາດຄືກັນ ກັບອ້າຍ, ອ້າຍສັກ! ນ້ອງບໍ່ສາມາດຈະເຮັດແນວນັ້ນໄດ້, ບໍ່ສາມາດຈະທໍລະຍົດຕໍ່ອຸດົມຄະຕິຂອງຕົນ. ຈ.ໝ ທີ່ອ້າຍຂຽນເມື່ອ ຫານ້ອງນັ້ນ, ນ້ອງໄດ້ຮັບແລ້ວ, ແຕ່ນ້ອງບໍ່ສາມາດຈະປະຕິບັດ ຕາມ

ຄຳແນະນຳຂອງອ້າຍໄດ້, ຂໍອ້າຍຈົ່ງຢຸດຕິຄວາມຝັນຂອງອ້າຍ ໄວ້ພຽງເທົ່ານີ້, ຈິດໃຈຂອງນ້ອງ ອຸດົມການຂອງນ້ອງບໍ່ມີວັນຈະປ່ຽນແປງໄດ້ເລີຍ. ສ່ວນລູກຊາຍນ້ອຍຂອງພວກເຮົາກໍຈະເປັນຜູ້ ສືບທອດອຸດົມຄະຕິທີ່ພໍ່ມັນໄດ້ຝາກໄວ້ນຳແມ່ຂອງມັນເມື່ອ ໘ ປີກອນນີ້. ອ້າຍສັກສຸດທີ່ຮັກຂອງນ້ອງ! ອ້າຍຄວນຈະສຳນຶກຄືນຄວາມ ເວົ້າຂອງອ້າຍ ມັນຍັງບໍ່ທັນສວຍເກີນໄປທີ່ອ້າຍຈະກັບຄືນມາເປັນພົນລະເມືອງຜູ້ທີ່ດີຂອງຊາດ, ເປັນຜົວທີ່ດີຂອງເມຍ ແລະ ເປັນພໍ່ຜູ້ ປະເສີດຂອງລູກ. ນະໂຍບາຍຂອງພັກ ແລະ ລັດເຮົາ ຍາມໃດ ກໍພ້ອມແລ້ວທີ່ຈະອະໄພໂທດໃຫ້ແກ່ຜູ້ທີ່ສຳນຶກໃນຄວາມຜິດໄດ້, ຍາມໃດກໍກຽມພ້ອມອ້າແຂນຕ້ອນຮັບເອົາຜູ້ທີ່ເປັນພົນລະເມືອງທີ່ຈະຕ່າວຫນ້າຄືນມາຫາປະເທດຊາດເຫມືອນດັ່ງແມ່ຜູ້ປະເສີດທີ່ອ້າແຂນອອກຮັບການກັບຕ່າວຂອງລູກໄວ້ໃນຊວງອົກ.

ທ້າຍສຸດນີ້ ນ້ອງຂໍອວຍພອນແດ່ອ້າຍຈົ່ງມີສຸຂະພາບ ເຂັ້ມແຂງ ແລະ ຈົ່ງມີຄວາມຕັດສິນໃຈໃຫ້ສູງ ເພື່ອກັບຄືນເມືອຫາ ປະເທດຊາດ ແລະ ເພື່ອນຮ່ວມອຸດົມຄະຕິອັນນີ້ຂອງອ້າຍ.

ຮັກ ແລະ ຫ່ວງ!

ຈາກນ້ອງ: ພອນມະນີ.

ມືທີ່ຈັບ ຈ.ຫມ ນັ້ນສັ່ນເຊັນປັ່ງຕົກລົງຂ້າງຫມອນ ແລ້ວນ້ຳໃສໃສ່ອຸ່ນໆກໍຄ່ອຍຍ້ອຍລົງຈາກເບົ້າຕາທັງສອງຂອງທະນົງສັກ. ເພື່ອນຂອງເຂົາທັງສອງຄົນພາກັນງຶງ ແລະ ສົນໃຈຕໍ່ ຈ.ຫມ ສະບັບນັ້ນ.

"ພອນມະນີຂຽນມາວ່າແນວໃດແດ່ສັກ?"

ວົງສະຫວັນຖາມຂຶ້ນດ້ວຍຄວາມສົນໃຈ ແລະ ຈັບເອົາ ຈ.ຫມ ຈາກມືຂອງທະນົງສັກຂຶ້ນມາອ່ານໂດຍເຈົ້າຂອງເຂົາບໍ່ໄດ້ ຂືນໃຈແຕ່ຢ່າງໃດເລີຍ. ຄົນທັງສອງຜັດປ່ຽນກັນອ່ານ ຈ.ຫມ. ເມື່ອອ່ານແລ້ວຕ່າງກໍຖອນຫາຍໃຈບາດແຮງໆ ແລ້ວກໍປ່ອຍໃຫ້ ກະແສແນວຄິດຂອງໃຜລາວກະຈັດກະຈາຍໄປຢ່າງບໍ່ມີຈຸດທີ່ຫມາຍ...ບັນຍາກາດພາຍໃນຕູບນ້ອຍງຽບລົງຊົ່ວໄລຍະຫນຶ່ງ ແຕ່ທາງ ເບື້ອງນອກພຸ້ນ ສຽງເສບເຕັ້ນຈັ່ງຫວະດົດສະໂກໃຫມ່ໆ ຮ້ອນໆ ໃນສູນ "ຂ້ອຍຂ້າ" ນັ້ນຍັງຄົງກ້ອງລອດເຂົ້າມາຕາມປ່ອງຜາທີ່ ຂາດຫຽນມາກະທົບໃສ່ກັບເຈ້ຍຫູຂອງຄົນທັງສາມຈົນແສບແກ້ວຫູ ເຊິ່ງ ແຕ່ກ່ອນສຽງເພງນີ້ດັງຄາວໃດ ເຂົາທັງສາມຈະຢູ່ບໍ່ໄດ້ ກິນບໍ່ເປັນຖ້າຫາກບໍ່ໄປຕາມການດູດດຶງຂອງສຽງເພງນັ້ນ, ແຕ່ໃນເວລານີ້ພວກເຂົາບໍ່ພຽງແຕ່ຈະບໍ່ໃຫ້ຄວາມສົນໃຈແກ່ມັນ ກົງກັນຂ້າມ ສຽງເພງນັ້ນຊ້ຳກາຍເປັນສຽງທີ່ລົບກວນປະສາດຂອງພວກເຂົາ. ສົມກຽດຈົ່ມຂຶ້ນຜູ້ດຽວ:

"ຈັກມັນເສບຕາຍຫາມັນຫຍັງບໍ?"

ແລ້ວຕ່າງຄົນກໍຕ່າງງຽບໄປ...ຂະນະນັ້ນເຂົາທັງສາມບໍ່ມີໃຜຈະສາມາດຢັ່ງເລິກເຖິງຈິດໃຈຂອງໃຜໄດ້, ເມື່ອເຫັນບັນຍາກາດງຽບໄປແນວນັ້ນ ວົງສະຫວັນ ທົນອຶດອັດໃຈບໍ່ໄດ້ ຈຶ່ງເປັນຜູ້ ທຳລາຍຄວາມງຽບຂຶ້ນກ່ອນຫມູ່.

"ແລ້ວໂຕຈະຄິດແນວໃດລະສັກ?"

ທະນົງສັກສັ່ນຫົວແລ້ວຕອບຂຶ້ນລອຍໆວ່າ:



"ເຮົາເອງກໍບໍ່ຮູ້ຈັກຈະຄິດແນວໃດເທື່ອ ພວມຕໍ່ສູ້ແນວຄິດ ຕົນເອງຢູ່. ເຖິງຢ່າງໃດກໍດີ ຄວາມເວົ້າຂອງພອນມະນີ ແມ່ນ ຖືກຕ້ອງຫມົດເຮົາບໍ່ຖຽງ. ນາງຄິດຖືກແລ້ວທີ່ບໍ່ມານຳເຮົາ, ນາງມີອຸດົມຄະຕິອັນສູງສົ່ງ ເຊິ່ງຫາຍາກທີ່ສຸດ ຈາກຍິງສາວທີ່ລະບອບ ລາເມືອງຂຶ້ນປະໄວ້". ວົງສະຫວັນອົດບໍ່ໄດ້ເລີຍຖາມຕື່ມອີກ:

"ຊັ້ນ..ຫມາຍຄວາມວ່າໂຕຈະກັບຄືນບ້ານເກີດ?"

"ເຮົາຍັງບໍ່ທັນຕອບໂຕໄດ້ເທື່ອວ່າລະຫວ່າງທາງສອງເສັ້ນເຮົາຄວນຈະເລືອກເອົາເສັ້ນໃດ? ໄປທາງຫນ້າໂຊກຊະຕາ ຂອງເຮົາກໍຈະບໍ່ມີຫຍັງແຕກຕ່າງກັບສະພາບຂອງເຮົາໃນປະຈຸບັນ, ຖ້າເຮົາຍັງຢູ່ນຳພອນມະນີ ນາງຄົງຈະບໍ່ປ່ອຍປະໃຫ້ເຮົາຕ້ອງເປັນໄປ ຄືແນວນີ້". ເຂົາເວົ້າດ້ວຍຄວາມເຊື່ອຫມັ້ນຕໍ່ສີພັນລະຍາ ຂອງເຂົາພໍເວົ້າສຸດຄວາມ ເຂົາກໍຄ່ອຍໆຫລັບຕາລົງເຫມືອນດັ່ງຢາກ ເຕືອນໃຫ້ຄົນທັງສອງຮູ້ວ່າ: "ຂ້ອຍຕ້ອງການພັກຜ່ອນ". ທັງສອງ ແນມສົບຕາກັນ ແລະ ຕ່າງກໍເຂົ້າໃຈເຖິງຄວາມຮູ້ສຶກຂອງກັນ. ເຂົາຄ່ອຍໆພາກັນຍ່ຽດນອນລົງຄຽງຂ້າງຂອງທະນົງສັກ ແທນທີ່ເຂົາຈະພາກັນອອກໄປສຳລານໃຈຕາມປົກກະຕິ, ແຕ່ມື້ນີ້ເຂົາທັງສອງ ພັດພາກັນ ເປັນຄົນຜູ້ "ຮູ້ຄວາມ". ລາຕີການຄ່ອຍໆຄືບຄານເຂົ້າມາ ສຽງເຣຣາ, ສຽງເສບເຕີນເອັນຊຸກຄ່ອຍໆມິດງຽບໄປ ເນື່ອງ - ຈາກຄວາມອ່ອນເພຍ ແລະ ລົດເຫລົ້າວິດສະກີ, ມູ້ນດີ... ໄດ້ເປົ່ງລັດສະຫມີຂອງມັນ. ອາກາດໃນຍາມເດິກໄດ້ກະຈາຍ ຄວາມຫນາວລົງມາ, ເນື່ອງຈາກພິດໄຂ້ໄດ້ຊ່ວາງໄປແລ້ວ ທະນົງສັກ ຮູ້

ສຶກຫນາວຕໍ່ ອາຍຫນອກທີ່ພັດລອດເຂົ້າມາໃນຕູບ, ເຂົາ ພິກ ຕົວ ແລ້ວຄ່ອຍໆລຸກຂຶ້ນຂີດໄຟເຍື່ອງເບິ່ງໂມງຢູ່ແຂນ..."ໂອ! ພໍດີ ໘ ໂມງຂ້ອນແຈ້ງ". ເຂົາຄ່ອຍຍ່ອງໄປເອົາເສື້ອກັນລົມສີຂຽວ ຂຶ້ນມາ ຫ້ອຍຢູ່ຂ້າງຟາມານຸ່ງ. ເຖິງວ່າການເຄື່ອນໄຫວນັ້ນຈະມີຄວາມລະມັດລະວັງ ແລະ ແຜ່ວເບົາປານໃດກໍຕາມ, ແຕ່ຍ້ອນຄວາມ ງຽບສະຫງັດ ແລະ ເນື່ອງຈາກພາກັນນອນບໍ່ຫລັບ ຍ້ອນການຕໍ່ສູ້ ແນວຄິດຮ້ອຍອັນພັນແນວທີ່ເກີດຂຶ້ນໃນມັນສະຫມອງຂອງຄົນທັງສອງ. ດັ່ງນັ້ນ ເມື່ອມີການເຄື່ອນໄຫວຂອງບຸກຄົນໃດຫນຶ່ງໃນນັ້ນຈຶ່ງເຮັດ ໃຫ້ສອງຄົນທີ່ນອນເອົາມືກ່າຍຫນ້າຜາກຢູ່ນັ້ນຈຶ່ງຄ່ອຍໆມືນຕາຂຶ້ນ ... ແລ້ວທັນໃດກໍເຫັນຮ່າງຂອງທະນົງສັກຈະກົ້ມລອດຕູບນ້ອຍອອກ ໄປທາງນອກ, ວົງສະຫວັນຜູດລຸກຂຶ້ນໄປຄວາເອົາມືຂອງເຂົາດຶງ ກັບມາ:

"ສັກ! ໂຕຈະອອກໄປໃສເດິກດື່ນປານນີ້ແລ້ວ, ໂຕຮູ້ບໍ່ວ່າອາກາດທາງນອກມັນຫນາວປານໃດ?"

"ງື...ງື....ງື...ຢ່າປາກດັງຫລາຍແມ້ວົງ!"

ເຂົາຟ້າວງຸປາກເຕືອນສຽງຂອງເຂົາໃຫ້ຜ່ອນສຽງລົງ ແລ້ວກໍກັບມານັ່ງລົງຂ້າງໆວົງສະຫວັນ ເຊິ່ງໃນເວລານັ້ນສົມກຽດ ກໍບໍ່ຍອມນອນຕໍ່ໄປອີກ ເຂົາຈຶ່ງເຂົ້າມານັ່ງຮ່ວມວົງສົນທະນາກັນ ຢ່າງງຽບໆ ເຊິ່ງຢູ່ທາງນອກບໍ່ມີໃຜຈະສາມາດຮູ້ເຫັນສະພາບພາຍໃນຕູບນ້ອຍຂອງພວກເຂົາ...

ສາມເງົາດຳແລ່ນຜ່ານເງົາມືດຂອງຄືນນີ້ແຮມ ໑໔ ຄ່ຳ ຂອງ

ເດືອນຍີ່ ແລະ ພວມເລັດລອດອອກຈາກສູນ "ກັກຂັງ" ໄປຕາມເສັ້ນທາງລັດມຸ້ງໜ້າໄປສູ່ແຄມຂອງ. ມັນຊ່າງເປັນໂອກາດ ດີໃຫ້ແກ່ເຂົາທັງສາມ ເພາະພວກຄົນຍາມຕ່າງກໍນອນຫລັບຈົມປົ້ງ ຍ້ອນລິດເຫລົ້າ ຄົງໄດ້ຍິນແຕ່ສຽງໂກນກົກກາກ ກົກກາກທີ່ດັງລອດອອກມາຈາກຕູບຍາມ ແຕ່ເຖິງປານນັ້ນຄົນທັງສາມກໍໄດ້ມີຄວາມ ລະມັດລະວັງຫລາຍທີ່ສຸດ ເພາະຖ້າຫາກພາດ...ມັນໝາຍເຖິງຂັ້ນເອົາຊີວິດແລກ, ທັງສາມແລ່ນໄປດ້ວຍຕີນເປົ່າ ເພື່ອຮັບປະກັນ ການເຄື່ອນໄຫວຂອງພວກເຂົາ...

ໄລຍະແຕ່ສູນມາຮອດແຄມຂອງ ແມ່ນປອດໄພດີ, ແຕ່ເມື່ອມາເຖິງແຄມຂອງ ສິ່ງທີ່ບໍ່ຄາດຝັນກໍເກີດຂຶ້ນ, ເຮັດໃຫ້ເຂົາທັງ ສາມຕ້ອງຢຸດສະງັກ. ເງົາດຳຄືມືອັນໜຶ່ງພວມຟູ່ຢູ່ກາງນ້ຳ ແລະຄ່ອຍຄ່ອຍໄຫລລ່ອງລົງມາຕາມກະແສນ້ຳຂອງ, ມັນຄ່ອຍໆເຄື່ອນ ມາເຄື່ງກັບບ່ອນທີ່ຄົນທັງສາມພວມຢຸດຢູ່ນັ້ນ, ເຂົາຕ່າງຄົນຕ່າງກັ້ນໃຈແລະ ບໍ່ເໜັງຕີງ ເໝືອນດັ່ງຢ້ານສຽງຫາຍໃຈຂອງເຂົາທຳລາຍຄວາມງຽບສະງັດຂອງລາຕີການ ເຊິ່ງຈະພາໃຫ້ມີການຜິດສັງເກດຂອງພວກ ນ.ປ.ຂ. ທະນົງສັກຄິດໃນໃຈ: "ຖ້າແມ່ນຄົນນີ້ ເພັງຄົງມີຫວັງໄປຢ້ຽມຍົມພິບານແລ້ວ. ພວກບານັ້ນມັນກໍຫລັກສົມຄວນ ບໍ່ຕິດຈັກແລ່ນ, ດ້ານໜຶ່ງກໍປະຢັດນ້ຳມັນ, ດ້ານສອງແມ່ນຖ້າມີ ຄົນລັກຂ້າມຟາກ ພວກມັນກໍຈະຈັບໄດ້ທັນທີ ໂດຍທີ່ຝ່າຍກົງກັນຂ້າມ ບໍ່ທັນຮູ້ສຶກຕົວ, ພວກເຮົາກໍຄືກັນ ຖ້າບໍ່ມີສະຕິແດ່ກໍຄົງຈະເສັດມັນໄປລະ". ລໍຖ້າໃຫ້ເຮືອ ນ.ປ.ຂ ໄຫລລົງໄປດົນເຕີບ ພວກເຂົາຈຶ່ງ

ພາກັນກຽມຈະລົງນ້ຳ ແຕ່ສົມກຽດຟ້າວຫ້າມໄວ້ກ່ອນ "ຢ່າຟ້າວໄປດຽວນີ້, ຖ້າລົງໄປແມ່ນມີຫວັງແຈບ ພວກເຮົາບໍ່ທັນຈະໄປ ຮອດກາງວັງດອກ ເຮືອຂອງມັນຈະຕ້ອງກັບມາຄືນ ລໍຖ້າໃຫ້ມັນກັບເມືອຄ້າຍກ່ອນ ແລ້ວຈຶ່ງອອກເດີນທາງ" ເວົ້າບໍ່ທັນສຸດຄວາມ, ສຽງເຮືອ ນ.ປ.ຂ ກໍດັງກະຫຶ່ມແລ່ນຕັດກະແສນ້ຳຂຶ້ນ...ແລ້ວທັນ ໃດນັ້ນເຫມືອນດັ່ງເຂົາໄດ້ນັດກັນໄວ້ກ່ອນ ທັງສາມລົ້ມຕົວລົງນອນແລະຄ່ອຍໆກົ້ງເຂົ້າໄປຫາພຸ່ມໄມ້ຢູ່ຂ້າງທາງ, ແຕ່ໂຊກບໍ່ເຂົ້າຂ້າງ, ພໍດີໄປຖືກກັບພຸ່ມຫມາກຕຳແຍ ຂົນມັນເຖືອໃສ່ຜິວ ບ່ອນຜ້າຂາດສ້ອຍນັ້ນ ເຮັດໃຫ້ພວກເຂົາທັງສາມ ທັງແສບທັງຄັນ ແຕ່ກໍກັດແຂ້ວ ອົດເອົາ ເພາະຄວາມຢ້ານຕາຍຫລາຍກ່ວາຢ້ານເຈັບ. ແສງໄຟຂອງເຮືອ ນ.ປ.ຂ ເຍືອງລຽບໄປຕາມແຄມຝັ່ງຂອງຮຸ່ງແຈ້ງໄປທົ່ວບໍລິເວນນັ້ນ ແລ້ວຄ່ອຍຫຍັບໃກ້ເຂົ້າມາ ເຂົ້າມາ... ເຂົາທັງ ສາມກັ້ນໃຈນ້ອຍ ໃຈໃຫຍ່ ເຫມືອນດັ່ງຢ້ານລົມຫາຍໃຈຈະເຮັດໃຫ້ ພຸ່ມໄມ້ທີ່ເຂົາລີ້ຊ່ອນຢູ່ນັ້ນເຫນັງຕີງ...ແລ້ວພວກເຂົາກໍຖອນໃຈ ທົ່ງອອກມາບາດແຮງໆ ເມື່ອເຫັນເຮືອ ນ.ປ.ຂ ແລ່ນຂຶ້ນເມືອເຫນືອພຸ້ນ...ບໍ່ມີໃຜນັດໃຜ ເມື່ອລໍຖ້າຊົ່ວໄລຍະຫນຶ່ງ ແລະ ແນ່ໃຈ ວ່າເຮືອຈະບໍ່ກັບມາອີກແລ້ວ ເຂົາທັງສາມກໍຄ່ອຍໆຢ່ອນຕົວລົງສູ່ ລຳທ້ານ ພ້ອມດ້ວຍປໍບຢາງຊຸແຮງຂອງແຕ່ລະຄົນ ແລະ ພາກັນ ມຸ້ງຫນ້າໄປສູ່ຝັ່ງຊ້າຍຂອງແມນ້ຳຂອງ...

ຢູ່ທີ່ຫ້ອງສຸກເສີນຂອງໂຮງພະຍາບານມະໂຫສິດ, ມີທັງ ແພດຊັ້ນສູງ, ຊັ້ນກາງ ແລະ ຊັ້ນຕົ້ນທີ່ຢູ່ໃນຊຸດສີຂາວປະມານ ໔-໕ຄົນ

ພວມຢືນຢູ່ອ້ອມຂ້າງຕຽງຄົນເຈັບທີ່ເປັນຊາຍຄົນຫນຶ່ງອາຍຸ ປະມານ ໓໐ ຫາ ໓໑ ປີ, ແຕ່ຍ້ອນຄວາມອິດເມື່ອຍ, ຍ້ອນອາການໄຂ້ທຳລາຍສຸຂະພາບຂອງເຂົາ ແລະ ຍ້ອນບໍ່ໄດ້ແຖຫນວດເຄົາມາຫລາຍມື້ຫລາຍວັນແລ້ວ ດັ່ງນັ້ນຈຶ່ງເຮັດໃຫ້ແກ້ມທັງສອງຂອງເຂົາໂອກ - ເຂົ້າ, ຫນ່ວຍຕາທັງຄູ່ໂກນລົງແນມເບິ່ງຄືຜູ້ມີອາຍຸ ໔໐ ປີຂຶ້ນເມືອ ແລ້ວຢູ່ຂ້າງຕຽງຂອງເຂົາມີຫລັກຫ້ອຍແກ້ວເຊໂຣມທີ່ພວມສົ່ງເຂົ້າສູ່ຮ່າງກາຍຂອງເຂົາ, ເຂົານອນຫລັບຢູ່ທີ່ນີ້ມາໄດ້ສາມມື້ສາມຄືນ - ແລ້ວ. ຫ່າງຈາກຕຽງຂອງເຂົາໄປ ປະມານ ໓-໔ ກ້າວ, ຍິງຄົນຫນຶ່ງອາຍຸປະມານ ໘໔ ປີ ຜິວສີດອກສະເດື່ອ, ນາງນຸ່ງເສື້ອສີຟ້າຈາງ ແລະ ສິ້ນມີຕີນໄຫມແສ່ວສີຟ້າແກ່, ນາງມີໃບຫນ້າ ບອບບາງຮູບໄຂ່, ຄິ້ວບາງກິ່ງ, ດັງຄົມ ໃນຕາດຳເຕັມໄປດ້ວຍຄວາມເຊື່ອຫມັ້ນ, ນາງຫວີຜົມຖືກເປຍແລ້ວມ້ວນຂຶ້ນຫນີບໄວ້ ເຊິ່ງ ຮັບເຂົ້າກັບໃບຫນ້າຂອງນາງ ເຮັດໃຫ້ຜູ້ເບິ່ງແນມເຫັນແລ້ວງາມແບບລຽບໆ, ນາງພວມນັ່ງເຊັດນ້ຳຕາຢູ່ຢ່າງງຽບໆ.

ຫລັງຈາກໄດ້ກວດກາເບິ່ງອາການຂອງຄົນເຈັບແລ້ວ, ແພດຜູ້ສູງອາຍຸຄົນຫນຶ່ງກໍ່ຍ່າງເຂົ້າມາຫານາງ ແລ້ວຖອນຫາຍໃຈ ບາດຫນັກໆ ພ້ອມທັງເວົ້າຂຶ້ນດ້ວຍນ້ຳສຽງອັນຫນັກແຫນ້ນວ່າ:

"ເອົາລະນາງເອີຍ! ເຈົ້າຢ່າເປັນຫ່ວງນຳລາວຫລາຍ,ພວກເຮົາເຊື່ອວ່າ ຜົວຂອງເຈົ້າຈະບໍ່ເປັນອັນຕະລາຍດອກ, ລືມມັນສາເລື່ອງທີ່ຜ່ານມາ, ດຽວນີ້ຜົວຂອງເຈົ້າລາວຮູ້ສຶກກິນແຫນງແລ້ວ , ເຂົາຈຶ່ງສົ່ງຄວາມຕາຍກັບຄືນມາບ້ານເກີດ ແລະ ມາຫາເຈົ້າ".

ທັນໃດນັ້ນສຽງເຄາະປະຕູດັງຂຶ້ນ ແພດໄຂຕູອອກໄປສ່ອງເບິ່ງ ແລ້ວສົ່ງສຽງໄປເຕືອນຜູ້ຄົນທີ່ມາເຄາະຕູນັ້ນ.

"ຄົນເຈັບຍັງບໍ່ທັນຮູ້ເນື້ອຄິງ, ຫ້າມຢ້ຽມ!"

ເຂົາພວມຈະອັດຕູ ຊາຍຄົນໜຶ່ງທີ່ມາລໍຖ້າຢູ່ນອກນັ້ນກໍດຶງປະຕູໄວ້ ແລ້ວເວົ້າຕໍ່ແພດວ່າ:

"ຂ້ອນໃຫ້ຂໍ ພົບນາງພອນມະນີ ພັນລະຍາຂອງຄົນເຈັບແດ່"

ພໍໄດ້ຍິນສຽງ ພອນມະນີ ກໍຟ້າວລຸກອອກໄປຫາຜູ້ທີ່ຕ້ອງ ການພົບ...

ນາງຢຸດຢືນແນມເບິ່ງໜ້າຂອງຊາຍສອງຄົນທີ່ມາຂໍພົບ ນາງດ້ວຍຄວາມດີໃຈ ແລະ ນ້ອຍໃຈປົນເຈືອກັນ.

"ອ້າຍວົງ! ອ້າຍກຽດ! ເປັນແນວໃດຄືຫລົກໜ້າຫລົກຕາ ບໍ່ໄປຮອດເຮືອນນ້ອງ?"

ນາງເວົ້າຍິກເຕດຍິກພົ້ນຂຶ້ນມາອ້າງອີງ.

"ຢ່າຟ້າວຕຳນິຕິຕຽນພວກອ້າຍເທື່ອພອນມະນີໄປນັ່ງກ່ອນແລ້ວຈຶ່ງຈະເວົ້າສູ່ຟັງ".

ເມື່ອທັງສາມຄົນມານັ່ງຕັ່ງເປັນທີ່ຮຽບຮ້ອຍແລ້ວ ວົງສະຫວັນເຊິ່ງເປັນຜູ້ຊ່າງເວົ້າຊ່າງຈາກໍຄ່ອຍໆເລົ່າເຫດການທັງໝົດທີ່ຜ່ານມາສູ່ພອນມະນີ ທີ່ນັ່ງສະຫງົບຮັບຟັງເຫດການດ້ວຍຫົວໃຈທີ່ຕື່ນເຕັ້ນ ສຸດທ້າຍ ວົງສະຫວັນກໍໄດ້ກ່າວສະຫລຸບຂຶ້ນວ່າ:

"...ພໍມາຮອດຝັ່ງບ້ານເຮົາ, ຟ້າກໍໄດ້ສະຫວ່າງແລ້ວ, ໜໍ່ສັກໄດ້ໝົດສະຕິໄປ ຍ້ອນພິດໄຂ້ອາລະວາດ ແລະ ຖືກແຊ່ນ້ຳດົນ.

ເວລານັ້ນທັງສອງພວກອ້າຍບໍ່ຈັກແນວຊິເຮັດເລີຍ ປະໃຫ້ໜໍ່ ກຽດ ນັ່ງເຝົ້າໜໍ່ສັກຢູ່ແຄມນໍ້າ, ສ່ວນອ້າຍເອງໄດ້ແລ່ນຂຶ້ນເມືອແຈ້ງຕົວ ນຳອຳນາດການປົກຄອງ ແລະ ຮອງຂໍຄວາມຊ່ວຍເຫລືອໃຫ້ ເອົາ ຄົນເຈັບສົ່ງມາໂຮງໝໍດ່ວນ. ຕາມຫລັກການຂອງມັນ ທັງໝົດ - ຕ້ອງຖືກກັກຕົວ ເພື່ອສອບສວນ ແລະ ສຶກສາອົບຮົມກ່ອນຈຶ່ງສົ່ງກັບ ບ້ານໃຜລາວ, ແຕ່ຍ້ອນອຳນາດການປົກຄອງຂອງພວກເຮົາມີຄວາມ ເປັນທຳແທ້ ເມື່ອເຫັນອາການຂອງໜໍ່ສັກຮ້າຍແຮງດີແນວນັ້ນ ກໍ ເລີຍນຳຕົວສົ່ງໂຮງພະຍາບານດ່ວນ. ສ່ວນອ້າຍກັບໜໍ່ກຽດ ແມ່ນ ຖືກກັກຕົວໄວ້ຊົ່ວຄາວ ເພື່ອສືບສວນ ແລະ ສຶກສາອົບຮົມ, ເມື່ອ ເຫັນວ່າພວກອ້າຍກັບມາດ້ວຍຈິດໃຈບໍລິສຸດຕໍ່ຊາດ ທາງອຳນາດ - ການປົກຄອງກໍໄດ້ສົ່ງຂ່າວເມືອຫາຄອບຄົວໃຫ້ມາຮັບເອົາພວກອ້າຍ ກັບບ້ານ. ພໍມາຮອດເຮືອນກໍຖືກແມ່ເທດເອົາສະກັນໜຶ່ງ, ພວກ ອ້າຍກໍບໍ່ກ້າຖຽງເພິ່ນ, ຫລັງຈາກນັ້ນພວກອ້າຍກໍຟ້າວມານີ້ລະ , ເພາະຮ້ອນໃຈເປັນຫ່ວງໜໍ່ສັກ, ສ່ວນນ້ອງເດ ເຮັດໃດຈຶ່ງຮູ້ຂ່າວ. ນາງຕອບ: "ຂະນະອຳນາດການປົກຄອງເພິ່ນໄປສົ່ງຂ່າວໃຫ້ນັ້ນອງ ຈັກເຮັດໃດເພິ່ນຈຶ່ງຮູ້ເຮືອນນ້ອງບຸ?. ສົມກຽດເຊິ່ງເປັນຜູ້ນັ່ງ ມິດ ແຕ່ດົນແລ້ວເລີຍເວົ້າຂຶ້ນວ່າ:

"ອ້າຍນີ້ແລ້ວເປັນຜູ້ຈົດທີ່ຢູ່ຂອງນ້ອງໃຫ້ອຳນາດການປົກຄອງ"

ຂະນະນັ້ນປະຕູຫ້ອງສຸກເສີນກໍຄ່ອຍໆແງ້ມອອກ, ນາງແພດຄົນ ໜຶ່ງຍ່າງອອກມາ ແລ້ວເວົ້າຂຶ້ນວ່າ:

"ຄົນເຈັບຮູ້ເມື່ອຄືງແລ້ວ ແລະ ຕ້ອງການພົບເອື້ອຍພອນມະ

ນີ້!".

ນາງລືມຂໍຕືອນຳຊາຍທັງສອງ ຟ້າວຍ່າງເຂົ້າໄປໃນຫ້ອງທັນທີ ຢູ່ເທິງຕຽງຄົນເຈັບນອນມືນຕາແນມເບິ່ງອ້ອມຫ້ອງດ້ວຍຄວາມ ຕື່ນເຕັ້ນ, ເຂົາແນມເຫັນແພດແຕ່ລະຄົນ ກໍແນມເບິ່ງເຂົາດ້ວຍ ໃບໜ້າຍິ້ມແຍ້ມ, ເຂົາຄ່ອຍໆຍິ້ມຕອບ ແລະ ພຶມພຳອອກມາ:

"...ຂອບໃຈນຳພວກສະຫາຍແພດ"

ແພດຜູ້ສູງອາຍຸຕອບຕາງທຸກຄົນ:

"ບໍ່ເປັນຫຍັງດອກສະຫາຍ ເມື່ອໃດສະຫາຍຫາກຍັງຢູ່ ດິນລາວ, ສະຫາຍຈະໄດ້ຮັບການຕ້ອນຮັບຈາກແພດແນວນີ້ ຕະຫລອດໄປ..."

ພອນມະນີກ້າວເຂົ້າມາໃນຫ້ອງດ້ວຍໃບໜ້າຕື່ນເຕັ້ນ, ພວກແພດພາກັນຫລີກທາງໃຫ້ນາງ. ນາງຢຸດຢືນຢູ່ຂ້າງຕຽງຂອງທະນົງສັກ "ອ້າຍສັກ! ອ້າຍສັກຂອງນ້ອງ!"

"ພອນມະນີ!". ເຂົາຈະໂຢ້ລຸກຂຶ້ນ ແຕ່ພອນມະນີໄດ້ຫ້າມເຂົາໄວ້:

"ອ້າຍຢ່າຟ້າວລຸກ, ເຊໂຣມຍັງບໍ່ທັນໝົດ".

ເຂົານອນລົງຄືເກົ່າ ແລະ ໃຊ້ມືເບື້ອງໜຶ່ງຂຶກກຳເອົາມືຂອງພອນມະນີໄວ້, ແພດແນມເຫັນສົບຕາກັນແລ້ວສົ່ງຮອຍຍິ້ມນ້ອຍໆ.- ເປັນສັນຍາເຕືອນກັນໃຫ້ຄ່ອຍໆທະຍອຍອອກໄປຈາກຫ້ອງ...ເຂົາທັງສອງບີບມືກັນໄວ້ແໜ້ນເໝືອນຢາກລະບາຍຄວາມຮູ້ສຶກ ນຶກຄິດທີ່ໄດ້ຂັງໄວ້ມາເປັນເວລາໜຶ່ງ ເຊິ່ງເຂົາທັງສອງຮູ້ສຶກວ່າ ມັນດົນ

ແຜນດິນສຳຫລັບພວກເຂົາ. ທະນົງສັກເວົ້າຂຶ້ນ:

"ພອນມະນີນ້ອງຢ່າຫນີຈາກຂ້າງຂອງອ້າຍເນີ! ຢ່າປ່ອຍ ໃຫ້ອ້າຍຢູ່ຄົນດຽວເນີ".

"ອ້າຍສັກ! ນ້ອງຈະບໍ່ຫນີຈາກອ້າຍໄປໃສດອກ, ສາມມື້ສາມຄືນທີ່ຜ່ານມານ້ອງຍັງຢູ່ຄຽງຂ້າງອ້າຍຕະຫລອດມາ..."

"ຂອບໃຈນ້ອງພອນມະນີ, ນ້ອງບໍ່ຄຽດໃຫ້ອ້າຍບໍ? ຜ່ານມາອ້າຍໄດ້ຜິດໄປແລ້ວ,ຂໍນ້ອງຈົ່ງໃຫ້ອະໄພແກ່ອ້າຍ, ແຕ່ນີ້ຕໍ່ໄປອ້າຍຈະບໍ່ຫນີຈາກນ້ອງໄປໃສອີກແລ້ວ, ອ້າຍຈະຢູ່ເປັນພົນລະເມືອງ ດີຂອງຊາດ, ຈະເປັນຜົວທີ່ດີຂອງນ້ອງ ແລະ ຈະເປັນພໍ່ທີ່ ປະເສີດຂອງລູກ, ພອນມະນີ! ອ້າຍຈະບໍ່ໃຫ້ປະຫວັດສາດຕ້ອງ ຊ້ຳຮອຍ ນ້ອງເຊື່ອອ້າຍບໍ່?".

ນາງເອົາມືອີກເບື້ອງຫນຶ່ງເສີຍຜົມຂຶ້ນໃຫ້ເຂົາ ແລ້ວລູບ ລົງຕາມແກ້ມຂອງເຂົາ ພ້ອມທັງເວົ້າຂຶ້ນວ່າ:

"ນ້ອງໃຫ້ອະໄພແກ່ອ້າຍສະເຫມີ, ອ້າຍສັກ ລືມມັນເຖີດ ຝັນຮ້າຍທີ່ຜ່ານມາ...ແນວທາງນະໂຍບາຍຂອງພັກຍັງໄຂ ເສັ້ນທາງຊີວິດອັນສົດຊື່ນໃຫ້ແກ່ພວກເຮົາຕະຫຼອດໄປ.

# ດອກໄມ້ບ້ານນາ

• *ມາລາສະຫວັນ*

* ນະທີ່ນີ້ຈະແລເຫັນທ້ອງທົ່ງທີ່ຍາວຢຽດໄປຈອດຂອບຟ້າ, ຟ້າທີ່ມີແສງແດດພຽງເລັກນ້ອຍເພາະເຝື້ອເລື່ອນເຄື່ອນເຂົ້າມາແທນທີ່, ອາກາດເຢັນສະບາຍ ລົມເຢັນໂຊຍພັດມາເປັນຄັ້ງຄາວ, ເບື້ອງໜ້າແນມເຫັນລິບໆພູ້ມຊາວນາກຸ່ມໜຶ່ງກຳລັງກົ້ມໆເງີຍໆ ຕໍ່ໜ້າວຽກຂອງຕົນ. ແມ່ນແລ້ວ! ພວກເຂົາເຈົ້າແມ່ນສະມາຊິກ ສະຫະກອນກະເສດທີ່ຫາກໍ່ຕັ້ງຂຶ້ນໃໝ່ຂອງບ້ານນາແຫ່ງນີ້. ຜົນ ສຳເລັດອັນນີ້ໄດ້ເຮັດໃຫ້ບ້ານນາມີໃບໜ້າໃໝ່ທີ່ສົດໃສ, ເບີກບານ ມ່ວນຊື່ນ, ຫັນປ່ຽນຈາກແບບວິທີການຜະລິດເກົ່າຫລ້າຫລັງເອກະເທດກະແຈກກະຈາຍນັ້ນຢ່າງສິ້ນເຊີງ.

ນາງກຳລັງແນມເບິ່ງທ້ອງທົ່ງນາທີ່ຖືກຫ້ອມໂອມເຂົ້າຢູ່ໃນ ສະ

ຫະກອນຢ່າງພາກພູມໃຈໄດ້ຢ່າງເຕັມທີ່ ເພາະນາງກໍມີສ່ວນ ໃນການສ້າງສະຫະກອນນີ້ຂຶ້ນມາດ້ວຍຄວາມຍາກລຳບາກ ເພື່ອນພໍ່ຈະຄິດອອກບໍ່ວ່ານາງແມ່ນໃຜ? ນາງກໍຄືລູກຊາວນາຄົນໜຶ່ງຄືກັນ ກັບລູກຊາວນາທົ່ວໄປທີ່ມີພາລະໜ້າທີ່ປະຈຳວັນຫຍຸ້ງຍາກລົ້ນຄວນ.

"ດອກໄມ້" ຄືຊື່ຂອງນາງ, ນາງເປັນລູກຂອງພໍ່ຕູ້ພັນ ແມ່ຕູ້ສີ, ມີນ້ອງຮ່ວມກັນ ໔ ຄົນ, ນາງເປັນລູກຜູ້ທຳອິດ ປີນີ້ນາງມີອາຍຸໄດ້ ໑໙ ປີພໍດີ, ເປັນແມ່ຍິງຜູ້ທີ່ພຽບພ້ອມທາງດ້ານຄຸນສົມບັດກິລິຍາ , ມາລະຍາດຄຽມຄົມ, ເວົ້າຈາອ່ອນຫວານສຸພາບຮຽບຮ້ອຍດີ,ນອກຈາກສິ່ງດັ່ງກ່າວແລ້ວ ນາງຍັງເປັນຜູ້ທີ່ມີຄວາມສາມາດທັງຫ້າວຫັນເຂັ້ມແຂງໃນດ້ານການອອກແຮງງານບໍ່ວ່າວຽກງານສ່ວນລວມ ກໍຄືວຽກພາຍໃນຄອບຄົວກໍລ້ວນແຕ່ແມ່ນນາງເປັນຜູ້ແບກຫາບ.

ຕົກມາລະດູບົວລະບັດເຂົ້ານາ, ບາງທ້ອງຖິ່ນກໍແມ່ນຂົນຝຸ່ນໃສ່ນາ...ສ່ວນສະຫະກອນບ້ານຂອງນາງແລ້ວ ແມ່ນກຳລັງເສຍຫຍ້າຄົ້ນຕົມ ສ້ອມແປງຄັນນາ ແລະ ຮົ້ວຮາວຢ່າງເປັນຂະບວນຫ້າວຫັນທຸກໆເຊົ້າກ່ອນຕາເວັນບໍ່ທັນພົ້ນຂອບຟ້າ, ຜູ້ເປັນຫົວໜ້າ ຫລືຮອງຈຸຜະລິດຕ່າງໆກໍມັກເອີ້ນກັນໄປນາເປັນແຊວງປານເອີ້ນກັນໄປເອົາບຸນວັດ. ສຳລັບນາງດອກໄມ້ແຕ່ລະມື້ນາງຕ້ອງໄດ້ຕື່ນແຕ່ເດິກ ລຸກແຕ່ເຊົ້າໜຶ້ງເຂົ້າ ແຕ່ງກິນ ກຽມໄປນາ ເພື່ອໃຫ້ທັນກັບຊາວບ້ານ, ນາງເອງກໍເປັນຜູ້ຮອງຜູ້ອຳນວຍການຂອງສະຫະກອນອີກ ເຊິ່ງໃນຕົວຈິງແລ້ວ ວຽກງານນາງເປັນຜູ້ເຮັດທັງໝົດບໍ່ວ່າ ວຽກງານວິທີຈັດຕັ້ງປະຕິບັດ, ຄຸ້ມຄອງແຮງງານ ຍ້ອນນາງມຸ້ງເຮັດແຕ່ ວຽກ

ງານຈົນເຮັດໃຫ້ນາງບໍ່ຄິດຮອດວຽກສ່ວນຕົວ. ຊາຍຫນຸ່ມຫລາຍຄົນສົນໃຈ ແລະ ມັກຈະຕັ້ງບັນຫາເປັນຫຍັງ? ຍ້ອນສາຍເຫດອັນໃດ? ນາງຈຶ່ງບໍ່ສົນໃຈເລື່ອງຄູ່ຮັກ, ຄູ່ຫມັ້ນຄືຍິງສາວອື່ນໆ. ບໍ່ແມ່ນນາງເປັນຄົນຂີ້ຮ້າຍດອກ ໃຜເຫັນກໍ່ຕິດໃຈ, ບ່າວພະນັກງານຫລາຍຄົນກໍ່ສົນໃຈຢາກຂໍຮັກ, ບາງຄົນຈົນເຂົ້າເຖິງພໍ່ແມ່ ແຕ່ກໍ່ມິດງຽບ , ເບິ່ງແລ້ວຄືຈິ່ງວ່າ ນາງບໍ່ສົນໃຈຕໍ່ບັນຫານີ້ເລີຍ.

ຕອນເຊົ້າຂອງວັນໃຫມ່ ນາງກໍ່ກຽມໄປເສັຍຫຍ້ານາກະ ເສດສູມ, ບັນຍາກາດໃນທົ່ງນາຂະນະນີ້ໄດ້ຟົດຟື້ນໄປດ້ວຍສຽງຂັບງື່ມ, ລຳຜູ້ໄທ ຕົ່ງຫວາຍ, ສຽງເພງທົ່ງນາແຊງບ້ານນ້ອງ ແລະອື່ນໆ. ນາງວິໄລ ຊຶ່ງເປັນຫມູ່ເພື່ອນຂອງນາງ ດອກໄມ້ ມາແຕ່ຄາວ ຍັງເປັນເດັກນ້ອຍ,ຕອນເຂົ້າໂຮງຮຽນກໍ່ຮຽນຢູ່ຫ້ອງດຽວກັນ ເຂົາທັງສອງຮັກແພງກັນຫລາຍ ຈົນວ່າຫມາກກ້ວຍຫນ່ວຍຫນຶ່ງ ຫລື ສໍ ດ່ຳເສັ້ນຫນຶ່ງກໍ່ຫັກເຄິ່ງປັນກັນ, ດ້ານນິດໄສໃຈຄໍແນວຄິດຈິດໃຈເກືອບເວົ້າໄດ້ວ່າ ເປັນຄົນຜູ້ດຽວ. ເມື່ອເຫັນນາງດອກໄມ້ນັ້ນມີ ຄວາມກ້າວຫນ້າທາງດ້ານວຽກງານ ແລະ ເປັນທີ່ຮັກແພງຂອງພີ່ນ້ອງ - ພາຍໃນບ້ານ, ນາງວິໄລເອງກໍ່ມີຄວາມຮູ້ສຶກດີໃຈແທນຫມູ່ ແລະ ຕົວນາງເອງກໍ່ພະຍາຍາມຮ່ຳຮຽນເອົາແບບຢ່າງອັນດີ ທັງຊ່ວຍເຫລືອຊຸກຍູ້ນາງດອກໄມ້. ກົງກັນຂ້າມນາງແກ້ວໃຈ ເພື່ອນ ຮຸ່ນຮາວຄາວດຽວກັນນັ້ນຊ້ຳກັບເກີດມີຄວາມຄຽດຂົມຕໍ່ນາງດອກໄມ້ , ເມື່ອເຫັນນາງຖືກຮັກແພງຈາກຄົນທັງຫລາຍ ໂດຍສະເພາະ ພວກອ້າຍບ່າວທີ່ສ່ວນຫລາຍໃຫ້ຄວາມເພິ່ງພໍໃຈ ແລະ ສົນໃຈຕໍ່ດອກໄມ້



ແລະ ເຫດນີ້ເອງໄດ້ສ້າງຄວາມບໍ່ພໍໃຈແກ່ ແກ້ວໃຈ ເພື່ອນຍິງ ຜູ້ມັກສະແຫວງຫາກ່ຽວກັບເລື່ອງບ່າວສາວບໍ່ເລີກບໍ່ແລ້ວ, ສະນັ້ນເວລາໃດ ແກ້ວໃຈກໍມັກແຂ່ງດີແຂ່ງເດັ່ນກັບນາງ ແລະ ຕັ້ງຕົວເປັນຄູ່ປໍລະປັກ ໂດຍທີ່ນາງດອກໄມ້ເອງບໍ່ເຄີຍໄດ້ຄິດຊ້ຳໄປ.

ແລະ ໃນເວລາທີ່ດອກໄມ້ກັບວິໄລກຳລັງເສຍຫຍ້ານາ ຄຽງຂ້າງກັນໄປ ກໍໄດ້ສົນທະນາຖອດຖອນຈຸດດີ ຈຸດອ່ອນ ໃນການປະຕິບັດວຽກງານ ແລະ ກໍກ້າວເຂົ້າຕໍ່ໃສ່ເລື່ອງນີ້ ເລື່ອງໃຫມ່.

- ມີເລື່ອງບໍ່ສູ້ຈະດີເກີດຂຶ້ນ...ເປັນຄວາມຈິງແທ້ບໍ? ວິໄລເວົ້າຂຶ້ນ.

ດອກໄມ້ຖອນຫາຍໃຈໃຫຍ່ ແລະ ຕອບວ່າ:

-ແມ່ນແທ້! ແຕ່ຢ່າຟ້າວເວົ້າໄປໃສ່ ດຽວນີ້ລຸງຄຳໃບ ແລະ ທາງຄະນະກຳລັງຫາທາງແກ້ໄຂຢູ່.

ບໍ່ດົນຂ່າວຮ້າຍອັນນີ້ກໍກະຈາຍໄປທົ່ວທ້ອງທົ່ງນາ, ສຽງແຊວຟດສະຫນັ່ນຂຶ້ນທຸກຄົນພາກັນຢຸດສະງັກວຽກຊົ່ວຄາວ ຕ່າງກໍຖົກຖຽງກັນຂຶ້ນ ເຫັນແນວນັ້ນດອກໄມ້ຈຶ່ງເວົ້າຂຶ້ນດ້ວຍສຽງສຸພາບ:

- ຂໍໃຫ້ພໍ່ແມ່ພີ່ນ້ອງທຸກຄົນຈົ່ງປະຕິບັດຫນ້າທີ່ຕາມປົກກະຕິ,ບັນຫານີ້ທາງຄະນະພວກເຮົາຈະແກ້ໄຂ ແລະ ຫາທາງປ້ອງກັນໃຫ້ ດີກວ່າເກົ່າ.

ໄດ້ຍິນແນວນັ້ນທຸກຄົນກໍເລີ່ມລົງມືເຮັດວຽກ, ແຕ່ແກ້ວໃຈ ຊ້ຳດອດຂຶ້ນ:

- ກະຈັ່ງວ່ານີ້ລະ! ລໍຖ້າໃຫ້ຫົວຫນ້າຫົວຕາແກ້ໄຂຢູ່...ແປກ

ປະຫລາດແທ້ໆ ແຕ່ໃດມາຄວາຍບໍ່ເຄີຍເສັຽຈັກເທື່ອ... ຫລືວ່າເປັນນຳເອົາຄວາຍມາເຂົ້າສະຫະກອນນັ້ນບໍ່ຈັກ...

ເວົ້າສຸດຄວາມ ແກ້ວໃຈ ກໍ່ເລືອດຕາແນມເບິ່ງສີຫນ້າຂອງດອກໄມ້,ທັງຮິນສີບກໍ່ເບະອອກຫນ້ອຍຫນຶ່ງ. ເມື່ອສັງເກດເຫັນວ່າດອກໄມ້ບໍ່ມີທ່າທີຄຽດຂຶ້ນຫຍັງ ແລະກໍ່ບໍ່ມີໃຜສົນໃຈນຳຕົນເອງແລ້ວແກ້ວໃຈ ກໍ່ເລີຍບໍ່ກ້າເວົ້າຫຍັງຕໍ່ໄປອີກ,ແຕ່ວ່າ ຢູ່ໃນໃຈຂອງນາງແລ້ວ ນາງທັງສີມນ້ຳຫນ້າ ດອກໄມ້ ທັງພໍໃຈໃນເຫດການນັ້ນ.

ມື້ນັ້ນຝົນຕົກຕອນຂ້ອນຊິແຈ້ງ, ເປັນຝົນຮ່າໃຫຍ່ ແລະ ຮ່າທຳອິດຂອງປີ. ດອກໄມ້ລຸກແຕ່ເຊົ້າ ພ້ອມທັງຊາວບ້ານໄດ້ເອົາຈົກພາກັນລົງໄປປ້ານຄັນນາ ເພື່ອຂັງເອົານ້ຳ, ຝົນຍັງຕົກລຽນຕິດມາອີກປະມານ ໔-໕ ມື້ ຈົນມີນ້ຳພຽງພໍສຳລັບຫວ່ານກ້າ ແລະ ໄຖຄັ້ນ, ແຕ່ອະນິຈາ! ຫລັງຈາກນັ້ນມາ ຢາດຝົນກໍບໍ່ໄດ້ຫລັ່ງລົງມາອີກເລີຍພື້ນດິນທ້ອງທົ່ງນາເລີ້ມແຫ້ງ, ແຫ້ງຈົນແຕກເປັນເຫີບ, ກ້າທີ່ຫາກໍ່ໃຫຍ່ກໍ່ເລີ້ມຄ່ອຍໆລ່າເຫລືອງລົງ.

ນາງດອກໄມ້ກໍ່ມີຄວາມຮ້ອນຮົນກະວົນກະວາຍທີ່ສຸດ, ບັນຫາເລື່ອງຄວາຍບໍ່ທັນສິ້ນສຸດ ກໍມາມີບັນຫາເລື່ອງທຳມະຊາດອີກ, ແຕ່ນາງກໍບໍ່ໄດ້ລົດລະຄວາມພະຍາຍາມ ນາງໄດ້ລະດົມເອື້ອຍ ນ້ອງຕ້ານໄພແຫ້ງແລ້ງໂດຍນຳພາເຂົາເຈົ້າຂົນນ້ຳຈາກສ້າງ ໄປສູ່ ທົ່ງນາ. ໃນຂະນະທີ່ນຳພາເອື້ອຍອ້າຍນ້ອງເຮັດວຽກງານນັ້ນວິໄລໄດ້ຖາມດອກໄມ້ວ່າ:

- ໂຕຄິດວ່າວິທີການນີ້ຈະໄດ້ຮັບຜົນບໍ?

- ເຮົາເອງກໍຍັງບໍ່ຮູ້...

- ເຮົາເຫັນວ່າມັນໜັກໜ່ວງຫລາຍໄດ໋! ເພື່ອຈະໃຫ້ມີນ້ຳພຽງພໍສຳລັບເຂົ້ານາ.

- ຂໍໃຫ້ໂຕເຫັນບັນຫານຳກັນ ແລະ ອິດທົນ, ເຮົາເອງກໍບໍ່ມີວິທີແກ້ໄຂອື່ນທີ່ດີກວ່ານີ້.

ດອກໄມ້ນຳພາສະມາຊິກໃນສະຫະກອນຕັກນ້ຳເຂົ້ານາໄດ້໔-໕ ວັນ, ນ້ຳໃນສ້າງກໍບໍ່ມີ ເພາະບົກແຫ້ງໄປອີກ. ມັນເປັນໂອກາດດີໃຫ້ແກ່ຜູ້ຫວັງທຳລາຍສະຫະກອນ ໂດຍສະເພາະນາງແກ້ວໃຈຊຶ່ງຫວັງຢາກທຳລາຍນາງດອກໄມ້ທາງດ້ານຊື່ສຽງ ແລະ ບົດບາດໃນວຽກງານ, ແກ້ວໃຈ ໄດ້ສົມທົບກັບຕີນມືຂອງພວກປະຕິການທີ່ຂ້າມມາແຕ່ຝັ່ງໄທ ຫລືອັນໜຶ່ງກໍແມ່ນຊາຍຊູ້ຂອງນາງພ້ອມກັນໂຄສະນາປ່າວຂ່າວອະກຸສົນອອກມາ:

- ຍ້ອນພວກເຈົ້າພາກັນຜິດຮີດຄອງປະເພນີ, ທຸກໆປີເຄີຍບະຟ້າບະແຖນ, ໄຫວ້ຜີຕາແຮກ, ຜີນາງທຽມ, ປີນີ້ຊ້ຳພັດບໍ່ພາກັນເຮັດ, ຜົນຂອງມັນກໍເປັນຄືແນວນີ້ລະ!

ບໍ່ພໍເທົ່ານັ້ນຜູ້ທີ່ມີແນວຄິດຍັງຫລ້າຫລັງບໍ່ຍອມເຂົ້າເປັນ ສະມາຊິກສະຫະກອນຊ້ຳພັດຍຸແຍ່ເສີມຂຶ້ນຕື່ມ:

- ປີນີ້ຝົນແລ້ງ, ພວກເຮົາເບິ່ງທ່າວ່າເຂົ້າຈະບໍ່ກຸ້ມກິນໄດ໋ ?

ສະມາຊິກສະຫະກອນຜູ້ໜຶ່ງເວົ້າຂຶ້ນ:

- ນັ້ນແລ້ວໆ! ເຫັນບໍ່ ຂ້ອຍບອກແລ້ວນ່າ! ຢ່າສູ່ເຂົ້າໆ! ຄັນ

ເຣັດແຕ່ຂອງເຣົາຜູ້ດຽວກະບໍ່ຕ້ອງເມື່ອຍຫລາຍຈັ່ງຊີ້.

- ແຕ່ຄັນບໍ່ເຂົ້າ, ເຣັດໃດຈະປະຕິບັດໄດ້ໜ້າທີ່ການ ເມືອງຂອງພັກທີ່ຈະສ້າງສະຫະກອນກະເສດເພື່ອເປັນຂໍກະແຈ ໃນການສ້າງເສດຖະກິດ ເພື່ອກ້າວຂຶ້ນສັງຄົມນິຍົມຂອງປະເທດເຣົາ?

- ໂອ່ຍ! ປະຕິບັດບໍ່ປະຕິບັດກໍ່ຢ່ານ່າ ຂ້ອຍເວົ້າເລື່ອງ ປີ້ນພວກເຈົ້າຊິພາກັນອຶດເຂົ້າຫັ້ນ, ເຣັດທັງທຸກທັງຍາກ, ຄັນ ເຊື່ອຄວາມກັນເຣັດແຕ່ຂອງເຣົາຊິໄດ້ທຸກໄດ້ຍາກປານນີ້.

ຈາກຄວາມເວົ້າ ແລະ ຫລາຍເຫດການທີ່ປະສົມປະສານ ກັນ ສະມາຊິກຜູ້ທີ່ມີຄວາມຊື່ສັດບໍລິສຸດຕໍ່ສະຫະກອນກະເສດຢ່າງ ຈິງໃຈ ກໍເກີດແນວຄິດລັ່ງເລ ແລະ ທໍ້ຖອຍໃຈ, ດອກໄມ້ເອງກໍຍັງບໍ່ ຊິນເຄີຍ ແລະ ຂາດປະສົບການໃນວຽກງານນຳພາ, ຕໍ່ສະພາບ ຄືແນວນັ້ນ ນາງຈຶ່ງໄດ້ປຶກສານຳລູງຄຳໃບ ຂຽນບົດລາຍງານຂຶ້ນໃຫ້ຂັ້ນເທິງ.

ທີ່ໜ້າບ້ານຂອງວິໄລ ຊາວບ້ານພາກັນມາອັ່ງອໍ ພ້ອມທັງ ສຽງແຊວງຖົກຖຽງກັນ ດອກໄມ້ມາເຖິງບ້ານຂອງວິໄລ ລູງຄຳໃບ ກໍສົ່ງກະດາດແຜ່ນໜຶ່ງໃຫ້.

ແຕ່ແລ້ວ!...ມັນແມ່ນຫຍັງກັນ.

... ຖ້າໃຜຍັງຢືນຢູ່ໃນສະຫະກອນຈະຕ້ອງເປັນຄືວິໄລ...

ດອກໄມ້ເບິ່ງເຈ້ຍແຜ່ນນັ້ນຢ່າງງົງໆ ມັນເປັນເຈ້ຍແຜ່ນດຽວ, ຂຽນຂໍ້ຄວາມໄວ້ພຽງເທົ່ານັ້ນ ບໍ່ມີຂຶ້ນຕົ້ນ ບໍ່ມີລົງທ້າຍ. ພໍດອກໄມ້ເງີຍໜ້າຂຶ້ນ ລູງຄຳໃບ ກໍເວົ້າວ່າ:

- ພໍ້ບັດສິນເຫັນຢູ່ທີ່ເກີດເຫດ, ສະແດງເຈດຕະນາຄົນ ຮ້າຍຈະແຈ້ງ.

- ຈະເຮັດແນວໃດຕໍ່ໄປດີ...ດອກໄມ້ ເວົ້າສີໜ້າ ສະແດງວ່າໃຊ້ຄວາມຄິດໜັກ.

- ລູງເອງກໍຍັງຄິດບໍ່ອອກເທື່ອ, ປະຈຸບັນແກ້ໄຂເຫດການສະເພາະໜ້າໄປກ່ອນ ເລື່ອງອື່ນໂຈະໄວ້ສາກ່ອນ, ມາເວົ້າ ເລື່ອງວິໄລນີ້ສາ, ຕໍ່ໄປເຫັນຈະຕ້ອງຫາວິທີບໍ່ໃຫ້ມີເລື່ອງແບບນີ້ເກີດຂຶ້ນ. ອາການຂອງວິໄລກໍບໍ່ໜັກໜາຫຍັງ ມີແຕ່ດຽວນີ້ທຸກຄົນກຳລັງເສຍຂວັນກັນ, ຕາມທີ່ຜູ້ເຫັນເຫດການເລົ່າໃຫ້ຟັງນັ້ນ ເຫັນຊາຍຜູ້ໜຶ່ງມາແຕ່ໃສບໍ່ຮູ້ ມາຢືນລົມກັບວິໄລ ຄິດວ່າພວກເຂົາຮູ້ຈັກກັນກໍບໍ່ ໄດ້ສົນໃຈ ພໍຍ່າງຫວິດຫລັງເທົ່ານັ້ນ ກໍໄດ້ຍິນສຽງຮ້ອງ ຈຶ່ງແລ່ນ ກັບຄືນມາເບິ່ງ ກໍເຫັນພວກເດັກນ້ອຍຊຶ່ງມີທັງນ້ອງຊາຍວິໄລເອງທີ່ກັບມາແຕ່ລ້ຽງຄວາຍຮຸມຢູ່ ຈຶ່ງໄດ້ຮູ້ຈາກເດັກພວກນັ້ນວ່າ ວິໄລ ຖືກຄົນຮ້າຍ ວາງຢາ ຈົນສະຫລົບ ແຕ່ກ່ອນທີ່ຄົນຮ້າຍຈະເຮັດສິ່ງໃດນັ້ນເດັກນ້ອຍເຫລົ່ານັ້ນໄດ້ເຂົ້າມາຂັດຂວາງເສຍກ່ອນ ມັນຈຶ່ງ ໄດ້ຫລົບໜີໄປທາງປ່າຕີນບ້ານນັ້ນ, ບ່ອນເກີດເຫດກໍຢູ່ປາກທາງເຂົ້າບ້ານວິໄລນັ້ນເອງ. ຫລັງຈາກພວກເຮົາໄດ້ກວດກາເບິ່ງບ່ອນ ນັ້ນແລ້ວຈຶ່ງພົບກັບບັດອັນນີ້.

ແລ້ວລູງຄຳໃບກໍຍົກບັດທີ່ໃຫ້ດອກໄມ້ອ່ານນັ້ນຂຶ້ນ. ດອກໄມ້ງຶກຫົວ ສະແດງອາການຮັບຮູ້ແລ້ວກໍຂໍຕົວຂຶ້ນໄປເບິ່ງວິໄລ.

- ແມ່ວິໄລ ເປັນແນວໃດແດ່ແລ້ວ?

ດອກໄມ້ຖາມຢ່າງຫ່ວງໃຍ.

- ຍັງມີໜ້ານາຖາມ, ກະຍ້ອນລູກຂ້ອຍມັນໄປຮ່ວມວຽກງານນຳເຈົ້ານີ້ແລ້ວມັນຈຶ່ງຕ້ອງເປັນແນວນີ້ ຕໍ່ໄປຢ່າສູ່ມາຊວນ ມັນ ໄປ ອີກ.

- ...! ດອກໄມ້ ເວົ້າຫຍັງບໍ່ອອກ ຮູ້ສຶກເປັນສີແຄ້ນໆໃນຮູຄໍ ເພາະແມ່ຂອງວິໄລບໍ່ເຄີຍມີຄຳເວົ້າແບບນີ້ຕໍ່ນາງຈັກເທື່ອ.

ຄືນນັ້ນດອກໄມ້ນອນບໍ່ຫລັບໝົດຄືນ ຈາກເຫດການຂອງວິໄລ, ຄວາມຫງ່ວມເຫງົາໄດ້ເຂົ້າຄອບງຳຈິດໃຈຂອງນາງ.

ໂອກາດນັ້ນທາງຂັ້ນເທິງໄດ້ສົ່ງພະນັກງານຊຸນຳຂັ້ນແຂວງ ລົງມາ ສະຫະກອນ ນີ ຄືນ, ໃນນັ້ນມີພະນັກງານເຕັກນິກຜູ້ໜຶ່ງຄືສະຫາຍສີທອງ ເຊິ່ງເປັນຜູ້ທີ່ໜຸ່ມແໜ້ນ ທັງມີຄວາມຫາວຫັນອີກດ້ວຍ.

- ເທົ່າທີ່ລຸງເຫັນມາ, ຫລານແມ່ນຮອງອຳນວຍການຜູ້ທີ່ໜຸ່ມນ້ອຍຫລາຍ. ລຸງພະນັກງານທີ່ເປັນຫົວໜ້າໝູ່ ເວົ້າຕໍ່ດອກໄມ້.

- ລຸງເວົ້າກໍ່ແມ່ນ...ແລະຫລານເຫັນວ່າຫລານເອງຍັງ ບໍ່ເໝາະສົມ ໜ້າທີ່ນີ້ທັງວຽກງານອັນນີ້ຫລານວ່າຄວນມອບໃຫ້ເປັນໜ້າທີ່ຂອງຜູ້ທີ່ມີອາວຸໂສກວ່າຫລານຄົງຈະດີ.

- ເປັນຫຍັງຫລານຈຶ່ງຄິດແນວນັ້ນ?

- ຜ່ານມາຄືດັ່ງທີ່ລຸງໄດ້ຮູ້ນັ້ນແລ້ວວ່າ ສະຫະກອນບ້ານຫລານປະສົບບັນຫາຄືແນວໃດ?...ຫລານຄິດວ່າຍ້ອນຕົນເອງຍັງບໍ່ມີຄວາມສາມາດພຽງພໍ ແລະ ຍັງຂາດປະສົບການໃນການນຳພາ... ຈຶ່ງຢາກຂໍລາອອກ ແລະ ໃຫ້ລຸງແຕ່ງຕັ້ງຜູ້ໃໝ່ຂຶ້ນແທນ.

- ຂໍໃຫ້ຫຼານຫຸ່ມທ່ຽວສືບຕໍ່ວຽກງານ, ຢູ່ຫນ່ວຍສະຫະກອນອື່ນໆ ກໍເຄີຍມີບັນຫາແບບນີ້, ລຸງເຊື່ອວ່າຫລານມີຄວາມສາມາດດີ ແລະ ລຸງພ້ອມດ້ວຍພະນັກງານອີກ ໘ ຄົນກໍຈະໃຫ້ຄວາມຊ່ວຍເຫລືອເຕັມທີ່ ໂດຍສະເພາະສະຫາຍສີທອງລາວເປັນພະນັກງານວິຊາ ການ, ລາວຈະເປັນຜູ້ຮ່ວມວຽກງານຕົວຈິງກັບພວກຫລານໄປກ່ອນ ໄລຍະໃດ ໄລຍະຫນຶ່ງ, ສະນັ້ນຖ້າຫລານມີບັນຫາໃດກໍໃຫ້ປຶກສາຫາລື - ຖອດຖອນບົດຮຽນນຳລາວນັ້ນ ເພື່ອພ້ອມກັນແກ້ໄຂ, ໄລຍະທີ່ລຸງຍັງບໍ່ທັນກັບໄປນີ້ລຸງກໍຈະຊ່ວຍຫລານ.

ເພື່ອປ້ອງກັນການທຳລາຍ ແລະ ກໍ່ເຫດຮ້າຍຂອງສັດຕູ ນັ້ນ, ດອກໄມ້ ພ້ອມທັງສີທອງໄດ້ເຕົ້າໂຮມຊາວຫນຸ່ມໃນບ້ານມາຮ່ວມ ຊີວິດ ແລະ ສຶກສາອົບຮົມລະດົມແນວຄິດການເມືອງເຂົ້າເຈົ້າ ຕື່ມ, ຫລັງຈາກນັ້ນກໍໄດ້ມີການຈັດຕັ້ງແບ່ງປັນກັນເວນຍາມຢ່າງ ຄັກແນ່ ເພື່ອຄວາມປອດໄພ.

- ແລ້ວວຽກປັບປຸງຫນ່ວຍຊາວຫນຸ່ມນີ້ແລ້ວ ພວກເຮົາຈະເຮັດຫຍັງອີກ.

- ອ້າຍຄິດວ່າຈະແກ້ໄຂເລື່ອງໄພແຫ້ງແລ້ງນັ້ນ ແລະ ສືບຕໍ່ປຸກລະດົມຫນ່ວຍຊາວຫນຸ່ມໃຫ້ກາຍມາເປັນກຳລັງແຮງຫນຶ່ງທີ່ຈະຕະລຸມບອນເຂົ້າໃນວຽກງານສະຫະກອນ.

ສີທອງໄດ້ຂໍຄວາມຊ່ວຍເຫລືອຈາກສູນກາງ ຊຶ່ງເພິ່ນກໍໄດ້ ສົ່ງພະແນກຊົນລະປະທານແຂວງລົງຊ່ວຍເຫລືອ ເຊິ່ງເຂົ້າເຈົ້າໄດ້ແກ້ໄຂດ້ວຍພາຫະນະກົນຈັກ. ພຽງອາທິດດຽວເທົ່ານັ້ນ ພະແນກ ຊົນ

ລະປະທານແຂວງກໍສາມາດຂຸດເໝືອງຈ່ອຍຈາກເໝືອງ ນ້ຳຊວງໄດ້ສຳເລັດຜົນ. ດອກໄມ້ເອງກໍມີສີໜ້າເບີກບານມ່ວນຊື່ນຈົນເຫັນໄດ້, ຄວາມຫວ່ວມເຫງົາ ແລະ ທໍ້ຖອຍໃຈຂອງນາງໃນ ໄລຍະໜຶ່ງນັ້ນໄດ້ສິ້ນສຸດລົງ, ບໍ່ສະເພາະແຕ່ດອກໄມ້ເທົ່ານັ້ນ ສະມາຊິກສະຫະກອນທຸກຄົນກໍມີຄວາມດີອົກດີໃຈ ແລະ ໄດ້ລືງມືເຮັດນາ ຄືນໃໝ່. ວິໄລ ພາຍຫລັງທີ່ເຂົາເປັນປົກກະຕິແລ້ວ ກໍໄດ້ກັບມາຮ່ວມວຽກງານກັບດອກໄມ້ອີກຕາມເດີມ.

- ດອກໄມ້! ຕໍ່ໄປນີ້ພວກເຮົາຈະເຮັດນາໂດຍບໍ່ຕ້ອງ ລໍຖ້າຟ້າຝົນອີກແລ້ວ!!

- ແມ່ນ! ແຕ່ວິໄລ ຮູ້ບໍ ນອກຈາກນີ້ພວກເຮົາຍັງສາມາດທຳການປູກຝັງລ້ຽງສັດໄດ້ຢ່າງສະດວກສະບາຍ ແລະ ບາງທ້ອງຖິ່ນທີ່ຢູ່ໃກ້ຄຽງກໍສາມາດທີ່ຈະໃຊ້ນ້ຳຈາກເໝືອງນີ້ເຂົ້າໃນວຽກ ງານຂອງເຂົາເຈົ້າອີກດ້ວຍ.

- ທັງໝົດກໍຍ້ອນມີດອກໄມ້ນັ້ນແລ້ວ ເປັນຜູ້ນຳພາແມ່ນບໍ ອ້າຍສີທອງ? ເວົ້າແລ້ວວິໄລກໍອວາຍໜ້າໄປຖາມຊາຍໜຸ່ມທີ່ ພວມເຮັດວຽກຢູ່ຂ້າງໆດອກໄມ້ນັ້ນ ຈຶ່ງເຂົາກໍພຽງແຕ່ຍິ້ມ ໂດຍບໍ່ ສະແດງຄວາມເຫັນໃດໝົດ.

ໃນຂະນະທີ່ກຳລັງແຕ່ງກິນຢູ່ນັ້ນ ສຽງຮ້ອງຂອງນ້ອງຊາຍ :

"ເອື້ອຍໆ! ມີແຂກມາ ເພິ່ນຢາກພົບເອື້ອຍ". ນາງຟ້າວແລ່ນອອກໄປເບິ່ງກໍພົບກັບສີທອງ ຈຶ່ງກັບຈາກໄປສົ່ງລູງພະນັກງານທັງສອງນັ້ນກັບຄືນເມືອ.

- ເຊີນອ້າຍຂຶ້ນເທິງເຮືອນ, ນ້ອງກຳລັງແຕ່ງກິນ, ໃຫ້ອ້າຍໂອ້ລົມທຳຄວາມລຶ້ງເຄີຍກັບພໍ່ແມ່ນ້ອງຖ້າ!!!

ຊາຍໜຸ່ມປະຕິບັດຕາມຄຳແນະນຳ, ໄດ້ໂອ້ລົມກັບພໍ່ແມ່ ຂອງນາງຫລາຍບັນຫາ ກ່ຽວກັບຊີວິດການເປັນຢູ່ ເຮັດໄຮ່, ເຮັດ ນາ ແລະ ວຽກງານອື່ນໆ. ໃນຂະນະທີ່ນັ່ງລົມກັບພໍ່ແມ່ກໍໄດ້ຍິນສຽງອັນອ່ອນຫວານຂອງຍິງສາວ "ເຊີນອ້າຍກິນເຂົ້າຢາມ" ຊາຍ ໜຸ່ມຫລຽວໄປທາງຂ້າງກໍເຫັນອາຫານຖືກຈັດເປັນລະບຽບຮຽບຮ້ອຍ ຢູ່ເທິງພາເຂົ້າ.

- ເອົາເຊີນຕິລູກ, ກິນເຂົ້າຢ່າມພໍ່ແມ່ ແລ້ວຈຶ່ງເມືອ! ຜູ້ເປັນພໍ່ແມ່ກໍເຊີນຕາມຫລັງລູກສາວ, ພາເຂົ້າແລງມື້ນັ້ນໄດ້ ສ້າງຄວາມລຶ້ງເຄີຍສະໜິດສະໜົມ. ຫລັງຈາກແລ້ວຄາບເຂົ້າແລງນັ້ນທັງສອງກໍໄດ້ໂອ້ລົມກັນກ່ຽວກັບໜ້າທີ່ວຽກງານ ແລະ ຖອດ ຖອນບົດຮຽນນຳກັນຫລາຍບັນຫາໃນວຽກງານຕົວຈິງ. ຈາກມື້ນັ້ນ ມາຄວາມສະໜິດສະໜົມລະຫວ່າງສີທອງ ແລະ ຄອບຄົວຂອງ ດອກໄມ້ກໍມີຫລາຍຂຶ້ນ ເຖິງວ່າລາວຈະພັກຢູ່ບ້ານລຸງຄຳໃບ ແຕ່ກໍໄດ້ໄປມາຫາສູ່ເລື້ອຍໆ, ນອກຈາກຊ່ວຍວຽກງານໃນຄອບຄົວຂອງລຸງຄຳໃບແລ້ວ ເມື່ອມີເວລາຊາຍໜຸ່ມກໍຈະໄປຊ່ວຍວຽກງານໃນຄອບຄົວຂອງດອກໄມ້ ແລະ ນັ້ນກໍເຊັ່ນກັນ.

- ໂອ້! ອ້າຍມີວຽກຫຍັງຄືມາແຕ່ເຊົ້າແທ້?

- ທຸກໆມື້ເຫັນພໍ່ນ້ອງເພິ່ນຜ່າຟືນຢູ່ ແຕ່ມື້ວານນີ້ເຫັນວ່າເພິ່ນບໍ່ສະບາຍ ອ້າຍກໍເລີຍຢາກມາຊ່ວຍເພິ່ນ.

ທຳອິດດອກໄມ້ກໍບໍ່ຢາກໃຫ້ເຮັດເພາະເກງໃຈ ແຕ່ເມື່ອ ເຫັນຄວາມຕັ້ງໃຈຈິງຂອງສະຫາຍແລ້ວ ນາງກໍເລີຍໃຫ້ເຮັດ.

ຫລາຍເດືອນຜ່ານໄປ, ກ້າໃນນາກໍເລີ່ມຂຽວຊຸ່ມພຸ່ມໄປທົ່ວ - ທ້ອງທົ່ງນາ, ແຕ່ຕະຫລອດໄລຍະເວລາດັ່ງກ່າວນັ້ນ ສີທອງ ແລະ ດອກໄມ້ກໍບໍ່ໄດ້ຢູ່ລ້າໆ, ທັງສອງຮ່ວມທັງສະມາຊິກສະຫະກອນ ໄດ້ຊ່ວຍກັນກຳຈັດສັດຕູທຸກຊະນິດຂອງເຂົ້າທີ່ປູກໄວ້ນັບຕັ້ງແຕ່ຫນູ ນາ, ຫນອນ, ເພ້ຍ, ຕັກແຕນ ຕະຫລອດຈົນແມງໄມ້ສັດຕູພືດອື່ນໆໂດຍຂໍໃຫ້ຫນ່ວຍສັດຕະວະແພດລົງມາສີດຢາ ແລະ ເພື່ອຈະໃຫ້ໄດ້ ຜົນຜະລິດດີ ສະຫາຍຈຶ່ງໄດ້ລະດົມກັນເອົາຝຸ່ນລົງໃສ່ນາອີກ ແລະ ບັນຫາທີ່ຕາມມາກໍຄືພືດອື່ນໆທີ່ບໍ່ແມ່ນເຂົ້າທີ່ມາຂຶ້ນຢູ່ໃນນາ ເມື່ອໄດ້ຝຸ່ນກໍເຕີບໂຕແຂ່ງກັບຕົ້ນເຂົ້າ ແລະ ມັກຈະຊະນະເປັນສ່ວນຫລາຍຕັ້ງແຕ່ບໍ່ໃສ່ຝຸ່ນຊ້ຳ. ດັ່ງນັ້ນບັນຫາພືດຈຶ່ງເປັນບັນຫາຫນຶ່ງອີກທີ່ຈະຕ້ອງແກ້ໄຂ, ແຕ່ສະມາຊິກສະຫະກອນທັງຫມົດກໍໄດ້ພ້ອມກັນເຮັດ ທຸກວຽກງານຢ່າງຕັ້ງຫນ້າ ພາຍໃຕ້ການນຳພາຂອງດອກໄມ້ ແລະ ສີທອງ. ທຸກຄົນຕ່າງກໍປະຕິບັດວຽກງານຮ່ວມກັນບົນຄວາມສາມັກ ຄີກຳຈັດສັດຕູ ອັນລວມມີໄພທຳມະຊາດ ແລະ ບຸກຄົນຜູ້ຫວັງທຳລາຍສະຫະກອນໃຫ້ຫມົດສິ້ນ! ເຫລືອໄວ້ແຕ່ຄວາມສະຫງົບ ແລະຢູ່ເຢັນເປັນສຸກຂອງບ້ານນາແຫ່ງນີ້.

ເຊົ້ານີ້, ທ້ອງຟ້າປອດໂປ່ງ, ອາກາດແຈ່ມໃສ, ບໍ່ມີປຸຍ - ເມກສີຂາວໃຫ້ເຫັນເລີຍຈົນຫນ້ອຍດຽວ, ລົມເຢັນຍາມເຊົ້າ ທີ່ພັດຜ່ານເຮັດໃຫ້ຮວງເຂົ້າສີເຫລືອງທອງໄຫວໄປຕາມກະແສລົມສົ່ງກິ່ນ

ຫອມຫວນຂອງເມັດເຂົ້າທີ່ສຸກເຕັມທີ່ແລ້ວນັ້ນໃຫ້ກະຈາຍໄກອອກໄປອີກ. ແດດອ່ອນໆທີ່ທໍແສງອາບລົງມາຍິ່ງເຮັດໃຫ້ພາບທົ່ງນາ ນັ້ນເປັນສີທອງເຮືອງຮຸ່ງສົ່ງປະກາຍແວວວາວຍິ່ງຂຶ້ນຄືກັບຂຸມຊັບອັນໄພສານ, ເບື້ອງຫນ້າ ຊາວນາກຸ່ມຫນຶ່ງກຳລັງກວັດແກ່ວງກ່ຽວ ໃນມືໄປມາເປັນຈັ່ງຫວະຄືດັ່ງຟ້ອນກ່ຽວເຂົ້າ, ແມ່ນແລ້ວ! ພວກເຂົາເຈົ້າກຳລັງກ່ຽວເຂົ້າຜະລິດຜົນຈາກຄວາມອຸດສາມານະເຝົ້າຖະນຸຖະຫນອມບຳລຸງຮັກສາມາເປັນເວລາເກືອບເຄິ່ງປີ ຕັ້ງແຕ່ເລີ່ມ ໄຖ, ແປງດິນ, ຕົກກ້າ, ປັກດຳ ຈົນຕົ້ນເຂົ້າເຕີບໂຕເຕັມທີ່, ຖອດຮວງອ່ອນໆ ກະທັ້ງສຸກເຫລືອງເຕັມທີ່ ພ້ອມຈະໃຫ້ເກັບກ່ຽວຄືດັ່ງ ໃນເຊົ້າວັນນີ້.

ເຂົ້າທັງຫມົດຖືກຂົນຂຶ້ນເລົ້າເປັນທີ່ ແລະ ໄດ້ຫມາກຜົນ ເກີນລະດັບຄາດຫມາຍ ນັ້ນມັນໄດ້ນຳເອົາຄວາມເບີກບານມາສູ່ ນາງດອກໄມ້ຢ່າງຍິ່ງ ໂດຍສະເພາະສະຫະກອນບ້ານຂອງນາງໄດ້ກາຍມາເປັນຫນ່ວຍແບບຢ່າງດີເດັ່ນຂອງ ເມືອງນີ້. ໃນບັ້ນສະຫລຸບຜົນງານຂອງຫນ່ວຍສະຫະກອນ ດັ່ງກ່າວ, ນາງໄດ້ຖືກຍ້ອງຍໍໃຫ້ເປັນບຸກຄົນແບບຢ່າງພາຍໃນຫນ່ວຍຮ່ວມກັບບຸກຄົນຜູ້ຫ້າວຫັນອື່ນໆ. ລຸງຄຳໃບ ອຳນວຍການຂອງສະຫະກອນ ພາຍຫລັງທີ່ໄດ້ອ່ານສະຫລຸບຜົນງານທີ່ສະຫະກອນຍາດມາໄດ້ ພ້ອມທັງຍ້ອງຍໍບຸກຄົນແບບຢ່າງ, ສຳລັບດອກໄມ້ ລຸງໄດ້ກ່າວວ່າ: "...ນາງເປັນຮອງ ອຳນວຍການຜູ້ຫ້າວຫັນໄປກ່ອນຫມູ່ບໍ່ວ່າວຽກນ້ອຍຫລືໃຫຍ່ ຍາກຫລືງ່າຍ ກໍໄດ້ຕັດສິນໃຈຜ່ານຜ່າຈົນສຳເລັດ ແລະ ເຮັດຫລ້ອນຫນ້າທີ່ສະເຫມີ

ມາຈີນກະທັ້ງລຸງເອງຊື່ງເປັນຫົວໜ້າກໍອາໄສແຕ່ດອກໄມ້ ເພາະເປັນຄົນວ່ອງໄວ, ຮັບຮູ້ສະພາບໄວ, ເຮັດວຽກລະອຽດ,ທັງເປັນຜູ້ຄົນຄວ້າ, ກວດກາ, ຂີດຂຽນ ຈົດແຕ້ມ ເພື່ອລາຍງານຂັ້ນເທິງນອກນັ້ນຍັງປະກອບສ່ວນວຽກງານກອງໝອນ ແລະ ເຝິກແອບສິລະປະວັນນະຄະດີສະໜັກຫລິ້ນຂອງໜ່ວຍສະຫະກອນອີກ. ເຖິງວ່ານາງຈະມີເວລາພັກຜ່ອນໜ້ອຍທີ່ສຸດ ແຕ່ບໍ່ເຄີຍທີ່ນາງຈະຈົ່ມວ່າອິດເມື່ອຍຈັກເທື່ອ, ຂໍຊົມເຊີຍນ້ຳໃຈຮັບຜິດຊອບສູງຕໍ່ວຽກງານ ຂອງນາງ..." ບັນດາສະມາຊິກຂອງສະຫະກອນຕາງກໍຕົບມື ຊົມເຊີຍຄຳລາຍງານດັ່ງກ່າວນັ້ນຢ່າງສະໜັ່ນຫວັ່ນໄຫວ. ຈາກນັ້ນ,ພະນັກງານຊຸນຳຂອງແຂວງ ກໍມີຄວາມຄິດຄວາມເຫັນ, ນອກຈາກ ແນະນຳວິທີຈັດຕັ້ງແບ່ງງານ ໃຫ້ຄະແນນ ແລະ ອື່ນໆແລ້ວກໍໄດ້ສະແດງຄວາມພາກພູມໃຈຕໍ່ຜົນງານທີ່ທາງສະຫະກອນຍາດມາໄດ້ ໂດຍສະເພາະຊົມເຊີຍຜົນງານບຸກຄົນດີເດັ່ນ.

ຍູນງານຄວາມດີປະກອບກັບຄວາມໃກ້ຊິດຊ່ວຍເຫລືອແລະເຫັນອົກເຫັນໃຈກັນໃນຄວາມຜູກພັນຢ່າງເລິກເຊິ່ງຕໍ່ດອກໄມ້ທີ່ ສິດຊື່ນ ແລະ ໜ້າຮັກຄົນນີ້, ຈາກຄວາມຜູກພັນອັນນັ້ນມັນໄດ້ກັບກາຍເປັນຄວາມຮັກ ໂດຍທີ່ຄົນທັງສອງບໍ່ຮູ້ສຶກຕົວ, ແຕ່ມັນເປັນຄວາມຮັກ ທີ່ໃສສະອາດບໍລິສຸດທີ່ຢູ່ພາຍໃຕ້ຂອບຂອງປະເພນີ, ຮັກແພງກັນ ບົນພື້ນຖານຊ່ວຍເຫລືອຊຶ່ງກັນ ແລະ ກັນໃຫ້ມີຄວາມກ້າວໜ້າໃນວຽກງານ, ທັງໄດ້ຮັບຮູ້ ແລະ ເຫັນດີເຫັນພ້ອມຈາກພໍ່ແມ່ ແລະ ການຈັດຕັ້ງ. ເມື່ອຖືກຖາມເຖິງບັນຫານີ້ ດອກໄມ້ ຕອບວ່າ:

- ຂໍໃຫ້ນ້ອງມີເວລາສຳລັບເຝິກຝົນກໍ່ຄືຮ່ຳຮຽນ ເພື່ອໃຫ້ມີບົດຮຽນໃນການນຳພາຕໍ່ໜ້າທີ່ວຽກງານຂອງນ້ອງສາກ່ອນ!...ຈາກນັ້ນພວກເຮົາຈຶ່ງເວົ້າເຖິງເລື່ອງນີ້ໃໝ່ ອ້າຍຄົງເຂົ້າໃຈໃນ ຕົວຂອງນ້ອງ.

- ອ້າຍບໍ່ຢາກເຂົ້າໃຈວ່າ ນີ້ເປັນການບອກປັດທີ່ສຸພາບ?

- ບໍ່ໆແມ່ນ...! ນາງຟ້າວປະຕິເສດ.ຮອຍຍິ້ມຈາງໆ ປາກົດຂຶ້ນບົນສີໜ້າຂອງສີທອງ.

- ອ້າຍເຂົ້າໃຈ, ເພື່ອຄວາມກ້າວໜ້າ, ຄວາມສຸກອັນສົມບູນໃນອະນາຄົດອ້າຍຈະຄອຍ.

... ໕ ປີຜ່ານໄປ...ນະທີ່ທອງທົ່ງນາແຫ່ງເດີມ, ດອກໄມ້ຄິດເຖິງຄວາມຫລັງຢ່າງເພີດເພີນ ຈົນເຮັດໃຫ້ນາງຢືນຊື່ງຢູ່ຄັນນານັ້ນເອງ. ໃບໜ້າຂອງນາງຫັນໄປທາງຕົ້ນເຂົ້າທີ່ສຸກເຫລືອງອ່ອນຊວນເບິ່ງນັ້ນໄດ້ດຶງດູດເອົາສາຍຕານາງໄວ້ຢ່າງຈັບໃຈ. ສີເຫຼືອງຂອງມັນບໍ່ຕ່າງຫຍັງກັບເມື່ອສາມປີກ່ອນໜ້າ ທີ່ນາງຈະໄດ້ໄປ ຮ່ຳຮຽນ, ພຽງແຕ່ປີນີ້ທອງທົ່ງມັນໄດ້ກວ້າງຂວາງ ແລະ ຂະຫຍາຍອານາເຂດໄປສຸດຊົ່ວຕາ ແລະ ໃຫ້ໝາກຜົນເພີ່ມຂຶ້ນທະວີຄູນ.

ສຽງຂອງສີທອງປຸກໃຫ້ນາງຕື່ນຈາກພະວັງ:

- ບໍ່ລົງໄປເທື່ອຫວະ! ດອກໄມ້?

ດອກໄມ້ຍິ້ມໃຫ້ ແລ້ວທັງສອງກໍ່ຍ່າງຄຽງຂ້າງກັນລົງໄປສູ່ທ້ອງທົ່ງນາທີ່ເບື້ອງໜ້າ ຊາວນາກຳລັງເກັບກ່ຽວຢ່າງຫ້າວຫັນ.

ມາຮອດນີ້ ຄວາມຫລັງທີ່ນາງດອກໄມ້ ຈົດຈຳກໍໄດ້ ຈາງຫາຍ

ໄປຈາກຫ້ວງຄິດຂອງນາງ ເພາະຄວາມຫວັງທີ່ນາງ ແລະ ສີທອງ ລໍຄອຍນັ້ນກຳລັງສຸກງອມ ແລະ ລໍຄືນວັນເກັບກ່ຽວເຊັ່ນດຽວກັນກັບຕົ້ນເຂົ້າແຫ່ງນີ້.

ພິມທີ່ ໂຮງພິມແຫ່ງລັດ
ພິມເທື່ອທີ 1
ພິມຈຳນວນ 10,000 ຫົວ ຂະໜາດ 14x19,5
ພິມແລ້ວ ວັນທີ 1-3-1984

ພິມທີ່ໂຮງພິມແຫ່ງລັດ